ລາຍງານກອງປະຊຸມ

ຜົນງານ ຂອງ

ມະຫາ ສີລາ ວີຣະວົງ

ໃນທັດສະນະ ຂອງ ນັກວິຊາການ ສອງຝັ່ງຂອງ

ວຽງຈັນ ໒໘-໒໙ ເມສາ ໑໙໙໐

ຄຳນຳ ຂອງ ຄະນະຈັດພິມ

ເນື່ອງຈາກວ່າ ກອງປະຊຸມ ສົນທະນາວ່າດ້ວຍ "ຜົນງານຂອງມະຫາສີລາ ວີຣະວົງ ໃນທັດສະນະຂອງນັກວິຊາການສອງຝັ່ງຂອງ" ເຊິ່ງທາງຄະນະກຳມະການ ວິທະຍາສາດສັງຄົມ, ສ.ປ.ປ.ລາວ ຈັດຂຶ້ນ ລະຫວ່າງວັນທີ ໒໘-໒໙ ເມສາ ໑໙໙໐ ນີ້ ໄດ້ຮັບຄວາມສົນໃຈຢ່າງກວ້າງຂວາງທັງຈາກບຸກຄົນທີ່ເຂົ້າຮ່ວມ ແລະ ຜູ້ໄດ້ຮູ້ຂ່າວຄາວ ຈາກໜັງສືພິມ ແລະ ວິທະຍຸ, ຄະນະກຳມະການຈຶ່ງຈັດພິມລາຍງານຫຍໍ້ກອງປະຊຸມດັ່ງກ່າວໄວ້ ເພື່ອ ປະໂຫຍດຂອງວຽກງານການຄົ້ນຄວ້າທາງດ້ານສັງຄົມ ວັດທະນະທຳ ສືບຕໍ່ໄປທັງນີ້ໂດຍນຳສະເໜີບົດອະພິປາຍຂອງແຕ່ລະຄົນ ແລະ ຄວາມຄິດຄວາມເຫັນຂອງຜູ້ເຂົ້າຟັງ ກໍ່ຄັດຫຍໍ້ ມາພິມຮ່ວມໄວ້ນຳ.

ການປະຊຸມຄັ້ງນີ້ ເກີດຂຶ້ນໄດ້ໂດຍການຊີ້ນຳໂດຍກົງຂອງທ່ານ ສີຊະນະ ສີສານ ປະທານຄະນະກຳມະການວິທະຍາສາດສັງຄົມ ແລະ ຈາກການຮ່ວມມືຂອງຫ້ອງການ ຄ.ວ.ສ. ນັກຄົ້ນຄວ້າ ຈາກກະຊວງທະບວງກົມຕ່າງໆ ຕະຫລອດຮອດ ຄູອາຈານ ນັກສຶກສາຈາກມະຫາສາລະຄາມ ຜູ້ໄດ້ສຶກສາ ແລະ ຈົບໃຈຜົນງານຕ່າງໆ ຂອງທ່ານມະຫາສີລາ ມາເປັນເວລາຍາວນານເຊັ່ນກັນ ການແລກປ່ຽນທັດສະນະຈຶ່ງຫລາກຫລາຍອຸດົມສົມບູນ ມີຫລາຍແງ່ຫລາຍມຸມ ມີເນື້ອໃນເລິກເຊິ່ງໜ້າສຶກສາ.

ພວກເຮົາ ຂໍຂອບໃຈ ແລະ ຈົດຈຳບຸນຄຸນທຸກທ່ານ ທີ່ມີສ່ວນອຸປະຖຳຊຸກຍູ້ກອງປະຊຸມ ຄັ້ງນີ້ໃຫ້ມີຜົນສຳເລັດ.

ຫວັງວ່າປຶ້ມນ້ອຍເຫລັ້ມນີ້ ຈະຕອບສະໜອງຄວາມຢາກຮູ້ຢາກສຶກສາ ຂອງ ນັກຮຽນນັກຮູ້ ຄູອາຈານ ແລະ ປູພື້ນຖານໃຫ້ແກ່ວຽກງານຄົ້ນຄວ້າໄດ້ບໍ່ຫລາຍກໍ່ໜ້ອຍ.

ວຽງຈັນ, ວັນທີ .25..ກໍລະກົດ 1990

ຄະນະກຳມະການ

ຮ່າງແຜນ ກອງປະຊຸມ ສົນທະນາ
ວ່າດ້ວຍ "ຜົນງານ ຂອງ ມະຫາ ສີລາ ວີຣະວົງ
ໃນທັດສະນະຂອງ ນັກວິຊາການ ສອງຝັ່ງຂອງ"
ນະຄອນ ວຽງຈັນ ວັນທີ 28-29 ເມສາ 1990

I.- ສະພາບຄວາມເປັນມາ

ມະຫາສີລາ ວີຣະວົງ ເຖິງແກ່ມໍລະນະກຳ ເດືອນມີນາ ໑໙໘໗ ເມື່ອອາຍຸໄດ້ ໘໒ ປີ. ຂ່າວຄາວ ການເສຍຊີວິດຂອງທ່ານ ແຜ່ກະຈາຍຮູ້ເຖິງຫລາຍຜູ້ຫລາຍຄົນ ທັງພາຍໃນ ແລະ ຕ່າງປະເທດ ໂດຍສະເພາະປະເທດໄທ ເຊິ່ງມີນັກຄົ້ນຄວ້າ ນັກຮຽນຮູ້ ຫລາຍຄົນ ພ້ອມໃຫ້ຄວາມສົນໃຈສຶກສາ ວັດທະນະທຳລ້ານຊ້າງ. ດັ່ງນັ້ນ ຈຶ່ງມີຫລາຍຄົນຂຽນ ຈົດໝາຍຕິດຕໍ່ຂໍຮູ້ ເລື່ອງລາວຕ່າງໆ ກ່ຽວກັບທ່ານ ຕະຫລອດຮອດຜົນງານຫາຍາກຫລາຍຢ່າງ ກໍມີຜູ້ຢາກໄດ້ໄວ້ເປັນກຳມະສິດກໍ່ມີ. ໃນໂອກາດຄົບຮອບ ໓ ປີ ແຫ່ງການມໍລະນະກຳຂອງທ່ານ (ມີນາ ໑໙໘໗-໑໙໙໐), ຄະນະກຳມະການວິທະຍາສາດສັງຄົມ ຮ່ວມກັບລູກ ຂອງທ່ານມະຫາສີລາເອງ ໄດ້ຈັດພິມປຶ້ມເຫລັ້ມໜຶ່ງ ຊື່ວ່າ: ຊີວິດ ແລະ ຜົນງານຂອງ ມະຫາສີລາ ວີຣະວົງ, ແຕ່ປຶ້ມເຫລັ້ມດຽວບໍ່ອາດແກ້ໄຂຂໍ້ສົນໃຈຕ່າງໆ ແລະ ບາງບັນຫາທີ່ບໍ່ເຄີຍນຳມາສົນທະນາກັນໄດ້ ດັ່ງນັ້ນທາງຄະນະກຳມະການວິທະຍາສາດສັງຄົມ ຮ່ວມກັບ ຄະນະອາຈານ ມະຫາວິທະຍາໄລສີນັກຄະລິນ ວິໂຣດ ມະຫາສາຣະຄາມ ຈຶ່ງຕົກລົງກັນ ຈັດຕັ້ງກອງປະຊຸມກ່ຽວກັບຜົນງານຂອງທ່ານ ໂດຍມີຈຸດປະສົງລະອຽດດັ່ງຕໍ່ໄປນີ້ :

II.- ຈຸດປະສົງ - ເປົ້າໝາຍຂອງກອງປະຊຸມ

໑.) ເພື່ອໃຫ້ໂອກາດແກ່ນັກຄົ້ນຄວ້າທາງດ້ານ ວັນນະຄະດີລ້ານຊ້າງ ທີ່ປະເທດໄທ ໄດ້ແລກປ່ຽນທັດສະນະກັບນັກຄົ້ນຄວ້າລາວ.

໒.) ເພື່ອເຜີຍແຜ່ ແລະ ຍ້ອງຍໍຜົນງານອັນເກົ່າແກ່ທີ່ຫາຍາກບາງຢ່າງຂອງທ່ານ ໃຫ້ນັກຄົ້ນຄວ້າຜູ້ໜຸ່ມນ້ອຍໄດ້ຮູ້ຈັກ.

໓.) ເພື່ອຂຶ້ນບັນຊີຜົນງານໃຫ້ຄົບຖ້ວນ ກ່າວເຖິງຮີບໂຮມຕົ້ນສະບັບອັນຫາ ຍາກ ເຊັ່ນ ປະຕິທິນລາວສະບັບທຳອິດ (ຄ.ສ. ໑໙໓໒) ທີ່ບັນຈຸບົດກອນທຳນວາຍຟ້າຝົນ ແລະ ວັນຈັນທະຄາດ, ປະຫວັດອັກສອນລາວ, ການແຕ່ງກອນໄຫວ້ຮຽງຈັນ ທີ່ພິມແຕ່ ຄ.ສ. ໑໙໔໒ ຯລຯ .

໔.) ເພື່ອສະດຸດີ ເຊີດຊູກຽດຕິຄຸນຂອງນັກປາດອາຈານລາວ ໃຫ້ເປັນທີ່ຮູ້ຈັກ ກວ້າງຂວາງກວ່າເກົ່າ.

III .- ຜົນປະໂຫຍດທີ່ຈະໄດ້ຈາກກອງປະຊຸມ

໑.) ເຮັດໃຫ້ນັກຄົ້ນຄວ້າ ຮ່ວມທັງຜູ້ສົນໃຈໄດ້ສຶກສາ ໄດ້ຮູ້ຈັກຂໍ້ມູນໃໝ່ໆ ເພື່ອ ດັດແປງແກ້ໄຂຈຸດບົກພ່ອງ ໃນຜົນງານບາງອັນຂອງມະຫາສີລາ ແລະ ເສີມຂະຫຍາຍ ອັນ ຈະເປັນປະໂຫຍດແກ່ສັງຄົມ ແລະ ການສຶກສາ ທາງດ້ານສັງຄົມລາວ-ວັດທະນະທຳ ສືບ ຕໍ່ໄປ.

໒.) ເປັນການສຶກສາອົບຮົມ ແລະ ເຮັດໃຫ້ການຮັບຮູ້ ມູນມໍລະດົກທາງດ້ານ ວັດ ທະນະທຳ ວັນນະຄະດີ-ອັກສອນສາດ ຂອງຊາວລາວເລິກເຊິ່ງ ແລະ ກວ້າງຂວາງຕື່ມຂຶ້ນ

໓.) ສາມາດຕີລາຄາຢ່າງເປັນເອກະພາບຕໍ່ວິທີການສຶກສາຄົ້ນຄວ້າຂອງທ່ານ ໃນ ຍຸກສະໄໝນັ້ນ (ແຕ່ຊຸມປີ ໑໙໔໐-໑໙໗໐) ວ່າມີຫລັກການວິທະຍາສາດແນວໃດ.

IV .- ການຈັດຕັ້ງ ປະຕິບັດ

ຄະນະກຳມະການວິທະຍາສາດສັງຄົມ ສ.ປ.ປ.ລ ເປັນເຈົ້າພາບຮັບຜິດຊອບ ທາງດ້ານເນື້ອໃນ ສົມທົບກັບຄອບຄົວວິຣະວົງ.

໑.) <u>ຄະນະຮັບຜິດຊອບ</u>

໑.- ທ່ານ ຄຳແພງ ເກດຕະວົງ, ນັກຄົ້ນຄວ້າ ຄ.ວ.ສ

໒.- ທ່ານ ສຸເນດ ໂພທິສານ , ນັກຄົ້ນຄວາ ຄ.ວ.ສ

໓.- ທ່ານ ຈາຣຸວັນ ທຳມະວັດ , ອາຈານສອນ ມ.ສ.ວ. ມະຫາສາລະຄາມ

໔.- ທ່ານ ວັນນະສັກ ພິຈິດບຸນເສີມ ອາຈານ, ມະຫາສາຣະຄາມ

໕.- ທ່ານ ດວງເດືອນ ບຸນຍາວົງ, ເພື່ອນຮ່ວມງານຂອງ ຄ.ວ.ສ.

໒.) <u>ຜູ້ເຂົ້າຮ່ວມ</u> :

ກ. ນັກປະຖຸກະຖາ ໑໒ ຄົນ

ຂ. ຜູ້ເຂົ້າຮ່ວມຟັງ - ຮ່ວມສົນທະນາ ໔໐ - ໖໐ ຄົນ

໓.) <u>ສະຖານທີ່</u> : ຫ້ອງປະຊຸມຂອງ ມ.ສ.ພ. ວຽງຈັນໃຫມ່

ວາງສະແດງພິມງານ ແລະ ຮູບປະກອບເປີດໃຫ້ສາທາລະນະເຂົ້າຊົມໃນ ເວລາ ໂມງການ.

໔.) <u>ເວລາ</u> ວັນທີ ໒໘-໒໙ ເມສາ ໑໙໙໐ .

ລາຍຊື່ ຜູ້ເຂົ້າຮ່ວມ

ລຳດັບ	ຊື່ ນາມ ສະກຸນ		ເຂົ້າຮ່ວມໃນ ຖານະ
໑	ສີຊະນະ ສີສານ	ປະທານ ຄ.ວ.ສ	ປະທານ
໒	ຄຳມາ ພົມກອງ	ທີ່ປຶກສາສະມາຄົມນັກຂຽນ	ຜູ້ຟັງ
໓	ສິງກະໂປ ສີໂຄດຈຸລະມາລີ	ປະທານອົງການສັນຕິພາບໂລກ	ຜູ້ຟັງ
໔	ຄຳລຽງ ພົນເສນາ	ປະທານອົງການສະພາກາແດງ	ຜູ້ຟັງ
໕	ຄຳເພົາ ພອນແກວ	ເລຂາທິການກຳມະການ	
		ຊຸຍແນສໂກ	ຜູ້ຟັງ
໖	ພູ ລາຊະພົນ	ຄະນະກຳມາທິການວັດທະນະທຳ	
		ປະຈຳສະພາປະຊາຊົນ	ຜູ້ຟັງ
໗	ຄຳພັນ ວິລະຈິດ	ນັກຄົ້ນຄວ້າອາວຸໂສ ຄ.ວ.ສ	ຜູ້ຟັງ
໘	ທູມພັນ ລັດຕະນະວົງ	ທ/ສ ວັນນະຄະດີ ພາສາ	ຜູ້ອະພິປາຍ
໙	ຄຳແພງ ໂກດຕະວົງ	ຂອງ ທ/ສ " "	=″=
໑໐	ທອງເພັດ ກົ້ງສະດາ	ນັກປະຫວັດສາດ, ຄ.ວ.ສ	=″=
໑໑	ສຸເນດ ໂພທິສານ	ນັກປະຫວັດສາດ, ຄ.ວ.ສ	=″=
໑໒	ທອງຂຶ່ນ ບຸຜາພັນ	ນັກບູຮານຄະດີ, ຄ.ວ.ສ	=″=

໑໓	ບຸນຍັງ	ພະນັກງານ ຄ.ວ.ສ	="=
໑໔	ເບີຍສີ ລາຊະພົມ	="= ="=	="=
໑໕	ບູຂຽວ	="= ="=	="=
໑໖	ສີສະເຫວີຍ ສຸວັນນີ	ນັກອັກສອນສາດ ກ/ສສ	ຜູ້ອະພິປາຍ
໑໗	ສົມແສງ ເກສາວິລະ	ອາຈານພາສາສາດ, ມ.ສ.ຄ	="=
໑໘	ສີຂາວມາ	="= ວັນນະຄະດີ, ມ.ສ.ຄ	ຜູ້ຟັງ
໑໙	ມີໄຊ	="= ="= ="=	="=
໒໐	ບຸນອຸມ	ອາຈານປະຫວັດສາດ, ອຸດົມ	
		ວຽງຈັນ	ຜູ້ຟັງ
໒໑	ຫລ້າວັນ	ອາຈານ ອຸດົມວຽງຈັນ	="=
໒໒	ບຸນເລີດ ວິລະສັກ	="= ອຸດົມ ສີໂຄດ	="=
໒໓	ນະນີວອນ ອິນທະວົງສາ	ອາຈານວັນນະຄະດີ, ອຸດົມ	
		ສີໂຄດ	="=
໒໔	ສົມເພັດ ສີລີຈັກ	ຫົວຫນ້າອຳນວຍການ ອຸດົມ	
		ນາຊາຍທອງ	="=
໒໕	ທອງ ບຸດຕະລາດ	ອາຈານ, ອຸດົມນາຊາຍທອງ	
		ນາຊາຍທອງ	="=
໒໖	ຄຳຫລ້າ ວັນນະພາພົມ	ອາຈານວັນນະຄະດີ, ອຸດົມ	
		ນາຊາຍທອງ	
໒໗	ທອງຄຳ ອ່ອນມະນີສອນ	ທ/ກ ວັນນະຄະດີກະຊວງ	
		ຖະແຫລງຂ່າວ ວັດທະນະທຳ	ຜູ້ອະພິປາຍ
໒໘	ບຸນເຊັ່ງ ບົວສີແສງປະເສີດ	ນັກປຸຣານວັດຖຸ	="=
໒໙	ດາລາ ກັນລະຍາ	ທ/ກ ວັນນະສິນ	ຜູ້ຟັງ

໓໐	ຊຸທິນ ບຸນຍາວົງ	ກົມວັນນະຄະດີ ກະຊວງຖະ	
		ຖະແຫລງຂ່າວ ວັດທະນະທຳ	ຜູ້ຟັງ
໓໑	ດວງເດືອນ ບຸນຍາວົງ	ນັກຂຽນ	=″=
໓໒	ສົມພົງ ສັກດີ	ກົມວັນນະຄະດີ	=″=
໓໓	ໂອທອງ ຄຳອິນຊູ	ອ.ລ.ສ. ວັນນະສິນ	=″=
໓໔	ສົມຈິດ ທິບທຽງຈັນ	ຫົວໜ້າ ບ.ກ ວຽງຈັນໃໝ່	=″=
໓໕	ແສງສຸລີ ສອນສຸລິນ	ນັກຂ່າວກອງ ບ.ກ ວຽງຈັນໃໝ່	=″=
໓໖	ຈັນທະພອນ ວັນນະຈິດ	=″= =″=	=″=
໓໗	ຄຳເພີຍ ນະນິວັນ	ກອງ ບ.ກ ສຶກສາໃໝ່	=″=
໓໘	ໄຊສຸວັນ ແພງພົງ	ນັກຂຽນ, ສະໂມສອນ	
		ນັກຂຽນໜຸ່ມ	=″=
໓໙	ບຸນທະນອງ ຊົມໄຊພົນ	=″= =″=	=″=
໔໐	ດາວວຽງ ບຸດນາໂຄ	=″= =″=	=″=
໔໑	ວົງສັກດາ ພົມມີໄຊ	=″= =″=	=″=
໔໒	ສົມກຽວ ກົ້ງສະດາ	=″= =″=	=″=
໔໓	ແກວ ສີລີວົງສາ	ອາຈານ ຮ.ຮ.ສາງຄູສົງ	=″=
໔໔	ສົມໄຊ	ອາຈານ, ຮ.ຮ.ຊຸດົມວຽງຈັນ	=″=
໔໕	ສົມບັດ ສົມພອນ	ນັກພັດທະນາກະເສດ	=″=
໔໖	ສີສະຫລຽວ ສະແຫວງສຶກສາ	ຄະນະອຳນວຍການ SMED	=″=
໔໗	ວິຣະພົນ ວິຣະວົງ	ຫົວໜ້າອຳນວຍການ	
		ໂຄງການໄຟຟ້າເຊເສັດ	=″=
໔໘	ມະນີວອນ ວິຣະວົງ	ໂຄງການລຽງສັດລາວ-ອົດສະ	
		ຕາລີກະຊວງກະສິກຳປ່າໄມ້	=″=

໔໙	ຊານ ອັນຕິນ	ຜູ້ຊ່ວຍຊານກະສິກຳ		
				="=
໕໐.	ຈາຣຸວັນ ທຳມະວັດ	ອາຈານ,	ມະຫາສາຣະຄາມ	ຜູ້ອະພິປາຍ
໕໑	ວັນນະສັກ ພິຈິດບຸນເສີມ,	ອາຈານ,	="=	="=
໕໒	ອັດນັນທະຈັກ	ນັກຄົ້ນຄວ້າ,	="=	="=
໕໓	ເບັນຈະພອນ ດີບຸນທິດ	ນັກສຶກສາ ມ.ສ.ວ		ຜູ້ຟັງ
໕໔	ໄຊອະນັນ ເພົາພານ	ອາຈານ,	ມະຫາສາລະຄາມ	="=
໕໕	ປິຍາ ຄຳຈັນ	ນັກສຶກສາ	="=	="=
໕໖	ວິຣະໄນ ພູສະຫວັດ	="=	="=	="=
໕໗	ເພັນພິໄລລັກ ມະນີພາກ	="=	="=	="=
໕໘	ຣຸຈິຣາ ວົງແກວ	="=	="=	="=
໕໙	ສຸຣະສັກ ພົມເສນ	ອາຈານ,	="=	="=
໖໐	ປະເສີດ ປັນຍາກູນ	ນັກພັດທະນາອາສາສະໝັກ ຂອນແກ່ນ		="=

ລຳດັບ ການສົນທະນາ

ລ/ດ	ເວລາ	ຫົວຂໍ້ສົນທະນາ	ຜູ້ອະພິປາຍ
	<u>ວັນທີ ໒໗/໔</u>		
໑	໘.໑໐	ຄຳປາໄສໄຂກອງປະຊຸມ	ທ່ານ ສີຊະນະ ສີສານ
໒	໘.໒໐	ວັນນະຄະດີເອກຂອງລາວໃນທັດສະນະ ຂອງມະຫາ ສິລາ ວີຣະວົງ	ດຣ.ທອງຄຳ ອ່ອນມະນີ ສອນ
໓	໙.໐໐	ທ້າວຮຸ່ງໃນທັດສະນະຂອງມະຫາສິລາ ວີຣະວົງ	ວັນນະສັກພິຈິດ ບຸນເສີນ
໔	໙.໓໐	ການຈັດແບ່ງວັນນະຄະດີ ຂອງມະຫາ ສິລາ ວີຣະວົງ	ຄຳແພງ ເກດຕະວົງ
		<u>ພັກຜ່ອນ</u>	

໕	໑໐.໓໐	ຄວາມເຫັນຕໍ່ຊື່ ທ້າວຮຸ່ງ ທ້າວເຈືອງ, ເຈື່ອງ	ທ່ານ ສີຊະນະ ສີສານ
໖	໑໐.໔໐	ຕຳນານຕ່າງໆກ່ຽວກັບ ທ້າວຮຸ່ງ	ອັນນະສັກ ພິຈິດບຸນເສີມ
໗	໑໑.໐໐	ທັດສະນະຕໍ່ການສຶກສາ ວັນນະຄະດີ	ຈາຣຸວັນ ທຳມະວັດ
໘	໑໑.໑໐	ປະກອບຄວາມເຫັນ	ທ່ານ ສິ້ງກະໂປ ສີໂຄດຈຸນລະມາລີ
໙	໑໑.໓໐	ປະກອບຄວາມເຫັນ	ທອງຄຳ, ອັດ ນັນທະຈັກ ຂຸມພັນ
		<u>ພັກຜ່ອນ</u>	
	<u>ຕອນບ່າຍ</u>		
	໑໔.໐໐	ຈຶນປັ້ນລາຍມື ຕົ້ນສະບັບຕ່າງໆ	
໑໐	໑໔.໔໕	ມະຫາສິລາ ແລະການຄົ້ນຄວ້າອັກສອນສາດ	ສີສະເຫວີຍ ສຸວັນນີ
໑໑	໑໕.໑໕	ການເລີ່ມຕົ້ນຄົ້ນຄວ້າ ພາສາສາດ	ທອງເພັດ ກິ່ງສະດາ
໑໒	໑໖.໐໐	ສຳນວນພາສາລາວຂອງ ມະຫາສິລາ ວີຣະວົງ	ສົມແສງ ເກສາວິລະ
		<u>ພັກຜ່ອນ</u>	
໑໓	໑໖.໓໐	ຈຸດສົມບັດສະເພາະຕົວ ບົດອ່ານສຳລັບເດັກ	ຈຸມພົນ ລັດຕະນະວົງ

໑໔	໑໖.໔໐	ຈຸດມຸ່ງໝາຍຂອງການປະພັນເລື່ອງ	ຈາຣຸວັນ ທຳມະວັດ
			ປະກອບຄວາມເຫັນ
໑໕	໑໗.໐໐	ຊຸດົມການລັບຂອງ ມະຫາ ສິລາ	ມະຫາຄຳພັນ ວິລະຈິດ
		<u>ພັກຜ່ອນ</u>	
	ວັນທີ ໒໙/໔		
໑໖	໘.໑໐	ການຄົ້ນຄວ້າສຶກສາວັດທະນະທຳ ໔ ຝັ່ງ	
		ຂອງ ຂອງມະຫາສິລາ ວິຣະວົງ	ຈາຣຸວັນ ທຳມະວັດ
໑໗	໘.໔໐	ອາຈານສິລາ ວິຣະວົງ ກັບການຄົ້ນຄວ້າ	
		ປະຫວັດສາດລາວ	ສຸເນດ ໂພທິສານ
		<u>ພັກຜ່ອນ</u>	
໑໘	໙.໔໐	ເບື້ອງຫລັງພັດທະນາການທາງດ້ານຄວາມ	
		ຄິດຂອງ ມະຫາສິລາ ວິຣະວົງ	ອັດ ມັນທະຈັກ
໑໙	໑໐.໑໐	ຮີດຄອງປະເພນີລາວ ໃນທັດສະນະຂອງ	
		ມະຫາສິລາ ວິຣະວົງ	ອາຈານ ບຸນເຮັງ
			ບົວສີແສງປະເສີດ
໒໐	໑໐.໓໕	ການຄົ້ນຄວ້າບູຮານະຄະດີລາວກັບອາຈານ	
		ສິລາ ວິຣະວົງ	ທອງອິນ ບຸບຜາພັນ
໒໑	໑໑.໐໐	ຄວາມເຫັນຕໍ່ການຄົ້ນຄວ້າທາງໄປສູ່ການ	
		ເປັນນັກປາດລະດັບສາກົນ	ຄຳເພົາ ພອນແກ້ວ
		ຜູ້ອື່ນໆ ປະກອບຄວາມເຫັນ	

໔໘	໑໔.໔໐	ການປະພັນກອນລຳ ຂອງ ມະຫາສີລາ	
		ວີຣະວົງ	ດຣ.ສີສະຫລຽວ
			ສະແຫວງສຶກສາ
໔໙	໑໔.໙໐	ຂໍ້ສັງເກດໂດຍທົ່ວໄປ	ທ່ານ ສີຊະນະ ສີສານ
		<u>ອັດພິທີ</u>	
	໑໕.໐໐	ແຂກໄປຮ່ວມພິທີສູດຊັກລະນິຈາທີ່ທາດ	
		ບັນຈຸດູກຂອງທ່ານ ມະຫາສີລາ ວີຣະວົງ	
		ທີ່ວັດພຸດທະວົງສາປ່າຫລວງ	

ຄຳປາໄສ ຂອງທ່ານ ສີຊະນະ ສີສານ ປະທານ ຄະນະ ກຳມະການ ວິທະຍາສາດ ສັງຄົມ ກ່າວໃນໂອກາດ ໄຂ ກອງ ປະຊຸມ ວ່າດ້ວຍ "ຜົນງານ ຂອງ ມະຫາ ສິລາ ວີຣະວົງ ໃນ ທັດສະນະ ຂອງນັກ ວິທະຍາການ ສອງຝັ່ງຂອງ"

ວັນທີ 28 ເມສາ 1990 ນະຄອນ ວຽງຈັນ

ບັນດາ ຜູ້ຊົງຄຸນວຸດທິ, ແຂກທີ່ນັບຖື

ບັນດາ ນັກຄົ້ນຄວ້າ ນັກຄຽນຣູ ນັກຂຽນ ທີ່ນັບຖື ແລະ ຮັກແພງ.

ກ່ອນອື່ນ ຂ້າພະເຈົ້າຂໍສະແດງຄວາມຂອບໃຈທ່ານຜູ້ມີກຽດທັງຫຼາຍ ໂດຍສະເພາະບັນດາແຂກນັກວິຊາການໄທ ທີ່ໄດ້ເສຍສະຫລະເວລາມາຮ່ວມເປັນກຽດ ໃນກອງປະຊຸມຄັ້ງນີ້ ອັນເປັນຄັ້ງປະຫວັດສາດຂອງວົງການນັກຄົ້ນຄວ້າວັນນະຄະດີ ຂອງລາວ. ກອງປະຊຸມເກີດຂຶ້ນໄດ້ກໍໂດຍຄວາມຮ່ວມມືຮ່ວມໃຈຂອງນັກວິຊາການສອງຝັ່ງຂອງ ທີ່ມີເຈດຈຳນົງເສີມຂະຫຍາຍສາຍພົວພັນ ອັນມີມາແຕ່ບູຮານນະການ ລະຫວ່າງປະຊາຊົນລາວ-ໄທ ໂດຍສະເພາະ ສາຍພົວພັນດ້ານວັດທະນະທຳ - ວັນນະຄະດີ ຂອງພີ່ນ້ອງສອງຝັ່ງຂອງ.

ຂ້າພະເຈົ້າມີຄວາມປິຕິຍິນດີເປັນພິເສດ ທີ່ນັກວິຊາການສອງຟາກຝັ່ງພວກເຮົາ ມີຈຸດລວມ ຫລື ປັດໃຈທີ່ສຳຄັນອັນປຽບເຫມືອນສະພານເຊື່ອມໂຍງສອງຟາກຝັ່ງ ລາວ-ໄທ ນັ້ນຄືນັກປາດ ອາຈານມະຫາສິລາ ວີຣະວົງ ຊຶ່ງໄດ້ລ່ວງລັບຈາກພວກເຮົາໄປແລ້ວ ເມື່ອສາມປີກ່ອນ. (ຂໍສະເຫນີທີ່ປະຊຸມ ຢືນໄວ້ອາໄລ ໑໐ ວິນາທີ).

ພວກເຮົາຈັດກອງປະຊຸມສົນທະນາ ໃນຫົວຂໍ້ " ມະຫາສິລາ ວີຣະວົງ ໃນທັດສະນະຂອງນັກວິຊາການສອງຝັ່ງຂອງ " ນີ້ນັ້ນ ຊຶ່ງເຖິງແມ່ນວ່າ ມັນຈະເປັນກອງປະຊຸມນ້ອຍນ້ອຍ ແຕ່ກໍມີຄວາມຫມາຍສຳຄັນ ເພາະໄດ້ດຶງດູດເອົານັກວິຊາການ, ນັກຄົ້ນຄວ້າ, ນັກ

ວັນນະຄະດີ, ນັກຂຽນ, ນັກກະວີ ຈາກຫລາຍພາກສ່ວນມານັ່ງສົນທະນາກັນໃນບັນຍາກາດ ອັນເຕັມໄປດ້ວຍຄວາມສາມັກຄີຮັກແພງ ແລະ ຄວາມສັດທາເຊື່ອຖື ໃນຜົນງານ ການຄົ້ນຄວ້າຂອງ ມະຫາສີລາ ວີຣະວົງ.

ມະຫາສີລາ ເປັນບຸກຄົນໃນຕຳນານໄປແລ້ວ ເພາະຄົນຮຸ່ນໄທເຮົາເຈົ້າຂ້ອຍ ສ່ວນຫລວງຫລາຍໄດ້ຍິນຊື່ສຽງຂອງທ່ານມາແຕ່ເຫິງນານ, ສຳລັບບາງຄົນອາດດົນນານນັບເປັນເຄິ່ງສະຕະວັດ ຫລື ກວ່ານັ້ນ. ບຸກຄົນໃນຕຳນານກໍຫມາຍເຖິງການທ້າທາຍ ສຳລັບນັກຄົ້ນຄວ້າຮຸ່ນໃຫມ່, ຫມາຍເຖິງຫົວຂໍ້ສຳລັບການຂຽນວິທະຍານິພົນ ຂອງນັກສຶກສາທັງຫລາຍ. ມະຫາສີລາ ມີຜົນງານຫລາກຫລາຍ, ທັງໃນດ້ານປະຫວັດສາດ, ວັນນະຄະດີ, ອັກສອນສາດ, ໂຫລາສາດ ແລະ ຕຳລາອື່ນ ໆ. ຜົນງານເຫລົ່ານັ້ນ ກະຈັດກະຈາຍຢູ່ຕາມສອງຝັ່ງຂອງ ແລະ ຄອງຄອຍການເກັບກຳ, ການຄົ້ນຄວ້າ-ພິມເຜີຍແຜ່ ແລະ ປົກປັກຮັກສາຈາກຄົນຮຸ່ນພວກເຮົາ ແລະ ຮຸ່ນຕໍ່ໆໄປ. ດັ່ງນັ້ນ ກອງປະຊຸມສົນທະນາທີ່ໄຂຂຶ້ນໃນມື້ນີ້ເປັນຂີດຫມາຍໃນວົງການນັກຄົ້ນຄວ້າ-ສຶກສາ ຂອງພວກເຮົາ ທີ່ຈະສົນທະນາແລກປ່ຽນ ຄວາມຄິດເຫັນຕ່າງໆ, ເສີມຂະຫຍາຍຈຸດດີມີປະໂຫຍດໃນຜົນງານ ທີ່ ມະຫາສີລາ ໄດ້ສ້າງໄວ້, ແກ້ໄຂເພີ່ມເຕີມຈຸດທີ່ບໍ່ທັນຄົບຖ້ວນສົມບູນ ທີ່ປະກົດຢູ່ໃນຜົນງານເຫລົ່ານັ້ນ. ສະໄຫມ ທີ່ມະຫາສີລາ ຍັງມີຊີວິດຢູ່ນັ້ນ ທ່ານເຄີຍເວົ້າສະເຫມີວ່າ ໃນການຂຽນປຶ້ມຕ່າງໆ ເຊັ່ນ ປະຫວັດສາດ ຫລື ວັນນະຄະດີນັ້ນ ອາດມີບ່ອນຜິດພາດ, ບ່ອນບໍ່ສົມບູນ ເນື່ອງຈາກຂໍ້ມູນ ບໍ່ມີພຽງພໍ, ບໍ່ຊັດເຈນ ແລະ ເງື່ອນໄຂສະພາບແວດລ້ອມບໍ່ອຳນວຍ. ດັ່ງນັ້ນ ຈຶ່ງໃຫ້ນັກຄົ້ນຄວ້າ ນັກຂຽນຮຸ່ນໃຫມ່ ທຳການວິເຄາະວິໄຈເພີ່ມເຕີມໃຫ້ສົມບູນຍິ່ງຂຶ້ນຕື່ມອີກຕໍ່ໆໄປ, ທຳນອງເອົາແກວມາພັດສີຈອຍລະໄມ ໃຫ້ສົດໃສເປັນແອ່ນແຍງ ຫລື ເປັນສົມບັດຂອງ ຄົນຮຸ່ນຕໍ່ໄປ.

ສຸພາສິດບູຮານວ່າ : " ແກ້ວບໍ່ພັດ ສາມປີເປັນແຮ່ ພີ່ນ້ອງບໍ່ແວ່ ສາມປີເປັນອື່ນ"

ອາຈານມະຫາສີລາ ໄດ້ບຸກເບີກທາງໃຫ້ແກ່ພວກເຮົາໃນສະພາບເງື່ອນໄຂທີ່ ຫຍຸ້ງຍາກສັບສົນ. ທ່ານບໍ່ພຽງແຕ່ບຸກເບີກທາງສາຍດຽວເທົ່ານັ້ນ ແຕ່ໄດ້ທຳໄວ້ ຫລາຍສາຍເຊັ່ນ ສາຍປະຫວັດສາດ, ວັນນະຄະດີ, ບູຮານຄະດີ, ອັກສອນສາດ, ໂຫລາສາດ ເປັນ

ຕົ້ນ. ພິເສດ ທ່ານຍັງເປັນນັກຕໍ່ສູ້ກູ້ຊາດ ແລະ ໄດ້ປະກອບສ່ວນສຳຄັນໃນຂະບວນ ການລາວອິດສະຫລະ ເພື່ອປົດແອກຄອບຄອງຂອງຈັກກະພັດຕ່າງດ້າວ. ໄວໜຸ່ມ ຂອງທ່ານເຕັມປ່ຽມໄປດ້ວຍເລືອດຮັກຊາດ, ນັບຊຸມຮອບ ຈົນແກ່ດົງຕົວທ່ານໃຫ້ຂ້າມມາຢູ່ ດິນແດນລາວໃນສະພາບຊຸດໂຊມເຫລືອງ ດັ່ງເປັນທີ່ຊາບກັນດີຢູ່ ໃນຊີວະປະຫວັດຂອງທ່ານເອງ.

ຂ້າພະເຈົ້າ ຫວັງວ່າພວກທ່ານນັກຄົ້ນຄວ້າ ນັກວິຊາການ ທີ່ໄດ້ມາເຕົ້າໂຮມກັນ ໃນທີ່ນີ້ ຄົງຈະເຮັດທຸກວິທີທາງ ໃຫ້ໜ່ວຍແກ່ວຂອງພວກເຮົາສົດໃສຂຶ້ນ, ເປັນຈຸດລວມ ເປັນສະພານເຊື່ອມໂຍງຈິດໃຈ ພີ່ນ້ອງສອງຝັ່ງຂອງຕະຫລອດໄປ ຊົ່ວກາລະນານ

ໂດຍສອດຄ່ອງກັບທົດສະວັດແຫ່ງການເສີມຂະຫຍາຍວັດທະນະທຳ ເຊິ່ງທາງ ອົງການ ຢູເນັສໂກ (UNESCO) ໄດ້ປະກາດອອກກ ໑໙໘໘ ຫາ ໑໙໙໗, ກອງປະຊຸມສົນທະນາຄັ້ງນີ້ ກໍເປັນການປະກອບສ່ວນເຂົ້າໃນພາລະກິດດັ່ງກ່າວ, ພ້ອມດຽວກັນ ກໍເປັນການໄຂສັ່ງກາດໃໝ່ໃຫ້ແກ່ການສືບຕົ້ນ, ເຊີດຊູຄຸນຄ່າວັນນະຄະດີລາວ ໃຫ້ປະກົດເດັ່ນຕໍ່ຊາວໂລກອີກດ້ວຍ

ດ້ວຍຈິດໃຈທີ່ຊາບຊຶ້ງ ແລະ ພູມໃຈໃນຜົນງານຂອງທ່ານ ມະຫາສີລາ ຂ້າພະເຈົ້າ ຂໍປະກາດໄຂກອງປະຊຸມສົນທະນາ ນັບແຕ່ບັດນີ້ເປັນຕົ້ນໄປ ຂໍຂອບໃຈ

ວັນນະຄະດີເອກຂອງລາວ ໃນທັດສະນະ ຂອງມະຫາ ສິລາ ວີຣະວົງ

• ທອງຄຳ ອ່ອນມະນີສອນ

ຫົວໜ້າກົມວັນນະຄະດີ, ກະຊວງ ຖະແຫຼງຂ່າວ ແລະ ວັດທະນະທຳ . ປະລິນຍາເອກ ວັນນະຄະດີ ວິທະຍາໄລ ຮົງກາລີ

ຮຽນ ທ່ານ ສີຊະນະ ສີສານ

ຮຽນ ທ່ານ ຄຳມາ ພົມກອງ

ຮຽນ ບັນດາທ່ານ ທີ່ເຄົາຣົບ ແລະ ນັບຖື

ຂ້າພະເຈົ້າຮູ້ສຶກເປັນກຽດຢ່າງສູງ ທີ່ໄດ້ມີໂອກາດມາກ່າວ ກ່ຽວກັບ ວັນນະຄະດີເອກຂອງລາວ ໂດຍການຄົ້ນຄວ້າຂອງທ່ານ ອາຈານມະຫາສິລາ ເພື່ອເຮັດໃຫ້ ການຄົ້ນຄວ້າຂອງເພິ່ນປະກົດເປັນຈິງ ທາງດ້ານວິຊາການຂອງ ອາຈານ ມະຫາສິລາທີ່ຄົ້ນຄວ້າມາແລ້ວນັ້ນ ກອງປະຊຸມສຳມະນາໄດ້ເປີດຂຶ້ນ ໃນຄັ້ງນີ້ ຖືວ່າເປັນກາລະໂອກາດ ຄັ້ງທຳອິດ ເປັນນິມິດໝາຍອັນດີເລີດຂອງນັກຄົ້ນຄວ້າລາວ ໂດຍສະເພາະລູກສິດທີ່ເຄີຍສຶກສາຄົ້ນຄວ້າ ຮ່ຳຮຽນ ພາຍໃຕ້ການຊີ້ນຳ ແນະນຳ ສັ່ງສອນ ຂອງອາຈານ ມະຫາ ສິລາ ແລະ ຜູ້ທີ່ມີ ຍິນຊົມຊື່ນ ຢູ່ໃນຜົນງານຂອງເພິ່ນ ມາເປັນເວລາຍາວນານ ເພື່ອອຸທິດໃຫ້ແກ່ວັນ ດັ່ງກ່າວ ຂ້າພະເຈົ້າຂໍອ່ານ ບົດກະວີສັ້ນບົດໜຶ່ງ ທີ່ໄດ້ແຕ່ງເພື່ອທ່ານ ຜູ້ລ່ວງລັບໄປແລ້ວ.

" ບົດຮຽນອັນປະເສີດ ຈາກອາຈານ ມະຫາສິລາ ວີລະວົງ "

ເຖິງທ່ານ ໄລລະຮ້າງ   ວາງໂລກລາໜີ
ຄຸນຄວາມດີ ນິລັນດອນ   ບໍ່ຫ່ອນສູນເສຍເວັ້ນ
ລິນຫຼັ່ງ ໂດຍກະແສນ້ຳ   ນະທີທານໄຫຼລ່ອງ
ໃສສ່ອງສິ້ນຊື່ແລ້ວ   ສີລາແກ້ວກັ້ນຫອມ

ຄົນຖະໜອມສູ້ມື້ ລີ້ສິ່ງທີ່ລ້ຽງຂຽນ
ສະຖຽນໃນນິພົນຍົກ ຍື່ນຍໍແຍງໄວ
ບໍ່ຍັ້ນໄລໜອງໄໜ ບໍ່ມາຍນິວລືມລ່າຍ
ເປັນຫຼັກໝາຍນິ້ງໜັ້ນ ນິລັນອາງເອີ່ຍນານ ທ່ານແລ້ວ

ເມື່ອເວົ້າເຖິງ ທ່ານອາຈານ ມະຫາ ສິລາ ເຮົາເປັນນັກຄົ້ນຄວ້າ ນັກອັກສອນສາດ ນັກວັນນະຄະດີ ນັກປະຫວັດສາດລາວ ຜູ້ທີ່ຜ່ານການຄົ້ນຄວ້າ ມີປະສົບການ ໃນດ້ານວິທະຍາການ ກ່ຽວກັບວິຊາການດັ່ງກ່າວ ມາເປັນເວລາຍາວນານ ມີຜົນງານອັນລ້ຳເລີດ.

ຂ້າພະເຈົ້າເຫັນວ່າ ເພິ່ນເປັນຜູ້ບຸກເບີກລິເລີ່ມຢູ່ໃນວົງການຄົ້ນຄວ້າ ກ່ຽວກັບວັນນະຄະດີລາວ ອັກສອນສາດລາວ ພາສາລາວ ແລະ ອື່ນ ໆ ອີກ ແຕ່ໃນທີ່ນີ້ ຂ້າພະເຈົ້າຢາກຂໍເນັ້ນໜັກ ການຄົ້ນຄວ້າ ວັນນະຄະດີເອກ ຂອງລາວ ໂດຍສະເພາະ ວັນນະຄະດີເອກສະໄໝ ລ້ານຊ້າງ ທີ່ທ່ານ ອາຈານ ມະຫາສິລາ ໄດ້ລົງເລິກ.

ເພື່ອຈະກ້າວໄປຫາຈຸດດັ່ງກ່າວ ກ່ອນອື່ນ ຂ້າພະເຈົ້າຂໍເວົ້າເຖິງ ຄວາມເປັນມາກ່ຽວກັບການຄົ້ນຄວ້າຢູ່ໃນ ສ.ປ.ປ.ລາວ ກ່ອນຈະມີວັນນີ້ ເບື້ອງຫຼັງຂອງວັນນີ້ ເປັນວັນທີ່ເຕັມໄປດ້ວຍ ຄວາມສັບສົນຫຍຸ້ງຍາກ ອາຈານ ມະຫາສິລາ ໄດ້ນຳເອົາຄວາມຮູ້ ຄວາມສະຫຼາດ ປະສົບການ ພູມຄວາມຮູ້ ອັນລ້ຳເລີດຂອງເພິ່ນ ຜ່ານຜ່າຄວາມສັບສົນເນ່າເໝືອກສະພາບການທາງດ້ານ ຊີວິດ ປະຫວັດສາດ ແລະ ອື່ນ ໆ ມາສ້າງຜົນງານຢູ່ດິນແດນລ້ານຊ້າງ ທີ່ລືຊື່ ແລະ ເປັນບ່ອນທີ່ເພິ່ນໄຝ່ຝັນ ແລະ ມີຄວາມຕັ້ງໝາຍຢ່າງແຮງກ້າ ຢາກຈະມາຖະນຸຖະໜອມຊຸມຊູແຜ່ນດິນຕອນນີ້ ເຖິງແມ່ນວ່າ ຖິ່ນຖານກຳເນີດຈະຢູ່ແຂວງຮ້ອຍເອັດປະເທດໄທ ແຕ່ວ່າ ນ້ຳໃຈຮັກຊາດລາວ ທີ່ເກີດຂຶ້ນມາຈາກ ການບຳລຸງສະໜອງ ຕັ້ງແຕ່ໄວອາຍຸ ໗ ປີ ເປັນກຳລັງຊຸກຍູ້ໃຫ້ເພິ່ນມາເປັນນຶ່ງຂວັນ ລູກຮັກຫຼານແພງ ຜູ້ສືບທອດ ວັນນະຄະດີ ຢູ່ໃນປະເທດຂອງພວກເຮົາ ເພິ່ນໄດ້ສ້າງຜົນງານ ທາງດ້ານການຄົ້ນຄວ້ານີ້ ມາຫຼາຍ ຜົນງານຂອງເພິ່ນມີຫຍັງແດ່ ພວກເຮົາສາມາດຕິດຕາມຈາກປຶ້ມ ມະຫາສິລາ ວິລະວົງ ຊີວິດ ແລະ ຜົນງານ ເຊິ່ງທາງກົມຈັດພິມຂຶ້ນ ໃນປີ ໑໙໙໐ ນີ້ ພວກເຮົາຖືວ່າເພິ່ນເປັນ

ຜູ້ທຳອິດ ຢູ່ໃນການຄົ້ນຄວ້າ ວັນນະຄະດີລາວ ຢູ່ໃນເມືອງລາວເຮົານີ້ ພົນງານຫຼາຍອັນ ທີ່ປະກົດສູ່ສາຍຕາມະຫາຊົນ ເປັນສິ່ງຫຼົງລືມບໍ່ໄດ້ ເປັນສິ່ງທີ່ນັກຄົ້ນຄວ້າທັງຫຼາຍ ຈະປະຖິ້ມໂດຍບໍ່ອ້າງອີງພົນງານຂອງເພິ່ນ ເປັນໄປບໍ່ໄດ້ ການຄົ້ນຄວ້າໃນໄລຍະຊຸມປີ ໑໙໔໐- ໔໐ ປື້ມທີ່ເພິ່ນຂຽນ ໂດຍສະເພາະ ຂຽນກ່ຽວກັບ ທ້າວຮຸ່ງ ທ້າວເຈືອງ ສັງສິນໄຊ ລຳພະເຫລດ ... ສິ່ງເຫຼົ່ານີ້ຢັ້ງຢືນວ່າ ບໍ່ມີຜູ້ໃດໃນເມືອງລາວເຮົາ ທີ່ຈະຄິດ ທ້ອນໂຮມ ຮິບໂຮມ ເອົາວັນນະກຳທີ່ປະເສີດເລີດລ້ຳ ຂອງດິນແດນລານຊ້າງ ມາເຂົ້າເປັນ ຕົ້ນສະບັບ ແລະ ກໍຂຽນຄຳວິຈານ ຫຼື ຄຳຊີ້ນຳ ເພື່ອເປັນຫຼັກຖານໃຫ້ແກ່ ອະນຸຊົນຮຸ່ນຕໍ່ມາ ຄືກັນກັບເພິ່ນ ຫຼັງຈາກຄົ້ນຄວ້າແລ້ວ ເພິ່ນກໍໄດ້ຊຸກຍູ້ໃຫ້ລັດຖະບານ ເວລານັ້ນ ພິມປື້ມດັ່ງກ່າວ ອອກມາເປັນພະຍານຫຼັກຖານ ເປັນແກ້ວປະເສີດອັນໜຶ່ງ ເພື່ອມອບໃຫ້ແກ່ ປະຊາຊົນລາວ ຜູ້ເກີດໃໝ່ໃຫ້ຍລຸນ.

ໄລຍະຕໍ່ມາກໍມີນັກຄົ້ນຄວ້າເໝືອນກັນ ຄືຢ່າງ ທ່ານ ພູວົງ ພົມມະສອນ ກໍໄດ້ຂຽນ ກ່ຽວກັບ ກຳເນີດວັນນະຄະດີລາວ ຊຸມປີ ໔໐ ຂຽນເປັນພາສາຝະລັ່ງ ແຕ່ບໍ່ເຫັນຕີພິມເປັນພາສາລາວເທື່ອ ອັນນີ້ກໍເປັນສິ່ງໜຶ່ງ ຊ່ວຍໃຫ້ວົງການຄົ້ນຄວ້າຂອງ ພວກເຮົາໄດ້ປະກົດຕໍ່ໜ້າໜັງສືພິມຂອງໂລກ ເຮັດໃຫ້ໂລກ ຮັບຮູ້ວັນນະຄະດີລາວສ່ວນໜຶ່ງ.

ໃນຊຸມປີ ໖໐ ກໍມີຂະບວນການຄົ້ນຄວ້າ ໂດຍ ກົມວັນນະຄະດີ ຫຼື ລາຊະບັນດິດຂອງລັດຖະບານ ຢູ່ໃນລະບອບ ລາຊາທິປະໄຕ ໃນເມື່ອກ່ອນ ເຊິ່ງບຸກຄົນສຳຄັນເວລານັ້ນມີ ສ.ເດດວົງສາ ແລະ ຜູ້ອື່ນ ໆ ຄົ້ນຄວ້າ ກ່ຽວກັບວັນນະຄະດີລາວ ແຕ່ວ່າ ຂ້າພະເຈົ້າເຂົ້າໃຈວ່າ ທັງໝົດນີ້ ເພິ່ນໄດ້ອີງໃສ່ພົນງານ ຂອງ ອາຈານ ມະຫາສີລາ ເປັນຫຼັກຖານ ແຕ່ກໍໜ້າເສຍໃຈ ທີ່ຢູ່ໃນການຄົ້ນຄວ້າໄລຍະຕໍ່ມານີ້ (ຍົກເວັ້ນໃນຊຸມປີ ໑໙໗໐ ຊຶ່ງເປັນການຄົ້ນຄວ້າຢູ່ໃນລະດັບວິທະຍາສາດແບບໃໝ່ ກ່ຽວກັບວັນນະຄະດີ) ບໍ່ຄ່ອຍຈະອ້າງອີງເຖິງອາຈານ ມະຫາສີລາ ນັກກະກາວກາຍ ອີງອາໃສ່ຂໍ້ມູນດ້ານວັນນະຄະດີຂອງເພິ່ນແລ້ວຊໍ້າພັດບໍ່ຂຽນລົງໄວ້ວ່າ ຂໍ້ມູນດັ່ງກ່າວນັ້ນ ແມ່ນອາຈານ ມະຫາສີລາ ເປັນຜູ້ຄົ້ນຄວ້າ ມາແລ້ວ ດັ່ງນັ້ນ ຈຶ່ງເຫັນວ່າ ຊ່ວງໄລຍະຂອງການຄົ້ນຄວ້າເກືອບ ໔໐ ປີ ທີ່ສືບຕໍ່ມາຈາກອາຈານ ມະຫາສີລາ ຍັງບໍ່ທັນຈະແຈ້ງ ວ່າໃຜເປັນຜູ້ໃຫ້ກຳເນີດແທ້ ໃຜເປັນບຸກຄົນສຳຄັນ

ກ່ຽວກັບການຄົ້ນຄວ້າວັນນະຄະດີລາວ. ໂຊກດີ ສ.ປ.ປ.ລາວ ຍັງມີລູກຮັກຫຼານແພງ ຜູ້ຊຶ່ງສັດຊື່ຈະລິດຕໍ່ປະເທດຊາດບ້ານເມືອງ ກໍຄື ຕໍ່ບັນພະບຸລຸດຂອງລາວ ໄດ້ມີໂອກາດ ໄປສຶກສາທີ່ປະເທດ ສັງຄົມນິຍົມ ກໍຄືປະເທດຕ່າງໆ ໃນໂລກ ເມື່ອເວົ້າເຖິງວັນນະຄະດີລາວ ກໍໄດ້ອ້າງອີງເຖິງປຶ້ມ ອາຈານ ມະຫາສິລາ ການອ້າງອີງເປັນໄປໃນລະບົບ ວິທະຍາສາດແບບໃໝ່ ຂອງການຄົ້ນຄວ້າ ໄດ້ມີການຈົດກ່າຍຂໍ້ມູນປີເດືອນ ທີ່ເພິ່ນຂຽນປຶ້ມ ແລະໃຫ້ຄຳຄິດຄຳເຫັນ ໃນການຄົ້ນຄວ້າດັ່ງກ່າວ.

ການຄົ້ນຄວ້າຂອງ ບໍ່ແສງຄຳ ທີ່ຄົ້ນຄວ້າເລິກເຊິງທາງດ້ານ ວັນນະຄະດີ ຂ້າພະເຈົ້າກໍແມ່ນຜູ້ໜຶ່ງ ທີ່ຄົ້ນຄວ້າເລິກເຊິງທາງດ້ານວັນນະຄະດີ ໃນສາຍຕາຂອງນັກປາດ ອາຈານຕ່າງປະເທດ ຮູ້ສຶກຊົມຊອບ ຊື່ນອົກຊື່ນໃຈຕໍ່ ຜົນງານຂອງ ອາຈານ ມະຫາສິລາ ຢ່າງຫຼວງຫຼາຍ ເມື່ອຮູ້ຈັກວ່າ ປຶ້ມຕ່າງໆ ທີ່ເພິ່ນຂຽນຂຶ້ນ ໄດ້ຮຽບຮຽງ ໃຫ້ທັດສະນະຄວາມຄິດຄວາມເຫັນ ໃນພາກວິຈານ ຫຼື ສັນນິຖານສ່ວນໃດສ່ວນໜຶ່ງ ເປັນຫຼັກຖານ ທາງດ້ານວັນນະຄະດີ ສາດສະດາຈານດັ່ງກ່າວ ໄດ້ໃຫ້ຄວາມສຳຄັນຫຼາຍທີ່ສຸດ ຢາກຈະໃຫ້ແປຜົນງານຂອງ ມະຫາສິລາ ອອກເປັນພາສາຂອງຕົນ ເຊັ່ນ : ໂຊວຽດ, ອັງກິດ ....

ຂ້າພະເຈົ້າເປັນນັກຄົ້ນຄວ້າ ທີ່ຢູ່ພາຍໃຕ້ການຊີ້ນຳ ນຳພາຂອງນັກປາດຜູ້ໜຶ່ງ ຊຶ່ງມີໂກຕສະປາ ທີ່ມີຄວາມຊ່ຽວຊານ ເລິກເຊິງທາງດ້ານ ສິລະປະ ແລະ ວັດທະນະທຳ ຂອງຈີນ ເພິ່ນມີຄວາມຊາບຊຶ້ງ ໃນວັນນະກຳຂອງຊາວອາຊີ ເຊິ່ງນອກຈາກ ຈະນິຍົມ ຊົມຊອບຜົນງານທີ່ນັກປາດອາຈານຂອງຈີນສ້າງໄວ້ແລ້ວ ເພິ່ນຍັງຢາກຮູ້ວັນນະກຳ ວັນນະຄະດີຂອງຊາດອື່ນ ໆ ທີ່ຢູ່ຄຽງຂ້າງໃກ້ຊິດກັບປະເທດຈີນອີກ. ເພິ່ນຍັງເລິກເຊິງ ທາງດ້ານວັນນະກຳ ວັນນະຄະດີ ສິລະປະຂອງຍີ່ປຸ່ນ, ຫວຽດນາມ ແລະ ອື່ນ ໆ ເມື່ອມີຂ້າພະເຈົ້າໃຫ້ຄວາມຮ່ວມມືກັບເພິ່ນ ເພິ່ນກໍໄດ້ສືບສາວຫາວຫາ ນັກປາດອາຈານລາວ ອາຈານ ມະຫາສິລາ ໄດ້ກາຍເປັນເປົ້າໝາຍ ທ້າທາຍຕໍ່ການຄົ້ນຄວ້າຂອງຂ້າພະເຈົ້າ ບົດບາງບົດ ທັດສະນະບາງທັດສະນະ ຢູ່ໃນປຶ້ມຕ່າງໆ ໄດ້ແປອອກເປັນພາສາ ອັງກິດ ເພື່ອເຮັດໃຫ້ ບັນດາອາຈານເຂົ້າໃຈ ທ້າຍສຸດ ການຕີລາຄາ ມະຫາສິລາ ຢູ່ໃນລະດັບສູງ ບອກວ່າ ເປັນອາຈານ ນັກປາດຜູ້ໜຶ່ງຂອງລາວ ທີ່ຄວນຈະອ້າງອີງ ແລະ ເອົາແບບເອົາຢ່າງ ນີ້ເປັນ

ຄວາມເຫັນສ່ວນໜຶ່ງຂອງ ອາຈານຕ່າງປະເທດເວລານັ້ນ.

ມາຮອດຊຸມປີ ໑໙໘໐ ການຄົ້ນຄວ້າຂອງເຮົາ ກ່ຽວກັບວັນນະຄະດີລາວ ຄື ໑໙໘໗ ກໍມີປຶ້ມຫົວໜຶ່ງອອກມາ ເອີ້ນວ່າ " ວັນນະຄະດີລາວ " ໂດຍແມ່ນ ຄະນະກຳມະການຄົ້ນຄວ້າວິທະຍາສາດສັງຄົມ ກະຊວງສຶກສາ ເຊິ່ງນຳໂດຍ ບໍ່ແສງຄຳ ວົງດາລາ ກໍໄດ້ພາກັນຂຽນປຶ້ມອັນນີ້ຂຶ້ນມາ ການຂຽນປຶ້ມນີ້ ເກີດຈາກແຮງສະຕິປັນຍາ ການຄົ້ນຄວ້າແບບລວມໝູ່ ຂ້າພະເຈົ້າກໍໄດ້ມາຮ່ວມວຽກງານອັນນີ້ ໃນຕອນປາຍ ໃນໄລຍະທີ່ມີການກວດຄືນ ແກ້ໄຂບາງຂໍ້ຄວາມໃນປຶ້ມນັ້ນ ປຶ້ມນີ້ ກໍເປັນຫຼັກຖານອ້າງອີງຢ່າງໜຶ່ງ ຢັ້ງຢືນເຖິງການ ເອົາຂໍ້ມູນຈາກປຶ້ມຕ່າງໆມາຈັ່ງໃດ ຫຼື ອ້າງອີງໃສ່ປະໂຫຍກ ຄຳເວົ້າໃດໜຶ່ງ ຂອງນັກຄົ້ນຄວ້າທີ່ຂຽນໄວ້ໃນປຶ້ມນັ້ນ ກໍໄດ້ເອົາມາຢ່າງຖືກລະບົບວິທະຍາສາດ ແລະ ຫຼັກການຄົ້ນຄວ້າ ໃນລັກສະນະສາກົນ ບໍ່ໄດ້ເອົາຄວາມເວົ້າຂອງເພິ່ນມາເປັນຄວາມເວົ້າຂອງຕົນເອງ ອ້າງອີງເຖິງປຶ້ມ ແລະ ໜ້າທີ່ເອົາອອກມາຢ່າງຄັກແນ່ ປຶ້ມຫົວນີ້ ຈຶ່ງກາຍເປັນແບບຢ່າງ ອັນໜຶ່ງໃນການຄົ້ນຄວ້າ ເຮັດໃຫ້ອະນຸຊົນຮຸ່ນຫຼັງນີ້ ມີສະຕິຢູ່ໃນການຄິດຮອດຄິດເຖິງ ບັນພະບຸລຸດນັກປາດອາຈານລາວ ຜູ້ລ່ວງລັບໄປແລ້ວ ຜົນງານຂອງເພິ່ນທີ່ອ້າງອີງມາ ກໍເຮັດໃຫ້ເພິ່ນມີຊື່ສຽງ ຈາກການອ້າງອີງດັ່ງກ່າວ.

ຂ້າພະເຈົ້າເຊື່ອວ່າ ການຄົ້ນຄວ້າໃນຂັ້ນຕໍ່ໄປ ການອ້າງອີງຕ່າງໆ ຈະບໍ່ຫຼົງລືມນັກປາດອາຈານຜູ້ລ່ວງລັບໄປແລ້ວ ເຊິ່ງໄດ້ປະຜົນງານອັນຍິ່ງໃຫຍ່ ໃຫ້ແກ່ປະເທດຊາດ ບ້ານເມືອງ ຂ້າພະເຈົ້າ ຍັງບໍ່ທັນໄດ້ເວົ້າວ່າ ວັນນະຄະດີລາວ ທີ່ຂຽນຂຶ້ນໃນປີ ໑໙໘໘ ແລະຖືກພິມໄປແລ້ວ ມີເຖິງ ໔໒໗ ໜ້ານັ້ນ ເປັນປຶ້ມທີ່ມີລັກສະນະວິທະຍາສາດ ແລະ ຢັ້ງຢືນເຖິງຄວາມຖືກຕ້ອງຄ່ອງແຄ້ວຢ່າງແນ່ນອນ ເພາະບາງເທື່ອ ອາດຈະບໍ່ທັນສອດຄ່ອງກັບຍຸກສະໄໝກໍເປັນໄດ້ ແຕ່ກໍມີຂໍ້ມູນອັນດີ ຊ່ວຍໃຫ້ນັກຄົ້ນຄວ້າຕາມຫຼັງໄດ້.

ຖ້າຫັນມາເວົ້າເຖິງ ອາຈານ ມະຫາສິລາ ເປັນຫຍັງເພິ່ນຈຶ່ງມີຜົນງານອັນລ້ຳເລີດຫຼວງຫຼາຍເຊັ່ນນັ້ນ ນີ້ແມ່ນເປັນສິ່ງທີ່ຢັ້ງຢືນ ເຖິງຜົນງານອັນຍິ່ງໃຫຍ່ຂອງເພິ່ນ ລ້ຳລຶກ ເຖິງຜົນງານທີ່ເປັນອະມະຕະ ເຖິງແມ່ນວ່າ ທັດສະນະຂອງເພິ່ນບາງບ່ອນ ກ່ຽວກັບປະຫວັດສາດ ກ່ຽວກັບວັນນະຄະດີ ... ເຊິ່ງເພິ່ນຖະໜອມຖ່ອມຕົວວ່າ ອາດຈະມີຂໍ້ຂາດຕົກບົກພ່ອງໃນ

ຫຼາຍບ່ອນ ຫຼາຍທີ່ ເຊິ່ງຖ້າຫາກວ່າພົບນຳໃຊ້ໄດ້ກໍ່ໃຫ້ນຳໃຊ້ ລັກສະນະອອກຕົວຢ່າງນີ້ເປັນການຖະໜອມຖ່ອມຕົວຂອງນັກປາດ ຜູ້ທີ່ຮູ້ຕົວວ່າ ຍັງມີຂໍ້ຂາດຕົກບົກພ່ອງຢູ່ນັ້ນ ເປັນນັກປາດ ເປັນບັນດິດໄດ້ ແຕ່ຜູ້ທີ່ອ້າງໂຕເອງວ່າ ເກັ່ງເລີດລ້ຳ ບໍ່ມີຜູ້ໃດທຽມທັນນັ້ນ ຖືວ່າຍັງບໍ່ທັນເປັນນັກປາດໄດ້ເທື່ອ ຍາມໃດອາຈານມະຫາສິລາ ກໍເວົ້າແບບນີ້ ໃນເນື້ອສົນທະນາແລກປ່ຽນຄວາມຄິດຄວາມເຫັນນຳເພິ່ນ ດັ່ງນັ້ນ ຂ້າພະເຈົ້າ ຈຶ່ງຂໍຢັ້ງຢືນວ່າ ລັກສະນະວິນຍານຂອງນັກປາດ ໄດ້ສວນເລິກຢູ່ໃນໝາກຫົວໃຈຂອງ ອາຈານ ມະຫາສິລາ ເພິ່ນບໍ່ໄດ້ຕີລາຄາເພິ່ນເອງວ່າ ເປັນນັກປາດ ແຕ່ວ່າຄົນລຸ້ນໃໝ່ ທີ່ໄດ້ຊຸ່ມໃຊ້ອ່ານຜົນງານ ຂອງເພິ່ນເປັນຜູ້ຕີລາຄາໃຫ້ ແລະ ມື້ນີ້ ຂ້າພະເຈົ້າກໍ່ຂໍຢັ້ງຢືນຕີລາຄາວ່າ ເພິ່ນເປັນນັກປາດ ຂອງຊາດ ເຊິ່ງຄວນເຄົາຣົບນັບຖື ແລະ ຍ້ອງຍໍຊົມເຊີຍ.

ອາຈານ ມະຫາສິລາ ນັບແຕ່ອາຍຸ ກ ປີ ໄດ້ຕິດພັນຢູ່ກັບ ວັນນະຄະດີລາວ ເຖິງເພິ່ນເກີດຢູ່ ຈັງຫວັດຣ້ອຍເອັດປະເທດໄທ ແຕ່ວ່າ ພູມຫຼັງໂດຍສະເພາະ ເຊື້ອສາຍ ພໍ່ແມ່ຕານາຍຂອງເພິ່ນ ເປັນເຊື້ອສາຍທີ່ໄປຈາກ ສາຍເລືອດຂອງນະຄອນວຽງຈັນ ໃນສະໄໝທີ່ເຈົ້າ ສ້ອຍສີສະໝຸດ ເຈົ້າຊີວິດນະຄອນຈຳປາສັກ ປີ ໑໗໑໔-໑໗໓໘ ອາຍຸ ກ ປີເພິ່ນເລີ່ມຮູ້ຈັກກ່ຽວກັບວັນນະຄະດີລາວ ພໍ່ເຖົ້າຂອງເພິ່ນ ເປັນຜູ້ເລົ່ານິທານ ເປັນຜູ້ເວົ້າຄຳພະຫຍາ ຄຳກອນ ສູ່ເພິ່ນຟັງ. ວິນຍານຂອງນັກປາດ ບໍ່ເລືອກສະຖານທີ່ ອາດຈະຢູ່ກາງດົງຫຼື ໃນເມືອງໃຫຍ່ ແຕ່ອາຈານ ມະຫາສິລາ ຢູ່ໃນສະພາບແວດລ້ອມທີ່ຊ່ວຍສ້າງເພິ່ນ ຈັ່ງຊັ້ນ ເຊິ່ງຕໍ່ມາ ເພິ່ນຍັງໄດ້ບວດເປັນຈົວ ຜູ້ທີ່ເຂົ້າບວດໃນສາສະໜາ ແມ່ນຜູ້ ຕ້ອງຮຽນຮູ້ກ່ຽວກັບວັນນະຄະດີລາວ ໜັງສືຜູກອື່ນ ໆ ການຮຽນຮູ້ກ່ຽວກັບໜັງສືຜູກລາວ,ຕົວອັກສອນທຳ ອັກສອນບາລີອື່ນ ໆ ເປັນແຮງຊຸກຍູ້ໃຫ້ເພິ່ນຍິ່ງເກີດມານະຈິດ ຢາກຮູ້ຢາກເຫັນ ກ່ຽວກັບວັນນະຄະດີລາວຫຼາຍກວ່າເກົ່າ ຈາກເປັນຈົວ ມາເປັນພະ ໄດ້ສຶກສາຂັ້ນມະຫາ ເຄີຍຮຽນຢູ່ປະເທດໄທ ເສັງໄດ້ມະຫາປະໂຫຍກ ໕ ຢັ້ງຢືນເຫັນວ່າ ເກັ່ງພາສາປາລີ, ຂອມ, ໄທ ກໍຄືພາສາລາວ ອີກດ້ວຍ. ພູມຫຼັງທາງດ້ານສະຕິປັນຍາ ແລະ ການສຶກສາຂອງເພິ່ນນີ້ ຍູ້ໜູນໃຫ້ເພິ່ນຍິ່ງດຶງຕົວສູງຂຶ້ນຕື່ມ ນ້ຳໃຈຮັກຊາດ ບອກໃສ່ກັບຄວາມຮູ້ທີ່ດົ້ນດວາ ລົງກ່ຽວກັບມູນເຊື້ອທາງດ້ານປະຫວັດສາດທາງດ້ານວັນນະຄະດີ ອັກສອນສາດ ພາສາສາດຕະ

ຫຼອດເຖິງບູຮານວັດຖຸ ຄວາມເປັນມາຂອງລາວ ເວລານັ້ນ ສ້າງໃຫ້ອາຈານ ມະຫາສີລາມີນ້ຳໃຈລູກເປັນໄຟ ດ້ວຍຄວາມຮັກຊາດ ຢາກຈະກັບຄືນມາຖິ່ນເດີມຂອງເຈົ້າອະນຸ ກັບມາຫາດິນແດນແຫ່ງເຈົ້າລາດຊະວົງ ທີ່ເສັຽກູ້ຊາດໃນເວລານັ້ນ ຄຳກອນຄຳໜຶ່ງທີ່ເພິ່ນຈື່ແທ້ ຈື່ວ່າ : ບັງເຈົ້າບ່າງ ບາງລາດຊະວົງ

ໂຮງວຽງຈັນ ລາດຊະວົງເປັນເຄົ້າ

ເຫັນວ່າວຽງຈັນເສົ້າ ສາວເອີຍຢ່າຟ້າວວ່າ

ມັນຊິໄປບາດຫລ້າ ໝາກແຕງຊາງໝ່ວຍປາຍ.

ອັນນີ້ ອາຈານ ມະຫາສີລາ ໄດ້ເວົ້າຕິດປາກມາຈົນເຖິງອາຍຸ ໘໐ ປີ ຄົງຈະແມ່ນສະນູນອັນໜຶ່ງ ທີ່ຈູດໃຫ້ນ້ຳໃຈຮັກຊາດລາວໃຫ້ອາຈານມະຫາສີລາ. ຕໍ່ມາຢູ່ໃນພາກເໜືອ ເພິ່ນຈຶ່ງເດີນທາງມາວຽງຈັນ ເພື່ອເປັນລູກເປັນຫຼານ ເປັນອະນຸຊົນຜູ້ໜຶ່ງ ສືບທອດ ແລະ ຮັກສາງຜືນແຜ່ນດິນລາວເວລານັ້ນ ມາຂອດເມືອງລາວບໍ່ດົນປານໃດກໍ່ສິກ ແລະ ຍັງໄດ້ ປະກອບສ່ວນເຂົ້າໃນຂະບວນກູ້ຊາດເວລານັ້ນ ຄຽງຄູ່ກັນຍັງຮ່ວມຄົ້ນຄວ້າກຽວກັບ ວັນນະຄະດີ ອັກສອນສາດລາວ ໂດຍສະເພາະ ເປັນເຈົ້າການ ເປັນບຸກຄົນສຳຄັນທີ່ສອນຢູ່ໃນໂຮງຮຽນປາລີ ພຸດທະບັນດິດ ສະພາສາງຂຶ້ນເວລານັ້ນ ພາຍໃຕ້ການນຳພາຂອງເຈົ້າ ເພັດຊະລາດ ຫາກຂາດອາຈານ ມະຫາສີລາ ຄຸນຄ່າພຸດທະບັນດິດ ທີ່ສ້າງຂຶ້ນ ຈະບໍ່ເຕັ່ງຂຶມ. ປຶ້ມໄວຍະກອນປາລີ ປຶ້ມທຳມະ ແລະ ອື່ນ ໆ ອາຈານ ມະຫາສີລາ ແຕ່ງຂຶ້ນ ເພື່ອສອນພວກຂ້າພະເຈົ້າເອງເຄີຍຮ່ຳຮຽນຢູ່ໃນສະຖາບັນ ພຸດທະສາດສະໜາ ໂດຍສະເພາະ ຢູ່ວັດອົງຕື້ ຍັງໄດ້ອາໄສປຶ້ມຂອງເພິ່ນຮຽນຢູ່.

ຢູ່ທີ່ວຽງຈັນເອງ ເພິ່ນໄດ້ຄົ້ນຄວ້າຫຼາຍສິ່ງຫຼາຍອັນ ສັງສິນໄຊ ເພິ່ນໄດ້ຄົ້ນຄວ້າເປັນພິເສດ ແລະ ເພິ່ນໃຫ້ຄຸນຄ່າຂອງໜັງສື ສັງສິນໄຊວ່າ ເປັນວັນນະຄະດີຊັ້ນຍອດຂອງລາວ ລ້ຳເລີດທາງດ້ານຄຳກອນ ທາງດ້ານພາສາຄຳເວົ້າ ແລະ ຄືບຖອນທາງດ້ານ ການຈັດສັນແບ່ງຂັ້ນຕ່າງໆ ຕະຫຼອດເຖິງເນື້ອໃນ ໂດຍສະເພາະ ພາສາສຳນວນ ທີ່ນຳໃຊ້ຢູ່ໃນວັນນະຄະດີ ເລື່ອງນີ້ ເປັນພາສາທີ່ອ່ອນນວນ ນິ້ມນວນ ທຸກຊັ້ນຄົນຟັງໄດ້ ເປັນພາສາ ສຸ

ພາບຮຽບຮ້ອຍ ບໍ່ມີຜູ້ໃດປະຕິເສດ ນັບແຕ່ເຈົ້າຊີວິດ ລົງໄປຮອດປະຊາຊົນຕາມຊົນນະບົດມີຄົນອ່ານ ມີຄົນຮໍ່າ ແລະ ຈື່ຕະຫຼອດເລື່ອງກໍມີ ອາຈານ ມະຫາສີລາ ໄດ້ລົງເລິກກ່ຽວກັບວັນນະຄະດີເລື່ອງນີ້ ແລະ ໃຫ້ຄວາມຄິດຄວາມເຫັນໄວ້ຫຼາຍຢ່າງ.

ນອກຈາກເລື່ອງ ສັງສິນໄຊແລ້ວ ຍັງມີເລື່ອງ ທ້າວຮຸ່ງ ທ້າວເຈືອງ ທີ່ອາຈານ ມະຫາສີລາໄດ້ມີໂອກາດໄປຄົ້ນຄວ້າຈາກຕົ້ນສະບັບ ຢູ່ ຫໍສະໝຸດ ປະເທດໄທ ເຊິ່ງບໍ່ແມ່ນເລື່ອງງ່າຍ ເພິ່ນໄດ້ໜີອອກຈາກໄພການເມືອງ ໄປລີ້ຕົວຢູ່ປະເທດໄທ ແລະໄດ້ມີໂອກາດໄປປະຈໍາຢູ່ ຫໍສະໝຸດປະເທດໄທ ເພື່ອອ່ານເຫັນຕົ້ນສະບັບທີ່ຂຽນດ້ວຍຕົວໄທນ້ອຍ ໄດ້ສືບຫາຕົ້ນສະບັບທີ່ແທ້ຈິງຈົນພົບ ຈຶ່ງພະຍາຍາມຈົດກ່າຍອອກມາ ດ້ວຍຄວາມມຸມານະ ເຊິ່ງປຶ້ມນີ້ຍາວຫຼາຍຮ້ອຍໜ້າ ສະຖາບັນຄົ້ນຄວ້າວິທະຍາສາດສັງຄົມ ໄດ້ພິມອອກແລ້ວ ແລະໄດ້ພິມຄໍາຊີ້ແຈງຂອງ ອາຈານ ມະຫາສີລາ ຄົບຖ້ວນ.

ຕອນຄືນເຖິງຄວາມພາກພຽນ ມຸມານະ ຂອງທ່ານອາຈານ ມະຫາສີລາ ຫາກວ່າເພິ່ນບໍ່ມີພູມຄວາມຮູ້ ມີສາຍຕາເລິກແລ້ວ ເພິ່ນກໍຈະເຫັນ ທ້າວຮຸ່ງ ທ້າວເຈືອງ ເປັນພຽງປຶ້ມທໍາມະດາ ທີ່ຜ່ານສາຍຕາໄປຊື່ໆ ແຕ່ຍ້ອນຄວາມພູມຄວາມຮູ້ ທາງດ້ານວັນນະຄະດີຂອງເພິ່ນ ໄດ້ຊ່ວຍໃຫ້ເພິ່ນເຫັນ ທ້າວຮຸ່ງ ທ້າວເຈືອງ ທີ່ຂຽນເປັນໜັງສືໄທ ວ່າໄດ້ມາ ຈາກຕົ້ນສະບັບຂອງລາວ ເກີດຄວາມມຸມານະ ຄວາມຮັກຊາດສະແຫວງຊອກຈົນພົບ ຕົ້ນສະບັບເດີມ ແລະ ຍັງໄດ້ຈົດກ່າຍ ຈັດສັນໃຫ້ຖືກຄໍາກອນ ເພາະໃນໃບລານ ເພິ່ນຂຽນຍາວໄປເລີຍບໍ່ເປັນວັກເປັນຕອນຂອງກອນ ຢູ່ບ່ອນນີ້ ມະຫາສີລາ ໄດ້ຈັດວາງຢ່າງມີວິທະຍາສາດກອນລາວ ເປັນຄົນທໍາອິດ ແລະ ເພິ່ນຍັງໄດ້ຂຽນປຶ້ມອີກຫົວໜຶ່ງ ຊື່ວ່າ " ແບບແຕ່ງກອນໄທວຽງຈັນ " ຖືວ່າເພິ່ນມີສະຕິປັນຍາສູງ ໃນການຄົ້ນຄວ້າລົງເລິກ ວິທະຍານິພົນ ວິຊາການໃນດ້ານການປະພັນຂອງລາວ ຖ້າຫາກອ່ານຢູ່ໃນປຶ້ມແບບແຕ່ງກອນຂອງເພິ່ນ ຈະເຫັນໄດ້ວ່າ ບັນດາກອນທີ່ຢູ່ໃນປຶ້ມໄລຍະກອນຕ່າງໆ ແລະ ຜູ້ອື່ນ ໆ ທີ່ຂຽນອອກມາເປັນຕໍາລາທີ່ສອນຢູ່ໃນໂຮງຮຽນຕ່າງໆ ໃນເມື່ອກ່ອນ ແລະ ປະຈຸບັນກໍຕາມ ຄົງຈະຫຼີກອອກຈາກ ຕົ້ນສະບັບ ຂອງອາຈານ ມະຫາສີລາບໍ່ໄດ້.

ເວົ້າເຖິງພອນສະຫວັນ ຢູ່ໃນການຄົ້ນຄວ້າ ກ່ຽວກັບຮູບແບບໃນການແຕ່ງກອນຂອງລາວ ອອກມານັບເປັນຊາວໆແບບ ນັ້ນບໍ່ແມ່ນເລື່ອງທຳມະດາ ເພາະອາຈານ ມະຫາສີລາ ໄດ້ສາມາດຄົ້ນຄວ້າຈັດສັນອອກເປັນຮູບທີ່ແນ່ນອນ ມີຫຼັກຖານຄັກແນ່ ແລະ ຖືກຕາມຫຼັກວິທະຍາສາດຂອງກາບຂອງກອນແທ້ນັ້ນ ຈຶ່ງເປັນທີ່ຢັ້ງຢືນວ່າ ອາຈານມະຫາສີລາ ເປັນນັກປາດຜູ້ຫນຶ່ງ ໃນດ້ານການຄົ້ນຄວ້າກ່ຽວກັບວິທະຍາວິທີໃນການຂຽນ ການຂຽນກອນ ຂອງລາວ ເປັນຜູ້ຄົ້ນພົບບັນຫານີ້ ການຄົ້ນຄວ້າສິ່ງເຊື່ອງອຳ ທີ່ຄົນອື່ນບໍ່ສາມາດເຂົ້າໃຈໄດ້ນັ້ນ ຖືວ່າເປັນນັກປາດຜູ້ຫນຶ່ງ.

ອາຈານ ມະຫາສີລາ ຈັດສັນຄຳກອນ ໃນ ສັງສິນໄຊ ແລະ ໃນ ທ້າວຮຸ່ງ ທ້າວເຈືອງ ມີອັນແຕກຕ່າງກັນ ເພາະກອນໃນສັງສິນໄຊ ເປັນກອນຮູບແບບຫນຶ່ງ ແລະ ກອນຢູ່ໃນທ້າວຮຸ່ງ ທ້າວເຈືອງ ກໍອີກແບບຫນຶ່ງ ເຊິ່ງມີການສຳພັດເກາະກ່າຍແຕກຕ່າງກັນ ເຊິ່ງຄວາມພະຍາຍາມຂົບໂຂມຈິດກ່າຍຈັດສັນ ເປັນວັກເປັນຕອນນີ້ ອາຈານ ມະຫາສີລາເປັນຜູ້ລິເລີ່ມ ຢູ່ໃນເມືອງລາວ ດັ່ງນັ້ນ ເຮົາຍັງເຫັນປື້ມບາງຫົວ ເຊັ່ນ : ສານລຶບພະສູນ ທີ່ກົມວັນນະຄະດີພິມຂຶ້ນ ຫຼື ກາບ ປູ່ສອນຫຼານ ຫຼານສອນປູ່ ຈຶ່ງມີການຂຽນຕໍ່ກັນໄປເລີຍ ໂດຍບໍ່ຄຳນຶງເຖິງວ່າ ສາມຄຳຢູ່ເບື້ອງຫນ້າ ສີ່ຄຳຢູ່ເບື້ອງຫຼັງ ເພື່ອໃຫ້ອ່ານງ່າຍ ແລະ ຖືກຕາມແບບສະບັບຂອງວິທີແຕ່ງກອນຂອງຄົນໃນພາກພື້ນອາຊີ. ຂ້າພະເຈົ້າເຊື່ອວ່າ ແບບວິທີຂອງເພິ່ນນີ້ ບໍ່ພຽງແຕ່ວ່າ ຈະເປັນການຊ່ວຍໃຫ້ໄດ້ຮັບຜົນດີເວລານັ້ນ ແຕ່ນັກຄົ້ນຄວ້າ ເວລານີ້ ກໍສາມາດເອົາແບບສະບັບຂອງເພິ່ນໃນການຄົ້ນຄວ້າ ເພິ່ນມັກແນະນຳ ນັກຄົ້ນຄວ້າທີ່ເຄີຍໄປຄົ້ນຄວ້ານຳເພິ່ນສະເຫມີ ບໍ່ວ່າດ້ານວັນນະຄະດີ ພາສາສາດ ການເຮັດວັດຈະນານຸກົມ ແລະ ອື່ນ ໆ ເພິ່ນແນະນຳວ່າ ຄວນຈະເຮັດເປັນບົດບັນທຶກຂໍ້ຄວາມກ່ຽວກັບ ເນື້ອໃນຂອງປື້ມໃດຄວນບອກຊື່ປື້ມ ບອກຜູ້ຂຽນ ບອກຫນ້າ ແລະ ຂໍ້ຄວາມນັ້ນຄວນເຮັດອິງເລັບໄວ້ຄັກແນ່ ເຊິ່ງອາຈານ ມະຫາສີລາ ໄດ້ແນະນຳແນວນີ້ຢູ່ໃນເມືອງລາວ ແຕ່ເມື່ອໄປຕ່າງປະເທດ ບັນດານັກປາດອາຈານທັງຫຼາຍ ກໍແນະນຳແນວນັ້ນເຊັ່ນກັນ.

ນອກຈາກເລື່ອງທີ່ກ່າວມາແລ້ວ ກໍຍັງມີເລື່ອງ ເວດສັນຕະຊາດົກ ທີ່ອາຈານມະຫາສີລາ ຖືວ່າເປັນເລື່ອງສຳຄັນ ແລະ ເປັນວັນນະຄະດີຊັ້ນຍອດ ທີ່ເປັນວັນນະຄະດີຊັ້ນຍອດນີ້

ຫາກວ່າບໍ່ເຄີຍໄດ້ບວດ ໄດ້ຮຽນ ໃນພຸດທະສາດສະໜາ ບໍ່ເຄີຍໄປເທດລຳພະເຫວດ ກໍ່ຈະບໍ່ຮູ້ວ່າ ມັນເລິກເຊິ່ງສໍ່າໃດ ຖ້າຫາກພະຍາຍາມເຂົ້າໃຈຢູ່ໃນຄຳເວົ້າກອນຣ່າຍ ຂອງລຳພະເຫວດແລ້ວ ຈະເຮັດໃຫ້ຜູ້ທີ່ເຂົ້າໃຈລຳພະເຫວດແລ້ວຈະມີຄວາມຊາບຊຶ້ງຕຶງໃຈ ຢູ່ໃນແບບວິທີການແຕ່ງ ແລະ ເນື້ອໃນ ຄຳເວົ້າແຕ່ລະຄຳຢູ່ໃນລຳພະເຫວດກໍ່ບໍ່ຄືໝູ່ຕົວຢ່າງ ເພິ່ນບັນຍາຍເຖິງໂລງທີ່ຈະໃສ່ ນາງມະທີ ຕອນພະເຫວດລຳເລິກເຖິງ ຄວາມຫຼັງ ຂອງນາງມະທີ ໃນເມື່ອນາງມະທີສະຫຼົບໄປແລ້ວ ເພິ່ນໄດ້ຂຽນໄວ້ວ່າ :

ກ້ຳໜ້າ ພື້ຈະໃສ່ລາຍລວງ
ດວງປີ ພື້ຈະໃສ່ຊໍ່ຟ້າ
ແປນອັດໜ້າ ພື້ຈະໃສ່ລາຍຈີນ
ຕີນທໍ່ລະນີ ພື້ຈະແຕ້ມຮູບເທວະດາ ງາມເຢາະຢ້ອງ

ຄຳວ່າ ກ້ຳໜ້າ ພື້ຈະໃສ່ລາຍລວງ ລາຍລວງຄື ລາຍນາກ ເພາະລວງ ແປວ່າ ນາກ ດວງປີ ແມ່ນຈອມເທິງ ... ຄຳເວົ້າສັ້ນໆ ຂອງກອນຣ່າຍຕອນນີ້ ສາງໃຫ້ເຮົາເຫັນວ່າ ແຕ່ລະຄຳບໍ່ມີຄຳເສັຍ ມີອັນເຄາະຣ້າຍໄດ້ດີ ເຊິ່ງນັກຂຽນໃນເວລານີ້ ບໍ່ສາມາດເຮັດໃຫ້ມີລັກສະນະເຄາະຣ້າຍ ແຕ່ບໍ່ປຸນເຟືອຍຄືກັນກັບເພິ່ນ.

ນອກຈາກນີ້ ອາຈານມະຫາ ສິລາ ຍັງໄດ້ຄົ້ນຄວ້າຫຼາຍສິ່ງຫຼາຍຢ່າງ ເຊິ່ງຜົນງານຂອງເພິ່ນໄດ້ມີລາຍລະອຽດ ຢູ່ໃນປຶ້ມ ຊີວິດ ແລະ ຜົນງານຂອງເພິ່ນ ທີ່ຄະນະກຳມະການຄົ້ນຄວ້າວິທະຍາສາດສັງຄົມ ຈັດພິມຂຶ້ນ ປີ ໑໙໙໐ ນີ້ ເຊິ່ງຜົນງານທັງໝົດ ລ້ວນແຕ່ມີຄຸນຄ່າທາງດ້ານປະຫວັດສາດ ແລະ ດ້ານວັນນະຄະດີ.

ດັ່ງນັ້ນ ຈຶ່ງຢັ້ງຢືນອີກເທື່ອໜຶ່ງວ່າ ມັນແມ່ນຜົນງານອັນຍິ່ງໃຫຍ່ ສຳລັບຄົນລາວໃນເມື່ອໃນຊາດຢັ້ງຢືນວ່າຍິ່ງໃຫຍ່ ແນ່ນອນ ໃນໂລກກໍ່ຈະຮັບຮູ້ຄວາມຍິ່ງໃຫຍ່ ອັນນີ້ເຊັ່ນດຽວກັນ.

ທ້າຍນີ້ ຂ້າພະເຈົ້າ ຂໍສະເໜີຂໍ້ຄິດຢ່າງໜຶ່ງວ່າ ພວກເຮົານັກຄົ້ນຄວ້າໃນປະຈຸບັນຢ່າງໃດກໍ່ຕາມ ຫາກວ່າບໍ່ຜ່ານການອ່ານປຶ້ມຂອງ ອາຈານມະຫາສິລາ ຈະມີປຶ້ມອີກໃນຫຼາຍ

ຫຼາຍຫືອຢູ່ອີກບໍ່ ທີ່ຈະຊ່ວຍໃຫ້ນັກຄົ້ນຄວ້າສາມາດປະສົບຜົນສຳເລັດໃນການຄົ້ນຄວ້າ ສຳລັບຂ້າພະເຈົ້າເຊື່ອວ່າ ບໍ່ສົມບູນ ດັ່ງນັ້ນ ຈຶ່ງຂໍໃຫ້ຂໍ້ຄິດວ່າ ທຸກໆທ່ານ ທີ່ຈະເຂົ້າສູ່ລົງການຄົ້ນຄວ້າບໍ່ວ່າທາງດ້ານອັກສອນສາດ ວັນນະຄະດີ ... ກໍຄວນຈະລົງເລິກ ແລະ ຄົ້ນຄວ້າເຖິງປື້ມ ອາຈານມະຫາສິລາ ເພື່ອອ້າງອີງເປັນຫຼັກຖານ ໃນນັ້ນ ກໍ່ຊ່ວຍເອົາຂໍ້ຄິດເຫັນທີ່ມີໃນປື້ມຂອງເພິ່ນອອກມາວິພາກ ວິໄຈ ເພື່ອເຮັດໃຫ້ສັງຄົມໄດ້ຮັບຮູ້ ປື້ມຕ່າງໆ ທີ່ເພິ່ນພິມໄວ້ ເຊື່ອວ່າໃນກາລະປະຈຸບັນ ເຊິ່ງພັກ ແລະ ລັດພວກເຮົາ ເປີດກວ້າງ ປະຊາທິປະໄຕ ແລະ ສະໜັບສະໜູນຊຸກຍູ້ຜົນງານຂອງ ບັນດານັກປາດອາຈານ ເຕົ້າໂຮມເອົາ ກຳລັງແຮງທຸກກຳລັງແຮງ ທີ່ເຊື່ອງຊ້ອນຢູ່ໃນທຸກວົງການປັນຍາຊົນຂອງລາວເຮົາໃນປະຈຸບັນແລະເຊື່ອວ່າ ເພິ່ນຈະສະໜັບສະໜູນທີ່ສຸດ ເພື່ອເຮັດໃຫ້ ຜົນງານທັງໝົດຂອງ ບັນດາ ນັກປາດອາຈານ ປະກົດສູ່ສາຍຕາມະຫາຊົນ ເພື່ອສ້າງສັນປະເທດຊາດບ້ານເມືອງ ໃຫ້ມີສັນສີທາງດ້ານວັດທະນະທຳ ວັນນະຄະດີ ປະເພນີ ທີ່ສວຍສົດງົດງາມໃນຂັ້ນຕໍ່ໄປ.

ທ້າວຮຸ່ງ ໃນ ທັດສະນະ ຂອງ ມະຫາ ສີລາ ວີຣະວົງ

• ວັນນະສັກ ພິຈິດບຸນເສີມ

ອາຈານ ພາສາໄທ ວິທະຍາໄລພະລະສຶກສາ
ມະຫາສາຣະຄາມ, ປະລິນຍາໂທ ວັນນະຄະ
ດີບູຮານ ມະຫາວິທະຍາໄລ ສີນັກຄະລິນວິໂລດ

ຮຽນບັນດາທ່ານຜູ້ມີກຽດ , ບັນດາພີ່ນ້ອງທຸກທ່ານທີ່ມາຮ່ວມງານມື້ນີ້ ຂ້ອຍມີຄວາມຍິນດີເປັນຢ່າງຍິ່ງ ທີ່ໄດ້ມາຮ່ວມສຳມະນາ ຢູ່ນະທີ່ນີ້ ທີ່ຈິງກໍ່ເປັນນັກວິຊາການທີ່ໜຸ່ມ ນ້ອຍພວມສຶກສາ ເລື່ອງວັນນະຄະດີລາວ ສະນັ້ນ ມື້ນີ້ ໃນດ້ານການລາຍງານອາດຈະບໍ່ມີ ເນື້ອໃນຫລວງຫລາຍປານໃດ ຂໍໃຫ້ທ່ານຜູ້ມີກຽດທັງຫລາຍຟັງໄວ້ ຖືວ່າເປັນການແບ່ງປັນປັນຍາຫລື ນຳເອົາຄວາມຄວາມຮູ້ທາງຝັ່ງພຸ້ນມາໃຫ້ທາງຝັ່ງນີ້ຮັບຮູ້ນຳກັນ

ການສຶກສາກ່ຽວກັບວັນນະຄະດີລາວ ໃນບ້ານເຮົາມີມາດົນແລ້ວ ແຕ່ວ່າໃນການສຶກສາລະດັບ ປະລິນຍາໂທ ຫລືວ່າ ລະດັບສູງນັ້ນ ໄດ້ສຶກສານຳກັນຈິງຈັງປະມານ 10 ປີ ຜ່ານມາເທົ່ານັ້ນ ຜູ້ທີ່ເຮັດໃຫ້ຂ້ອຍມີຄວາມຈິງໃຈຢາກໄຝ່ຮູ້ໄຝ່ສຶກສາໃນເລື່ອງນີ້ ກໍຄື ທ່ານອາຈານມະຫາສີລາ ວີຣະວົງ ເພາະວ່າໃນຕອນໜຶ່ງ ທີ່ຂ້ອຍມາຮຽນໃນລະດັບປະລິນຍາຕີນັ້ນ ຂ້ອຍໄດ້ໄປຊອກຄົ້ນອ່ານໜັງສື ກ່ຽວກັບວັນນະຄະດີລາວ ໂດຍມີນັກວິທະຍາການໄທຜູ້ໜຶ່ງຂຽນໄວ້ ຄືທ່ານ ຈິດ ພູມີສັກ ຂຽນໄວ້ ກ່ຽວກັບຄວາມເປັນມາ ສະຫຍາມ-ໄທ-ລາວ ໜັງສືເຫລັ້ມນີ້ໄດ້ຕີພິມອອກແລ້ວ ຈຶ່ງສົນໃຈວ່າມີຜູ້ກ່າວເຖິງໜັງສື ທ້າວຮຸ່ງທ້າວເຈືອງວ່າເປັນໜັງສືທີ່ຍິ່ງໃຫຍ່ ເພິ່ນກໍເປັນຄົນໄທ ກໍ່ວ່າມັນຍິ່ງໃຫຍ່ຫລາຍ ມີຄວາມຫລົງໃຫລຫລາຍຢ່າງຢູ່ໃນນັ້ນ ພໍມາຮອດຕອນທີ່ຂ້ອຍໄດ້ມາເປັນຄູຢູ່ແຂວງສີສະເກດ ໄດ້ລອງເສັງຮຽນຕໍ່ປະລິນຍາໂທ ແລະໄດ້ມາຮຽນຕໍ່ລະດັບນີ້ ຜູ້ໃຫ້ຄວາມຮູ້ວ່າວັນນະຄະດີເຫລັ້ມນີ້ ຍິ່ງໃຫຍ່ ແລະແນະນຳໃຫ້ສຶກສາ ກໍຄືອາຈານ ຈາລຸວັນ ທຳມະວັດ ຂ້ອຍກໍເລີຍໄປຊອກຫາໜັງສື ຕຳລາຕ່າງໆ ແຕ່ວ່າກໍຫາຍາກ ຈຶ່ງມີເອື້ອຍດວງເດືອນ ສົ່ງຂໍ້ມູນຕ່າງໆໄປໃຫ້ ເພາະ ຄອບຄົວຂອງຂ້ອຍເຄີຍພົວພັນກັບຄອບຄົວຂອງເພິ່ນດີ ພໍ່ຂອງຂ້ອຍໄດ້ເປັນລູກສິດ ຂອງທ່ານອາຈານມະຫາສີລາ ຕອນທີ່ເພິ່ນໄປບວດຢູ່ກຸງເທບ ສະນັ້ນ ຖ້າກ່າວໂດຍຫຍໍ້ແລ້ວວ່າ ໜັງສື ຫລືວ່າ ວິທະຍານິພົນທີ່ຂ້ອຍເຮັດເຖິງ ທ້າວຮຸ່ງທ້າວເຈືອງນັ້ນ ແມ່ນມາຈາກທັງສອງ ຝັ່ງຂອງບໍ່ແມ່ນມາຈາກໄທຝັ່ງດຽວ. ສຳຄັນທີ່ສຸດ ທາງຝັ່ງລາວໄດ້ໃຫ້ຂໍ້ມູນຫລາຍພໍສົມຄວນ ທີ່ຊ່ອຍໃຫ້ການຄົ້ນຄວ້າຂອງຂ້ອຍສຳເລັດ ຂໍຢືນຢັນວ່າ ຖ້າບໍ່ມີຕະກູນ ວີຣະວົງ ຊ່ອຍໃນ ເລື່ອງນີ້ແລ້ວ ຂ້ອຍກໍຄືຈະບໍ່ຈົບປະລິນຍາໂທ

ໃນເລື່ອງທີ່ຂ້ອຍນຳສະເໜີໃນມື້ນີ້ ຄວາມຮູ້ອາດຈະບໍ່ຫລວງຫລາຍປານໃດ ຖ້າທຽບກັບນັກວິຊາການທາງຝັ່ງນີ້

ໃນທັດສະນະຂອງອາຈານມະຫາ ສີລາ ເພິ່ນໄດ້ເຫັນວັນນະກຳເອກຢູ່ 3 ເລື່ອງທີ່ທາງຝັ່ງນັ້ນກໍເຫັນພ້ອມ ເຫລັ້ມທຳອິດຄືເລື່ອງສັງສິນໄຊ ເຊິ່ງທາງອາຈານທາງຝ່າຍໄທໄດ້ໃຫ້ທັດສະນະວ່າເປັນຍອດ ວັນນະກຳ ອິສານ ທີ່ຢ້ຽມຍອດໃນດ້ານສິລະປະການປະພັນ ໃຊ້ຄຳໄດ້ງົດງາມ ຮູບແບບການແຕ່ງກອນງົດງາມ.

ອີກເລື່ອງໜຶ່ງ ທີ່ຮັບໃຊ້ໃນເລື່ອງສາສະໜາຄືພະເຫວດ

ສ່ວນເຫລັ້ມທີ່ຍິ່ງໃຫຍ່ ຄື ມະຫາກາບ ທ້າວຮຸ່ງທ້າວເຈືອງ ຢືນຢັນວ່າບໍ່ມີວັນນະກຳລາວ ຫລື ໄທເຫລັ້ມໃດ ຫລືໃນປະເທດອາຊີຕາເວັນອອກສ່ຽງໃຕ້ເຫລັ້ມໃດຍາວຄືເຫລັ້ມນີ້ ໃນເລື່ອງຂອງການປະພັນ ເຊິ່ງຍາວເຖິງ 5.000 ບົດ ຖ້າເອົາຕາມເຫລັ້ມແຣກທີ່ ອາຈານ ເພີ່ມຊຳລະໄວ້ໃນໄທ ປີ 2486. ປະມານ 4.000 ກວ່າ ແຕ່ຖ້າເອົາຕາມທີ່ ມະຫາສີລາ ລິດຈະນາໄວ້ ແລະ ພິມອອກໂດຍ ສະຖາບັນຄົ້ນຄວ້າວິທະຍາສາດສັງຄົມນີ້ແລ້ວ 5.000 ກວ່າ ແຕ່ສຳຄັນທີ່ສຸດແມ່ນໃຊ້ວິທີປະພັນເຖິງ 3 ແບບ ເຊິ່ງບໍ່ເຄີຍມີໃນເລື່ອງອື່ນ ໃນສາມແບບນີ້ ອາຈານ ຈິດ ພູມສັກ ໄດ້ຢືນຢັນອ້າງອີງວ່າ ເປັນຕົ້ນແບບຂອງ ໂຄງທາງຊຽງໃໝ່ ທີ່ເປັນກຸ່ມ ຕະກຸນ ໄທ-ລາວ ສັນນິຖານວ່າ ໂຄງ 5 ໃນທ້າວຮຸ່ງເປັນ ຕົ້ງທຳອິດ ເຊິ່ງຫລາຍໆອາຈານກໍ່ຢືນຢັນ.

ເມື່ອທຽບກັບມະຫາກາບ ລາມມະກຽນ... ຄວາມຫຍິ່ງໃຫຍ່ສາກົນ. ອີກດ້ານຮີດຄອງປະເພນີທີ່ສະທ້ອນໃນວັນນະກຳເຫລັ້ມນີ້ ເຊື່ອວ່າຈະເປັນຮາກເຫງົ້າທຳອິດທຳອີ້ ຂອງວັດທະນະທຳລອງແມ່ນ້ຳຂອງ ທາງໄທ-ລາວ ຫລືວ່າມັນມີປະເພນີຫລາຍຢ່າງທີ່ບໍ່ທັນ ໄດ້ເປີດເຜີຍ ຫລື ຄົ້ນຄວ້າຢ່າງຈິງຈັງ ຊຶ່ງຂ້ອຍກໍ່ໄດ້ຂຽນໄວ້ໃນຜົນງານຂອງຂ້ອຍໜ່ວຍໜຶ່ງ ເພາະບໍ່ເຄີຍເຫັນປະເພນີແບບນີ້ໃນເມືອງໄທ ແລະ ໃນເມືອງເມືອງໄທ ບາງບ່ອນກໍ່ບໍ່ປະກົດແລ້ວ ເຄີຍໄດ້ຍິນວ່າ ບາງຢ່າງທາງຊຳເໜືອຍັງຮັດຢູ່ ປະເພນີ ທີ່ກ່າວໄວ້ມີການນັບຖືຜີ ການກິນເຫລົ້າໄຫ ການນັບຖືຜີບັນພະບຸລຸດ ພິດກໍ່ໄດ້ບັນຍາຍໄວ້ຢ່າງຊັດເຈນວ່າ ຮັດຫຍັງແດ່ ໄດ້ບັນຍາຍໄວ້ຢ່າງຊັດເຈນ ເລື່ອງຂອງໂຊກວາດສະໜາ ການສ່ຽງທວາຍຕ່າງຕ່າງ ກໍ່ໄດ້ກ່າວໄວ້ ໂດຍສະເພາະການສ່ຽງທວາຍ ໂຍນຄ້ອນໃສ່ໜ້າກອງທີ່ຂ້ອຍ ປະທັບໃຈ ການສ່ຽງກະດູກໄກ່ ກໍ່ບໍ່ເຫັນ ເຊິ່ງໄດ້ຍິນວ່າຍັງຫລົງເຫລືອຢູ່ໃນແຂວງສີສະເກດ ປະເທດໄທ ໃນນັ້ນອາຈານທາງຝັ່ງໄທກໍ່ໄດ້ເອົາໄປສຶກສາເຊັ່ນອາຈານ ເລນູ ວິຊາສິນ ຢູ່ຊຽງໃໝ່ ກໍ່ໄດ້ລົງໄປຮອດອິນເດຍ ແລະ ນຳມາສຶກສາປຽບທຽບກັນ ການຊົງແມນ ການໄປເຮົາຖ້ຳຕ່າງໆ ກໍ່ລ້ວນແຕ່ປະກົດຢູ່ໃນໜັງສືທ້າວຮຸ່ງ ທ້າວເຈືອງ ນອກຈາກເລື່ອງຂອງປະເພນີ ແລ້ວມັນຍັງເປັນຂໍ້ມູນໃຫ້ແກ່ການສືບຄົ້ນປະຫວັດສາດ ຂອງຊາດໄທ-ລາວ ສອງ

ຝັ່ງຂອງ.

ຢູ່ທາງພາກເໜືອ ເລື່ອງທ້າວຮຸ່ງທ້າວເຈືອງໄປພົວພັນກັບປະຫວັດສາດ ເມືອງເໜືອ ທ້າວຮຸ່ງ ເປັນກະສັດຂອງລາດຊະວົງຕ່າງໆ ໃນປະຫວັດສາດ ແລະເວົ້າເຖິງການລົງມາຈາກດອຍຕຸງ ເປັນເຊື້ອສາຍລາວ ຫລືລາວຈັກກະຫລາດ ນີ້ກໍ່ເປັນການຢັ້ງຢືນວ່າຕະກູນຂອງໄທລາວອາດມາຈາກລາວ ຫລື ຈັກກະຫລາດ ກໍ່ໄດ້ ໃນສ່ວນໄຕເໜືອກໍ່ຢືນຢັນວ່າທ້າວຮຸ່ງທ້າວເຈືອງ ເປັນບັນພະບຸລຸດຂອງເພິ່ນ.

ໃນປະຈຸບັນນີ້ ແຂວງພະເຢົາ ຫລື ຊຽງລາຍ ຍັງມີຄ້າຍທະຫານຊື່ຄ້າຍ ພະຍາເຈືອງ ມະຫາລາດກໍ່ມີ ທັງທີ່ວ່າ ພະຍາເຈືອງປະກະສັດໄທອົງໃດກໍ່ບໍ່ຮູ້ ແຕ່ກໍ່ມີການ ນັບຖືຄືຈັ່ງຊັ້ນ

ນອກຈາກເລື່ອງຂອງປະຫວັດສາດແລ້ວ ອາຈານ ຈິດ ພູມສັກ ກໍ່ຢືນຢັນວ່າ ໃນໜັງສືທ້າວຮຸ່ງ ເພິ່ນໄດ້ໃຊ້ປະກອບງານຂຽນຂອງເພິ່ນ ຕະຫລອດທັງເຫລັ້ມ ມີສອງເຫລັ້ມໃຫຍ່ໆ ຄື ຄວາມເປັນມາ ຄຳສະຫຍາມ ໄທ - ລາວ ແລະ ລັກສະນະ ຊົນຊາດ ຂອມ ແລະ ເລື່ອງອົງການແຊ່ງນ້ຳ ເພິ່ນໄດ້ຂອບໃຈອາຈານ ມະຫາສິລາ ຢ່າງລົ້ນເຫລືອ ໃນໜັງສືສອງເຫລັ້ມນັ້ນ ເພິ່ນວ່າຖ້າອາຈານມະຫາສິລາ ວິຣະວົງ ບໍ່ຊຳລະໜັງສືເຫລັ້ມນີ້ແມ່ນອນອີກສິບປີ ບໍ່ຮູ້ວ່າຈະຍັງເຫລືອໃຫ້ເຮົາເຫັນ ຫລື ບໍ່.

ອີກອັນໜຶ່ງ ກ່ຽວກັບຄວາມຫຍິ່ງໃຫຍ່ຂອງວັນນະກຳເຫລັ້ມນີ້ ເປັນຂໍ້ມູນສຳຄັນ ໃນການສຶກສາອັກສອນສາດ ເລື່ອງນິຣຸກຕິສາດ ແລະ ເລື່ອງທາງພາສາສາດ ຢ່າງຍິ່ງໃຫຍ່ແມ່ນຢ່ຳ ເພາະຄຳຢູ່ໃນນັ້ນມີທັງພາສາລາວ ພາສາໄທ ໄທລື້ ໄທຍວນ ຄຳບາລີ ສັນສະກິດ ຂະເໝນ ຢູ່ຈົນມາເຖິງສະໄໝນີ້ ບາງຄຳບໍ່ໄດ້ຖືກນຳໃຊ້ແລ້ວ ບາງຄົນ ບໍ່ເຂົ້າໃຈແລ້ວ ເຊັ່ນຄຳວ່າ ສະບຸ ເຊິ່ງແປວ່າ ປືນໃຫຍ່ ແລະ ອື່ນໆ ເຊິ່ງເບິ່ງແລ້ວ ຖ້າມີຜູ້ສົນໃຈຈະເຮັດ ວິທະຍານິພົນໃນເລື່ອງນີ້ ແມ່ນຈະໄດ້ວິທະຍານິພົນອີກຫລາຍເຫລັ້ມໃນວັນນະຄະດີເຫລັ້ມນີ້ ເຊິ່ງຜ່ານມາກໍ່ມີຜູ້ໄດ້ ດອກເຕີ ຈາກວັນນະກຳເຫລັ້ມນີ້ມາແລ້ວ ດັ່ງນັ້ນ ນັກ ຄົ້ນຄວ້າຮຸ່ນໄທເຮົາຈະມາຄົ້ນຄວ້າດ້ານປະຫວັດສາດ ເລື່ອງວັນນະກຳ ອັກສອນສາດ...ແລ້ວ

ຈະໄດ້ຄວາມຮູ້ຈາກຫົວຂໍ້ຕ່າງໆເຈືອງຫລາຍ ໂດຍບໍ່ມີຍາມຫລ້າຫລັງ ສາມາດປະຍຸກ ນຳໃຊ້ໃນປະຈຸບັນໄດ້ ເຊິ່ງຖ້າຜູ້ໃດເວົ້າວ່າ ວັນນະກຳເກົ່າໆ ໃຊ້ບໍ່ໄດ້ແລ້ວ ແມ່ນບໍ່ຖືກ ເຮົາຕ້ອງຍອມຮັບວ່າ ມັນມີສ່ວນດີສ່ວນເສຍ.

ການຈັດແບ່ງ ວັນນະຄະດີ ຂອງ ມະຫາ ສິລາ ວີຣະວົງ

• ຄຳແພງ ເກດຕະວົງ
ຮອງຫົວໜ້າ ສະຖາບັນ ສິລະປະ ວັນນະຄະດີ
ຄະນະກຳມະການ ວິທະຍາສາດ ສັງຄົມ
ປະລິນຍາໂທ ເສດຖະກິດ ປະເທດ ຝະລັ່ງ

ໃນດ້ານວັນນະຄະດີ ສະເພາະເຮົາເອງ ເຫັນວ່າ ຈູມມະຫາສິລາ ໄດ້ຈັດຫຼັກ ມີສອງຢ່າງ ທີ່ປະທັບໃຈ ຄື :

1. ໜ້າທີ່ ຫຼື ບົດບາດວັນນະຄະດີ ເຊິ່ງເພິ່ນຈັດເປັນສອງປະເພດ ຄື ວິທະຍານິພົນ ແລະ ສິລະປະນິພົນ.

ສິລະປະນິພົນ ແມ່ນເລື່ອງຕ່າງໆ ທີ່ພັນລະນາໄປແລ້ວ ເຫັນຮູບພາບ ໄດ້ຮັບຄວາມອອນຊອນ ຈາກການພັນລະນາ ຈະແມ່ນຄຳກອນມ່ວນໆ ຫຼື ຈິນຕະນາພາບເກີດຈາກ ການອະທິບາຍ ບໍ່ຕ່າງຫຍັງກັບພະສູດໃນສາສະໜາ ທີ່ອະທິບາຍທຳ ເນື້ອໃນຂອງບັນດາ ສິລະປະນິພົນ ຈຶ່ງແມ່ນປະກົດການຂອງເນື້ອໃນ ຫຼື ວາຫາດແຫ່ຂອງບັນດາ ສ່ວນວິທະຍາ ນິພົນໝາຍຄວາມວ່າ ຄວາມຮູ້ເຊິ່ງພວກເຮົາໄດ້ຈາກສິລະປະນິພົນ ເຊິ່ງອັນນີ້ ແມ່ນມີຄວາມຮູ້ແມ່ນວິທະຍາສາດ.

ກ່ຽວກັບວັນນະຄະດີ ທີ່ປະທັບໃຈເຮົາອີກອັນໜຶ່ງ ຄື ວິທີຈັດປະເພດຄຳກອນ ເຊິ່ງເພິ່ນຈັດປະເພດໃນກອນອ່ານ ເປັນ 3 ປະເພດ ໃນບັນດາໜັງສືວັນນະຄະດີ ລ້ານຊ້າງ.

ໃນນີ້ ປະເພດທີ່ໜຶ່ງ ຄື ໜັງສື ສັນສິນໄຊ ເພິ່ນຈັດເປັນປະເພດກອນອ່ານທຳມະດາ ຫຼື ກອນອ່ານອັກສອນສັງວາດ ປະເພດທີ່ສອງ ແມ່ນວະຊິລະປັນຕິ ບາງເທື່ອກໍໂຮມກັນ ວິຊຸມາລີ ເພິ່ນເວົ້າວ່າ ແບບກອນສາຍຟ້າ ໝາຍເຖິງສາຍຟ້າແມບ ເພາະເພິ່ນສັງເກດການສຳພັດນອກ ເຊິ່ງສຳຜັດຈາກທ້າຍວັກທີ່ໜຶ່ງ ມາໃສ່ຕົ້ນວັກທີ່ສອງ, ທ້າຍວັກທີ່ສອງ ສຳຜັດໃສ່ຕົ້ນວັກທີ 3 ແລະ ຕໍ່ໆໄປ ເຊິ່ງມາເບິ່ງຕົວຈິງແລ້ວ ກໍເປັນເສັ້ນສາຍ ຄື ສາຍຟ້າແມບລົງມາ ເຊິ່ງຕົວຢ່າງ ເພິ່ນໄດ້ອີງໃສ່ໜັງສື ສຸລິວົງ ປະເພດທີ່ສາມ (ເອີ້ນວ່າຫຼືບຟ້າ (ວິດຊຸມາລີ) ແມ່ນອີງໃສ່ໜັງສື ທ້າວຮຸ່ງ ທ້າວເຈືອງ ເປັນຕົວຢ່າງ ເຊິ່ງສຳຜັດຈາກທ້າຍວັກທີ່ໜຶ່ງ ມາໃສ່ຕົ້ນວັກທີ່ສາມ, ທ້າຍວັກທີ່ສອງໃສ່ຕົ້ນວັກທີ່ສີ່ ສະຫຼັບກັນໄປ ແບບນີ້ເອີ້ນວ່າ ແບບຫຼືບເມກ ຫຼື ຫຼືບຟ້າ ເຊິ່ງໜັງສື ທ້າວຮຸ່ງ ທ້າວເຈືອງເປັນຕົວຢ່າງ ນອກຈາກຜູ້ແຕ່ງຈະຄິດຫາສຳຜັດບາວັກແລ້ວ ຍັງເອົາໃຈໃສ່ສຳຜັດອັກສອນພາຍໃນວັກອີກ ເຊັ່ນ: " ຄອນງຄ້ຳ ຄອນງຄິດໄດ່ " ເຊິ່ງມີແກ່ຕົວ ຄ ນັບວ່າຜູ້ແຕ່ງຊຳນານ ແລະ ມີພອນສະຫວັນທີ່ສຸດ.

ພົວພັນກັບວັນນະຄະດີ ກໍຍັງມີ ໄວຍະກອນ ເຊິ່ງເພິ່ນໄດ້ຂຽນ ໄດ້ຈັດປະເພດເຊິ່ງຜິດແປກຈາກໝູ່ແມ່ນເລື່ອງ ຄຳແຜງ ເຊິ່ງຖືວ່າ ເປັນແຫຼ່ງໜຶ່ງຂອງການຄົ້ນຄວ້າ ປະດິດສ້າງຄຳລາວ ນອກຈາກຈະໄດ້ຄຳເຄົ້າຈາກບາລີ ສັນສະກິດແລ້ວ ໃນຄຳລາວເຮົາ ແຫຼ່ງແລ້ວ ແຫຼ່ງອັນໜຶ່ງທີ່ໃຫຍ່ສຸດ ແມ່ນຄຳແຜງ ເຊິ່ງເປັນຄຳທີ່ແປງຈາກ ຄຳພະຍາງ ດຽວເປັນສອງພະຍາງ ເຊັ່ນ ເກີດ : ກຳເນີດ, ຈົງ : ຈຳນົງ ... ເຊິ່ງເພິ່ນໄດ້ຄົ້ນຄວ້າຫຼາຍ ແລະ ຈັດຫຼັກການແຜງຄຳ ຕາມລຽນມະຫາສິລາ ແລະ ຕໍ່ມາກາຍເປັນຫຼັກລວມ ຮອດປະຈຸບັນ ມີສາມປະເພດ ຄື :

ປະເພດທີ່ໜຶ່ງ ແມ່ນແຜງແບບສະລະອຳ (x = xຳ + x) ເຊັ່ນ : ເກີດ: ກຳເນີດ.

ປະເພດທີ່ສອງ ແມ່ນແບບມີສະລະອະ (x = xະ + x) ເຊັ່ນ : ສອງ ສະໜອງ, ສະຫລອງ ... ເຊິ່ງເຫັນທົ່ວໄປໃນພາສາຂະມຸ.

ປະເພດທີ່ສາມ ແບບໃຊ້ຄຳເຕີມ ຊ້າຍ = ຊ້າຍລ້າຍ ... ຊິບ = ,ຊິບລິບ...

ແມ່ນການໃຊ້ຄຳດຽວມາຊ້ຳກັນ.

ກ່ຽວກັບປະຫວັດສາດ ສຳລັບສ່ວນຕົວ ສິ່ງທີ່ປະທັບໃຈ ໄດ້ຖືເປັນຕົວຢ່າງ ໃນການຄົ້ນຄວ້າ ແມ່ນເພິ່ນຕັດບັ້ນຕົ້ນ ແລະ ທ້າຍຂອງໜັງສືແຕ່ລະເລື່ອງມາໄວ້ ອັນເປັນໂອກາດຜູ້ຈະຄົ້ນຄວ້າຕາມຫຼັງ ມີເງື່ອນໄຂອ້າງອີງ ຕົວຢ່າງ ຕຳນານຂຸນບູຣົມ ເພິ່ນໄດ້ຈັດເປັນ 5 ສະບັບ ແຕ່ລະສະບັບ ເພິ່ນກໍໄດ້ຈົດມາໄວ້ວ່າ ມັນສູດດ້ວຍວິທີໃດ ໝາຍວ່າມັນມີຂໍ້ອ້າງອີງວ່າ ສະບັບໃດເກີດກ່ອນ.

ໃນດ້ານວັດທະນະທຳ ຈູງມະຫາສີລາ ຂຽນຫຼາຍອັນ ຈະແມ່ນຮີດສິບສອງ ຄອງສິບ ຫຼື ໜັງສືອື່ນ ໆ ໂດຍທົ່ວໄປ ເພິ່ນຈັດປະເພດວັດທະນະທຳເປັນ 4 ປະເພດ :

1. ນິຕິທຳ ເຊິ່ງມີພາສາ ປະເພນີ ຕົວໜັງສື
2. ວັດຖຸທຳ ເຄື່ອງນຸ່ງ ເຄື່ອງເອ້ ການກໍ່ສ້າງເຄື່ອງໃຊ້ສອຍ
3. ສະຫະທຳ ເວົ້າເຖິງ ມາລະຍາດຕ່າງໆ
4. ຄະຕິທຳ ມີສາສະໜາ ທິດສະດີ ປຣັດຊະຍາ

ການຈັດແບບນີ້ ແມ່ນວິທີໜຶ່ງທີ່ໃຫ້ພົນລະອຽດ ກ່ຽວກັບການຄົ້ນຄວ້າ, ເຊິ່ງຈະເຮັດໃຫ້ສະດວກ. ນອກນີ້ ກໍ່ບໍ່ທັນມີໃຜສະເໜີຈັດແບບອື່ນ ມາເຖິງປະຈຸບັນ.

ໃນນີ້ອີກ ທີ່ໃຫ້ຄວາມຮູ້ ຄື ສາຕະສົມ ເຊິ່ງເບິ່ງແລ້ວ ສາຕະສົມນີ້ ມັນແມ່ນຫຼັກສູດການສຶກສາສະໄໝກ່ອນ ມີ 18 ຂໍ້.

ຕອນມາເວົ້າເລື່ອງ ປະຊາທິປະໄຕແບບເກົ່າ ໃນວັນນະຄະດີລ້ານຊ້າງ ເຊິ່ງໃນນັ້ນ ແມ່ນໜຶ່ງໃນຫົວຂໍ້ທີ່ສຳຄັນໃນວັນນະຄະດີລາວ.

ໃນໜັງສື ສັງສິນໄຊ ເມື່ອທ້າວສິນໄຊມີທະນູເກີດມານຳ ເມື່ອໂຫນທຳນວາຍແລ້ວກໍມີເສນາສະເໜີວ່າ ບໍ່ຄວນເອົາໄວ້ ເພາະເປັນຄົນເຂັດຂວາງ ໃນນັ້ນ ເຖິງວ່າ ພໍ່ຂອງສິນໄຊຈະບໍ່ເຫັນດີກໍ່ຕາມ ແຕ່ກໍ່ຈຳເປັນໄດ້ຍອມຕາມເສນາອາມາດ ອັນນີ້ແມ່ນ ປະຊາທິປະໄຕອັນໜຶ່ງ ໃນສະໄໝເກົ່າ.

ໃນໜັງສື ຂຸນທຶງ ກໍ່ເຊັ່ນກັນ ເວລາທ້າວຂຸນເທືອງໄດ້ລູກກັບນາງນາກແລ້ວ ໄດ້ນຳເອົາລູກມາລ້ຽງໄວ້ໃນເມືອງແລ້ວ ຄົນທັງຫຼາຍໄດ້ທວງວ່າ ລູກນາກຈະເອົາມາລ້ຽງໄວ້

ໃນເມືອງແມ່ນຜິດຮີດຄອງປະເພນີ ຕ້ອງສົ່ງໜີ ຢູ່ໃນໜັງສືຂຸນທືງສະບັບເດີມແຫ້ງ ສະບັບຄຳຮ້ອຍແກ້ວ ໄດ້ເວົ້າເຖິງຮອດວ່າ ພວກເສນາອາມາດ ໄດ້ມາຍາດເອົາທ້າວຂຸນທືງຈາກມືພໍ່ ຜູ້ເປັນຣາຊາ ເຮັດໃຫ້ພໍ່ກົງເກືອກໄໝ້ນຳທ້າວ ຖ້າຣາຊາຫາກມີສິດເດັດຂາດ ຫຼືສົມບູນຍະນະສິດທິຣາດຈະທຳຍາດຈາກມືເພິ່ນໄດ້ບໍ່ ? ອັນນີ້ກໍ່ຄືວ່າສ່ອງແສງເຖິງ ມີປະຊາທິປະໄຕເໝືອນກັນ.

ໃນໜັງສື ຂຸນບູລົມ ເຮົາເຫັນວ່າ ເວລາລີສີ້ຂຶ້ນມາປົກຂອງເມືອງ ແລ້ວຂຶ້ນເມືອລາຍງານຕໍ່ແຖນຫຼວງ ແລ້ວແຖນຫຼວງແທນທີ່ຈະຈັດລູກມາເກີດປົກຄອງໂລດເພິ່ນຊ້ຳເຮັດເອີ້ນເອົາລູກແຖນຕ່າງໆມາຢູ່ທາງກາງ ແລ້ວໃຫ້ແຖນຊົ່ວມາຊົ່ງເບື້ອງບຸນເບື້ອງບາບ (ໃນເວລານີ້ອາດໝາຍເຖິງຄວາມສາມາດ) ໝາຍວ່າອ້າງອີງເບື່ອງວ່າ ຜູ້ໃດຈະສົມມາ ສົມຄວນໝາຍວ່າ ຕ້ອງການຄວາມເຫັນຫຼາຍຄົນ ມີລັກສະນະປະຊາທິປະໄຕ.

ໃນຕອນສອງ ເວລາຂຸນບູລົມລົງມາຢູ່ແລ້ວ ແທນທີ່ຈະຈັດຕັ້ງຜູ້ດູງອໂລດ ເພິ່ນໄດ້ຖາມພວກລົງມານຳກັນວ່າ ພວກເຮົາຈະເຮັດວິທີໃດ ຈະເຮັດໃຫ້ຄົນຫຼວງຫຼາຍເຫລົ່ານີ້ ມີເຄື່ອງນຸ່ງຫົ່ມ ໝາຍວ່າ ຜູ້ເປັນຫົວໜ້າໄດ້ຖາມເອົາປະຊາທິປະໄຕເສຍກ່ອນ ໃນສ່ວນໃດສ່ວນໜຶ່ງ ເຖິງຢ່າງໃດກໍ່ພໍເປັນເງື່ອນໄຂສະແດງໃຫ້ເຫັນປະຊາທິປະໄຕ ແຕ່ບໍ່ແມ່ນວ່າ ມັນແມ່ນຕົວຈິງຫຼືບໍ່ ສຳລັບການສະແດງປະຊາທິປະໄຕໃນໜັງສືວັນນະຄະດີ ບັດນີ້ເຮົາມາອີງໃສ່ປະຫວັດສາດ ໃນເລື່ອງ ເຈົ້າຟ້າງຸ່ມ ຊາລີກັນວ່າ ເກີດມາມີແຂ້ວ 32 ເຫຼັ້ມໂລດແລ້ວຖືກສົ່ງເນລະເທດ ສະແດງວ່າ ບ້ານເມືອງບໍ່ເຫັນພ້ອມ ແລ້ວເຈົ້າຊີວິດ ພໍ່ຂອງເຈົ້າຟ້າງຸ່ມຈຶ່ງສົ່ງລູກໜີ ນີ້ກໍ່ໝາຍວ່າ ມີລັກສະນະປະຊາທິປະໄຕ.

ໃນຕອນທີ່ສອງ ບໍ່ສ່ອງແສງຈະແຈ້ງຢູ່ບ່ອນວ່າ ເຈົ້າຟ້າງຸ່ມ ກັບຄືນມາທ້ອນໂຮມປະເທດຊາດແລ້ວໄດ້ເອົາສາສະໜາຂຶ້ນມາ ເພິ່ນຈຶ່ງໄດ້ຮັບຄວາມນິຍົມຊົມຊອບຈາກມະຫາຊົນ ແຕ່ໃນເມື່ອ ເຈົ້າຟ້າງຸ່ມກະທຳຜິດ ກໍ່ຖືກເນລະເທດ ເພິ່ນກໍ່ຍອມໜີ ເຖິງວ່າເພິ່ນຈະມີກຳລັງໃຫຍ່ຫຼວງ ຈົນສາມາດຕີທ້ອນໂຮມໝົດກໍ່ຕາມ ແຕ່ກໍ່ຄືແມ່ນວ່າເພິ່ນຍັງມີຄວາມ ເຊື່ອຖືໃນປະເພນີປະຊາທິປະໄຕເຊັ່ນກັນ.

ສະຫຼຸບໄດ້ວ່າ ໃນວັນນະຄະດີເກົ່າແກ່ ໄດ້ມີເລື່ອງກ່ຽວກັບ ປະຊາທິປະໄຕ ຊ້ອນຢູ່ໃນນັ້ນ ແລະ ເປັນຫົວຂໍ້ ຫຼື ຫົວເລື່ອງໜຶ່ງທີ່ສຳຄັນທີ່ສຸດ ໃນບັນດາໜັງສືວັນນະຄະດີລາວ

ຄວາມເຫັນຕໍ່ຊື່ ທ້າວຮຸ່ງ ທ້າວເຈືອງ, ເຈື່ອງ

• ສີຊະນະ ສີສານ
ປະທານ ຄະນະກຳມະການ
ວິທະຍາສາດ - ສັງຄົມ

ຢູ່ໃນປຶ້ມທ້າວຮຸ່ງທ້າວເຈືອງ ທີ່ມະຫາສີລາວິໄຈ ມີອັນຂັດກັນ ຂັດຢູ່ບ່ອນວ່າ ຫົວຂໍ້ວ່າ ທ້າວຮຸ່ງ ຫລື ທ້າວເຈືອງ ບັດເອົາແທ້ໆ ຜັດວ່າ ທ້າວເຈືອງເປັນນອງທ້າວຮຸ່ງ ອັນນີ້ການວິໄຈຈະຖືກຄືມະຫາສີລາເວົ້າຫລືບໍ່ ຫລືຈະໄປແນວໃໝ່.

ບັນຫາທີສອງ ໃນປຶ້ມປະຫວັດສາດ ມະຫາສີລາໃຫ້ຄວາມເຫັນແນວນີ້ ເມື່ອ ຂຸນລໍ ລົງມາໃນສະຕະວັດທີ ໑ ມັນບໍ່ກົງກັບປະຫວັດສາດຂອງ ໂຍນົກ ເຊິ່ງຜິດເວລາກັນ ໔໐໐ ປີ ສະນັ້ນຢາກໃຫ້ຜູ້ຄົ້ນຄວ້າເລິກບັນຫານີ້ ລອງຄົ້ນຄວ້າເບິ່ງວ່າການທີ່ມະຫາສີລາວິໄຈບ່ອນນີ້ຖືກຫລືຜິດ ຖ້າຖືກກໍຢູ່ບ່ອນໃດ ຖ້າບໍ່ຖືກແດ່ຜິດຢູ່ບ່ອນໃດ.

ທັດສະນະ ຕໍ່ການ ສຶກສາ ວັນນະຄະດີ

● ຈາລຸວັນ ທຳມະວັດ

ອາຈານ ວັນນະຄະດີ ວັດທະນະທຳ ອີສານ ມະຫາວິທະຍາໄລສີນັກຄະລິນວິໂລດ, ປະລິນຍາໂທອັກສອນສາດມະຫາບັນດິດ ຈຸລາລົງກອນ ມະຫາວິທະຍາໄລ

ຂ້າພະເຈົ້າຢາກຂໍປະກອບຄວາມຄິດເຫັນຮ່ວມກັບທ່ານປະທານໃນປະເດັນທີ່ຖືກ ຫລື ຜິດ ໃນການສຶກສາວັນນະກຳ ມັນມີບັນຫາຢູ່ວ່າ ໃຜຈະເປັນຜູ້ຕັດສິນ ຖ້າເຮົາຕັດສິນໃນທັດສະນະຊຸມຊົນຄວາມຖືກກໍ່ຈະອອກມາແບບຫນຶ່ງ ຖ້າເວົ້າເຖິງສິດທິທຳໃນການສຶກສາ ວັນນະກຳ ປະຊາຊາດໃນໂລກມີສິດທີ່ຈະສຶກສາວັນນະກຳຂອງຕົນເອງ ແລະ ຂອງຊາດອື່ນເພາະສະນັ້ນມັນເປັນການດີ ທີ່ພວກເຮົາໄດ້ເປີດໂລກທັດເຂົ້າຫາກັນ ແຕ່ວ່າ ເລື່ອງທ້າວ ຮຸ່ງ ທ້າວເຈືອງມັນບໍ່ໄດ້ເປັນສິນບັດຂອງລ້ານຊ້າງ ຫລືລ້ານນາ ຖ້າເຮົາສືບຂຶ້ນໄປ ມັນເປັນສິນບັດຂອງສອງຝັ່ງຂອງ ພັດທະນາການຂອງເລື່ອງທີ່ແຕກຕ່າງກັນບາງແຫ່ງ ທ້າວຮຸ່ງ ທ້າວເຈືອງເປັນພູຮຽງນິທານທ້ອງຖິ່ນ ຄວາມອອນຊອນໃນການສຶກສາ ກໍ່ແຕກຕ່າງກັນ ແຕ່ຢືນຢັນຢູ່ບ່ອນວ່າ ທ້າວຮຸ່ງ ທ້າວເຈືອງເປັນເລື່ອງຍິ່ງໃຫຍ່ ເປັນເລື່ອງກ່ອນປະຫວັດສາດ. ຢູ່ທົ່ວອີສານ ແມ່ນມີຫມົດເລື່ອງກ່ຽວກັບບັນພະບຸລຸດ ຜູ້ນີ້ ເພາະສະນັ້ນຄວາມຖືກຕ້ອງ ອີງໃສ່ຂໍ້ມູນທີ່ມີຄຸນນະພາບ ຫລື ການຄົ້ນຄວ້າທີ່ມີວິທະຍາສາດ.

ລັດຖະສານ ໃນຜົນງານຂອງມະຫາສິລາ ເປັນທຳມະສາດ ບໍ່ເປັນຄະມາທິປະໄຕ ບໍ່ເປັນອະນາທິປະໄຕ ແຕ່ເນັ້ນທຳມາທິປະໄຕ ທຳມະຊາດຂອງມະນຸດ ປະກົດໃນຄຳ ສອນເຊັ່ນ ອິນທິຍານສອນລູກ ປູ່ສອນຫລານ ສອນຄົນທຳມະດາ ມະນຸດຕ້ອງເປັນທຳມະຊາດ - ຂອງມະນຸດສຳຄັນທີ່ສຸດ ຍາພໍ່ມະຫາສິລາ ຢັ້ງຢືນວ່າ ສັງຄົມແຕ່ລະສັງຄົມກໍ່ມີ ທຳມະຊາດຂອງສັງຄົມ ທີ່ແຕກຕ່າງກັນ ອັນນີ້ປາກົດແຈ້ງໃນເລື່ອງຂຶດ ໑໒ ຄອງ ໑໔ ຂ້າພະເຈົ້າຈຶ່ງຖືວ່າ ເພິ່ນເປັນແມ່ແບບຂອງທຳມາທິປະໄຕ.

ຄວາມເຫັນ ຂອງ ທ່ານ ສິງກະໂປ ສີໂຄດຈຸນລະມະນີ

ປະທານ ອົງການສັນຕິພາບໂລກ

ແຕ່ກ່ອນ ເຮົາຮຽນປະຫວັດສາດລາວ ເປັນປຶ້ມທີ່ຝະລັ່ງຄົ້ນຄວ້າ ແລະ ຂຽນ ຝະລັ່ງຜູ້ນັ້ນຊື່ວ່າ ບູລັງເຊ ປຶ້ມນັ້ນເວົ້າເລື່ອງປະຫວັດສາດ ແຕ່ບໍ່ລະອຽດ ເຮົາເອງຈື່ ໃນບ່ອນວ່າ ລາວນີ້ມາຈາກໃສ. ເພາະຂຽນໃນປຶ້ມ ບູລັງເຊນັ້ນໄດ້ເວົ້າຕັ້ງແຕ່ຂຸນບູລົມ ພຸ້ນມາ ຂຸນບູລົມມາຈາກ ໜອງແສແສນຍ່ານສິບສອງພັນນາໄດ້ເອົາເມຍ ມີ ຄົນ ກັບລູກຊາຍ ກຄົນມາຍຶດຕັ້ງແຕ່ສິບສອງພັນນາມາ ຕໍ່ມາຈຶ່ງເວົ້າວ່າ ສາມໝື່ນເມືອງຟອງ ຫລື ໝາກນ້ຳເຕົ້າປູ້ງ ເມື່ອມາຍຶດເອົາແຖບນີ້ແລ້ວຢາຍເມືອງໃຫ້ລູກຊາຍສະແດງອອກວ່າ ລູກຊາຍ ຜູ້ໜຶ່ງໄດ້ໄປຄອງເມືອງປະກັນ ເມືອງປະກັນໃນເວລານັ້ນຮຽນແມ່ນເມືອງຫວຽດນາມ ຕໍ່ໄປອີກລູກຊາຍຫລາໄປຢູ່ສາງພາກອີສານ ໄປສາງອະຍຸທະຍາ ພໍ່ສັ່ງວ່າ ໄປຍຶດເອົາເມືອງໄທແລ້ວໃຫ້ຊື່ ຢ່າປະຫ່າອິດລາວລາງູ ໄທລາງູ. ບໍ່ໃຫ້ປະໄທ ໃສ່ຊື່ໃສ່ກໍ່ໃຫ້ມີໄທ.

ລູກຊາຍຫລາໄປຢູ່ພາກອີສານໃສ່ຊື່ວ່າ ໄທສຽມ ໃສ່ຊື່ໄທສຽມຍອມພໍ່ຂຸນບູລົມ ບອກວ່າ ໄປຕັ້ງບ່ອນໃດໃຫ້ຂຸດຂຸມຕັ້ງເສົາເຫັນທາດໂລຫະອັນໃດຮູບຫຍັງໃຫ້ໃສ່ຊື່ຕາມນັ້ນ ເມື່ອໄປສາງພາກອີສານໄດ້ຂຸດເຫັນສຽມຫຼຽມ ຈຶ່ງໃສ່ຊື່ ໄທສຽມ ແຕ່ວ່າເຈົ້າສັກດີນາ ທາງພຸ້ນເຫັນວ່າບໍ່ມ່ວນຈຶ່ງໃຫ້ເອີ້ນໄວ ເວົ້າຊາເປັນໄທສະຫຍາມມາສະໄໝ ຫລວງພິບູນ ສົງຄາມບໍ່ຢາກໃຫ້ເອີ້ນ ໃຫ້ປ່ຽນເປັນໄທແລນ ຈຶ່ງເປັນໄທແລນມາທຸກວັນນີ້.

ໃນສະໄໝເຮົາເປັນນາຍຄູ ເພິ່ນໄດ້ຈັດຕັ້ງຟື້ນໂຕລາວຂຶ້ນ ຄະນະຈັດຕັ້ງທຳອິດ ມີຍາພໍ່ ມະຫາແກ້ວ, ລຽນມະຫາສີລາ ມະຫາປານ ພາກັນຟື້ນໜັງສືລາວ ມີການຖົກຖຽງກັນນີ້ຜູ້ວ່າ ລາວບໍ່ມີຫັນລົ້ນ ຕົວ ຣ ຕ້ອງເອົາຖິ້ມ ຍາພໍ່ມະຫາແກ້ວ ເວົ້າວ່າ ຖ້າບໍ່ມີໂຕ ຣ ບໍ່ຖືກ ເພາະລາວຢູ່ລະຫວ່າງ ໔ ປະເທດ ບໍ່ຫລາຍກໍ່ໜ້ອຍລາວຢູ່ຊາຍແດນຕ້ອງໃຊ້ ໂຕນີ້ ແລະ ພາຍໃນກໍ່ໃຊ້ເຊັ່ນ: ພວກລາວເທິງຊື່ຄວາຍວ່າ ຈະຣຽກ ຖ້າເຮົາຈະຂຽນ ຈະລຽກ

ກໍ່ຈະບໍ່ຖືກ ດັ່ງນັ້ນ ບໍ່ຕ້ອງຕັດ ຣ ອອກ ມີກຸ່ມຫນຶ່ງພັດເວົ້າວ່າ ຖ້າເອົາໂຕ ຣ ແມ່ນ ເອົາຕາມໄທ.

ຕໍ່ມາຈັດຕັ້ງຂຶ້ນອີກຄະນະຫນຶ່ງ ຄືຄະນະລຸງມະຫາ ສີລາ ແມ່ນຮຸ່ນທີສອງທີ່ອະນຸ ລັກໂຕລາວ.

ບົດປະກອບຄວາມເຫັນ

ບຸນພັນ ລັດຕະນະວົງ ຫົວຫນ້າ ສະຖາບັນ ສິລະປະ ວັນນະຄະດີ
ຄະນະກຳມະການ ວິທະຍາສາດ ສັງຄົມ

ຫລາຍທ່ານກໍ່ໄດ້ໃຫ້ຄວາມເຫັນ ກ່ຽວກັບທ້າວຮຸ່ງ ທ້າວເຈືອງ ເຊິ່ງໃນນັ້ນອາຈານຄຳແພງ ກໍ່ໄດ້ເວົ້າມາແລ້ວ ເຊິ່ງກໍ່ໄດ້ຍົກເອົາເອງ ທີ່ຕັ້ງຂໍ້ສົງໃສວ່າ ເມືອງປະກັນ ທີ່ຫມາຍໄວ້ ໃນທ້າວຮຸ່ງ ທ້າວເຈືອງນັ້ນ ຢູ່ໃສແທ້ ມັນແມ່ນເມືອງຊຽງຂວາງແທ້ບໍ ?

ພວກເຮົາເຫັນວ່າ ເລື່ອງທ້າວຮຸ່ງ ທ້າວເຈືອງນີ້ ເກົ່າແກ່ສົມຄວນ ອາດຈະສອງ - ສາມຮ້ອຍປີກ່ອນ ເຈົ້າຟ້າງຸ່ມ ທີ່ຫມາຍເມືອງປະກັນຢູ່ໃນທ້າວຮຸ່ງ ທ້າວເຈືອງຫລາຍຄົນກໍ່ວ່າແມ່ນເມືອງຊຽງຂວາງ ແຕ່ເມືອງຊຽງຂວາງ ເອກະສານໃດໆ ກໍ່ບໍ່ໄດ້ຢັ້ງຢືນ ເປັນເມືອງປະກັນ ມີເອກະສານຂອງຈີນເອີ້ນວ່າ: ຖາງເມັ່ງ ແຕ່ເມືອງປະກັນທີ່ຫມາຍ ໄວ້ ຫລາຍທ່ານກໍ່ສົງໃສວ່າ ສະໄຫມເກົ່າເປັນອານາຈັກ ຢູ່ພາກຕາເວັນອອກສຽງເຫນືອ ຂອງຫວຽດນາມ ໃກ້ກັບແຂວງກວາງຊີຂອງຈີນ ໃນປະຈຸບັນ ມີຊື່ ບັກການ ໃນແຖວ ເກົາບັງ ຂອງຫວຽດນາມ ສະໄຫມເກົ່າ ເປັນອານາຈັກທີ່ມີປະຫວັດຕ້ານກັບຈີນ ທີ່ມາຮຸກຮານຫວຽດນາມ ອານາຈັກນີ້ເກີດຂຶ້ນໃນສະຕະວັດທີ ໘ ຫາທີ ໑໐ ແລ້ວລົ້ມລະລາຍ. ສະແດງ ວ່າເລື່ອງທ້າວຮຸ່ງ ທ້າວເຈືອງອາດເກີດຂຶ້ນ ໃນສະຕະວັດທີ ໘ ຫາທີສິບ ມັນເປັນຂໍ້ມູນສຳຄັນໃຫ້ພວກເຮົາຄົ້ນຄວ້າ ຖືກກັບໄລຍະຂອງປະຫວັດສາດ.

ກ່ຽວກັບວ່າຈະແມ່ນວັນນະຄະດີ ອີສານ ຫລືບໍ່ອີສານນັ້ນ ມັນບໍ່ສຳຄັນ ເພາະເຮົາຄິດວ່າ ອີສານ ມັນຫາກໍ່ ໗໐-໙໐ ປີ ເທົ່ານັ້ນ ດັ່ງນັ້ນແຕ່ເກົ່າມັນກໍ່ເປັນວັນນະຄະດີ ອັນດຽວກັນ ຈະວ່າລາວຫລືອີສານກໍ່ຕາມ ເຮົາຈະເອົາຊາຍແດນມາວັດແທກກໍ່ບໍ່ຖືກ.

ຄຳວ່າແຖນ ຕາມຂ້າພະເຈົ້າສົງໄສ ເຂົ້າໃຈສອງຢ່າງ.

໑. ແຖນຢູ່ເທິງຟ້າ.

໒. ແຖນ ໝາຍເຖິງເມືອງຟ້າ ນິໝາຍຢູ່ອານາຈັກແຖນ ປະຈຸບັນຮຽກວ່າ ອານາຈັກແຖນ ເຊິ່ງຢູ່ພາກຕາເວັນຕົກຂອງກຸ່ມນຶ່ງ ເຊິ່ງຊຸມນຸມ ໓ ອານາຈັກ ຄື: ອາຍລາວ, ຕາເລ, ແລະ ແຖນ ແລ້ວຄຳວ່າແຖນນີ້ ເປັນຫຍັງຈຶ່ງວ່າມີຄວາມໝາຍຍິ່ງໃຫຍ່ ເຊິ່ງອາດຈະບໍ່ແມ່ນຜີຢູ່ເທິງຟ້າອີຫລີ ແຕ່ແມ່ນຜີເຈົ້າກົກເຈົ້າເລົ່າຈາກເມືອງແຖນນີ້ກໍເປັນໄດ.

ພົນງານ ແລະ ບາງທັດສະນະ ກ່ຽວກັບ ຂະບວນ ວິວັດ ແຫ່ງ ຕົວໜັງສືລາວ ຂອງ ມີລາງ ອາຈານ ມະຫາ ສີລາ ວີຣະວົງ ນັກລາວວິທະຍາ ຜູ້ມີຊື່ສຽງ

● ສີສະເຫວີຍ ສຸວັນນີ ນັກຄົ້ນຄວ້າ ພາສາສາດ ວັນນະຄະດີ ສະຖາບັນຄົ້ນຄວ້າ ວິທະຍາສາດ ສັງຄົມ ກະຊວງສຶກສາ, ປະລິນຍາໂທ ພາສາ ວັດທະນະທຳ ເຂເຊຍ, ອິນເດຍ

ທ່ານປະທານກອງປະຊຸມທີ່ເຄົາລົບ,
ບັນດາທ່ານຜູ້ຊົງຄຸນວຸດທິ ແລະ ທ່ານຜູ້ມີກຽດ ທີ່ນັບຖື ແລະ ຮັກແພງ.

ຂ້າພະເຈົ້າຂໍອະນຸຍາດປະກອບຄວາມເຫັນບາງອັນ ກ່ຽວກັບພົນງານທາງດ້ານ ວັນນະກຳ ແລະ ບາງທັດສະນະກ່ຽວກັບຂະບວນວິວັດແຫ່ງຕົວໜັງສືລາວ ເຊິ່ງມີລາງອາຈານມະຫາສີລາ ວີຣະວົງ ໄດ້ຄົ້ນຄວ້າ ແລະ ຈັດພິມໄວ້ໃຫ້ລູກຫລານໄດ້ສືບຕໍ່ຄົ້ນຄວ້າ ຮ່ຳຮຽນ ເອົາມໍລະດົກອັນລ້ຳຄ່າຂອງຊາດນີ້ໄວ້. ຂ້າພະເຈົ້າຮູ້ສຶກເປັນກຽດ ແລະ ພາກພູມໃຈ ທີ່ຖືກເຊື້ອເຊີນໃຫ້ເຂົ້າມາຮ່ວມໃນການສຳມະນາຄັ້ງນີ້. ແຕ່ກ່ອນອື່ນກໍຕ້ອງຂໍໂທດ ໄວ້ກ່ອນ ຖ້າຫາກວ່າ ຄວາມຄິດຄວາມເຫັນຂອງຂ້າພະເຈົ້າບໍ່ເລິກເຊິ່ງ ແລະ ລະອຽດພຽງພໍ, ທັງ

ນີ້ກໍຍ້ອນວ່າເວລາກະກຽມຂອງຂ້າພະເຈົ້າຈັ້ນຈ້ແດ່. ແຕ່ເຖິງຢ່າງໃດກໍຕາມ, ພາຍຫລັງທີ່ຂ້າພະເຈົ້າໄດ້ສະເໜີໄປແລ້ວ ຖ້າຫາກມີສິ່ງໃດ ຍັງບໍ່ແຈ່ມແຈ້ງ ບັນດາທ່ານຜູ້ຟັງຢາກຈະຢິບຍົກຂຶ້ນມາຖາມຕື່ມ ຂ້າພະເຈົ້າກໍຈະພະຍາຍາມອະທິບາຍເພີ້ມເຕີມເທົ່າທີ່ຕົນເອງ ເຂົ້າໃຈໄດ້.

ການສະເໜີບັນຫານີ້ ມີຢູ່ສາມປະເດັນ ຄື : (1) ການພົວພັນສ່ວນຕົວ ລະຫວ່າງຂ້າພະເຈົ້າເອງ ແລະ ນີ້ລາງອາຈານມະຫາສີລາ ວີຣະວົງ (2) ຂໍ້ຄິດເຫັນ ດ້ານການຄົ້ນຄວ້າ ທີ່ນີ້ລາງອາຈານມະຫາສີລາ ເຊິ່ງມີຢູ່ໃນອຸດົມການຂອງຂ້າພະເຈົ້າ ແລະ (3) ບັ້ນສຸດທ້າຍຈຶ່ງຈະເວົ້າເຖິງເນື້ອໃນຂອງຫົວຂໍ້ທີ່ຍົກຂຶ້ນມາສະເໜີຕໍ່ທີ່ປະຊຸມນີ້ ນັ້ນຄື : ຂະບວນວິວັດແຫ່ງຕົວໜັງສືລາວ. ເພື່ອບໍ່ເສຍເວລາ ຂ້າພະເຈົ້າຂໍເຂົ້າປະເດັນ ທີໜຶ່ງເລີຍ. ຄວາມຈິງແລ້ວ, ຂ້າພະເຈົ້າເອງກໍບໍ່ເຄີຍໄດ້ເຫັນນີ້ລາງອາຈານມະຫາ ສີລາ ມາກ່ອນ, ແຕ່ຂ້າພະເຈົ້າເຄີຍໄດ້ສຳພັດ, ໄດ້ຮູ້ໄດ້ເຫັນ ແລະ ໄດ້ຊົມໃຊ້ຜົນງານ ທາງດ້ານວັນນະກຳ ແລະ ຕຳລາຮຽນຕ່າງໆ ຂອງເພິ່ນມາແຕ່ດົນນານແລ້ວ. ເຖິງວ່າ ຂ້າພະເຈົ້າຍັງບໍ່ທັນໄດ້ຮູ້ຈັກກັບເພິ່ນ, ແຕ່ເມື່ອໄດ້ອ່ານ, ໄດ້ຮຽນ ແລະ ໄດ້ສຳພັດກັບ ຜົນງານຂອງເພິ່ນ ແລ້ວຂ້າພະເຈົ້າກໍຮູ້ສຶກນິຍົມຊົມຊອບໃນຜົນງານທີ່ເພິ່ນໄດ້ສ້າງໄວ້, ຈະແມ່ນຍ້ອນຂ້າພະເຈົ້າເຄີຍໄດ້ຮຽນສາຍດຽວກັນກັບເພິ່ນ ຫລືວ່າແມ່ນຍ້ອນແນວໃດບໍ່ຊາບ, ຂ້າພະເຈົ້າໄດ້ອ່ານສິ່ງທີ່ເພິ່ນຂຽນແລ້ວ ແມ່ນມີຄວາມໝັ້ນໃຈ, ເຊື່ອໝັ້ນ ໃນຫລັກການ ແລະ ເຫດຜົນຂອງເພິ່ນ ເພາະວ່າສິ່ງທີ່ເພິ່ນເວົ້າອອກມາຂຽນອອກມານັ້ນ ລ້ວນແຕ່ມີເຫດຜົນ ແລະ ມີຫລັກຖານຢັ້ງຢືນພຽງພໍ, ແມ່ນກະທັ້ງວ່າ ຄຳລາວບາງຄຳ ທີ່ເພິ່ນໄດ້ຂຽນໄວ້ໃນວັດຈະນານຸກົມນັ້ນ ຖ້າຄຳໃດທີ່ມັນເກົ່າແກ່ຢ້ານຄົນບໍ່ເຂົ້າໃຈ ແລະ ຜູ້ຮູ້ບໍ່ເຖິງກໍຈະເຂົ້າໃຈວ່າເປັນຄຳຂອງພາສາອື່ນ ເພິ່ນກໍໄດ້ຍົກຕົວຢ່າງອອກມາໃຫ້ເຫັນພ້ອມ, ເປັນຕົ້ນ ແມ່ນຍົກເອົາຄຳກອນສິນໄຊ ຫລື ທ້າວຮຸ່ງທ້າວເຈືອງມາຢັ້ງຢືນ. ອັນນີ້ເປັນແຕ່ພຽງຄວາມເຊື່ອໝັ້ນໃນເບື້ອງຕົ້ນ ກ່ອນທີ່ຂ້າພະເຈົ້າຈະໄດ້ຮູ້ຈັກກັບເພິ່ນ. ໃນປີ 1970 ພາຍຫລັງຂ້າພະເຈົ້າສຳເລັດການສຶກສາມາຈາກຕ່າງປະເທດແລ້ວ, ຂ້າພະເຈົ້າຖືກສັບຊ້ອນໃຫ້ເປັນ ອາຈານສອນ ພາສາວັນນະຄະດີລາວ ແລະ ວັດທະນະທຳຕາເວັນອອກທີ່ວິທະຍາໄລ ວຽງຈັນ

ຂ້າພະເຈົ້າກໍໄດ້ໃກ້ຊິດກັບລາຊະບັນດິດສະພາຢູ່ວຽງຈັນ ເຊິ່ງເວລານັ້ນ ນີ້ລາງອາຈານມະຫາສີລາ ວີຣະວົງ ກໍເປັນສະມາຊິກຂອງລາຊະບັນດິດສະພານັ້ນຢູ່. ຂ້າພະເຈົ້າ ໄດ້ໃກ້ຊິດຂໍປຶກສາຫາລື ແລະ ຮ່ຳຮຽນເອົາຄວາມຮູ້ຈາກເພິ່ນຫລາຍຢ່າງ. ຂ້າພະເຈົ້າສັງເກດເຫັນວ່າ ນີ້ລາງອາຈານມະຫາສີລາ ເປັນນັກຄົ້ນຄວ້າທີ່ຕ້ອງການຢາກເຜີຍແຜ່ຄວາມຮູ້ ແລະ ມີຈິດໃຈຮັກການຄົ້ນຄວ້າຂີດຂຽນຢ່າງດູດດື່ມ ໂດຍສະເພາະແມ່ນໃນເລື່ອງອາລະຍະທຳຂອງລາວ. ເຖິງແມ່ນບາງເທື່ອ ເພິ່ນຈະຢູ່ໃນສະພາບທີ່ຮູ້ສຶກວ່າອ່ອນເພຍແດ່ ແຕ່ວ່າ ເມື່ອເຮົາເອີ່ຍເຖິງບັນຫາທາງວິຊາການດ້ານອັກສອນສາດ, ວັນນະຄະດີ, ປະຫວັດສາດ ແລະ ພາສາລາວແລ້ວ ປາກົດວ່າ ຄວາມອ່ອນເພຍຂອງເພິ່ນໝົດໄປທັນທີແລ້ວຫັນມາເວົ້າ ລົມກັບເຮົາຢ່າງເອົາຈິງເອົາຈັງ. ອັນນີ້ເຫັນວ່າເປັນຕົວຢ່າງອັນໜຶ່ງທີ່ນັກຄົ້ນຄວ້າຮຸ່ນລູກຫຼານພວກເຮົາຄວນຖືເອົາເປັນແວ່ນແຍງ. ບຸກຄະລິກລັກສະນະພິເສດອັນໜຶ່ງຂອງນັກຄົ້ນຄວ້າຜູ້ໂດ່ງດັງນີ້ກໍຄື ທ່ານເປັນຄົນອ່ອນໂຍນ ບໍ່ຕ້ອງການຄັດຄ້ານໃນສິ່ງທີ່ມີປະໂຫຍດ ເຊິ່ງ ຜູ້ອື່ນສ້າງໄວ້ ພ້ອມກັນນີ້ ກໍຮີບເຮັ່ງກໍ່ສ້າງໃນສິ່ງທີ່ມີປະໂຫຍດຕໍ່ສັງຄົມ ແລະ ປະເທດຊາດ ໃຫ້ຫລາຍເທົ່າທີ່ຈະຫລາຍໄດ້. ສະນັ້ນ, ພວກເຮົາຈຶ່ງເຫັນວ່າ ຕະຫລອດຊີວິດຂອງເພິ່ນ ຕິດພັນຢູ່ແຕ່ກັບວຽກງານຄົ້ນຄວ້າຂີດຂຽນ, ນອກຈາກນີ້ ເພິ່ນກໍຍັງສັ່ງແລ້ວສັ່ງອີກ ກ່ອນທີ່ຈະໝົດລົມຫາຍໃຈໃຫ້ລູກຫລານພາກັນເອົາໃຈໃສ່ສືບຕໍ່ຄົ້ນຄວ້າວຽກງານທີ່ເພິ່ນເຮັດຄ້າງ ຄາໄວ້ ເປັນຕົ້ນ ວຽກການພິມມະຫາກາບທ້າວຮຸ່ງທ້າວເຈືອງ, ວຽກວັດຈະນານຸກົມ ພາສາລາວ ເຊິ່ງຂ້າພະເຈົ້າກໍເປັນຜູ້ໜຶ່ງທີ່ໄດ້ປະກອບສ່ວນໃນວຽກງານນີ້. ສິ່ງທີ່ຂ້າພະເຈົ້າຍ້ອງຍໍຈົນເຊີຍໃນຄຸນທຳຂອງອາຈານອີກອັນໜຶ່ງກໍຄືການດຳລົງຊີວິດຂອງເພິ່ນ ເຕັມໄປດ້ວຍຄວາມບໍລິສຸດປອດໃສ, ງ່າຍດາຍ ແຕ່ມີຄວາມສຳເລັດສູງໃນການລ້ຽງດູ ເບິ່ງແຍງຄອບຄົວ ແລະ ອົບຮົມສັ່ງສອນລູກເຕົ້າ. ຖ້າຈະເບິ່ງໃນຖານະຄອບຄົວແລ້ວ ເພິ່ນກໍບໍ່ແມ່ນຜູ້ຢູ່ໃນຖານະລ້ຳລວຍແນວໃດ, ຂະໜາດຂອງຄອບຄົວໃຫຍ່ ແຕ່ກໍສາມາດນຳພາ ຄອບຄົວໄປສູ່ຄວາມສຳເລັດໄດ້, ລູກເຕົ້າເພິ່ນສ່ວນຫລາຍ ສຳເລັດການສຶກສາຂັ້ນສູງ, ມີຄວາມຮູ້ ມີຄວາມສະຫລາດ ເຊິ່ງຄອບຄົວຕົວຢ່າງແບບນີ້ ຂ້າພະເຈົ້າເຫັນວ່າບໍ່ຄ່ອຍມີຫລາຍປານໃດຢູ່ໃນລາວເຮົາ.

ຈາກການພົວພັນສ່ວນຕົວ ແລະ ໄດ້ເຂົ້າໃຈທາດແທ້ ແລະ ພຶດຕິກຳຕົວຈິງ ຂອງນີ້ ລາງອາຈານມະຫາສີລາ ວີຣະວົງ ຄືດັ່ງກ່າວມານັ້ນ ເຮັດໃຫ້ຂ້າພະເຈົ້າຢາກຈະ ຮ່ຳຮຽນ ເອົາແບບຢ່າງການຄົ້ນຄວ້ານຳເພິ່ນ ແລະ ບາງຄັ້ງເມື່ອມີໂອກາດໄດ້ໂລມກັນກັບເພິ່ນ ຂ້າພະເຈົ້າໄດ້ຮຽນຖາມເພິ່ນເຖິງຂໍ້ສະດວກ ແລະ ຂໍ້ຫຍຸ້ງຍາກໃນການຈັດພິມຜົນງານ ແຕ່ລະເທື່ອ. ເພິ່ນໄດ້ໃຫ້ທັດສະນະວ່າ "ກ່ອນອື່ນເຮົາຕ້ອງເຊື່ອໝັ້ນໃນຄວາມສາມາດ ຂອງໂຕເອງ, ເຊື່ອໝັ້ນໃນຫລັກຖານ ແລະ ຂໍ້ມູນທີ່ເຮົາໄດ້ມາບວກໃສ່ກັບປະສົບການ ແລະຄວາມມຸ່ງມານະຂອງເຮົາເອງ. ຫາກເຮົາໄດ້ຕາມຄາດໝາຍດັ່ງວ່ານີ້ ກໍສາມາດພິມອອກ ເຜີຍແຜ່ໂລດ, ບໍ່ຕ້ອງຫວັ່ນໄຫວຕໍ່ສຽງຕຳໜິວິຈານ ເພາະວ່ານັກປາດໃນໂລກນີ້ ບໍ່ມີໃຜດອກທີ່ຈະສາມາດເຮັດໄດ້ດີຢ່າງບໍ່ມີບ່ອນຕິ. ເພິ່ນຍັງເຄີຍເວົ້າວ່າ ສິ່ງທີ່ເພິ່ນຂຽນອອກມານັ້ນມັນກໍມີທັງອັນຖືກ ແລະ ກໍອາດຈະມີບ່ອນທີ່ຍັງບໍ່ຖືກຕ້ອງເໝາະສົມ. ອັນນັ້ນ ແມ່ນຍົກໃຫ້ເປັນພາລະຂອງຜູ້ຄົ້ນຄວ້າພາຍລູນໄດ້ເລືອກເຟັ້ນນຳໃຊ້ສິ່ງທີ່ຖືກ ແລະ ດັດແປງສິ່ງທີ່ຍັງບໍ່ຖືກ " ສ່ວນຕົວຂ້າພະເຈົ້າເຫັນວ່າ ທັດສະນະອັນນີ້ແມ່ນທັດສະນະຂອງນັກປາດທີ່ແທ້ຈິງ.

ສະນັ້ນ, ຍາມໃດຂ້າພະເຈົ້າກໍຖືເອົາອຸດົມການ ແລະ ຄວາມເຫັນຂອງອາຈານມາເປັນແວ່ນແຍງ ແລະ ໃຫ້ກຳລັງໃຈແກ່ໂຕເອງໃນເວລາທີ່ຕົນເອງໄດ້ເຮັດວຽກທາງດ້ານນີ້ ເພິ່ນເປັນນັກຄົ້ນຄວ້າ ທີ່ບໍ່ເວົ້າລ້າ ເພິ່ນປະຕິບັດໄດ້ຫລາຍອັນ. ເພິ່ນມີຄອບຄົວໃຫຍ່ ແຕ່ສາມາດອົບຮົມບົ່ມເພາະ ລູກເຕົ້າໃຫ້ເດີນຕາມເສັ້ນທາງຂອງເພິ່ນໄດ້ຫລາຍຄົນ ແລະ ຍັງເປັນແວ່ນແຍງໃຫ້ລູກສິດທັງຫລາຍ.

ເວົ້າເຖິງດ້ານວິຊາຄວາມຮູ້ຂອງເພິ່ນ ເພິ່ນຮຽນຈົບປະໂຍກ 5 ແຕ່ລະດັບການຄົ້ນຄວ້າຂອງເພິ່ນສູງຫລາຍຫາຄົນທຽມຍາກ

ເວົ້າເຖິງຂະບວນວິວັດຕົວອອກສອນລາວ ສະເໜີໃນທັດສະນະຂອງອາຈານມະຫາສີລາ ທີ່ຂຽນໄວ້ ແລະ ຂ້າພະເຈົ້າໄດ້ຮ່ຳຮຽນ.

ຕົວອັກສອນລາວ ທີ່ໃຊ້ກັນດຽວນີ້ ຍັງບໍ່ທັນສາມາດ ບອກໄດ້ວ່າ ໃຜເປັນຜູ້ແຕ່ງ ໃຜເປັນຜູ້ປະດິດ ແຕ່ວ່ານັກປາດທາງດ້ານອັກສອນສາດ ພາສາສາດ ຄົນລາວ ຫລື ຕ່າງ

ຊາດ ຕ່າງໃຫ້ຄວາມເຫັນໄປຕ່າງໆນາໆ ຕາມທັດສະນະຂອງໃຜລາວ ແຕ່ພໍສະຫລຸບ ໄດ້ ເປັນສອງອັນ

1. ບາງນັກປາດບອກວ່າ ຕົວໜັງສືລາວນີ້ ມາຈາກໜັງສືຂອງພໍ່ຂຸນລາມຄຳແຫງ
2. ວ່າໂຕໜັງສືລາວອາດຈະມີກ່ອນແລ້ວ ແຕ່ພໍ່ຂຸນລາມຄຳແຫງ ອາດຈະເອົາໂຕ ໜັງສືທີ່ມີກ່ອນ ມາດັດແປງໃຫ້ເປັນໜັງສື ໄທ ໃນປັດຈຸບັນນີ້.

ໃນທັດສະນະຂອງອາຈານມະຫາສີລາ ເພິ່ນກໍເຫັນດີກັບແງ່ທີ 2 ເຊິ່ງເພິ່ນ ກໍ່ໄດ້ ອ້າງຫລັກຖານກ່ຽວກັບປະຫວັດສາດຂອງລາວ ຕັ້ງແຕ່ອານາຈັກໜອງແສ ໜັງສືມີໃຊ້ແລ້ວ ເຊັ່ນໃນສະໄໝ ຄ.ສ.147 ປີ ຈົດໝາຍເຫດຂອງຈີນໄດ້ກ່າວວ່າ ເວລານັ້ນ ເຈົ້າຂອງ ສະເດັດອອກວ່າລາດຊະການ ໄດ້ຫັນໜ້າໄປທາງທິດຕາເວັນອອກ ເວລາຂ້າລາຊະການ ເຂົ້າເຝົ້າທູນ ກໍ່ໃຫ້ຂຽນໜັງສືບອກແໜນແລ້ວ ສະແດງວ່າໜັງສືມີແລ້ວ ແຕ່ ຄ.ສ. 147 ປີ ນີ້ແມ່ນທັດສະນະປັ້ງຢືນວ່າ ໜັງສືມີແລ້ວກ່ອນພໍ່ຂຸນລາມຄຳແຫງ

ອັນທີສອງ ໂຕໜັງສືລາວມາຈາກໃສແດ່ ບໍ່ທັນມີໃຜຮູ້ໄດ້ ຍັງບໍ່ມີນັກປາດຄົນໃດຄົ້ນ ຄວ້າ ນອກຈາກທີ່ຈຸງມະຫາສີລາ ຄົ້ນຄວ້າໄວ້ ວ່າໂຕໜັງສືລາວມາຈາກສອງສາຍ. ຕົວ ໜັງສືລາວ ທີ່ຄົນລາວໃຊ້ຢ່າງກວ້າງຂວາງນີ້ ມີທັງໂຕລາວ ແລະ ໂຕທຳ ແຕ່ປະຈຸບັນ ມີ ອັກສອນຊົນເຜົ່າຕ່າງໆຫລາຍ ແຕ່ຂໍເວົ້າແຕ່ອັນທີ່ໃຊ້ຢ່າງກວ້າງຂວາງ ອັນນີ້ນັກປາດ ຄົນ ອື່ນໆ ທີ່ເອົາໄປສິດໄປສອນ ແມ່ນເອົາຈາກຈຸງມະຫາສີລານີ້ຂຽນໄວ້ ໂຕໜັງສືລາວ ມາ ຈາກສອງແບບ ແບບໂຕລ່ຽມ ແລະ ແບບໂຕມົນ. ແບບໂຕລ່ຽມແມ່ນໄດ້ຈາກຕົວອັກ ສອນ ເທວະນາຄີ ທີ່ໃຊ້ຂຽນພາສາສັນສະກິດ ເຂົ້າສູ່ທາງສາຍເໜືອ ເປັນໂຕໜັງສືທີ່ບັນທຶກຄຳ ສອນ ໂຕໜັງສືນີ້ອາດຈະວິວັດເປັນໜັງສືລາວ ໄທດຳ ອັນທີສອງມາຈາກທາງອິນເດຍ - ສາຍໃຕ້ ຕິດພັນກັບພາສາພະໄຕປີດົກ ຂອງພຸດທະສາດສະໜາຝ່າຍຫີນະຍານ ມີລັກສະນະ ເປັນໂຕມົນ ແຜ່ເຂົ້າມາທາງລັງກາ ພະມ້າ ມອນ ທາງຊຽງໃໝ່ ລານນາ ຕໍ່ມາ ຮອດ ລ້ານຊ້າງ ກາຍມາເປັນໜັງສືໄທລື້ ໄທໃຫຍ່ ເປັນໜັງສືທຳ ເປັນໜັງສືທີ່ພະເຈົ້າ ອະ ໂສກ ໄດ້ນຳໃຊ້ເຂົ້າໃນການເຜີຍແຜ່ພຸດທະສາສະໜາ. ອັນນີ້ເປັນທັດສະນະ ສັນນິຖານ

ກ່ຽວກັບໂຕໜັງສື ທີ່ໃຊ້ຢູ່ໃນລາວເຮົານີ້ ເພິ່ນໃຫ້ຫລັກຖານວ່າ ເປັນຫຍັງໜັງສືລາວ ຈຶ່ງມີເຄົ້າມາຈາກໂຕລ່ຽມ ລັກສະນະໂຕສັນສະກິດ ລຸງມະຫາສີລາ ເພິ່ນໄດ້ໃຫ້ຫລັກຖານ ວ່າ ອັນທີ 1 ໃນສະໄໝຂຸນຫລວງລິເມົາປົກຄອງ ອານາຈັກໜອງແສ ເພິ່ນໄດ້ຮັບເອົາພຸດທະສາສະໜາ ຝ່າຍມະຫາຍານເຂົ້າມາພ້ອມທັງມີພະໄຕປິດົກມາໂດຍຜ່ານເມືອງ ຈີນ ອັນທີສອງ ໃນຈົດໝາຍເຫດຂອງຈີນໄດ້ເວົ້າເຖິງວ່າ ໂຕໜັງສືລາວໄດ້ໃຊ້ແລ້ວ ອັນທີ ສາມ ເພິ່ນຢັ້ງຢືນວ່າ ໂຕໜັງສືລາວຫລາຍໂຕມີລັກສະນະຄ້າຍໆໂຕສັນສະກິດບູຮານ ອັນທີ 4 ວາດຂຽນຂອງໜັງສືລາວບູຮານ ຄື ວິລາມມະຂອງສັນສະກິດຫລາຍ ເຊັ່ນ ໂຕ ດ ເຟື້ອງ ໂຕ ຍ ເຟື້ອງ. ອັນສຸດທ້າຍ ວິທີຂຽນໜັງສືລາວມີອັນຄ້າຍຄືສັນສະກິດ ເຊິ່ງໃຊ້ສະລະ ຢູ່ທາງໜ້າກໍ່ມີ ທາງຫລັງກໍ່ມີ ທາງເທິງກໍ່ມີ ທາງລຸ່ມກໍ່ມີ ນອກຈາກນີ້ ຍັງມີສີລາເລກຫລາຍບ່ອນທີ່ໃຊ້ໂຕໜັງສື ແບບສັນສະກິດນີ້ເປັນຫລັກຖານອັນໜຶ່ງວ່າໜັງສືລາວເປັນມາແນວໃດ

ອັນໜຶ່ງອີກ ໂຕອັກສອນ ຊຶມ. ຫລື ໂຕມົນ ທີ່ເຮົາໃຊ້ເປັນໂຕທຳ ມາສາຍ ອິນເດຍ ສາຍໃຕ້ ໂຕໜັງສືນີ້ ແມ່ນມາພ້ອມກັບການມາເຜີຍແຜ່ສາສະໜາຂອງພະສອງຮູບທີ່ມາເຜີຍແຜ່ພຸດທະສາສະໜາ ໃນສຸວັນນະພູມ ໄດ້ເອົາໂຕໜັງສືນີ້ມາດັດແປງເປັນ ໜັງສືຊາດຕ່າງໆ ເຊັ່ນ ມອນ ແລະ ຕໍ່ມາ ໄດ້ດັດແປງເປັນໜັງສືພະມ້າ ແລະ ຈາກ ໜັງສືມອນ ຂະແມ ໄດ້ກາຍມາເປັນໜັງສື ໄທລື້ ໜັງສືຊຽງໃໝ່ ລານນາ ນີ້ແມ່ນປະຫວັດຄວາມເປັນມາຂອງໂຕທຳ ແຕ່ແນ່ນອນໃນແຕ່ລະບ່ອນກໍ່ມີວິທີຂຽນຕ່າງກັນໄປ.

ຮ່ອງຮອຍທີ່ວ່າໂຕອັກສອນສອງຢ່າງເຂົ້າມາລາວ ຕາມທັດສະນະຂອງນີ້ລາງ ອາຈານ ມະຫາສີລາ ທີ່ໄດ້ຄົ້ນຄວ້າໄວ້ໃຫ້ພວກເຮົາສຶກສາ ເວົ້າລວມແລ້ວ ໜັງສື ທັງສອງແບບ ເຖິງວ່າຈະມີການວິວັດມາຄົນລະສາຍ ແຕ່ກໍ່ມີເຄົ້າມາຈາກອັນດຽວ ສະນັ້ນພວກເຮົາຈຶ່ງມີໂຕອັກສອນໃຊ້ໃນລາວສອງແບບ.

ເຮົາມາເວົ້າເຖິງການຟື້ນຟູ ອັກສອນລາວ ໄວຍະກອນລາວ ຫລືວ່າ ວັນນະຄະດີ-ລາວ ທີ່ພົວພັນເຖິງອາຈານມະຫາສີລາ ຕາມທີ່ເຮົາຮູ້ ກ່ອນ 1928-29-30 ຖືວ່າ ອັກສອນສາດຂອງຊາດ ຫລື ວັນນະຄະດີຂອງລາວຍັງຕົກຢູ່ໃນເງົາມືດ ຄົນຮຽນພາສາລາວ ມີໜ້ອຍ.

ສະໄໝ 1929 ແມ່ນຈຽມມະຫາສີລາ ເປັນຜູ້ທຳອິດທີ່ຟື້ນຟູບຸກເບີກ ອັກສອນ ສາດ ພາສາສາດຂອງຊາດ

ຜົນງານທີ່ເພິ່ນບຸກເບີກມີຫລາຍໆອັນ ເລີ່ມແຕ່ຕຳລາຮຽນພາສາບາລີເປັນຕົ້ນມາ ມີຫລາຍໆອັນ ເຊິ່ງເວລານັ້ນ ເພິ່ນກໍ່ເຄີຍເວົ້າສູ່ຟັງ ການຂຽນໜັງສື ກ່ອນຈະເຮັດ ໄວຍະກອນ ອັນທີໜຶ່ງ ເອົາໂຕ ຣ ເຂົ້າມາ ອັນທີສອງ ເອົາວັນນະຍຸດເຂົ້າມາໃຊ້ ແຕ່ເກົ່າໜັງສືລາວບໍ່ມີວັນນະຍຸດ ຕ້ອງໄດ້ຟອງເອົາເອງ. ເລີ່ມແຕ່ຕັ້ງສະພາບັນດິດ ຈຶ່ງໄດ້ ນຳເອົາວັນນະຍຸດມາໃຊ້ ມີເຈົ້າເພັດຊະລາດເປັນຫົວໜ້າ ແລະ ໃນນັ້ນກໍ່ມີອາຈານມະຫາ ສີລາ ຮ່ວມຢູ່ນຳ ປະຊຸມການໃຊ້ອັກສອນລາວ ມີຄວາມຄິດເປັນ 3 ແງ່ ແງ່ທີ 1 ໃຫ້ໃຊ້ພາສາລາວຕາມສຽງລ້ວນໆ ທັດສະນະທີສອງ ໃຫ້ໃຊ້ຕາມສຽງ ແຕ່ສຽງຕາມຫລັກການເພາະຖ້າຕາມສຽງລ້ວນໆ ບໍ່ມີຫລັກການຈະເສຍຄວາມໝາຍຂອງພາສາ ຕົວຢ່າງ ຈິນລະປະທານ ຖ້າຂຽນຕາມຫລັກການ ມີແຕ່ ຕົວ ລ ໂຕ ຊ ໂຕ ລ ບໍ່ໃສ່ສະລະ ອະ ຖ້າໃສ່ ໂຕ ນ ເຂົ້າໄປ ມັນຂາດຫລັກການ. ອີກໂຕໜຶ່ງ ພວກນັກບວດ ແລະ ມີລາງອາຈານມະຫາສີລາ ສະເໜີວ່າ ຫລາຍປະເທດ ໂດຍສະເພາະປະເທດທີ່ໃກ້ຄຽງພວກເຮົາ ທີ່ໄດ້ຮັບອິດທິພົນທາງດ້ານພາສາສາດ ອັກສອນສາດ ວັດທະນະທຳ ຈາກບ່ອນດຽວກັນ ເຂົາເຈົ້າກໍ່ໄດ້ໃຊ້ການຂຽນຕາມເຄົ້າຕົວຢ່າງ ຂະເໝນ ແລະ ໄທ ເພາະວ່າຄຳ ແຕ່ລະຄຳໜ່ວຍສຽງແຕ່ລະໜ່ວຍ ຂຽນອອກມາມີຄວາມໝາຍ ຖ້າບໍ່ໃຊ້ຕາມເຄົ້າຄວາມໝາຍ ກໍ່ຂາດໄປ. ຍ້ອນພາສາລາວຂອງເຮົາມີມາຈາກຫລາຍອັນ ນອກຈາກຄຳລາວເດີມແລ້ວ ຍັງມີຄຳທີ່ມາຈາກພາສາບາລີ ຫລື ສັນສະກິດ ສະນັ້ນ ລັກສະນະ ແລະ ຕະກູນຂອງ ພາສາລາວ ແລະ ສັນສະກິດ ແມ່ນຕ່າງກັນ ດັ່ງນັ້ນ ສິ່ງທີ່ເອົາມາຈາກ ໃຫ້ຂຽນຕາມເຄົ້າ ອັນນີ້ແມ່ນທັດສະນະໜຶ່ງ.

ຍັງມີອີກທັດສະນະໜຶ່ງ ບອກວ່າ ມັນຍາກ ຄວາມລາວບໍ່ເອົາ ໃຊ້ ໂຕລາແຫງຂຽນ ເປັນຄວາມລາວສາ ແຕ່ບໍ່ມີຜູ້ໃດເຫັນດີ ແມ່ນແຕ່ນັກປາດຝະລັ່ງກໍ່ຍັງບໍ່ເຫັນດີ ຈຶ່ງໄດ້ໃຊ້ໂຕລາວຄືເກົ່າ

ຕໍ່ມາຍ້ອນມີການຕໍ່ສູ້ກູ້ຊາດ ໃນລາວຈຶ່ງມີການວິວັດພາສາສອງອັນ, ມີນັກຕໍ່ສູ້ກູ້ຊາດ

ກໍໄດ້ນຳເອົາທັດສະນະທາງດ້ານພາສາອັນໜຶ່ງໄປໃຊ້ຂຽນຕາມສຽງ ພວກຢູ່ວຽງຈັນ ກໍໄດ້ນຳເອົາຄວາມຄິດຂຽນຕາມເຄົ້າໃຊ້ ມາຮອດດຽວນີ້ ການຂຽນຕາມເຄົ້າຕົກໄປ ເຖິງແນວໃດທັດສະນະຂອງອາຈານມະຫາສິລາ ແມ່ນນັກຂຽນຕາມເຄົ້າ ເຊິ່ງກໍມີເຫດຜົນດີ. ຮູ້ນີ້ແມ່ນຂະບວນວິວັດຂອງພາສາລາວ ເຊິ່ງກໍຍັງມີບັນຫາ ເຊັ່ນ ອ່ານໃນໜັງສືພິມ ພັດມີ ໄຕ ຣ ແຕ່ໃນແບບຮຽນພັດບໍ່ມີ ໄຕ ຣ ເຊິ່ງກໍເປັນບັນຫາໜຶ່ງ ທີ່ພວກເຮົາຈະໄດ້ຄົ້ນຄວ້າ ໃນຂັ້ນຕໍ່ໄປ.

ວັດຈະນານຸກົມ ໄວຍາກອນລາວ ຂອງ ມະຫາ ສິລາ ວີຣະວົງ

● ທອງເພັດ ກິ່ງສະດາ
ນັກຄົ້ນຄວ້າ ພາສາສາດ, Ph.D. ຮາໂນ້ຍ
ຄະນະກຳມະການ ວິທະຍາສາດ ສັງຄົມ

ຂ້າພະເຈົ້າຂໍເວົ້າເລື່ອງ ການພົວພັນຄັ້ງທຳອິດ ກັບທ່ານ ມະຫາສິລາ ວີລະວົງ ເຖິງບໍ່ໄດ້ພົວພັນໜ້າຕໍ່ໜ້າ ເພາະຕອນນັ້ນ ຂ້າພະເຈົ້າເປັນນັກສຶກສາ ມະຫາວິທະຍາໄລ ເກືອບປີສຸດທ້າຍແລ້ວ ແລະ ມີຂໍ້ຂ້ອງໃຈອັນໜຶ່ງ ກ່ຽວກັບອັກສອນລາວ ແລະ ໄດ້ຂຽນຈົດໝາຍຫາ ທ່ານ ມະຫາສິລາ ເພິ່ນເອງກໍໄດ້ອະທິບາຍໃຫ້ ຈາກນັ້ນມາ ຂ້າພະເຈົ້າ ຈຶ່ງຄົ້ນຄວ້າຕື່ມອີກ.

ຫຼັງຈາກຈົບມະຫາວິທະຍາໄລແລ້ວ ຂ້າພະເຈົ້າໄດ້ມາເຮັດວຽກ ຢູ່ນຳ ອາຈານ ທອງຄຳ ອອນມະນີສອນ ໂຊກດີທີ່ມີ ທ່ານ ມະຫາສິລາ ເປັນທີ່ປຶກສາ. ກ່ຽວກັບຜົນງານເອກຂອງເພິ່ນ ເຮົາເຫັນວ່າ ແມ່ນ ວັດຈະນານຸກົມ ແລະ ປະຫວັດໂຕໜັງສືລາວ. ໂດຍສະເພາະ ວັດຈະນານຸກົມ ຕອນຢູ່ຕ່າງປະເທດ ເຮົາໄດ້ເຮັດສະຖິຕິ ເຫັນວ່າຢູ່ໃນ ວັດຈະນານຸກົມນັ້ນມີຈັກຄຳ ເຊິ່ງໃນນັ້ນ ເພິ່ນກໍໄດ້ບອກແຈ້ງວ່າ ຄຳລາວເດີມ ມີອັນໃດແດ່ ຄຳທີ່

ດັດແປງຈາກພາສາປາລີ ມີອັນໃດແດ່ ... ໜັງສືນີ້ຖືວ່າ ເປັນວັດຈະນານຸກົມສະບັບແຣກຂອງລາວ ແລະ ຕໍ່ມາກໍ່ບໍ່ທັນເຫັນຢູ່ໃດເຮັດຕື່ມອີກ.

ສ່ວນປະຫວັດຕົວອັກສອນລາວ ເພິ່ນໄດ້ບອກໃຫ້ຮູ້ວ່າ ລາວໃຊ້ໂຕໜັງສືສອງໂຕ, ອັນໜຶ່ງ ໄດ້ມາຈາກສັນສະກິດ ແລ້ວໂຕທີສອງແມ່ນໂຕທຳ ເລີ່ມສະໄໝ ພະເຈົ້າໂພທິສະລາດ.

ເພິ່ນຍັງສັນນິຖານວ່າ ໜັງສືໂຕລາວນີ້ ມີແຕ່ອານາຈັກໜອງແສ ອັນນີ້ ກໍ່ເປັນອັນໜຶ່ງທີ່ເຮັດໃຫ້ນັກຄົ້ນຄວ້າພວກເຮົາມີບ່ອນອ້າງອີງ ແລະ ສືບຕໍ່ຄົ້ນຄວ້າຕື່ມອີກ.

ເວົ້າເລື່ອງ ອັກຂະລະວິທີຂອງເພິ່ນ ກໍ່ເປັນໜ້າສົນໃຈ ແມ່ນວ່າສາຍຕາ ໃນຍຸກໃໝ່ເບິ່ງ ກໍ່ຍັງເຫັນວ່າມີຄຸນຄ່າຫຼາຍຢູ່ ເຊັ່ນ ຄຳນິຍາມ ກ່ຽວກັບພະຍາງ.

<u>ພະຍາງ</u> ແມ່ນສ່ວນແຫ່ງຄຳເວົ້າ ນັ້ນມີການພົວພັນກັບສຽງວັນນະຍຸດ ມາຮອດດຽວນີ້ ນັກຄົ້ນຄວ້າຍັງອີງໃສ່ຢູ່.

ຢູ່ໃນປຶ້ມອັກຂະລະວິທີ ຫົວທຳອິດ ປີ 1935 ເພິ່ນກໍ່ພະຍາຍາມດັດແປງພາສາບາລີໃຫ້ຫຼາຍ ເຈດຕະນາງານຂອງເພິ່ນ ແມ່ນເພື່ອ ຢາກບັນທຶກ ຄຳພະພຸດທະສາສະໜາ ທີ່ໄດ້ມາຈາກພາສາບາລີໃຫ້ໄດ້ ບັນທຶກພາສາລາວຫົວໄປກໍ່ໃຫ້ໄດ້.

ດັ່ງນັ້ນ ຫົວທຳອິດ ພະຍັນຊະນະ ມີ 41 ໂຕ ແລະ ສະລະມີ 28 ໂຕ ມາຮອດຫົວທີສອງ 1963 ເພິ່ນໄດ້ມີການດັດແປງໃໝ່ ມີພະຍັນຊະນະ 27 ໂຕ ສະລະມີ 28 ໂຕ ສ່ວນຫຼາຍເພິ່ນອີງໃສ່ມູນເຊື້ອພາສາບາລີ ສັນສະກິດ ຈຶ່ງຈັດ ກ ຂ ຄ ...

ເລື່ອງວັນນະຍຸດ ກໍ່ຄືກັນ ນີ້ລາງອາຈານ ມະຫາສິລາ ເພິ່ນບໍ່ໄດ້ເວົ້າເດັດຂາດວ່າ ພາສາລາວມີເທົ່ານັ້ນ ເທົ່ານີ້ ສຽງວັນນະຍຸດ ຄວາມຈິງ ພາສາລາວມີໜ່ວຍສຽງ ວັນນະຍຸດແຕ່ດົນແລ້ວ ແຕ່ຮູບສຽງຫາກໍ່ຜະລິດຂຶ້ນໃໝ່ ອັນນີ້ເພິ່ນມີຄວາມສະຫຼາດ ບໍ່ກຳນົດ ວ່າມີເທົ່ານັ້ນ ເທົ່ານີ້ສຽງ ເພາະເພິ່ນຮູ້ວ່າ ລາວເຮົາແຕ່ລະຖິ່ນ ສຽງວັນນະຍຸດບໍ່ຄືກັນ ສຳຄັນວັນນະຍຸດ ກັບສຽງເພິ່ນສົມທຽບໂລດ ບໍ່ເວົ້າມີ 5 ສຽງ 6 ສຽງ ມີແຕ່ເວົ້າ ກ່າກັບຂ່າ ສຽງສ່ຳກັນ, ຄ້າກັບຂ້າ ສຽງສ່ຳກັນ ... ລະບົບວັນນະຍຸດນີ້ ເຮົາສາມາດສັງລວມໄດ້ດັ່ງນີ້ ດັ່ງທີ່ຮູ້ນຳກັນ ພາສາລາວເປັນຄຳໂດດ ບໍ່ປ່ຽນຮູບ ແຕ່ລະພະຍາງຍ່ອມມີ ວັນນະຍຸດ

ກໍາກັບນັບທັງຄໍາທີ່ໄດ້ມາຈາກຕ່າງປະເທດ ເຊັ່ນ ຄໍາປືນຈາກພາສາບາລີ ສັນສະກິດ ຝະລັ່ງ ຫຼື ພາສາເອີລົບອື່ນ ໆ ເມື່ອກັບກາຍເປັນພາສາລາວແລ້ວ ກໍ່ຍ່ອມກົດສຽງໄປຕາມລະບົບໜ່ວຍສຽງວັນນະຍຸດຂອງພາສາລາວ.

ເທົ່າທີ່ຜ່ານມາ ນັກພາສາສາດຫຼາຍທ່ານ ໄດ້ຄົ້ນຄວ້າວິໄຈ ແລະ ໃຫ້ຄວາມເຫັນຕ່າງກັນ ກ່ຽວກັບສໍານຽງສຽງວັນນະຍຸດຂອງລາວ ບາງທ່ານວ່າມີ 5 ສຽງ ບາງທ່ານບອກວ່າມີ 6 ສຽງ ບາງທ່ານບອກວ່າ 7 ຫຼື 8 ສຽງ ຄວາມຈິງແລ້ວ ຈໍານວນ ໜ່ວຍສຽງວັນນະຍຸດຂອງພາສາລາວ ແຕ່ລະທ້ອງຖິ່ນບໍ່ຄືກັນ ບາງທ້ອງຖິ່ນມີ 5 ສຽງ ເຊັ່ນ : ເມືອງຫຼວງພະບາງ ລາວເໜືອ ວຽງຈັນ ອັດຕະປື ປາກເຊ ໄທແດງ ລາວຄັ່ງ ບາງທ້ອງຖິ່ນມີ 6 ສຽງ ເຊັ່ນ : ນ້ຳບາກ ທຸລະຄົມ ນະຄອນພະນົມ ໄທວາດ ຊໍາເໜືອ ເມືອງແອນ ເມືອງປ້ອງ ເມືອງແສນ ຊຽງຂວາງ ລື້ ໄທປົ້ງ ລາວໂຊ່ງ ລາວວຽງ ແລະ ລາວໄຕ້.

ທ່ານຟານດິກເຢືອງ ເມື່ອວິໄຈສຽງວັນນະຍຸດພາສາລາວ ໄດ້ສະຫຼຸບວ່າ ມີ 5 ສຽງ ກໍ່ເນື່ອງຈາກວ່າ ເພິ່ນອີງໃສ່ນັກສຶກສາລາວຄົນວຽງຈັນ ທີ່ພວມຮຽນຢູ່ ສະຫະພາບໂຊວຽດ ໃນຍາມນັ້ນ ເປັນແຫຼ່ງຂໍ້ມູນໃຫ້ແກ່ເຄື່ອງວັດແທກສຽງວັນນະຍຸດ.

ຍາມພົບສຽງ ຄົນລາວບາງທ້ອງຖິ່ນ (ຕົວຢ່າງວຽງຈັນ) ຈໍາແນກບໍ່ໄດ້ ລະຫວ່າງສຽງວັນນະຍຸດທີ 3 (ວ.3) ເຊັ່ນວ່າ : ຂ່າ (ຕົວຂ່າ) ກັບສຽງວັນນະຍຸດທີ 4 (ວ.4) ເຊັ່ນວ່າ : ຄ່າ (ຂອງມີຄ່າ). ທ່ານຟານດິກເຢືອງຈິ່ງຄວບເອົາວັນນະຍຸດສອງສຽງນີ້ເຂົ້າກັນ ເປັນໜ່ວຍສຽງອັນດຽວ ແລ້ວກໍ່ບອກວ່າ ພາສາລາວມີ ວັນນະຍຸດທັງໝົດ 5 ສຽງ.

ເທົ່າທີ່ຜ່ານມາ ບໍ່ມີເອກະສານໃດອະທິບາຍຢ່າງແຈ່ມແຈ້ງ ກ່ຽວກັບລະບົບສຽງວັນນະຍຸດ 6 ສຽງ ຂອງພາສາລາວ ວ່າລະດັບສຽງແຕ່ລະຮູບວັນນະຍຸດນັ້ນເປັນຢ່າງໃດ.

ທ່ານມະຫາ ສິລາ ເພິ່ນເຄີຍເວົ້າໄວ້ວ່າ ພະຍາງມັນມີຄວາມສໍາພັນ ກັບວັນນະຍຸດມາຮອດດຽວນີ້ ເຮົາຢາກຄົ້ນຄວ້າລະອຽດ ກ່ຽວກັບວັນນະຍຸດໄດ້ ກໍ່ຕ້ອງຄົ້ນຄວ້າເລື່ອງຈັດປະເພດຂອງພະຍາງ ສະນັ້ນຈິ່ງວ່າ ລັກສະນະຂອງພະຍາງມັນມີຄວາມສໍາພັນໃກ້ຊິດ ກັບ

ການແບ່ງວັນນະຍຸດໃນພາສາຕ່າງໆ ສັງເກດເຫັນວ່າ ແນວຄິດຂອງ ມະຫາສີລາ ວີລະວົງ ເພິ່ນກໍບໍ່ໄດ້ເວົ້າເດັດຂາດໂລດວ່າ ມີ 5 ຫຼື 6 ໜ່ວຍສຽງ ເພາະເພິ່ນຮູ້ວ່າ ມີຫຼາຍທ້ອງຖິ່ນມີສຽງບໍ່ຄືກັນ.

ອີກບັນຫາໜຶ່ງທີ່ວາງຢູ່ໃນປຶ້ມອັກຂະລະວິທີຂອງ ມະຫາສີລາ ເຊື່ອແນ່ວ່າ ນັກວິໄຈຣຸ່ນນີ້ຈະເຫັນວ່າ ຄຳເວົ້າຂອງເພິ່ນມີຄ່າທີ່ສຸດ ເຮົາເຫັນວ່າອັນຖືກຕ້ອງ ແລະ ສັດຈະທັດທີ່ສຸດ ເພິ່ນເວົ້າກ່ຽວກັບຕົວໜັງສື ; ຕົວໜັງສືນັ້ນຍ່ອມໄປຕາມສຽງໄດ້ທຸກຄຳ ແລະ ຈະຂຽນໄປເທົ່າໃດຕົວໜັງສືນັ້ນກໍ່ບໍ່ໝົດ ຕົວຢ່າງ ໜັງສືລາວ ຂຽນພາສາລາວໄດ້ ທຸກຄຳ ໜັງສືຝະລັ່ງ ກໍຂຽນໄປຕາມພາສາຝະລັ່ງ ແຕ່ຈະເອົາໂຕໜັງສືຊາດໜຶ່ງຂຽນຕາມພາສາໜຶ່ງນັ້ນບໍ່ໄດ້ສະດວກ ຕົວອັກສອນລາວ ໃຊ້ຂຽນຈຳເພາະແຕ່ພາສາລາວເທົ່ານັ້ນຈຶ່ງໄດ້ດີ.

<u>ເວົ້າເລື່ອງບັນຫາໂຕ ຣ</u>. ສຳລັບອາຈານ ມະຫາສີລາ ເວົ້າເລື່ອງໂຕ ຣ ຈັ່ງຊີ້: ເຖິງວ່າຮູບສຽງພາສາບາລີຈະມີພະຍັນຊະນະຫຼາຍປານໃດກໍຕາມ ແຕ່ບໍ່ສາມາດຈະບັນທຶກຮູບສຽງພາສາລາວໄດ້ໝົດ ເຮົາໃຊ້ໄດ້ແຕ່ 20 ຮູບ ທີ່ດັດແປງຈາກພາສາບາລີຂຶ້ນທຳອິດ ຕໍ່ມາດັດແປງຕື່ມອີກ, ບັນຫາໂຕ ຣ ເພິ່ນເວົ້າວ່າ ກ່ອນປີ 1948 ໂຕ ຣ ລາວບໍ່ມີ ຕໍ່ມາປີ ຄ.ສ. 1948 ຄະນະກຳມະການອັກສອນສາດລາວ ທີ່ຕັ້ງຂຶ້ນໃນວຽງຈັນ ຈຶ່ງເຫັນດີຕົກລົງຮັບເອົາໂຕ ຣ ຈາກພາສາບາລີເຂົ້າອີກ ພະຍັນຊະນະລາວທັງໝົດຈຶ່ງມີ 27 ຕົວ.

ສຳລັບເຮົາມີຄວາມເຫັນແນວນີ້ ເຮົາຈະໃຊ້ໂຕ ຣ ຫຼືບໍ່ໃຊ້ນັ້ນ ມັນບໍ່ຂຶ້ນກັບ ຄວາມມັກ ຫຼື ບໍ່ມັກ ເລື່ອງພາສາແມ່ນເລື່ອງພາວະວິໄສ ເຮົາບໍ່ສາມາດປະດິດສຽງຕື່ມ ເຮົາມີສິດແຕ່ປະດິດໂຕອັກສອນຕື່ມ ໃຫ້ແທດເໝາະກັບສຽງພາສາເທົ່ານັ້ນ. ເຮົາຕ້ອງ ຄົ້ນຕື່ມວ່າ ໜ່ວຍສຽງພາສາລາວ ມີໂຕ ຣ ຫຼື ບໍ່ ?

ບັນຫາມີຢູ່ວ່າ ໃນພາສາລາວກ່ອນໄດ້ຮັບອິດທິພົນຈາກພາສາປາລີ ສັນສະກິດ ນັ້ນເຄີຍມີສຽງຕົວ ຣ ກ່ອນແລ້ວຫຼືບໍ່ ? ເຮົາຕ້ອງສົມທຽບພາສາລາວ ກັບພາສາອື່ນ ໆ ໃນຕະກູນດຽວ, ເຮົາຈະເຫັນໄດ້ ດັ່ງນີ້.

<u>ຮາກໄມ້</u> :

ຮາກ (ພາສາ ອາຫົມ, ໄທ (ສະຫຍາມ), ໂທ້)
ຮາ (ພາສາດ້ອຍ)
ຮາກ (ພາສາລາວ, ຊານ)
ຮາ (ໄທຂາວ, ໄທດຳ)
ລາກ (ພາສາໄທໜຸງ)

<u>ຮງມິກ</u> :

ຮັງ (ພາສາອາຫົມ, ໄທສະຫຍາມ, ໂທ້, ດ້ອຍ)
ຮັ້ງ (ພາສາລາວ, ຊານ, ໄທຂາວ, ໄທດຳ)
ລັງ (ພາສາໄທໜຸງ)

<u>ຮີ (ຍາວ)</u> :

ຮີ (ພາສາອາຫົມ, ໄທສະຫຍາມ, ໂທ້)
ຮີ (ພາສາລາວ, ຊານ, ໄທຂາວ, ໄທດຳ)
ລີ (ພາສາໄທໜຸງ)

<u>ເຮືອນ</u> :

ເຮືອນ (ພາສາໄທສະຫຍາມ, ໂທ້)
ຮຸນ (ພາສາອາຫົມ)
ຮານ (ພາສາດ້ອຍ)
ເຮີນ (ພາສາຊານ, ໄທຂາວ, ຜູ້ໄທ)
ເຮືອນ (ພາສາລາວ, ໄທດຳ)
ເລືອນ (ພາສາລາວໄທໜຸງ)

ການສົມທຽບຂ້າງເທິງນີ້ ຊີ້ໃຫ້ເຮົາຮູ້ວ່າ ພາສາລາວບໍ່ມີສຽງ ຣ ແຕ່ດົນນານ ມາແລ້ວ, ຕັ້ງແຕ່ບໍ່ທັນໄດ້ຮັບອິດທິພົນຈາກພາສາປາລີ ສັນສະກິດ ເທື່ອພຸ້ນ./.

ສຳນວນ ລີຈະນາ ແລະການຄົ້ນຄ້ວາ ຂອງທ່ານ ມະຫາ ສີລາ ວີຣະວົງ

• ສົມແສງ ເກສາວິລະ

ອາຈານ ວັນນະຄະດີ-ພາສາສາດ ມ.ສ.ຄ.ວຽງຈັນ
ປະລິນຍາໂທ ວັນນະຄະດີ-ພາສາສາດ ມະຫາວິທະຍາໄລ ມົງໂກລີ

ວຽກງານ ລີຈະນາ, ຮຽບຮຽງ, ຄົ້ນຄ້ວາ ຫຼື ຂີດຂຽນບົດ ແລະ ເລື່ອງຕ່າງ ໆ ທີ່ໃຊ້ພົວພັນໃນວົງກວ້າງຂອງສັງຄົມ ໃຫ້ມີຄວາມຈະແຈ້ງ, ນົ້ມນວນ, ລະອຽດໄດ້ນັ້ນ ມັນມີການພົວພັນຢ່າງສະໜິດແໜ້ນກັບຄວາມຮູ້ ກ່ຽວກັບການໃຊ້ພາສາ ເຊິ່ງໄດ້ໃຫ້ຊື່ ເປັນວິຊາຄວາມຮູ້ວ່າ : ສັນທະສາດ (ພາສາອັງກິດ " STYLISTIC ")

ທ່ານ ມະຫາສີລາ ວີລະວົງ ເຊິ່ງເປັນອາຈານໃຫຍ່ ທີ່ຊົງຄວາມຮູ້ ທັງມີຜົນງານການຂີດຂຽນເລື່ອງຕ່າງໆຢ່າງຫຼວງຫລາຍນັ້ນ ກ່າວໄວ້ວ່າ : ສັນທະສາດ ອັນໝາຍເຖິງວິທະຍາການໃຊ້ ສັບ-ພາສາ ແຕ່ງໜັງສືໃຫ້ເປັນບົດເປັນເລື່ອງ ທີ່ມີສິລະປະນັ້ນ ຈຶ່ງເປັນວິຊາສຳຄັນບໍ່ໜ້ອຍເລີຍ. (ຄັດຈາກປຶ້ມ : ວັນນະຄະດີ ເພື່ອການສຶກສາ 1960).
ຕາມທັດສະນະຂອງຂ້າພະເຈົ້າເຫັນວ່າ : ການກ່າວເຖິງຄວາມສຳຄັນຂອງການໃຊ້ພາສາ ໃຫ້ມີວາດນິສົນ, ໃຊ້ພາສາໃຫ້ມີຄຸນຄ່າດ້ານວັດທະນະທຳ, ວິທະຍາສາດ ທ່ານຄົງມີຄວາມປະສົງຫຼາຍຢ່າງ ເຊິ່ງໃນນັ້ນ ກໍ່ຢາກຢ້ຳ ການໃຊ້ ສັບ-ພາສາ ກັບປະເພດບົດ,ຫົວເລື່ອງ ສອງດ້ານນັ້ນໃຫ້ສອດຄ່ອງກັນ, ສຳນວນພາສາກໍ່ຊ່ວຍໃຫ້ເນື້ອໃນ ແລະ ຄຸນຄ່າ ຂອງບົດເດັ່ນຂຶ້ນເຊັ່ນກັນ.

ຂ້າພະເຈົ້າໄດ້ອ່ານ ແລະ ຄົ້ນຄວ້າວາດຂອງສຳນວນພາສາຂອງຫຼາຍທ່ານ ທີ່ໄດ້ຂຽນເປັນເລື່ອງ ເປັນປຶ້ມ ເຊິ່ງໃນນັ້ນ ກໍມີຜົນງານຂອງ ອາຈານມະຫາສິລາ ວີລະວົງ . ຂັ້ນຕົ້ນໄດ້ພົບເຫັນການໃຊ້ຄຳສັບໃນປຶ້ມ ເຊັ່ນ : ພົງສາວະດານລາວ, ທ້າວຮຸ່ງ ທ້າວເຈືອງ, ນາງແຕງອ່ອນ ແລະ ອື່ນ ໆ ເຊິ່ງມີຫຼາຍອັນທີ່ເປັນໜ້າສົມລະເສີນທ່ານ. ພ້ອມນັ້ນກໍເຫັນຄວາມຕັ້ງໃຈຂອງທ່ານ ທີ່ເຮົາຈະແຍກເປັນສ່ວນຕ່າງໆໄດ້ເຊັ່ນ : ຄວາມຕັ້ງໃຈໃນການຈັດວາງວາດສຳນວນພາສາ ກັບບົດເລື່ອງ ໃຫ້ສອດຄ່ອງກັນ, ຕົວຢ່າງວ່າ : ບົດກ່ອນກັບປະຫວັດສາດທີ່ກ່າວເຖິງຄວາມເປັນມາ ແຕ່ບູຮານນະການ ທ່ານກໍວາງສຳນວນພາສາວາດພື້ນເມືອງ ເຊິ່ງມີຄຳສັບລາວເດີມ - ລາວພື້ນບ້ານພື້ນເມືອງ, ສັບພາສາປາລີ - ສັນສະກິດ ທີ່ໄດ້ໃຊ້ພົວພັນທາງວັດທະນະທຳ, ສາດສະໜາ ທີ່ຄົນລາວໄດ້ໃຊ້ ມາດົນນານມາເຖິງປະຈຸບັນຫຼາຍສັບ, ຫຼາຍວາດເວົ້າກໍປ່ຽນແປງໄປແລ້ວ. ອັນທີ່ສອງ ທ່ານມີຄວາມຕັ້ງໃຈໃນການຂຽນໃຫ້ລະອຽດ ເຖິງຖອງ, ເຊັ່ນວ່າ ການຮຽກຊື່ສັດ, ວັນເດືອນປີ, ຊື່ບ້ານ, ຊື່ຄົນ ຕ່າງໆ ເຊິ່ງກ່ອນການລິຈະນາ ທ່ານກໍ່ບໍ່ມີໂອກາດສານຄົບຖ້ວນ ແຕ່ທ່ານກໍພະຍາຍາມຊອກຊື່ສິ່ງເຫຼົ່ານັ້ນມາຂຽນບໍ່ໃຫ້ຂາດວັກ ຂາດຕອນ, ໄລ, ລຽນ ເລື່ອງລາຍຕ່າງໆ ເປັນລຳດັບໄດ້ດີແທ້.

ຜົນງານການຂຽນຂອງທ່ານ ເຫັນໄດ້ວ່າ ສ່ວນຫຼາຍເປັນບົດຄົ້ນຄວ້າ ແລະລິຈະນາ ເຊັ່ນ ຫຼາຍເລື່ອງທີ່ເປັນວັນນະກຳດີເດັ່ນ ແລະ ບາງເລື່ອງ ທີ່ເປັນວັນນະກຳເອກ ຂອງອານາຈັກລ້ານຊ້າງ ອັນເປັນເລື່ອງທີ່ຂຽນແບບຄຳລິລິດ ແລະ ເປັນຄຳກອນຕ່າງໆ ທ່ານກໍ່ຄົ້ນຄວ້າທັງລິຈະນາບົດເດີມຈາກພາສາທີ່ຂຽນເປັນຄຳປາລີ-ສັນສະກິດ ຫຼື ຕົວໜັງສືທຳທັງມວນນັ້ນ ມາໃຫ້ເປັນວາດຂຽນດັ່ງສຳນວນພາສາລາວ, ໃຫ້ຄົນລາວອ່ານ ສາມາດເຂົ້າໃຈໄດ້, ສຳຫຼັບວຽກນີ້ບໍ່ຖືວ່າເປັນວຽກງ່າຍດາຍເລີຍ.

ເມື່ອກ່າວເຖິງບັນຫານີ້ ຂ້າພະເຈົ້າຂໍຍົກບາງຄຳເຫັນຂອງຫຼາຍທ່ານ ທີ່ໄດ້ອ່ານ, ໄດ້ໃຊ້ປຶ້ມທີ່ທ່ານ ມະຫາສິລາ ວີລະວົງ ຄົ້ນຄວ້າ ຫຼື ລິຈະນາ ເຊັ່ນ : ພົງສາວະດານລາວເປັນຕົ້ນ. ທັງນີ້ຍອມວ່າ ປຶ້ມດັ່ງກ່າວໄດ້ພິມໃນທ້າຍຊຸມປີ 1950 ແລະ ໃຊ້ຢ່າງກວ້າງຂວາງ ເພື່ອສິດສອນປະຫວັດສາດຂອງລາວ. ມີບາງທ່ານກ່າວວ່າ : ວາດຂຽນ

ໃນປຶ້ມນີ້ ເປັນວາດພື້ນເມືອງ ພາໃຫ້ຄົນຮຸ່ນໃໝ່ອ່ານບໍ່ເຂົ້າໃຈໄດ້, ຫຼືບາງຄຳເຫັນກໍ່ວ່າ: ສຳນວນການລິຈະນາ ໃຊ້ສັບລາຊາ, ໃຊ້ຄຳປາລີ - ສັນສະກິດຫຼາຍ ຈຶ່ງເຮັດໃຫ້ຄົນທົ່ວໄປບໍ່ມັກອ່ານ, ຫຼືຈະໃຊ້ໄດ້ກໍ່ພີແຕ່ ນັກບວດຫຼາຍພັນສາ, ນັກຄົ້ນຄວ້າ ຫຼື ປັນຍາຊົນ ຝ່າຍສັງຄົມເທົ່ານັ້ນ.

ຄຳເຫັນຕ່າງໆຂ້າງບົນນັ້ນ ສ່ວນຂ້າພະເຈົ້າກໍ່ຖືວ່າ ມີເຫດ ແລະ ຜົນຕາມແບບສະເພາະຂອງແຕ່ລະທ່ານ. ໃນນີ້ ຂ້າພະເຈົ້າກໍ່ມີທັດສະນະວ່າ : ການລິຈະນາປຶ້ມ ພົງສາວະດານລາວ ທີ່ພິມໃນປີ 1957 ນັ້ນ ອາຈານມະຫາສີລາ ທ່ານກໍ່ໃຊ້ຄວາມ ພະຍາຍາມເພື່ອສ້າງປຶ້ມນີ້ໃຫ້ມີຄຸນຄ່າທາງປະຫວັດສາດ ໃຊ້ເອກະສານທີ່ເປັນໜັງສືໃບລານເປັນສ່ວນຫຼາຍ, ດ້ານຈຸດປະສົງນັ້ນ ທ່ານຄົງສ້າງໃຫ້ປຶ້ມນີ້ເປັນເອກະສານ ເພື່ອໃຊ້ຄົ້ນຄວ້າ, ເປັນເອກະສານສັງລວມຂໍ້ມູນຫຼາຍອັນ ທາງປະຫວັດສາດຫຼາຍກວ່າ ແລະ ອາດບໍ່ແມ່ນ ສ້າງປຶ້ມເພື່ອໃຫ້ສາມັນຊົນທົ່ວໄປອ່ານເຂົ້າໃຈໄດ້. ດັ່ງນັ້ນ ຂໍ້ຄວາມ, ວາດຊຽນ, ສຳນວນ ພາສາ ກໍ່ສະທ້ອນລັກສະນະບູຮານ ໃຊ້ສັບລາຊາ, ສັບພື້ນເມືອງຫຼາຍ, ແລະ ເລື່ອງທ້າວຮຸ່ງທ້າວເຈືອງກໍ່ດັ່ງກັນ. ອັນທີສອງ ການລິຈະນາພົງສາວະດານລາວ ເຫຼັ້ມດັ່ງກ່າວ ເຫັນໄດ້ວ່າ ສ່ວນທີ່ເປັນເຫດການປະຫວັດສາດໃນປຶ້ມກໍ່ໄດ້ແກ່ ການເຄື່ອນໄຫວ, ການພົວພັນລະຫວ່າງກະສັດ, ລະຫວ່າງເຈົ້າຕ່າງໆ ອັນນີ້ກໍ່ສະທ້ອນເຖິງການໃຊ້ຄຳສັບໃນຍຸກ, ກ່ຽວກັບຊື່, ຖານະຕຳແໜ່ງ, ສັບທີ່ໃຊ້ພົວພັນ, ກ່າວຟ້ອງ, ຮ້ອງຂໍຕ່າງໆ ລະຫວ່າງກັນ ໃນສະໄໝອານາຈັກ ຫຼື ລາຊາອານາຈັກ ສ່ວນຫຼາຍກໍ່ໃຊ້ ຄຳປາລີ-ສັນສະກິດ ອັນຖ່າຍຖອດຕາມແບບຈາກສາດສະໜາພຸດໃນລາວ.

ແຕ່ໃນນັ້ນ ສິ່ງທີ່ຖືເປັນຄຸນປະໂຫຍດ ຈາກການລິຈະນາປຶ້ມດັ່ງກ່າວ ແລະ ປຶ້ມອື່ນໆຂອງທ່ານນັ້ນ ຍັງໄດ້ແກ່ ການໃຊ້ສັບອີກດ້ວຍ. ທ່ານເປັນຜູ້ທີ່ມີຄັງຄວາມຮູ້ ດ້ານຄຳສັບຫຼາຍ, ມີສັບດັ້ງເດີມ, ສັບທີ່ຮັບຈາກພາສາອື່ນ ແຕ່ໄດ້ມາໃຊ້ໃນພາສາລາວ ຢ່າງດົນນານແລ້ວ, ຕົວຢ່າງ : ໄພ່ຟ້າ, ປະທັບ, ໄດ້ທົ່ງຊາບ, ຫາບ, ສະເຫວີຍ ແລະ ໃຊ້ຊື່ມື້ດັ່ງນີ້ : ມື້ກ່າ, ມື້ກາບ, ມື້ຮັບ, ມື້ຮວາຍ, ມື້ເມິງ, ມື້ເປີກ, ມື້ກົດ, ມື້ກັດ, ມື້ຮອງ, ມື້ເຕົ່າ. ໃຊ້ສັບການຊັ່ງແທກນ້ຳໜັກ ຄື : ດຽງ, ຝົນ, ຮອງ, ເຖ, ຊັ່ງ, ບັກເບ້ຍ,

ປົງ, ຫາບ ຕ່າງໆ, ໃຊ້ສັບແທກລວງຍາວ : ຂໍ້, ຄືບ, ຄືບ, ກຳ, ສອກ, ແຂນ, ວາ ... ໃຊ້ຄຳສ້ອຍທ້າຍປະໂຫຍກ : ພຸ້ນດາຍ, ແທ້ດາຍ, ແທ້ແລ, ຊັ້ນແລ, ເສຍເຖີ້ນ, ແກ່ສູແລ ແລະ ອື່ນ ໆ. ເຊິ່ງສັບເຫຼົ່ານີ້ ຄົນຮຸ່ນໃໝ່ຫຼາຍຄົນກໍ່ຮູ້ໜ້ອຍ, ແລະ ບາງຄົນບໍ່ຮູ້ ຫຼື ຮູ້ກໍ່ຈຳ ຖືວ່າເປັນຄຳເກົ່າແກ່ ຫລ້າສະໄໝກໍ່ຫາກມີ. ທັດສະນະທີ່ຖື ດັ່ງຂ້າງບົນຄົງບໍ່ສອດຄ່ອງກັບວິທະຍາສາດ ທັງທີ່ວ່າ ພວກເຮົາມີຄວາມຕ້ອງການ ທັງຢາກພິທັກຮັກສາ, ເສີມສ້າງ ແລະ ຈົນໃຊ້ໃຫ້ມີຊີວິດຊີວາຄືນໃໝ່. ນອກຈາກນັ້ນ ຕໍ່ກັບການໃຊ້ປະໂຫຍກການຂຽນກໍ່ເຫັນວ່າ ທ່ານໃຊ້ຫຼາຍແບບໂຄງສ້າງ ເຊິ່ງແຕ່ລະແບບ ກໍ່ລ້ວນແຕ່ໃຫ້ຄວາມແຈ່ມແຈ້ງ, ເຂົ້າໃຈຄວາມໝາຍໄດ້ງ່າຍ.

ຖ້າທ່ານໃດອ່ານປຶ້ມດັ່ງກ່າວບໍ່ເຂົ້າໃຈນັ້ນ ຄົງບໍ່ແມ່ນມີບັນຫາດ້ານປະໂຫຍກ ອາດແມ່ນດ້ານຄວາມໝາຍຂອງຄຳສັບຫຼາຍກວ່າ. ທັງນີ້ກໍ່ເຫັນໄດ້ວ່າ ທ່ານມະຫາສີລາ ໄດ້ໃຊ້ປະໂຫຍກງ່າຍ, ໃຊ້ວາດຂຽນແບບເລົ່າເລື່ອງ ໂດຍໃຊ້ເຄື່ອງໝາຍວັກ ໝາຍຕອນເປັນສິ່ງສະແດງກຸ່ມບັນຫາ ເຊິ່ງບໍ່ເປັນບັນຫາຂັດສົນໃດເລີຍ. ສ່ວນຫຼາຍ ທ່ານໃຊ້ ປະໂຫຍກໂຄງສ້າງແບບກົງ, ໂຄງສ້າງແບບບໍ່ ແລະ ໂຄງສ້າງແບບເຊື່ອມ.

ຕົວຢ່າງບາງໂຄງສ້າງປະໂຫຍກດັ່ງນີ້ : (1) ແຕ່ນັ້ນ ນາງມະຫາເທວີ ຈຶ່ງໃຫ້ໄປເຊີນເອົາ ທ້າວກ້ອນຄຳ ພຣະໂອຣົດຂອງພະຍາສາມແສນໄທ ທີ່ໄປຄອງເມືອງ ຢູ່ຊຽງສາ ມາເປັນເຈົ້າແຜ່ນດິນ ຖວາຍນາມວ່າ ພຣະຍາຊຽງສາ. (ໜ້າ 84 ພົງສາວະດານລາວ 1957).

(2) ສູຢ່າບ່າຢ່າງານແກ່ໄທແກ່ລາວ, ສູຢ່າຍາດເອົາສິ່ງຂອງລາວອັນໃດກໍ່ດີ ອັນໜຶ່ງ ສູຢ່າຜິດຖຽງກັນ ແລະ ວ່າຈັກໄປຮົບເລວກັນກໍ່ດີ ໃຫ້ສູຈື່ຄວາມກູ ສິ່ງນີ້ : ນີ້ກາບ ນີ້ຮັບ ນີ້ຮວາຍ ນີ້ເມືອງ, ນີ້ເປີກ ບັດນີ້ ໃຫ້ເປັນມີ້ເສິກສູຈັກຮົບຈັກເລວກັນກໍ່ຕາມສູ ...

ຂ້າພະເຈົ້າຍັງມີຄຳເຫັນຕໍ່ວາດຂຽນ, ສຳນວນພາສາໃນປຶ້ມ ພົງສາວະດານຕື່ມວ່າ ທ່ານ ອາຈານມະຫາສີລາ ບໍ່ໄດ້ວາງຈຸດປະສົງຕົ້ນຕໍໃຫ້ເປັນບົດສັນນິຖານ, ວິຈານ, ຫລື ແບບວາດພາບ. ດັ່ງນັ້ນ ເພື່ອຈະໃຫ້ສາມັນຊົນອ່ານເຂົ້າໃຈ ບັນດານັກຄົ້ນຄວ້າ, ນັກພາສາສາດໃນປະຈຸບັນ ຍັງຈະໄດ້ໃຊ້ວາດຂຽນແບບໃໝ່ທີ່ເໝາະສົມກັບ ຈິດຕະສາດຂອງຄົນ

ລາວຍຸກປະຈຸບັນອີກດ້ວຍ.

ຢ່າງໃດກໍ່ດີ ຂ້າພະເຈົ້າໄດ້ຖືເອົາ ສຳນວນແບບລີຈະນາ ພົງສາວະດານລາວ, ເລື່ອງທ້າວຮຸ່ງ ທ້າວເຈືອງ, ສັງສິນໄຊ ແລະ ອື່ນ ໆ ທີ່ອາຈານມະຫາສີລາ ໄດ້ລີຈະນາໄວ້ກ່ອນນັ້ນ ເປັນພື້ນຖານ ເພື່ອຄົ້ນຄວ້າ ທັງຊອກເອົາແບບສຳນວນທີ່ເປັນພື້ນເມືອງ ຂອງລາວເຮົາ. ຄວາມຮູ້ອື່ນ ໆ ນັບທັງຄວາມຮູ້ດ້ານສັບ, ສຳນວນພາສາຂອງທ່ານ ຄົງຈະເປັນພື້ນຖານທີ່ພວກເຮົາຈະສືບທອດ ທັງສົ່ງເສີມໃຫ້ແກ່ນັກຄົ້ນຄວ້າ, ນັກຮຽນ, ນັກສຶກສາເພື່ອການບັນທຶກ, ລີຈະນາບົດຕ່າງໆ ທີ່ເປັນວັນນະຄະດີພື້ນເມືອງ, ຈາກນີ້ ພວກເຮົາຈຶ່ງຈະມີຈຸດຢືນເພື່ອທຽບສຳນວນພາສາຂອງຍຸກສະໄໝຕ່າງໆ ເພື່ອການຄົ້ນຄວ້າຄືນ ເຖິງວັດທະນະທຳ, ອາລິຍະທຳ, ຮີດຄອງປະເພນີ ຫຼື ນິດໄສໃຈຄໍຂອງຄົນລາວສະໄໝຕ່າງໆທັງຈະກ້າວໄປເຖິງການສ້າງແບບຄຳເວົ້າ, ພາສາ ແລະ ອື່ນ ໆ ໃຫ້ແກ່ນັກສະແດງ ເລື່ອງຂອງລາວ ເຊິ່ງໃນອະນາຄົດ ບັນດານິທານ, ວັນນະກຳດີເດັ່ນ, ວັນນະກຳເອກຂອງລາວຂອງອານາຈັກລ້ານຊ້າງ ຄົງຈະໄດ້ຖ່າຍທອດອອກມາເປັນເລື່ອງ ທີ່ສ້າງເປັນ ຮູບເງົາ, ເປັນລະຄອນເວທີ ແລະ ອື່ນ ໆ ຂ້າພະເຈົ້າຫວັງວ່າ ບັນດາທ່ານ, ບັນດານັກພາສາສາດຄົງຈະໃຫ້ທັດສະນະເພື່ອປະກອບ ຫຼື ຊ່ວຍດັດແປງໃຫ້ແກ່ທັດສະນະດັ່ງທີ່ຂ້າພະເຈົ້າໄດ້ກ່າວມາຂ້າງບົນ ອັນເປັນຄຳເຫັນທີ່ຍັງຄອຍຮັບຄວາມເອກະພາບຈາກພວກທ່ານໃນອັນຕໍ່ໄປ ຢູ່ສະເໝີ.

ຄຸນສົມບັດສະເພາະຕົວ ບົດອ່ານສຳລັບເດັກ

• ທຸມພັນ ລັດຕະນະວົງ
ຫົວໜ້າ ສະຖາບັນຄົ້ນຄວ້າ
ວັນນະຄະດີ - ພາສາສາດ

I. ຄຸນສົມບັດໃນຕົວຂອງທ່ານອາຈານ ມະຫາສີລາ ວີຣະວົງ ຕາມທັດສະນະ ສວນຕົວຂອງຂ້າພະເຈົ້າ.

ພວກເຮົາຈະເຫັນໄດ້ໃນທຸກຜົນງານທີ່ທ່ານໄດ້ຂຽນ ໄດ້ລິດຈະນາອອກອັນເດັ່ນທີ່ສຸດ ແມ່ນນ້ຳໃຈຮັກຊາດຂອງທ່ານເອງ ຄຽງຄູ່ກັນນັ້ນ ທ່ານຍັງເປັນຄົນສະຫລາດຊາດຊາຍ ມີສະຕິປັນຍາສູງ ທ່ານມີຄວາມມຸມານະສູງ ນີ້ແມ່ນເອກະລັກພິເສດຂອງເພິ່ນ ທີ່ຕິດພັນ ກັນຢ່າງສະໜິດແໜ້ນ.

ຜ່ານນ້ຳໃຈຮັກຊາດແພງເຊື້ອຂອງເພິ່ນ ພາໃຫ້ເພິ່ນມີມຸມານະສູງ ຄົ້ນຄິດ ຄົ້ນຄວ້າ ແລະ ຊອກສຶກສາເລົ່າຮຽນ ເຮັດໃຫ້ເພິ່ນມີຄວາມສະຫຼາດ

ສາຍເຫດທີ່ພາໃຫ້ເພິ່ນມີນ້ຳໃຈຮັກຊາດແມ່ນ :

ທ່ານເກີດຢູ່ໃນຍຸກທີ່ປະຫວັດສາດ ໃນໄລຍະນັ້ນຍັງບໍ່ທັນຫລົງລືມຫລາຍ

ຄວາມຂົມຂື່ນຂອງຊາດລາວຍັງພໍມີຢູ່ໃນຈິດໃຈຂອງຄົນທົ່ວໄປ

ທ່ານມີອາຈານ ທີ່ສິດສອນຄວາມຮູ້ ສືບທອດຄວາມຮັກຊາດ

ໃນສະໄໝນັ້ນ ສະພາບຄວາມເປັນລາວ ແລະ ເປັນໄທ ໃນສັງຄົມເມືອງໄທ ຍັງຈະແຈ້ງ ບໍ່ທັນເຈືອຈາງ ແລະ ຄວາມດູຖູກ ຢຽດຫຍາມກັນລະຫວ່າງກຸ່ມຊົນໃນສັງຄົມໄທ ກໍ່ຄືການກົດຂີ່ ທາງການເມືອງ ຂອງພວກອຳນາດສະຫຍາມ ນັ້ນມີຕໍ່ ເຊື້ອຊາດລາວ ມີຄວາມພົ້ນເດັ່ນເປັນພິເສດ. ອັນນີ້ ເປັນການຊຸກດັນໃຫ້ເພິ່ນມີ ຈິດໃຈ

ຮັກຊາດ ເພິ່ນຈຶ່ງຄົ້ນຄວ້າ ເລິກລົງໄປເຖິງເອກະລັກຂອງຊາດໃນປະຫວັດສາດປະຫວັດຄວາມເປັນມາຂອງຊາດ ຢັ້ງຢືນບໍ່ສະເພາະແຕ່ຄົນລາວ ຍັງຕໍ່ໂລກວ່າ ຊາດ-ລາວນັ້ນມີເອກະລັກ ທາງວັດທະນະທຳ ມີຄວາມສີວິໄລ ຫລືຈະເລີນຮຸ່ງເຮືອງ ທາງວັດທະນະທຳ ໃນເມື່ອຄົ້ນຄວ້າໄປເຜົ່າໃດ ຍິ່ງຮູ້ສຶກມີຄວາມເອກອ້າງໃນວັດທະນະມູນເຊື້ອອັນດີງາມ ສູງສົ່ງຂອງຊາດຂອງຕົນ.

ຜົນງານຂອງທ່ານ ທຸກອັນແມ່ນທັນເຂົ້າໃນຄວາມເປັນລາວ ທັນເຂົ້າໃນມໍລະດົກ - ຂອງຊາດ ເຮັດໃຫ້ມໍລະດົກຂອງຊາດເດັ່ນຂຶ້ນໃນເວທີສາກົນ.

ເວລາທ່ານອາຈານມະຫາສີລາ ຍັງເຈັບຢູ່ນັ້ນ ເມື່ອເຮົາໄປຢ້ຽມຢາມ ເຖິງວ່າແພດໝໍຈະແນະນຳໃຫ້ເພິ່ນພັກຜ່ອນກໍ່ຕາມ ແຕ່ເພິ່ນກໍ່ຍັງລຸກມາລົມກັບພວກເຮົາ ສິ່ງທີ່ເພິ່ນເອົາມາເວົ້າເວລານັ້ນ ກໍ່ລ້ວນແລ້ວແຕ່ຄວາມເປັນຫ່ວງເປັນໄຍຕໍ່ຜົນງານຂອງເພິ່ນ ຢ້ານແຕ່ບໍ່ໄດ້ເຜີຍແຜ່ໃຫ້ຄົນຮຸ່ນຫລັງໄດ້ຮູ້ໄດ້ອ່ານ ໂດຍສະເພາະແມ່ນຕົ້ນສະບັບ ສະບັບ ສົມບູນເລື່ອງທ້າວຮຸ່ງທ້າວເຈືອງທີ່ເພິ່ນລິດຈະນາໄວ້ ເພິ່ນສັ່ງແລ້ວສັ່ງອີກວ່າ ຕ້ອງໄດ້ພິມ ເພາະມັນແມ່ນມໍລະດົກອັນສຳຄັນ ພ້ອມກັນນັ້ນ ເພິ່ນຍັງເນັ້ນເຖິງຕົວເລກທີ່ບອກເຖິງຍຸກສະໄໝ-ໃຫ້ພວກເຮົາລະມັດລະວັງ ຢ້ານຜິດພາດ ຕ້ອງຈື່ລະອຽດ ຖີ່ຖ້ວນ ບໍ່ມະລຸມມະລວຍ.

ເພິ່ນໂອ້ລົມກັບພວກເຮົາຢ່າງບໍ່ຢຸດບໍ່ເຊົາ ຈົນດວງເດືອນອົດຫ່ວງເພິ່ນບໍ່ໄດ້ ຈຶ່ງແນະນຳໃຫ້ເພິ່ນພັກຜ່ອນ ແຕ່ເພິ່ນຕອບວ່າ

" ໂອ່ ! ມັນມ່ວນນາ "

ຄວາມມ່ວນຊື່ນ ຄວາມສຸກຂອງເພິ່ນ ແມ່ນຕິດພັນຢູ່ກັບວຽກງານການຄົ້ນຄວ້າ ຮ່ຳຮຽນ ໝົດຊີວິດຂອງເພິ່ນ ຄວາມເປັນຫ່ວງສຸດຍອດແມ່ນວັນນະກຳ ອັນເປັນມໍລະດົກອັນລ້ຳເລີດຂອງຊາດລາວ....

ທ່ານບໍ່ສະເພາະແຕ່ເປັນອາຈານຜູ້ຍິ່ງໃຫຍ່ຄົ້ນຄວ້າແນວສັບສົນທີ່ຍັງບໍ່ມີຜູ້ບຸກເບີກມາ ເພິ່ນຍັງຄິດຫາສິ່ງເລັກໆນ້ອຍໆ ແຕ່ສຳຄັນທີ່ສຸດຄື ເພິ່ນເປັນຄູຂອງເດັກນ້ອຍ ສັງເກດເຫັນໃນປຶ້ມຮຽນ ປ.ປາ ເຊິ່ງແມ່ນຜົນງານທີ່ເພິ່ນລິດຈະນາຂຶ້ນ ແລະ ມີຄຳກາບ ຄຳກອນ ປະກອບໄວ້ . ຊຶ່ງຂໍລົງເລິກເຖິງຮູບແບບທີ່ເພິ່ນເປັນຄູເດັກນ້ອຍແນວໃດ.

ເພິ່ນມີວິຊາຄູສູງ ຮູ້ເລິກເຖິງຈິດຕະສາດຂອງເດັກ ຮູ້ໃຊ້ສຳນວນຄຳສັບທີ່ ເໝາະກັບເດັກ.

ນອກຈາກຈະມີວິທີດີແລ້ວ ການສິດສອນຂອງທ່ານຍັງຕິດພັນກັບທຳມະຊາດ ທ້ອງຖິ່ນ ດິນນາ ພົວພັນເຖິງຄວາມຮັກຊາດ ແຕ່ເປັນສິ່ງທີ່ເດັກນ້ອຍຮັບເອົາໄດ້ ໃນນັ້ນ ຍັງສະແດງ ສູນທອນທັດ ສຳລັບເດັກນ້ອຍໄດ້ຍອດຢ່ຽມ ນອກຈາກຈະມ່ວນແລ້ວ ຍັງມີຈິນຕະນາພາບອັນງົດງາມຕິດສົບຕິດປາກເດັກນ້ອຍ

ຂ້າພະເຈົ້າຢາກຂໍຍົກຕົວຢ່າງບົດເພິ່ນສອນກ່ຽວກັບໄມ້ເອກ ໄມ້ໂທ ດັ່ງນີ້ :

" ພໍ່ເຖົ້າສາ ໄປທຳນາຢູ່ແຈປ່າ ຢູ່ປ່າທົ່ວນາ ມີກໍ້ຄາ ປ່າຂ່າ ແລະ ກໍໄຜ່

ໃນເວລາຄ່ຳມາ ມີມ້າ ມາຢ່ຳຕາກ້າ ມື້ເຊົ້າມາ ພໍ່ເຖົ້າສາ ຖືພ້າໂຕ້ ໄປໄລ່ມ້າ ແມ່ຢ້າດີ ຮໍ່ມາຫາ ພໍ່ເຖົ້າສາ ໄປໃສ່ໄຊ ໄດ້ປາຄໍ່ ສີ່ຫາໂຕ."

<u>ບົດຕົວ ກ ສະກົດ</u>

" ຕານາກ ໄປຕຶກແຫ ຖືກປາດຸກ ຢູ່ນ້ຳເລິກ ປາດຸກປັກມືຕານາກ ພວກໄປຕິເຊືອກ ໄດ້ມາເອົາອອກໃຫ້ ຕານາກ ເອົາເປືອກໝາກມາໃສ່ "

ພຽງແຕ່ບົດນີ້ຊຶ່ງ ຍັງບອກຢຸກຢາໃຫ້ອີກ. ພ້ອມນັ້ນ ຍັງເວົ້າເຖິງຄວາມ ສາມັກຄີຊ່ວຍເຫລືອກັນອີກ ຄື : "ພວກໄປຕິເຊືອກ ໄດ້ມາເອົາອອກໃຫ້ ".

<u>ບົດຕົວ ດ ສະກົດ</u>

" ປ້າພັດ ແລະ ປ້າຫວາດ ໄປຊື້ໝາກເຜັດ ທີ່ຕະຫລາດ ປ້າມາກໄປຊື້ ສີສຽດ ແລະ ນວດ ເຂົາໂຄສະນາວ່າ ໃຫ້ສະລະຊີວິດເລືອດເນື້ອເພື່ອປະເທດຊາດ ແພດໄດ້ອອກປະກາດວ່າ ປີນີ້ມີພະຍາດຕິດແປດ "

ອັນນີ້ເຫັນວ່າເນື້ອໃນໄດ້ຕ່ອຍຄວາມຮັກຊາດເຂົ້ານຳ.

<u>ຕົວ ບ ສະກົດ</u>

" ປ້າອົບ ແລະ ປ້າຕົບ ໄປຊື້ຜັກຕົບ ແລະ ໝາກຈັບ ຂ້າພະເຈົ້າຫັດນັບ ຫ້າ

ຫົກ ເຈັດ ແປດ ເກົ້າ ສິບ ນົກຈິບໄລ່ແຫນກັບນົກຂາບ ປ້າລັບໄປເຣັດຖູບໍ່ຢູ່ຖຸອບຂອບ ທຸກ ມື້ນີ້ ເຂົາຖືລະບອບປະຊາທິປະໄຕ ທຸກປະເທດ "

ບ່ອນນີ້ ຍັງສອນໃຫ້ຮູ້ສິນທຳ ຢູ່ໃນສັງຄົມ.

<u>ຕົວ ງ ສະກົດ ແບບກາບກອນ</u> :

" ຟັງສຽງເສືອສິ້ງຊ້າງ   ຄະນອງເນື້ອໃນປ່າ
ມີຫັງວິບຈາບຈຸ້   ຈາແຈ້ງສົ່ງສຽງ
ແລເບິ່ງລະມິ້ງມ້າ   ນອງໝູມະຫິງສາ
ບາງສ່ອງອຶງຄະນຶງສຽງ   ສົ່ງແຮງເຮ້ອງ
ນອງທີ່ຍູງຍາງໄມ້   ຝູງຊະນີຫັງຄ່າງ
ຫລີງລຳແລ ຫມາກໄມ້   ຄະໂຍງຢື້ຢ່ອງໄປ "

ກາບກອນມີພາບສວຍສົດງົດງາມ ທີ່ສຸດ.

<u>ຕົວ ນ ສະກົດ</u> :

" ໃນດ່ານແດນດິນພື້ນ   ນະຄອນສີສະຕະນາກ
ຍິນສະໜຸກມ່ວນແມ້ງ   ເມືອງຟ້າກໍ່ໄປປານ
ພໍເມື່ອໝົດເຂດຟ້າ   ເດືອນດ່ວນລະດູຝົນ
ເດືອນສິບສອງເພັງພໍ   ຝູງພະແຂໄຂແຈ້ງ
ຝູງຊ່ຳຈົນໄປໄຫວ້   ເຈດີພະທາດໃຫຍ່
ຈູດໜູທຽນທູບໄຕ້   ບູຊາເຈົ້າໝົ່ພຸດໂທ ".

ສະແດງເຖິງຄວາມຮັກບ້ານເກີດເມືອງນອນ ຮັກຮີດຄອງປະເພນີ

<u>ຕົວ ວ ສະກົດ</u> :

" ນີ້ໜີ້ງຂອຍ   ເພັນນົກເພັນຊິວ

ບິນວິວງ ມາຈັບຣຽວໄສ່
ແສນໜອງໃຫຍ່ ຈອບໝູ່ປາຊິວ
ນົກຕັນທິວ ທ່ຳກິນລີ້ຫລອກ
ທິວຄຶດອອກ ຂື້ອອຍລົງມາ
ພວກໝູ່ປາ ຫລຽວເຫັນແສນຍາດ
ນົກສະຫລາດ ບິນແສວລົງກິນ
ແລ້ວເລີຍບິນ ໜີໄປໄວ ໆ "

ນອກນີ້ ຍັງມີກອນອ່ານຫລາຍອັນທີ່ສອນໃຫ້ຮັກແພງ ເຊື່ອງກັນແລະກັນ ເຄົາຣົບນັບຖືຄູອາຈານ ຮັກປະເທດຊາດບ້ານເກີດເມືອງນອນ.

ຕົວຢ່າງ

ປະເທດຂ້ອຍ ຊື່ນຊື່ເມືອງລາວ
ລວງກວ້າງຍາວ ສຸດຕາເຫລືອອ່ານ
ນ້ຳຂອງຜ່ານ ໄຫລຜ່າ ທາງກາງ
ມີຫີນທາງ ຖະໜົນສະອາດ
ປະເທດຊາດ ລາວໃຫຍ່ໄພສານ
ເຮົາລູກຫລານ ເກີດມາພາຍຊ້ອຍ
ຄວນຊູຊ້ອຍ ສ້າງບ້ານເມືອງລາວ
ໃຫ້ຍືນຍາວ ຕໍ່ໄປພາຍໜ້າ
ຢ່າໃຫ້ຫລ້າ ເຂົ້າແທ້ໝູ່ລາວ

ຫລາຍທ່ານອາດຈະວ່າ ກອນນີ້ ອາດຈະບໍ່ເໝາະສົມແລ້ວໃນຍຸກນີ້.

ແຕ່ອັນນີ້ ອາດຈະແມ່ນຄວາມປາຖະໜາຂອງເພິ່ນ ທີ່ມີຄວາມຫວັງຢາກໃຫ້ ພວກເຮົາທັງສອງຝັ່ງນ້ຳຂອງ ຮັກແພງກັນ ເພາະແມ່ນຊາດເຊື້ອດຽວກັນ ນີ້ແມ່ນນອງ ໃນຕາງ

ຄວາມຮັກແພງ ຄວາມສຳພັນອັນດີງາມຕໍ່ກັນ ເຊິ່ງຫວນຄືນເບິ່ງແລ້ວ ທັງສອງຝັ່ງນ້ຳຂອງກໍ ຍັງມີໄລຍະທີ່ເປັນຊາດດຽວກັນ ແຕ່ກໍ່ມີໄລຍະຂ້າຟັນລັນແທງກັນກໍ່ມີ ແຕ່ໃນສະໄໝນີ້ ອັນໃດຄືສັດຈະທຳ ອັນໃດຄືຄວາມດີງາມ ເຮົາຄວນຈະຮ່ວມໄມ້ຮ່ວມມືກັນຮັກແພງສາມັກຄີ ກັນ ຮ່ວມໄມ້ຮ່ວມມືກັນສ້າງສາໃຫ້ຈະເລີນຮຸ່ງເຮືອງ. ດັ່ງທີ່ເຮົາໄດ້ລິເລີ່ມໃນມື້ນີ້ ຂໍໃຫ້ ການລິເລີ່ມສຳພັນອັນນີ້ ມີໝາກຜົນອອກໄປຫລາຍໆເທື່ອ.

ຈຸດມຸ່ງໝາຍ ຂອງການປະພັນເລື່ອງ

• ຈາລຸວັນ ທຳມະວັດ

ອາຈານ ວັນນະຄະດີ ວັດທະນະທຳ ອີສານ ມະຫາວິທະຍາໄລ
ສີນັກຄະລິນວິໂລດ, ປະລິນຍາໂທ ອັກສອນສາດມະຫາບັນດິດ
ຈຸລາລົງກອນ ມະຫາວິທະຍາໄລ

ຂ້າພະເຈົ້າໄດ້ພິຈາລະນາ ຈຸດມຸ່ງໝ້າ ໃນການສ້າງຜົນງານຂອງທ່ານ ມະຫາ ສີລາ ແຕ່ລະເລື່ອງ ດ້ວຍຄວາມຊື່ນຊົມ.

ຂ້າພະເຈົ້າ ຂ້ອນຂ້າງເຫັນດີນຳທ່ານທຸມພົນວ່າ ຜົນງານຊິ້ນໃດທີ່ທ່ານ ຂຽນເພື່ອເດັກນ້ອຍແລ້ວ ໂຄງສ້າງຂອງປະໂຫຍກເໝາະທຸກຢ່າງ ແຕ່ຖ້າພິຈາລະນາ ໃນການຂຽນພົງສາວະດານຂອງທ່ານ ມະຫາສີລາ ແລ້ວທ່ານບໍ່ໄດ້ຕັ້ງໃຈຈະສື່ສານກັບເດັກນ້ອຍ ທ່ານຕັ້ງໃຈຈະສື່ສານກັບຜູ້ໃຫຍ່ທີ່ມີສາມັນສຳນຶກໃນເລື່ອງຊາດແລ້ວ ໂຄງສ້າງຂອງ ປະໂຫຍກໃນພົງສາວະດານເປັນໂຄງສ້າງປະໂຫຍກຍາວ ທີ່ແຕກຕ່າງກັນຢ່າງຊັດເຈນ.

ຂ້າພະເຈົ້າອ່ານປຶ້ມພົງສາວະດານລາວ ສະບັບຂອງກະຊວງສຶກສາທິການຂອງ ມະຫາສີລາ ສະບັບຂອງຄຳໝັ້ນ ວົງກົດລັດຕະນະ ອ່ານຂອງຝ່າຍໄທ ແລະ ອ່ານຫຼາຍໆ ຫົວໄລ່ໄປເປັນແຂວງໆ ຈຳປາສັກ, ຫລວງພະບາງ, ຊຽງຂວາງ ກົງ ເມືອງພວນ ຂອງທ່ານຄຳໝັ້ນ ເບິ່ງໂຄງສ້າງສາ ກໍ່ແຕກຕ່າງກັນ.

ຂ້າພະເຈົ້າຂໍປະກອບຄວາມເຫັນກັບທ່ານສົມແສງທີ່ວ່າ ຖ້າເຮົາຕ້ອງການ ຄົ້ນຄວ້າຄຳ ພະຍາງ ປະໂຫຍກຕ່າງໆ ກໍດີ ເຮົາຈະຕ້ອງຈຳແນກຂໍ້ມູນໃຫ້ຊັດເຈນວ່າ ເຮົາຈະໄດ້ Style ແບບຂຽນ(ສະຕາຍ)ສະເພາະບຸກຄົນຫຼືຂອງຊາດ ແລະຊາດກໍມີພັດທະນາການຫຼາຍຍຸກຫລາຍສະໄໝ ເຊິ່ງໃນຜົນງານຂອງມະຫາສິລາ ຊິບອກສິ່ງທີ່ແຕກຕ່າງກັນໄດ້ ຊັດເຈນເຮົາຕ້ອງແນມຈຸດມຸ່ງໝາຍ ແລະ ລັກສະນະທີ່ເປັນສະເພາະຈຳເພດລົງໄປ.

ການສຶກສາຜົນງານຂອງມະຫາສິລາ ທີ່ຂຽນຈາກພື້ນພູມຂອງລາວ ເປັນຕົ້ນ ເລື່ອງທ້າວຮຸ່ງ ທ້າວເຈືອງ ເລື່ອງຂຸນທຶງຫລື ເລື່ອງຕ່າງໆ ທີ່ສື່ຈາກພາສາລາວນັ້ນ ພາສາຈະອອກໄປແບບໜຶ່ງ ຖ້າເປັນເລື່ອງທີ່ຂຽນມາຈາກທາງສາສະໜາ ເປັນຕົ້ນວ່າ ຂຽນຈາກປັນຍາ ຊາດົກ ວິບາກຊາດົກ ຫລື ທິໂຕປະເທດ, ນາງຕັນໄຕ... ໂຄງສ້າງພາສາ ກໍຕ່າງກັນ ແຕ່ວ່າມະຫາສິລາ ເປັນນາຍເໜືອພາສາຄື ເປັນຜູ້ສາມາດເລືອກໃຊ້ຖ້ອຍຄຳຄຳຂອງເພິ່ນເປັນອ່ອຍຕ່ອຍ ຕ່ອນພະຫຍາ ອ່ອຍຕ່ອຍຕ່ອນຄຳ ຂຶ້ນຢູ່ກັບຈຸດມຸ່ງໝາຍວ່າເພິ່ນຊິໃຊ້ໃນໂອກາດໃດ.

ເພາະສະນັ້ນການສຶກສາເພື່ອຄວາມຊື່ນຊົມມ່ວນຊື່ນກໍດີຫຼືເພື່ອຄວາມຢາກສົນໃຈກໍຕ້ອງກະທຳພິຈາລະນາລົງໄປລະອຽດຈັດຂໍ້ມູນໃຫ້ລະອຽດແລ້ວເຮົາຈະພໍຊົມຄຳ ໃນວັນນະຄະ ດີໃນອັກສອນຂອງທ່ານ.

ຂ້າພະເຈົ້າຢາກປະກອບຄວາມເຫັນນຳທ່ານທຸມພັນທີ່ວ່າ ທ່ານອາຈານມະຫາສິລາມີຄວາມຮັກຊາດທີ່ຍິ່ງໃຫຍ່ທີ່ສຸດ ເທົ່າທີ່ຂ້າພະເຈົ້າເຄີຍສຶກສາຜົນງານໃນໃບລານ ຕ່າງ ໆ ມາ ເພິ່ນບໍ່ເຄີຍບອກວ່າຕົນເອງເປັນໄທ ເຖິງຈະເກີດຢູ່ຮ້ອຍເອັດແຕ່ເພິ່ນຢືນຢັນວ່າ ເພິ່ນເປັນລາວ.

ຄວາມເປັນຊາດນິຍົມຂອງທ່ານມະຫາສິລາ ມີແຮງຊຸກດັນ ໃຫ້ການຂຽນ ພົງສາວະດານລາວ ມີຜົນຕໍ່ເນື້ອຫາ ແລະ ເປັນຜົນຕໍ່ການເລືອກຄຳ ທີ່ຈັບອົກຈັບໃຈ ບໍ່ມີໃຜ ທຽມ ຕົວຢ່າງເພິ່ນໃຊ້ຄຳວ່າ "ຫອນໄພ່" ໝາຍຄວາມວ່າ ການທີ່ພໍ່ "ສັງສິນໄຊ" ຈະອອກ ຈາກເມືອງ ຕ້ອງມີຜູ້ດູແລຮັກສາ ມອບໝາຍໜ້າທີ່ໃນການ "ຫອນໄພ່" ຄືຫອນ ປະຊາຊົນ - ຫອນສາມັນຊົນ ເຊິ່ງເປັນຄຳທີ່ດີທີ່ສຸດ ສະແດງເຖິງວ່າ ປະຊາຊົນນັ້ນ ເປັນດັ່ງ ແກ້ວຕາ

ຂອງຈີນຈຸ້ນປົກຄອງ ແລະ ມີຫລາຍໆ ຄຳທີ່ເພິ່ນໃຊ້ ເຊັ່ນ: ຫອມສິນ...ຫອມທຳ...

ນີ້ເປັນຄຳທີ່ອາຈານເລືອກໃຊ້ ຖ້າເຮົາພິຈາລະນາ ແຕ່ລະປະເພດວ່າ ວັນນະຄະດີນັ້ນທີ່ມາຈາກນິທານຂອງລານຊ້າງເອງ. ອັນທີ່ມາຈາກບາລີ ສັນສະກິດແລ້ວ ມັນຈະ ເປັນພົນຕໍ່ໂຄງສ້າງທາງພາສາ .

ເວົ້າໄປແລ້ວ ມີຜົນງານຂອງທ່ານອາຈານ ງວດໜຶ່ງ ທີ່ເປັນຄຳເກົ່າ ເປັນ ປະເພດຄຳພະຫຍາ ຫລື ວັນນະກຳ ປະເພດຄຳສອນ ເຊິ່ງເວລາເຮົາບອກລູກຫລານ ເຮົາຈຳທັງຄວາມຄິດຈຳທັງຄຳເວົ້າ ຈະບໍ່ປ່ຽນແປງໃນສ່ວນນີ້ ຫລືຄຳໃນກົດໝາຍໃນບາງ ຍຸກບາງສະໄໝ ຖ້າຕີຄວາມແປອອກມາມັນຈະຄາດເຄື່ອນ ຖ້າເຮົາຈະສຶກສາພາສາຫລື ແບບເຮົາຈະເລືອກວັນນະຄະດີໃດມາຄົ້ນຄວ້ານັ້ນຕ້ອງກະທຳຢ່າງເໝາະສົມ ເປັນວິທະຍາສາດຂອງວັນນະກຳດັ່ງກ່າວນັ້ນ.

ອຸດົມການລັບ ຂອງ ມະຫາສີລາ ວີຣະວົງ

ມະຫາ ຄຳພັນ ວິລະຈິດ

ນັກຄົ້ນຄວ້າອາວຸໂສ ຄ.ວ.ສ.

ຂ້າພະເຈົ້າ ເຄີຍຮູ້ຈັກກັບ ມະຫາສີລາ ຕັ້ງແຕ່ປີ ໑໙໓໗ ໃນຖານະທີ່ ມີອາ ຊີບດຽວກັນ ເພິ່ນເປັນອາຈານສອນບາລີຢູ່ວຽງຈັນ ສ່ວນຂ້າພະເຈົ້າສອນບາລີ ຢູ່ຫລວງ ພະບາງ.

ມານີ້ ພວກເຮົາໄດ້ຄົ້ນຄວ້າຜົນງານຂອງເພິ່ນໃນດ້ານວັນນະຄະດີອັກສອນສາດພາສາສາດ ປະຫວັດສາດ... ເຊິ່ງຜົນງານເພິ່ນມີຫລວງຫລາຍ.

ຂ້າພະເຈົ້າມີຄວາມເສຍດາຍອັນໜຶ່ງ ຄືວັນນະຄະດີ ປິດລັບຂອງເພິ່ນ ພວກເຮົາຍັງບໍ່ທັນໄດ້ເວົ້າຮອດ ເພາະວ່າເວລານັ້ນພວກເຮົາໄດ້ລົມກັນ ເພິ່ນໄດ້ເວົ້າວ່າ ເລື່ອງ

ການຕໍ່ສູ້ ໃນສັງຄົມດຽວນີ້ ເຮົາເປີດເຜີຍບໍ່ໄດ້ ມີແຕ່ວິທີໜຶ່ງຄືແຕ່ງກາບກອນໃຫ້ຊາວໜຸ່ມນຳໄປລຳໄປຮອງ ສູ່ປະຊາຊົນຟັງ ແຕ່ຂ້າພະເຈົ້າບໍ່ໄດ້ລົງເລິກ ເນື້ອໃນແຕ່ຮູ້ວ່າ ເປັນວັນນະກຳ ອັນປະເສີດຂອງເພິ່ນ ເພື່ອສືມທຽບ ນ້ຳໃຈຮັກຊາດອັນສູງສົ່ງ. ຄືດັ່ງທີ່ທຸກຄົນໄດ້ເວົ້າຮອດ.

ເພິ່ນໃຊ້ທຸກວິທີທາງ ເພື່ອຟື້ນຟູ ສິລະປະ ວັດທະນະທຳຂອງຊາດ ໂຈມຕີ ສັງຄົມອັນເປິເປື້ອນໃນຄາວນັ້ນ ເຊິ່ງຊາວໜຸ່ມທີ່ເຄີຍເປັນຜູ້ນຳເອົາກອນຂອງເພິ່ນໄປລຳໄປເຜີຍແຜ່ນັ້ນ ມາຮອດດຽວນີ້ກໍຈະເຖົ້າແກ່ໄປແລ້ວ. ພວກເຮົາມີໜ້າທີ່ນຳຄົ້ນຄວ້າສືບຮູ້ ເພື່ອຂຸດຄົ້ນມາຊົມໃຊ້.

ປີ ໑໙໕໗ ເຮົາໄດ້ພົບເພິ່ນຢູ່ບາງກອກ ເພິ່ນໄດ້ໄປນຳຄະນະລັດຖະບານ ອິດສະລະ ໃນຖານະເປັນທີ່ປຶກສາ ເພິ່ນຍັງສືບຕໍ່ຮຽນການວັນນະຄະດີ ຄົ້ນຄວ້າປະຫວັດສາດ ອັກສອນສາດຂອງເພິ່ນ.

ກັບເຂົ້າມາວຽງຈັນປີ ໑໙໕໗ ໃນການເຈລະຈາຮວມລາວ ພວກເຮົາມີໂອກາດໄດ້ຕ້ອນຮັບທ່ານອາຈານໃນຊ່ວງເວລາສັ້ນໆ ກໍຕາມ ເພິ່ນກໍໄດ້ໃຊ້ເວລານັ້ນ ສໍ້ຖາມເພື່ອເປັນປະໂຫຍດໃຫ້ແກ່ວຽກຂອງເພິ່ນ.

ດັ່ງນັ້ນພວກເຮົາເຫັນວ່າ ຜົນງານຂອງເພິ່ນແມ່ນມີຄວາມສຳຄັນ ເຮົາບໍ່ຄວນ ນອງຂ້າມ ຕ້ອງຂຸດຄົ້ນໃຫ້ໄດ້ຫລາຍເທົ່າໃດແຮງເປັນການດີ. ຂ້າພະເຈົ້າເຫັນວ່າ ຄວນຄົ້ນຄວ້າຕື່ມ.

ຂໍໃຫ້ທີ່ປະຊຸມ ຕັ້ງເປັນບັນຫາຂຶ້ນ ຍັງມີຜູ້ຈື່ຈຳບົດກອນລຳຂອງເພິ່ນບໍ່? ຊິໄດ້ຂໍ້ມູນມາເພີ່ມຕື່ມອີກ. ຂອບໃຈ

ການຄົ້ນຄວ້າ ສຶກສາ ວັດທະນະທຳ ສອງຝັ່ງຂອງ ຂອງ ມະຫາ ສີລາ ວີຣະວົງ

● ຈາລຸວັນ ທຳມະວັດ

ອາຈານ ມ.ສ.ວ. ສາຣະຄາມ

ປະເດັນທີ່ຂ້າພະເຈົ້າ ຈະຂໍແລກປ່ຽນກັບພີ່ນ້ອງຄື ເລື່ອງ ມະຫາ ສີລາ ກັບການ ສຶກສາ ວັດທະນະທຳ ສອງຝັ່ງຂອງ.

ກ່ອນອື່ນເຮົາຢາກຕົກລົງກັນ ດ້ານຄວາມໝາຍຂອງວັດທະນະທຳຈັກໜ້ອຍ ເພື່ອ ຈະໄດ້ແນມເບິ່ງວ່າ ຜົນງານຂອງທ່ານອາຈານກວ້າງແຄບສ່ຳໃດ.

ວັດທະນະທຳ ຄວາມໝາຍທາງເມືອງໄທ ເພິ່ນໄດ້ໃຫ້ຄວາມໝາຍກວ້າງ- ແຄບ ຢູ່ສອງທາງ. ບາງຄົນບອກວ່າ ວັດທະນະທຳ ຄືສິ່ງສະແດງເຖິງຄວາມຈຳເລີນງອກ ງາມ ໝາຍຄວາມວ່າ ອັນໃດດີ ຖືວ່າເປັນວັດທະນະທຳ ໃນອີກຄວາມໝາຍໜຶ່ງ ວັດທະນະທຳ ຄວາມໝາຍກວ້າງໝາຍເຖິງວິຖີຊີວິດ.

ຖ້າເຮົາມາສອດສ່ອງເບິ່ງຜົນງານຂອງມະຫາ ສີລາ ເຮົາຈະເຫັນໄດ້ວ່າ ຄວາມ ໝາຍຂອງວັດທະນະທຳ ບໍ່ວ່າ ກວ້າງຫລືແຄບ ກໍ່ຄອບຄຸມຜົນງານຂອງເພິ່ນ ບໍ່ວ່າສິ່ງ ຈະ ສະແດງເຖິງຄວາມງອກງາມ ເຮົາຈະເຫັນວ່າ ຜົນງານຂອງອາຈານຫລາຍໆອັນ ເຖິງຂັ້ນ ສະແດງເຖິງອະລະຍະທຳ ຫລືວ່າ ສີວິໄລຂອງຍາດພີ່ນ້ອງສອງຝັ່ງ ເລື່ອງຂອງອັກ ສອນ ສາດ ແລວຂ້າພະເຈົ້າບໍ່ເຄີຍເຫັນ ວັນນະກຳຂອງຄົນໃດທີ່ຈັດລະບຽບໄດ້ລົງໂຕ ເປັນແບບ ແຜນຂອງການກອນທາງຝັ່ງລາວ ຄືອາຈານມະຫາສີລາ.

ຂໍຍົກຕົວຢ່າງເປັນແຕ່ລະປະເພດ.

ຕົວຢ່າງໃນແງ່ຂອງວັນນະຄະດີມະຫາກາບ ຄື ເລື່ອງທ້າວຮຸ່ງ ທ້າວເຈືອງ ນັກ ວິຊາການທັງໄທ ທັງລາວ ທັງຕ່າງປະເທດ ເຫັນດີກັນວ່າ ທ້າວຮຸ່ງ ທ້າວເຈືອງ ຍິ່ງໃຫຍ່

ກວ່າມະຫາພາລະຕະ ແລະ ລາມມະກຽນ ໃນແງ່ຄວາມຍາວ ແລະ ລັກສະນະຂອງຄຳປະພັນຫລາກຫລາຍດັ່ງເດີມ.

ແຕ່ວ່າທາງຝັ່ງພຸ່ນກໍ່ຄືອາຈານຢູ່ບ່ອນໜຶ່ງວ່າ ໃນຕຳລາຮຽນຂອງພາສາໄທ ເກົ່າແກ່ ທີ່ສຸດ ຄືຈິນດາມະນີຂຽນໃນສະໄໝສົມເດັດພະນາລາຍ ເຂົາຢືນຢັນວ່າ ໂຄງທັງຫຼາຍ ແມ່ນລາວເປັນຜູ້ແຕ່ງ ເຂົາຈະດັດແປງອັນໃດກໍ່ວ່າດັດແປງຍາກ ເຖິງຂັ້ນວ່າໄໝ້ນ ຂຽນວ່າ ປ່ຽນແປງຮ່າງຮ້ຽຍາກແທ້ ໂຄງລາວນີ້ແຫຼະ.

ດິນທີ່ເອີ້ນດິນລາວ ມີທັງລາວລານຊ້າງ ລານນາ. ແຕ່ອາຈານຜັດດັ້ງຊື່ວ່າ ໂຄງ ວິຊຸມາລີ ໂຄງມະຫາສິນທຸມາລີ ຄືດັ້ງຊື່ໃຫ້ກຽດແກ່ແຂກໝົດ ທີ່ຈິງໂຄງນີ້ ຕ້ອງຍອມຮັບວ່າ ເປັນຂອງໄທ - ລາວ ເພາະທາງໄທ ຖາແບບຄຳປະພັນໂຄງສັນກາບກອນ ຈະບອກເລີຍ ວ່າ ກຳເນີດໂຄງນີ້ເປັນເລື່ອງຂອງລາວ ແມ່ນແຕ່ຈິດພູມີສັກ ກໍ່ບອກວ່າ ນັກປາດອາຈານທີ່ ທານຮຽນທາງບາລີນັ້ນຈັບໂຄງບວດໝົດ.

ນັກປາດທາງອີສານ ເວົ້າວ່າ ເລື່ອງນີ້ ເປັນໂຄດຂອງພາສາ ໝາຍວ່າ ເປັນຕົ້ນ ເຄົ້າເຫງົ້າກໍ ພາສາ ທີ່ເກົ່າທີ່ສຸດ ໃນທ້າວຮຸ່ງທ້າວເຈືອງ.

ໃນເລື່ອງສັງສິນໄຊ ຈະເປັນແບບໜຶ່ງ ທ້າວຮຸ່ງທ້າວເຈືອງກໍເປັນແບບໜຶ່ງ.

ໃນສັງສິນໄຊ ມີຄວາມຍິ່ງໃຫຍ່ ເປັນວັນນະຄະດີເອກໃນແງ່ນິທານ ປະໂລມໂລກ ປະໂລມໃຈ ອານແລວນອນອອນຊອນ ໃນຂະນະທີ່ມະຫາກາບທ້າວຮຸ່ງທ້າວເຈືອງອາດແລວ ເຮົາໄດ້ຮັບຄວາມພາກພູມໃຈໃນວິລະກຳ.

ດັ່ງນັ້ນ ຖາຈະຖາມວ່າ ວັນນະກຳເອກຄືຫລາຍແທ້ ? ອັນນີ້ກໍຍັງຕ້ອງຈຳແນກ ຄືນ ອີກວ່າ ເຮົາຈະແນະແບບໃດ ເຮົາຈະແນະແບບພາບລວມ ຫລື ສະເພາະ.

ທ່ານອາຈານໄດ້ບັນທຶກໄວ້ ຖາເປັນນິທານແບບປະໂລມໂລກປະໂລມໃຈ ຕ້ອງ ຍົກ ໃຫ້ສັງສິນໄຊ ຍົກໃຫ້ເໜືອ ກາລະເກດ ເປັນແບບແຜນຂອງວັນນະຄະດີປະໂລມໂລກ.

ໃນວັນນະກຳປະເພດຄຳສອນ ຄືສຽວສະຫວາດ ເປັນເອກ ແລະ ທ່ານ ອາຈານ ແຕ່ງໄດ້ແຕກຕ່າງຂອງຝັ່ງໄທ ບ່ອນທີ່ວ່າ ລັກສະນະຄຳປະພັນ ອາຈານແຕ່ງຄືເທດລົງທ້າຍ ແລງ ເຊິ່ງທາງນັ້ນເອີ້ນວ່າ ກອນແຫຼ.

ອີກຫລາຍໆ ສະບັບ ທີ່ຢູ່ຝັ່ງໄທ ຂ້າພະເຈົ້າໄດ້ສຶກສາປຽບທຽບກັນ ເຮັດໃຫ້ ເຮົາໄດ້ພາບຈັດເຈນ ແລະ ເຫັນໄດ້ແຈງວ່າ ສຳນວນຂອງທ່ານອາຈານ ມະຫາສີລາ ເປັນເອກ.

ເຖິງວ່າ ອ້າຍຄຳແພງບອກວ່າ ອາຈານແບ່ງງານຂຽນເປັນ ສາຍໆວິທະຍາ ນິພົນສ່ວນໜຶ່ງທີ່ເປັນງານຂຽນທີ່ມຸ້ງທາງຄວາມຮູ້ ແລະ ໃນອີກສ່ວນໜຶ່ງແມ່ນເປັນສິລະປະ ນິພົນ ໝາຍເຖິງລັກສະນະມຸ່ງຄວາມຮູ້ສຶກໃນທາງອາລົມທາງຈິດໃຈ ແຕ່ວ່າງານຂອງ ນັກປາດອາຈານ ຫລື ນັກກະວີ ທັງຫລາຍ ຖ້າມີເຖິງແລ້ວມັນໃຫ້ໄດ້ທັງສອງດ້ານພ້ອມໆ ກັນ ເປັນຄວາມງາມຂອງທັງຖ້ອຍຄຳ ແລະ ທັງເນື້ອຫາ ເຊິ່ງໄດ້ທັງສອງອັນ ເລີຍກາຍ ເປັນສາລະບັບເທິງ ຂຶ້ນຢູ່ນຳນັກຂຽນແຕ່ລະຄົນ ເຊິ່ງເລື່ອງສຽວສະຫວາດຂອງມະຫາສີລາ ກໍ່ເປັນຈັ່ງຊັ້ນແທ້.

ໃນນິທານທີ່ທ່ານອາຈານໄດ້ພື້ນຖານມາຈາກ ວັນນະຄະດີຝ່າຍສັນສະກິດ ນິທານນາງຕັນໄຕ ທີ່ເອົາມາຈາກປັນຈະຕັນຕະ ຫລືຫິໂຕະປະເທດ ຫລືຜົນງານຫລາຍໆສ່ວນ ທີ່ເປັນວັນນະກຳຄຳສອນ.

ທີ່ໜ້າສົນໃຈຜົນງານສ່ວນນີ້ ສະແດງເຖິງວັດທະນະທຳໃນຄວາມໝາຍ ຄວາມຈະເລີນງອກງາມ .

ມີຜົນງານຂອງອາຈານ ໃນສ່ວນໜຶ່ງຕອບຄວາມເປັນມະນຸດ ຄວາມເປັນ ຄົນລາວ ວ່າມີວັດທະນະທຳ ເປັນຂອງຕົນເອງ ນັ້ນຄືຜົນງານໃນທາງພາສາ ກັບໃນທາງຄະຕິຊົນ ວິທະຍາ ຫລືຄະຕິຊາວບ້ານ ເປັນວິຊາທີ່ວ່າດ້ວຍວິຖີຊີວິດຂອງປະຊາຊົນຢ່າງທີ່ທ່ານອາຈານ ໄດ້ຂຽນເຖິງປະເພນີຊີວິດຕ່າງໆ ຂອງໝູ່ເຮົາເຈົ້າຂ້ອຍ ຂຽນແຕ່ມື້ເກີດເຖິງມື້ຕາຍໝາຍ ເຖິງວິຖີຊີວິດ ແຕ່ເກີດຈົນຕາຍ.

ຄິດວ່າ ອີກມື້ໜຶ່ງ ທ່ານອາຈານໜ້າຈະໄດ້ເປັນນັກປາດຂອງໂລກເຊັ່ນດຽວກັບພະ ຍາອະນຸມານລາຊະທົນ.

ເຮົາຈຳເປັນຕ້ອງເຂົ້າໃຈວ່າ ເວົ້າໃນກຸ່ມຂອງເຮົາ ເຮົາໃຊ້ສັບນີ້ ແລະເມື່ອເຮົາ ຈະເວົ້າກັບສາກົນ ເຮົາໃຊ້ສັບໂຕນັ້ນ.

ຖ້າເພິ່ນຫາກຖືກຍົກລະດັບ ຂຶ້ນຄືແນວນັ້ນ ບໍ່ໝາຍຄວາມວ່າໄດ້ແກ່ມະຫາສີລາ ແຕ່ວ່າໄດ້ແກ່ກຽດຕິພູມຂອງລາວວ່າບໍ່ໄດ້ຕ່ຳຕ້ອຍຫນ້ອຍຫນ້າຊາດອື່ນໆ ໃນໂລກ ເປັນກຸ່ມຊົນທີ່ສ້າງວັດທະນະທຳຂອງຕົນໄດ້ ໃນສ່ວນນີ້ ຜົນງານຂອງທ່ານອາຈານຕອບໄດ້ ວິຖີ ຊີວິດຂອງຄົນລາວ ທັງສອງຟັ່ງຂອງແມ່ນແຕ່ລານນາກໍ່ຍັງໄດ້ສຶກສາ ສຳຄັນທີ່ສຸດ ຄື ຮີດສິບສອງຄອງສິບສີ່ .

ອີກປະເດັນຫນຶ່ງທີ່ຫນ້າສົນໃຈ ຄືຜົນງານໃນແງ່ຂອງປະຫວັດສາດ ຖ້າເວົ້າແຄບ ຄື ປະຫວັດສາດຂອງຊາດລາວ ອາຈານໄດ້ຂຽນຕັ້ງແຕ່ປະຫວັດສາດສະໄຫມກ່ອນໆ ແຜ່ນດິນແຜນຟ້າຍັງຕໍ່ກັນຢູ່ດ້ວຍເຄືອເຂົາກາດ ຈົນມາເຖິງປະຫວັດສາດຮ່ວມສະໄຫມໃນສະໄຫມກຸງລັດຕະນະໂກສິນ.

ຂ້າພະເຈົ້າ ເຂົ້າໃຈເຖິງຄວາມຂົມຂື່ນທັງຫລາຍຂອງທ່ານອາຈານ ເຊິ່ງເປັນ ສິ່ງຜັດດັນໃຫ້ເພິ່ນ ພະຍາຍາມສ້າງຜົນງານທີ່ເປັນເອກະລັກຂອງຊາດລາວຂຶ້ນມາ.

ອີກດ້ານຫນຶ່ງ ທ່ານອາຈານຍັງໄດ້ຂຽນປະຫວັດສາດຂອງເມືອງໃຫຍ່ໆ ໄວ້ເຊັ່ນ ຫລວງພະບາງ, ວຽງຈັນ, ຈຳປາສັກ ຜົນງານຊຸດນີ້ ພາສາທີ່ໃຊ້ງ່າຍຂຶ້ນ ເພາະຂຽນໃນສະໄຫມປະຈຸບັນ ເຊິ່ງແຕກຕ່າງກັບປຶ້ມປະຫວັດສາດລາວເຫລັ້ມໃຫຍ່ທີ່ມີໂຄງສ້າງປະໂຫຍກຍາວຕິດຄຳບາລີສັນສະກິດຢ່າງແທ້ຈິງ ມາເບິ່ງປະຫວັດສາດເມືອງແລ້ວພາສາແມ່ນ ແບບລາວປະຈຸບັນ.

ນອກຈາກປະຫວັດສາດຂອງກຸ່ມລາວແລ້ວ ຂໍ້ທີ່ຫນ້າສົນໃຈກໍ່ຄືປະຫວັດສາດຂອງຊາດຕິດພັນ ທີ່ອາໄສໃນສຸວັນນະພູມສອງຝັ່ງຂອງ ລອງອ່ານເບິ່ງໃນພື້ນຂຸນບູລົມ ແລະ ວິເຄາະເບິ່ງ ຈຸດມຸ່ງຫມາຍການສ້າງຜົນງານຂອງອາຈານ ບໍ່ແມ່ນຈະສ້າງເພື່ອຊື່ສຽງ ກຽດຕິຍົດຂອງຕົນຢ່າງດຽວ ອາຈານມີຈຸດມຸ່ງຫມາຍໃຫ້ມວນມະນຸດຊາດຮັກແພງກັນ ເພາະ ອາຈານຢືນຢັນວ່າ ທຸກຄົນເປັນລູກຫລານຂອງຂຸນບູລົມ ໄປສ້າງເມືອງນັ້ນເມືອງນີ້ ດັ່ງນັ້ນພື້ນຂຸນ ບູລົມເປັນປະຫວັດສາດຂອງຊາດຕິດພັນບໍ່ແມ່ນປະຫວັດສາດ ຄືເຮົາຂຽນສະໄຫມໃຫມ່ເປັນປະຫວັດສາດແບບຕຳນານ ດັ່ງນັ້ນເຮົາຕ້ອງໄດ້ເອົາມາຕອງເອົາຄວາມຈິງ ຖ້າເຮົາຈະສຶກສາບູຮານຄະດີທາງປະຫວັດສາດວ່າ ປະຫວັດສາດ ໃນຕຳນານ ກັບປະຫວັດສາດໃນວັນນະຄະ

ດີນັ້ນມີຄວາມຈິງຢູ່ພຽງໃດ ຈິງເຣື່ອງຈິນຕະນາການເຣື່ອງ ຫລື ວ່າອິດທິລິດປະຕິຫານ ນຳໄປເຣື່ອງ ນີ້ເປັນຫນ້າທີ່ເຮົາຈະຕ້ອງຄົ້ນຄວ້າທຳມະຊາດຂອງຕຳນານ ແລະ ທຳມະຊາດ ຂອງວັນນະຄະດີ ປະຫວັດສາດ ນັກປະຫວັດສາດທີ່ບໍ່ເຂົ້າໃຈ ທຳມະຊາດຂອງຕຳນານ ແລະທຳມະຊາດຂອງວັນນະຄະດີ ຢ່າງລະອຽດຖີ່ຖ້ວນ ຈະມາຕີຄວາມຫມາຍວ່າ ຈິງເຣື່ອງຕົວະເຣື່ອງກໍ່ບໍ່ແມ່ນ ເພາະຜູ້ຂຽນໃຊ້ປະຫວັດສາດເປັນແຮງບັນດານ ຄື ໂນທະກໍ່ອາດຈະພັນລະ ນາອອກມາ ບາງເທື່ອຄວາມຈິງມີສ່ຳຫນຶ່ງ ອາດຈະພັນລະນາເພີ່ມຕື່ມອີກກໍ່ມີ ດັ່ງນັ້ນ ຢາກສຶກສາ ເອົາຄວາມຈິງຕ້ອງໄດ້ຄົ້ນຄວ້າກວດສອບກັບສາດອື່ນ ຫລັກຖານອື່ນ ນີ້ ຄືການດຶງເອົາຄ່າອອກຈາກພົນງານນີ້.

ທີ່ສຳຄັນທີ່ສຸດ ໃນໂຕປະຫວັດສາດທາງສາສະຫນາ ທ່ານອາຈານກໍ່ໄດ້ຂຽນໄວ້ຢ່າງຈັດເຈນ ໃນແງ່ຂອງຕຳນານອຸລັງຄະນິທານ ຕົວຢ່າງ ພະທາດພະນົມ ທາງຫນຶ່ງພີ່ນ້ອງທາງນີ້ ສ້າງທາງຫນຶ່ງພີ່ນ້ອງທາງນັ້ນສ້າງ ທາງຫນຶ່ງອີກພີ່ນ້ອງທາງອື່ນສ້າງ ຜູ້ເອົາດິນ ຈີ່ດິນເຜົາມາ ຜູ້ຕໍ່ຍອດຂຶ້ນຈັ່ງຊັ້ນຈັ່ງຊີ້ ນັ້ນຄືປະຫວັດສາດຂອງຊາດຕິດພັນ ທີ່ອາຈານ ຢືນຢັນມີພຸດທະສາສະຫນາເປັນສິ່ງເຊື່ອມໂຍງ ແມ່ນວ່າເຮົາຜູ້ມີຄວາມຮູ້ສູງຈະບໍ່ນັບຖື ແຕ່ ປະຊາຊົນໄທບ້ານແມ່ນນັບຖື ເປັນສິ່ງຢຶດຈິດໃຈແມ່ນຈະຂົ່ມເຫັງບັງຄັບປານໃດ ເຂົາເຈົ້າກໍ່ຍັງນັບຍັງໄຫວ້.

ນອກຈາກນັ້ນ ປະຫວັດຂອງພະພຸດທະຮູບອົງສຳຄັນ ວັດສຳຄັນ ທ່ານອາຈານ ໄດ້ຂຽນໄວ້ຫມົດ ໃນຂະນະທີ່ທາງເມືອງໄທກໍ່ຢາກຂຽດປະຫວັດສາດໃນລັກສະນະນີ້ ຄືກັນ ວ່າວັດແຕ່ລະອັນ ພະພຸດທະຮູບແຕ່ລະອົງມີຄວາມເປັນມາແນວໃດ ທ່ານອາຈານໄດ້ຂຽນ ປະຫວັດຂອງພຸດທະສາສະຫນາ ເຊັ່ນດຽວກັນກັບນັກປາດລານນາ ໄດ້ຂຽນຈາມະເທວີວົງ ຊິນນະການມາລີປະກອນ ແຕ່ວ່າອາຈານຂຽນຕາມຂໍ້ມູນຂອງທາງນີ້ສຳຄັນນັ້ນໄດ້ຕອບ ຄວາມສົມບູນຂອງສິ່ງທີ່ສຶກສາ.

ອີກປະເດັນຫນຶ່ງ ໃນງານຂອງອາຈານມະຫາສີລາ ຕອບວັດທະນະທຳຂອງກຸ່ມຊາດລາວ ກຸ່ມຊາດອິນດູຈີນກັບກຸ່ມຊາດໃນແຫລມສຸວັນນະພູມ ຖາເຮົາສຶກສາໃນລັກສະນະ ເປັນການວິເຄາະ ຈຳແນກໃນສະເພາະສັງຄົມລາວ ຈຳແນກເຂົ້າໄປພົນງານຂອງມະຫາ ສີລາ

ກໍຈະຕອບວັດທະນະທຳຂອງຄົນຢູ່ ມີ ປະເພດ ນຳກັນ ຄືຕອບວັດທະນະທຳຂອງກຸ່ມ ຜູ້ນຳ ຕອບວັດທະນະທຳຂອງພະສົມມະນະໃນທາງສາສະໜາ ແລະ ຕອບວັດທະນະທຳຂອງ ຊົນ ທຳມະດາ.

ຍົກຕົວຢ່າງ ຜົນງານຂອງທ່ານ ອາຈານ ມີຈຸດມຸ້ງໝາຍຊື່ສານກັບຊົນຊັ້ນນຳ (ຜູ້ປົກຄອງ) ກໍຄືວັນນະກຳ ໃນລັກສະນະວັນນະກຳຄຳສອນ ເຊັ່ນ ເລື່ອງສຽວສະຫວາດ - ທຽບໃສ່ຄົນມະໂຫສົດ ບັນດິດ ຄົນຜູ້ໜຶ່ງ ທຳໜ້າທີ່ໃນການເປັນທີ່ປຶກສາກະສັດ ໄດ້ໃຫ້ ຄຳແນະນຳທາງດ້ານການປົກຄອງບ້ານເມືອງ ຫຼັກນິຕິສາດ ທີ່ອາຈານ ພະຍາຍາມ ສື່ສານກັບກຸ່ມຄົນທີ່ເປັນຂາລາຊະການ ຖາຖາມວ່າໄດ້ຖືກນຳໃຊ້ບໍ່ ? ກໍເຫັນວ່າ ຖືກນຳໃຊ້ຢູ່ ຖາເຮົາຖາມຄົນ ລູກຫຼານຊຸບັນວ່າ ຄຳນີ້ໃຜບອກໃຜສອນກໍ່ໄດ້ຮັບຄຳຕອບວ່າ ພະວໍ ພະຕາ ແຕ່ປູ່ແຕ່ປູ່ ຖາສືບມາແລວ ພະວໍພະຕາ ເຮັດຢູ່ຝັ່ງນີ້ ຄຳວ່າ ພະວໍພະຕາ ໝາຍເຖິງ ວ່າ ຂອງເກົ່າ ທີ່ໄປຈາກຝັ່ງນີ້.

ຖາຖາມວ່າ "ໄມ້ລຳດຽວລ້ອມຮົ້ວບໍ່ໄດ້ ໄຜ່ບໍ່ພອມ ແປງບ້ານມາເຮືອງ" ມາຈາກໃສ ກໍຈະໄດ້ຮັບຄຳຕອບວ່າມາແຕ່ "ປູ່ສອນຫຼານ - ຫຼານສອນປູ່ "

ຄືໃນເລື່ອງສັງສິນໄຊ ຕອນສິນໄຊສອນພະຍາບາກ ຈຳເປັນຄືກັນວ່າເຮົາຕ້ອງ ກົ້ມເບິ່ງວ່າມັນສາມາດນຳມາໃຊ້ໃນສະໄໝປັດຈຸບັນບໍ່ ເມື່ອເຮົາມີການຈັດຕັ້ງທີ່ປ່ຽນແປງໄປ.

ດັ່ງຄຳສອນຂຽນວ່າ .

ເມື່ອນັ້ນ ສິນໄຊທາວ	ຊົງທຳຕັ້ງແຕ່ງ
ສອນສັ່ງເຈົ້າ	ພະຍານກ້ນາກຄຳ
ເທື່ອນີ້ເຮົາຈິງປຸ້ນແປງໄວ້	ເປັນພະຍາຊົງແທ່ນ
ໜອນໄພ່ ຊຸ້ມຂອບຟ້າ	ຟັງຖອນທ່ອນນະຄອນ ແທ້ເນີ
ເຖິງເມື່ອເດືອນຕົກໃຕ້	ປະຫວັນຫຽວຫຼາຍແຫ່ງ
ລຽງໝູ່ໝາຍແລະຂາງ	ຂອນໄຂຂະໜອດຂໍ ແທ້ເນີ
ອັນວ່າ ໂຍເທດທາວ	ທຸກທີ່ແດນດິນ
ໃຫ້ຂຳ ປີປາຍເໝືອນ	ຂາກຂອງພາຍພົ້ນ

ຝູງຫມູ່ເສນາເຫນົ້າ ນິຕຸນຮອງປະເສີດ
ໃຫຊ່າງເລືອກຜູແກວ ປຸນໄວ້ຄົ່ງລຳ
ຝູງຫນຶ່ງອຳນາດນອຍ ເອົາແອບຕາງຕາງ
ປຸນຄົ່ງເປັນສາຂາ ງ່າງາມລະວັງໄວ
ອີງກະສັດໄທ ເປັນຈອມຍັງຍອດ
ລະດູແຜ່ຜົ້ງ ພົນລົ້ນຈຸ່ມເທິງ
ຣົດແຜ່ຝົ້ງ ຕະລົບທົ່ວແດນດິນ
ພິງຄະນາສັດ ຊອບຊິນຊຸມເອົ້າ
ອັນນີ້ ຍະຖາແທ້ ທຳນຽມປຸນປຽບ ຈິ່ງແລ້ວ
ຣັນວ່າຮາກບໍ່ຫມັ້ນ ພາຕົ້ນຕຸ່ມຕາຍ ແທແລວ

ຂ້າພະເຈົ້າປະທັບໃຈຄືທ່ານປຽບສັງຄົມ ຄືຕົ້ນໄມ້ ແລ້ວປະຊາຊົນເປັນຮາກ ເສນາອາມາດເປັນລຳຕົ້ນກິ່ງກ້ານ ກະສັດຫລືຜູ້ນຳເປັນພຽງຍອດ ຕົ້ນໄມຖາບໍ່ມີຮາກກໍ່ຕາຍ ຄືກັນ.

ອັນນີ້ກໍ່ເປັນສິ່ງທີ່ເພີ່ນສອນ ໃນເລື່ອງຂອງຄວາມເປັນຜູ້ນຳ ຜູ້ນຳບໍ່ໄດ້ຢູ່ເພື່ອຄວາມສົມບູນຂອງໂຕເອງ ແຕ່ຢູ່ເພື່ອຄວາມສົມບູນຂອງສັງຄົມ ໃຫ້ຕະຫນັກສະເຫມີ.

ອີກປະການຫນຶ່ງ ຄືພົນງານຂອງອາຈານຮັບໃຊ້ຄົນທົ່ວໄປ ຖາເຮົາໄປອ່ານໃນ ອົນທິຍານສອນລູກ ສອນຜູ້ຍິງ ສອນວ່າລູກແມ່ຍິງເກີດມາແລວຈະຄອງຕົນຮັກສາຕົນຄືແນວໃດ.

" ເຮືອນບໍ່ມີສີຫນາ ກາບິນມາຫາກຊິ່ລວງ "

ສຳຄັນທີ່ສຸດ ການເລືອກຄູ່ຄອງ ຄວາມດູຫມັ່ນໃນການສ້າງຢູ່ທຳກິນຕ່າງໆ ນີ້ຄືການສອນຄົນທຳມະດາ.

ເວົ້າແທ້ ວັນນະກຳປະເພດຄຳສອນນີ້ຫນາຈະໄດ້ຮັບການຮື້ຟື້ນມາໃຊ້ໃຫ້ຫລາຍທີ່ສຸດ ເພາະວ່າບໍ່ວ່າສັງຄົມຈະເປັນແນວໃດ ກໍ່ຕ້ອງການຄົນທີ່ມີອຸດົມຄະຕິແບບນັ້ນ ຂ້າພະເຈົ້າ ເຄີຍໄດ້ລອງນຳໄປໃຊ້ນຳໄທບ້ານ ໃນການເຮັດວຽກພັດທະນາຊົນນະບົດ ປາກົດວ່າ ຜູ້

ເຖົ້າຫຼາຍຄົນຍັງຈຳໄດ້ດີ ແຕ່ຄົນຮຸ່ນນ້ອຍແມ່ນບໍ່ຮູ້ ຮູ້ແຕ່ຂອງໃໝ່ ທັງທີ່ວ່າຂອງເກົ່າເຫຼົ່ານີ້ຍັງດີ ມີປະໂຫຍດຕໍ່ສັງຄົມຢູ່ ອັນນີ້ມັນເກີດຈາກການພັດທະນາ ທີ່ບໍ່ໄດ້ຕໍ່ຍອດກັບອັນເກົ່າ. ເຊິ່ງແຕກຕ່າງກັບຊົນຊັ້ນຕ່າງໆ ທີ່ຢູ່ຫ່າງໄກຈາກສອງຝາກຖະໜົນ ເຂົາມີຄວາມສຸກໃນການເຮັດບຸນເຂົ້າຈີ່ ມີຄວາມສຸກໃນການທຳບຸນພະເວດ ສິ່ງນີ້ຍັງມີຄວາມໝາຍ ໃນລະດັບຊຸມຊົນ ຊົນນະບົດຢູ່.

ແມ່ນແທ້ ຄຳສອນຕ່າງໆ ນີ້ ທ່ານອາຈານມະຫາສີລາ ບໍ່ໄດ້ແຕ່ງເອງ ແຕ່ຖ້າເພິ່ນບໍ່ຮິບບໍ່ໂຮມ ບໍ່ເກັບບໍ່ຫອມໄວ້ ຫຼືລິດຈະນາອອກມາໃຫ້ພວກເຮົາແລ້ວມັນກໍ່ຈະບໍ່ຍັງໃຫ້ພວກເຮົາໄດ້ຮູ້ໄດ້ສຳຜັດ ສະນັ້ນ ຖືວ່າ ເພິ່ນມີບຸນຄຸນຕໍ່ພວກເຮົາຢ່າງຫຼວງຫຼາຍ ສຳກັບ ພະຍາອະນຸມານລາຊະທົນໄດ້ສ້າງ ຫໍສະໝຸດແຫ່ງຊາດ ສ້າງກົມວັນນະຄະດີ.

ຜົນງານຂອງເພິ່ນທີ່ຕອບພະ ເພາະທ່ານອາຈານສອນໃຫ້ເຮັດບຸນ ເຮັດທານ ສ້າງວັດສ້າງວາ ເຊິ່ງດຽວນີ້ກໍ່ຍັງມີຄວາມໝາຍ ຕໍ່ຊີວິດຈິດໃຈຂອງມວນຊົນຢູ່.

ຈະບອກວ່າ ສັງຄົມແບບເກົ່າ ເປັນສັງຄົມແບບຈາຮີດປະເພນີກໍ່ໄດ້ ບໍ່ໄດ້ເປັນ ສັງຄົມລາວ ຫຼືສັງຄົມອີສານບໍ່ໄດ້ຮັບຈາກສາກົນ.

ນັກປະຫວັດສາດເມືອງໄທຈັດຍຸກສະໄໝວ່າ ອີສານຍຸກວັດທະນະທຳ ແບບລ້ານຊ້າງ ອີສານ ຍຸກວັດທະນະທຳກຸງເທບ ແຕ່ຂ້າພະເຈົ້າຈັດວ່າ ເປັນອີສານແບບຮີດເກົ່າ - ຄອງລາວ, ຮີດເກົ່າຄອງໄທ ແລະ ຮີດໃໝ່ຄອງສຳມະປີສຳມະພັນ.

ຜົນງານຂອງທ່ານອາຈານ ຕອບວັດທະນະທຳ ປະຫວັດສາດຍຸກລາວ ລ້ານຊ້າງ ເພິ່ນບໍ່ໄດ້ດອນຊອນ ວັດທະນະທຳແບບທັນສະໄໝແບບມາຈາກຕາເວັນຕົກແຕ່ຢ່າງໃດ.

ສະຫຼຸບວ່າ ຈາກການທີ່ໄດ້ສຶກສາຜົນງານທັງໝົດຂອງເພິ່ນແລ້ວ ລັກສະນະ ວັດທະນະທຳປະກົດໃນຜົນງານຂອງທ່ານອາຈານຕອບຢູ່ ໓ ປະການ.

ປະການທີໜຶ່ງຕອບວ່າ ສັງຄົມຂອງເຮົາເປັນສັງຄົມພຸດທະສາດສະໜາ.

ປະການທີສອງຕອບວ່າ ສັງຄົມຂອງເຮົາ ເປັນສັງຄົມກະເສດຕະກຳ ຫາຢູ່ ຫາກິນ ຜະລິດເອງໃຊ້ເອງບໍ່ໄດ້ຊື້ຂາຍພໍປານໃດ.

ປະການຕໍ່ໄປ ຕອບສັງຄົມແບບຈາຮີດປະເພນີ ຮີດສິບສອງຄອງສິບສີ່ ຖ້າເປັນ ອາ

ຈານ ອາດຈະບອກວ່າຮີດສິບສອງຄອງຊາວສີ່ ຕາມຂໍ້ພິຈາລະນາ ເຊິ່ງເພິ່ນມີຄວາມ ເຫັນຂອງເພິ່ນ ທ່ານອາຈານບອກວ່າ ຈາຮີດປະເພນີຂອງເຮົາບໍ່ໄດ້ເລີ່ມຈາກພຸດທະສາດ ສະໜາ ເລີ່ມຕົ້ນຈາກການເຊື່ອ ອຳນາດເໜືອທຳມະຊາດ ພີຟ້າ ພີແຖນ ມີການອ້ອນຊ່ອນບູຊາ ສະແດງວ່າທຸກຢ່າງມີເຈົ້າປົກປັກຮັກສາ ຈຳເປັນຕ້ອງຖະນຸຖະໜອມ ໃຊປະໂຫຍດຢ່າງລະມັດລະວັງ ອັນເປັນສິ່ງປາກົດຂ້ອນຂ້າງຊັດເຈນ ໃນຮີດສິບສອງ ທ່ານອາຈານ ຍືນຢັນວ່າມີຄຶດການລ້ຽງຜີ ບັນພະບຸລຸດ ຄັນບໍ່ລ້ຽງຜີ ບັນພະບຸລຸດຍາດພີ່ນ້ອງຈະບໍ່ໄດ້ມາຕຸ້ມ ມາໂຮມ ການມາເຕົ້າມາໂຮມກັນນັ້ນເຮັດໃຫ້ເຮົາໃຊ້ຊີວິດແບບເພິ່ງກັນເອງ ນັ້ນຈຶ່ງມີສ່ວນ ມີປະໂຫຍດ.

ໃນສ່ວນພົນງານຂອງທ່ານອາຈານ ຈາຮີດປະເພນີ ບໍ່ໄດ້ໝາຍເຖິງພຸດໝາຍເຖິງຜີ ຜີບັນພະບຸລຸດ ຜີນ້ຳ ຜີຫ້ວຍ ຜີໜອງ ຜີມະເຫສັກຫລັກເມືອງ ຖ້າເຮົາໄປວິເຄາະຈາຮີດປະເພນີໃນ ໑໒ ເດືອນ ແຍກອອກມາ ຈະຕອບໄດ້ຊັດເຈນວ່າເປັນວັດທະນະທຳ ໃນສ່ວນໃດ ນີ້ຄືຂໍ້ສະຫລຸບຈາກພົນງານການສຶກສາຂອງທ່ານອາຈານ ຖ້າມອງໃນແງ່ວັດທະນະທຳ ໃນຄວາມໝາຍ ໝາຍເຖິງວິຖີຊີວິດ ຄອບຄຸມໃນຫລາຍປະເດັນບໍ່ໄດ້ເປັນພຽງ ຊາດລາວ ເປັນຊາດຕະກູນຂອງກຸ່ມພຸດທະສາສະນິກກະຊົນ ເປັນຊາດຂອງກຸ່ມຕະກູນຂອງ ຊຸມບູລົມທີ່ແຕກອອກໄປສ້າງບ້ານສ້າງເມືອງ ເປັນຊາດທີ່ຕອບຄຳວ່າສຸວັນນະພູມໄດ້ຊັດເຈນ.

ມະຫາ ສິລາ ວີຣະວົງ ກັບ ປະຫວັດສາດລາວ

• ສຸເນດ ໂພທິສານ
ຫົວໜ້າ ພະແນກຄົ້ນຄວ້າ ປະຫວັດສາດ
ຄະນະກຳມະການ ວິທະຍາສາດ ສັງຄົມ
ປະລິນຍາໂທ ປະຫວັດສາດ ມົງໂກລີ

ຮຽນ : ທ່ານປະທານ, ທ່ານຜູ້ຊົງຄຸນວຸດທິ, ຄະນະອາຈານຈາກມະຫາວິທະຍາໄລ ສີນັກຄະລິນວິໂລດ ມະຫາສາຣະຄາມ ພີ່ນ້ອງຝັ່ງໄທ ແລະ ທ່ານຜູ້ມີກຽດທຸກທ່ານ.

ຂ້າພະເຈົ້າດີໃຈທີ່ສຸດ ທີ່ກອງປະຊຸມສຳມະນາ "ຜົນງານຂອງມະຫາສິລາ ວີຣະວົງ ໃນທັດສະນະຂອງນັກວິຊາການສອງຝັ່ງຂອງ" ໄດ້ເປີດຂຶ້ນຢ່າງສະຫງ່າຜ່າເຜີຍ ຂ້າພະເຈົ້າຄິດວ່າ ແມ່ນກອງປະຊຸມສຳມະນາຄັ້ງທຳອິດ ທີ່ໃຫ້ກຽດຍົກຍ້ອງຜູ້ທີ່ມີຜົນງານ ແລະຄຸນຄວາມດີຕໍ່ຊາດລາວໃນດ້ານວິທະຍາສາດສັງຄົມ, ກອງປະຊຸມນີ້ຈະເປັນຕົວຢ່າງທີ່ດີ ໃນການທີ່ຈະຍົກຍ້ອງຜູ້ມີຜົນງານວິທະຍາສາດຜູ້ອື່ນໆອີກຕາມຄວາມເໝາະສົມ, ມັນຈະ ເຮັດໃຫ້ນັກຄົ້ນຄວ້າອື່ນໆ ລວມທັງຜູ້ອາວຸໂສ ແລະ ຜູ້ໜຸ່ມນ້ອຍລາວມີກຳລັງໃຈຕໍ່ໜ້າທີ່ ວຽກງານຄົ້ນຄວ້າຂອງຕົນ ເຊິ່ງຈະເປັນຜົນເຮັດໃຫ້ການຄົ້ນຄວ້າວິທະຍາສາດສັງຄົມ ຂອງລາວນັບມື້ຂະຫຍາຍຕົວຕາມຍຸກສະໄໝ.

ກອງປະຊຸມສຳມະນາຄັ້ງນີ້ ຍັງໄດ້ຮ່ວມມືກັບອາຈານນັກຄົ້ນຄວ້າທາງດ້ານວັດທະນະທຳອີສານ ມະຫາສາຣະຄາມ ເຊິ່ງມີອາຈານຈາກນັກສຶກສາ ມະຫາວິທະຍາໄລສີນັກຄະລິນວິໂລດ ດັ່ງກ່າວມາຮ່ວມນຳ ຈະເປັນຜົນປະໂຫຍດແກ່ນັກຄົ້ນຄວ້າທັງ 2 ຝ່າຍ ທີ່ຈະໄດ້ ມີໂອກາດພົບປະແລກປ່ຽນຄຳຄິດຄຳເຫັນນຳກັນ ໂດຍສະເພາະໃນເມື່ອຫາກຄົ້ນຄວ້າ ບັນຫາ

ດຽວກັນ ຖ້າມີການປະສານສົມທົບກັນ ກໍຈະເຮັດໃຫ້ວຽກງານນັ້ນ ມີປະສິດທິພາບຫລາຍຂຶ້ນ.

ຫົວຂໍ້ທີ່ຂ້າພະເຈົ້າຈະເວົ້າໃນທີ່ນີ້ ກໍຄື " ມະຫາສິລາ ວີຣະວົງ ກັບປະຫວັດສາດລາວ " ເຊິ່ງແມ່ນຫົວຂໍ້ນ້ອຍອັນໜຶ່ງຂອງກອງປະຊຸມນີ້, ຂ້າພະເຈົ້າຈະພະຍາຍາມ ເນັ້ນຜົນງານດ້ານປະຫວັດສາດລາວຂອງມະຫາສິລາ ວີຣະວົງ, ແຕ່ວ່າການຮັບຮູ້ຂອງ ຂ້າພະເຈົ້າຕໍ່ຜົນງານດ້ານປະຫວັດສາດ ຂອງມະຫາສິລາ ນັ້ນ ມີຂອບຈຳກັດຫລາຍ, ຍ້ອນວ່າ ຂ້າພະເຈົ້າຫາກໍ່ພວມເລີ່ມເຮັດວຽກຄົ້ນຄວ້າປະຫວັດສາດລາວ, ແຕ່ກໍໂຊກດີຢູ່ໜ້ອຍໜຶ່ງ ທີ່ຂັ້ນທ້າຍຊີວິດຂອງອາຈານ ມະຫາສິລາ ວີຣະວົງ ແລະ ຂັ້ນເລີ່ມຕົ້ນເຮັດວຽກງານຄົ້ນຄວ້າປະຫວັດສາດລາວຂອງຂ້າພະເຈົ້າ ໄດ້ບັນຈົບກັນໂດຍບັງເອີນ ຄືໄດ້ສັງກັດຢູ່ໃນສຳນັກງານດຽວກັນ (1983-87), ໃນປີ 1983 ກະຊວງສຶກສາໄດ້ຈັດຕັ້ງຄະນະອະນຸກຳມະການຂຽນປຶ້ມປະຫວັດສາດລາວ ໂດຍມີມະຫາສິລາ ວີຣະວົງ ເປັນທີ່ປຶກສາຜູ້ໜຶ່ງ, ຂ້າພະເຈົ້າກໍໄດ້ຮັບແຕ່ງຕັ້ງຢູ່ໃນຄະນະອະນຸກຳມະການນີ້ ຈຶ່ງເປັນໂອກາດດີ ເຮັດໃຫ້ຂ້າພະເຈົ້າ ໄດ້ສຶກສາຮ່ຳຮຽນນຳເພິ່ນຫລາຍບັນຫາ, ສ່ວນຫລາຍເພິ່ນກໍບໍ່ຄ່ອຍໄດ້ມາຫ້ອງການ ນອກຈາກມີວຽກສຳຄັນຈຶ່ງມາ, ຂ້າພະເຈົ້າຈຶ່ງໄປຫາເພິ່ນຢູ່ເຮືອນ ດ້ວຍການເອົາເຂົ້າອັດຕາ ແລະ ເງິນເດືອນຂອງເພິ່ນໄປສົ່ງເພິ່ນ ສ່ວນຫລາຍມີອາຈານວິຊຽນ ຖະຫວິນເຊືອ ໄປນຳ ໄປແຕ່ລະເທື່ອແມ່ນໄດ້ໂອ້ລົມນຳເພິ່ນເປັນຊົ່ວໂມງ ໂດຍສະເພາະໃນບັນຫາປະຫວັດສາດ ທີ່ຂ້າພະເຈົ້າສົນໃຈ. ເຮັດໃຫ້ຂ້າພະເຈົ້າຜູ້ເປັນນັກຮຽນໃໝ່ ໄດ້ຮັບຄວາມຮູ້ກ່ຽວກັບ ປະຫວັດສາດລາວເພີ່ມຂຶ້ນ, ເຖິງວ່າສຸຂະພາບຂອງອາຈານມະຫາສິລາ ໃນລະຫວ່າງ ປີ 1983-85 ທີ່ຂ້າພະເຈົ້າມັກໄປຫາເພິ່ນນີ້ ຈະບໍ່ແຂງແຮງປານໃດກໍ່ຕາມ ແຕ່ເພິ່ນ ກໍມີຄວາມຈຳໄດ້ດີຫລາຍ ຖາມອັນໃດຕອບອັນນັ້ນໄດ້ໂລດ ແລະ ຕອບຢ່າງແຈ່ມແຈ້ງ ເຮັດໃຫ້ຂ້າພະເຈົ້າໄດ້ຮັບບົດຮຽນ ໂດຍກົງຈາກເພິ່ນ ບໍ່ພຽງແຕ່ໄດ້ອ່ານປຶ້ມທີ່ເພິ່ນຂຽນໄວ້ເທົ່ານັ້ນ ສະນັ້ນ ຂ້າພະເຈົ້າຈຶ່ງຖືວ່າ ອາຈານມະຫາສິລາ ວີຣະວົງ ແມ່ນ "ບິດາປະຫວັດສາດລາວ" ຂອງຂ້າພະເຈົ້າ ໆ ຮູ້ບຸນຄຸນຢ່າງບໍ່ມີວັນລືມ.

ຂ້າພະເຈົ້າຂໍສະເໜີ 5 ຈຸດສຳຄັນຕໍ່ກອງປະຊຸມນີ້ ດັ່ງ ນີ້ :

1.) ຊີວິດ ຂອງອາຈານ ມະຫາສິລາ ວີຣະວົງ ຕິດພັນກັບປະຫວັດສາດລາວ,

2.) ການຄົ້ນຄວ້າປະຫວັດສາດລາວ.

3.) ວິທີການຄົ້ນຄວ້າປະຫວັດສາດລາວຂອງ ອາຈານ ມະຫາສີລາ ວີຣະວົງ

4.) ຜົນງານດ້ານປະຫວັດສາດລາວ ຂອງອາຈານ ມະຫາສີລາ ວີຣະວົງ.

5.) ການສານຕໍ່ຂອງຄົນຮຸ່ນໃໝ່ໃນຜົນງານປະຫວັດສາດລາວ ຂອງມະຫາສີລາ.

1./ <u>ຊີວິດຂອງ ອາຈານມະຫາສີລາ ວີຣະວົງ ຕິດພັນກັບປະຫວັດສາດລາວ</u> :

ອາຈານ ມະຫາສີລາ ວີຣະວົງ ເກີດຢູ່ແຂວງ ຮ້ອຍເອັດ ພາກອີສານຂອງປະເທດໄທ, ແຕ່ຍ້ອນແມ່ນເພິ່ນເຊື້ອສາຍລາວ ເພິ່ນຈຶ່ງເອົາໃຈໃສ່ສຶກສາຄົ້ນຄວ້າ ປະຫວັດສາດລາວ ໂດຍສະເພາະເພິ່ນໄດ້ຮຽນຮູ້ກ່ຽວກັບສົງຄາມກູ້ຊາດ ນຳໂດຍ ເຈົ້າ ອະນຸວົງ ເຮັດໃຫ້ເພິ່ນມີຄວາມຮັກຊາດຢ່າງດູດດື່ມຍິ່ງຂຶ້ນ ຈຶ່ງຕັ້ງໃຈສຶກສາຮ່ຳຮຽນ ໃຫ້ມີຄວາມຮູ້ ເພື່ອກັບມາປົກປັກຮັກສາວັດທະນະທຳລ້ານຊ້າງ.

ໃນປີ 1930 ເຊິ່ງຕອນນັ້ນ ເພິ່ນໄດ້ມີອາຍຸ 25 ປີ ເພິ່ນໄດ້ຕັດສິນໃຈ ຢ່າງເດັດດ່ຽວ ເພື່ອກັບມາວຽງຈັນ, ເພິ່ນຍອມປະຄອບຄົວເຮືອນຊານພີ່ນ້ອງ ເພື່ອອ່ວຍໜ້າມາຫາຊາດລາວ ດັ່ງຄຳກອນທີ່ເພິ່ນຂຽນວ່າ : (ຢູ່ຕົ້ນສະບັບໜ້າ 184)

ຮຽນກໍ ຄິດຄາດໄວ້ສອງສ່ວນ ສົມເທ
ໃຈໜຶ່ງຄິດໃຄ່ ເມືອວຽງຈັນສົ່ງສອນ ແສນຫາວ
ເລີຍເລົ່າ ໂທເລຫລ້າງສົງໄສ ສອງພາກ

,....

ເຂົາວ່າ ວຽງຈັນພຸ້ນກຸງສີ ສັດຕະນາກ
ທຸກທັ່ງອາງຊຸມເຊື້ອ ຊາດເຮົາ

.....

ຮຽນກໍ ຈົງໃຈຕັ້ງຕົນປອງ ເປັນໄທຍ່ ສາແລ້ວ
ຜັດກ່າວມ້າງມານໃຫ້ ມຸ່ນກະຈອນ

ທັງເລົ່າ ຄຶດໃຄ່ດ້ວຍຄອນຊາດ ຊຸມດອວ
ເທື່ອນີ້ ລືມຄອນຈັກດ່ອນໄປ ເປັນເຕົ້າ
ຢຽວດຶນໄດ້ໂດຍຄະນຶງ ໃຈໃຜ່
ຈັດແຕ່ງເຕົ້າພົນລ້ານ ລ່ວງເລວ ແທ້ແລ້ວ.

ແນ່ນອນວ່າຊາຍໜຸ່ມອາຍຸ 25 ປີ ໄດ້ຕັດສິນໃຈຄຶດເຖິງຄຳກອນນີ້ ມັນບໍ່ແນ່ນຈະເຮັດໄດ້ງ່າຍ ຖ້າບໍ່ອື່ຫລືອື່ຫລໍ ຄົນລາວຢູ່ພາກອີສານ ທີ່ຮັບຄືນມາລາວນັ້ນ ມີຫລາຍໃນ ທຸກການເວລາ ແຕ່ສ່ວນຫລາຍແມ່ນຮັບມາເພື່ອສ້າງຊີວິດການເປັນຢູ່ສ່ວນຕົວເປັນຕົ້ນຕໍ, ພູ້ມາດ້ວຍອຸດົມຄະຕິຮັກຊາດລາວ ຢ່າງສູງສົ່ງກໍ່ມີຫລາຍ ເຊັ່ນ ນາຍຄູຄຳ ເຊິ່ງແມ່ນຄົນອຳເພີເດື່ອງ ໃນ ຈັງຫວັດ ອຸບົນ ເພິ່ນຮຽນຮູ້ພົນເຈົ້າ ອະນຸ, ເຈົ້າລາດຊະວົງ ແລ້ວຮັບມາລາວ ໃນປີ 1904 ເພື່ອຕ້ານພວກຝະລັ່ງເສດ ເພິ່ນໄດ້ຄ່ອຍໆສ້າງຂະບວນການໃນທີ່ສຸດກໍ່ສາມາດ ນຳພາປະຊາຊົນວຽງຈັນ ລຸກຂຶ້ນຕ້ານຝະລັ່ງຢ່າງເປັນຂະບວນໃຫຍ່ ໃນປີ 1920 ແຕ່ຖືກ ຈັບໄດ້ ຕໍ່ມາໄດ້ໂຕນຮັບຄືນປະເທດໄທ, ສ່ວນ ມະຫາສິລາ ວີຣະວົງ ກໍ່ຮັບມາລາວດ້ວຍອຸດົມການຮັກຊາດລາວຢ່າງເປັນຊີວິດຈິດໃຈ, ເພິ່ນບໍ່ພຽງແຕ່ໄດ້ຮ່ວມຂະບວນການ ລາວອິດສະລະ ຕໍ່ຕ້ານຝະລັ່ງເສດຢ່າງເອົາເປັນເອົາຕາຍ ໃນຊຸມປີ 40 ເທົ່ານັ້ນ, ແຕ່ເພິ່ນຍັງໄດ້ອຸທິດໝົດຕະຫລອດຊີວິດຂອງເພິ່ນ ເພື່ອປົກປັກຮັກສາ ແລະ ຟື້ນຟູວັດທະນະທຳລ້ານຊ້າງໃນທຸກດ້ານ.

2./ <u>ການຄົ້ນຄວ້າປະຫວັດສາດລາວ</u> :

ສະເພາະໃນດ້ານການຄົ້ນຄວ້າປະຫວັດສາດລາວໃນປະຈຸບັນ ຂ້າພະເຈົ້າຖືວ່າ ອາຈານ ມະຫາສິລາ ເປັນຜູ້ ອາວຸໂສທີ່ສຸດ, ການຄົ້ນຄວ້າປະຫວັດສາດລາວນັ້ນ ຖ້າຈະແບ່ງແລ້ວກໍ່ມີຫລາຍໄລຍະຄື : ໄລຍະເທບນິຍາຍ : ຄື ໄລຍະກ່ອນຂຸນບູລົມຂຶ້ນໄປ ເປັນ ໄລຍະເລົ່າເລື່ອງແບບເທບນິຍາຍ, ໄລຍະເຄິ່ງພົງສາວະດານ : ຄືໄລຍະຫລັງຈາກຂຸນບູລົມມາເຖິງການສ້າງຕັ້ງອານາຈັກລ້ານຊ້າງ, ໄລຍະພົງສາວະດານ ຫລື <u>ໄລຍະປະຫວັດສາດ</u>

ເປັນຂອງຄົນຊັ້ນສູງ : ຄືໃນໄລຍະຫລັງຈາກການສ້າງຕັ້ງ ອານາຈັກ ລ້ານຊ້າງ ຈົນເຖິງ ໄລຍະອານາຈັກລາວລ້ານຊ້າງ ຈະເລີນຮຸ່ງເຮືອງສູງສຸດ ໄລຍະນີ້ ການສຶກສາຄົ້ນຄວ້າປະຫວັດສາດລາວ ແມ່ນມີຢູ່ແຕ່ສະເພາະຄົນຊັ້ນສູງເທົ່ານັ້ນ ຄື ພະລາຊະວັງ ກັບ ວັດ, ໃນ ພະລາຊະວັງກໍມີເຈົ້າຊີວິດເປັນຕົ້ນຕໍ, ສ່ວນໃນວັດກໍແມ່ນພະເຖລະຜູ້ມີ ສະມະນະສັກສູງ ເປັນຜູ້ຄົ້ນຄວ້າຈົດກາຍເອົາໄວ້ ເຊັ່ນພື້ນຂຸນບູລົມ, ສ່ວນປະຊາຊົນສາມັນທຳມະດາ ຈະໄດ້ຮູ້ຈັກປະຫວັດສາດຂອງຕົນ ກໍດ້ວຍອາໄສນິທານ, ນິຍາຍບູຮານ ທີ່ບໍ່ມີການຈົດກາຍ, ຍ້ອນ ປະຫວັດສາດເປັນຂອງຄົນຊັ້ນສູງ ເນື້ອໃນຕ່າງໆຈຶ່ງຈຳກັດຢູ່ໃນເລື່ອງການ ຄອງລາຊະບັນລັງ ແບບພົງສາວະດານເປັນຕົ້ນຕໍ ເລື່ອງລາວຂອງປະຊາຊົນທົ່ວໄປບໍ່ກ່າວເຖິງ.

ພາຍຫລັງເສຍເອກະລາດ 1779 ແລະ ພາຍຫລັງສົງຄາມກູ້ເອກະລາດ ນຳໂດຍ ເຈົ້າ ອະນຸວົງ ປລາໄຊປະເທດຊາດບ້ານເມືອງຫລົ້ມຈົມລົງໜັກໜ່ວງ ຢ່າງທີ່ບໍ່ເຄີຍມີມາ ກ່ອນ ປະຊາຊົນລາວ ຈຶ່ງຕື່ນຕົກໃຈຕໍ່ເຫດການ ຕໍ່ສະພາບບ້ານແຕກແຊກຊາດ ປະຊາຊົນ ລາວ ຈຶ່ງພາກັນຫັນມາສົນໃຈຕໍ່ປະຫວັດສາດລາວ ເຮັດໃຫ້ປະຫວັດສາດລາວ ຂະຫຍາຍຕົວ ໃນໝູ່ປະຊາຊົນລາວທົ່ວໄປ. ປະຊາຊົນເລີ່ມຈົດກາຍຂີດຂຽນປະຫວັດສາດລາວ ເຊັ່ນ ພື້ນ ວຽງ, ທອງດຳຈຽງຄຳ, ປະຫວັດສາດຫຍໍ້... ໄດ້ມີການຈົດກາຍຢ່າງຫລວງຫລາຍໂດຍ ປະຊາຊົນ ແລະ ພະສົງທຳມະດາເປັນຜູ້ຈົດກາຍ ເພື່ອນຳໄປລຳຫລືອ່ານສູ່ກັນຟັງ, ຕໍ່ມາ ໄດ້ເກີດຂະບວນຜູ້ມີບຸນ ຕ້ານຝະລັ່ງ - ສະຫຍາມ ຢ່າງເປັນຂະບວນໃຫຍ່ ໃນປີ 1900-1904 ເມື່ອຂະບວນການຕໍ່ສູ້ຕ້ານຝະລັ່ງ-ສະຫຍາມ ຖືກປາບປາມແລ້ວການສຶກສາ ປະຫວັດສາດລາວກໍໄດ້ຈາງຫາຍໄປອີກໄລຍະໜຶ່ງ.

ໃນສະໄໝຝະລັ່ງປົກຄອງລາວ ໄດ້ມີການຄົ້ນຄວ້າປະຫວັດສາດລາວ ໂດຍພວກຝະ ລັ່ງ ເພື່ອຮັບໃຊ້ການປົກຄອງຂອງພວກເຂົາ, ຄຽງຄູ່ກັນນັ້ນກໍໄດ້ມີຄົນລາວຈຳນວນໜຶ່ງໄດ້ ຄົ້ນຄວ້າປະຫວັດສາດລາວ ເພື່ອປຸກລະດົມຈິດໃຈຊາດ, ໃນໄລຍະຝະລັ່ງປົກຄອງລາວນີ້ມະ ຫາສີລາ ໄດ້ຖືກກຳເນີດຂຶ້ນ, ຕັ້ງແຕ່ເພິ່ນເປັນເດັກນ້ອຍພຸ້ນມາ ເພິ່ນໄດ້ສົນໃຈຕໍ່ ປະຫວັດ ສາດລາວ, ໄດ້ສຶກສາຮ່ຳຮຽນມູນເຊື້ອການຕໍ່ສູ້ກູ້ຊາດຂອງເຈົ້າ ອະນຸວົງ ຈາກພໍ່ເຖົ້າຜູ້ແກ່ ເຮັດໃຫ້ເພິ່ນມີຈິດໃຈຊາດສູງ, ເວລາເພິ່ນບວດ ເພິ່ນກໍສົນໃຈປະຫວັດສາດລາວ ແລະວັດ

ທະນະທຳລາວ ຕະຫລອດມານັ້ນ ໄດ້ເຮັດໃຫ້ເພິ່ນມີຈິດໃຈຊາດສູງ ຕົວຢ່າງ ຄຳກອນ ທີ່ເພິ່ນໄດ້ຂຽນໄວ້ວ່າ :

ເຈັບເພື່ອ	ໄທຕຽມຕ້ານເຮົາປູ່ນ	ເປັນຊົ່ວ
	ເຖົ້າແກ່ເວົ້າພາຍຊອຍ	ຊອບຄອງ ຢູ່ແລ້ວ
	ເຂົາປີ້ວປຸ້ນປາງເກົ່າ	ຖົມແຖມ ແນເອີຍ
ດູດັ່ງ	ລາງລືເຮົາຕ່ຳຕອງ	ຕອຍຮ້າຍ
<u>ຍັງບໍ່</u>	<u>ມີໃຜຜູ້ນຳແນມ</u>	<u>ປະຫວັດສາດ</u>
ລູກນີ້	ເປັນດັ່ງດາຍໄທມໝັ້ນ	ໝັ້ນແກວ
	ອາຄາດໄວ້ແສນເຊັ່ນ	ມີມາຍ່າງຍາຍແລ້ວ !

(ຈາກຄຳກອນອັດຕະຊີວະປະຫວັດ ໜ້າ 183)

ຄຳວ່າ<u>ຍັງບໍ່ມີໃຜຜູ້ ນຳແນມປະຫວັດສາດ</u> ນັ້ນ ສ່ອງແສງເຖິງວ່າຕອນນັ້ນອາດຈະຍັງບໍ່ເຫັນຄົນລາວຜູ້ໃດສົນໃຈປະຫວັດສາດລາວ ເພິ່ນຈຶ່ງເອົາໃຈໃສ່ ສຶກສາ ຄົ້ນຄວ້າດ້ວຍຈິດໃຈຮັກຊາດຢ່າງດູດດື່ມ, ເຖິງວ່າເງື່ອນໄຂໃນການຄົ້ນຄວ້າຈະຈຳກັດປານໃດກໍຕາມ , ແຕ່ເພິ່ນກໍບໍ່ທໍ້ຖອຍ, ທັງຄົ້ນຄວ້າທັງເຜີຍແຜ່ໃຫ້ໝູ່ຄູ່ຮູ້ນຳເທົ່າທີ່ສາມາດຈະເຮັດໄດ້.

ນັບແຕ່ປີ 1930 ເປັນຕົ້ນມາ ມະຫາສິລາ ວີຣະວົງ ໄດ້ມາເຖິງນະຄອນ ວຽງຈັນ ເຊິ່ງເປັນໄລຍະເວລາທີ່ພວກຝະລັ່ງຍັງປົກຄອງຢູ່ ວັດທະນະທຳລາວໃນທຸກດ້ານ ຖືກຄຸກຄາມຢ່າງໜັກໜ່ວງ, ເພິ່ນຕັດສິນໃຈລົງມືຄົ້ນຄວ້າ ຂຽນພົງສາວະດານລາວ ແລະ ຫົວເລື່ອງອື່ນໆ ທີ່ກ່ຽວກັບວັນນະຄະດີ ພາສາວັດທະນະທຳ... ເພື່ອຢັ້ງຢືນຄວາມເປັນ ລາວຢ່າງຄົບຊຸດ ແນໃສ່ເພື່ອຕໍ່ສູ້ຍາດເອົາເອກະລາດຈາກຝະລັ່ງ.

ປີ 1952 ປຶ້ມພົງສາວະດານລາວ ຂອງ ມະຫາສິລາ ວີຣະວົງ ໄດ້ຂຽນ ສຳເລັດ ຮອດປີ 1957 ໄດ້ພິມອອກຢ່າງເປັນທາງການໃນເວລານັ້ນ. ໂດຍກະຊວງ ສຶກສາທິການເປັນຜູ້ຈັດພິມ, ພິມເປັນພາສາລາວ ແລະ ຖືວ່າແມ່ນແບບຮຽນປະຫວັດສາດລາວຊຸດປະຖົມທີ່ຄົນລາວແຕ່ງຂຶ້ນເອງ, ປຶ້ມເຫລັ້ມນີ້ໄດ້ນຳມາໃຊ້ສິດສອນທົ່ວປະເທດ ແລະ ເປັນທີ່ ນິຍົມ_

ຂອງປະຊາຊົນລາວທົ່ວໄປ ເຮັດໃຫ້ຄົນລາວຮູ້ຈັກປະຫວັດສາດຂອງຊາດຕົນບໍ່ຫລາຍກໍໜ້ອຍ, ຖ້າທຽບໃສ່ພົງສາວະດານລາວຂອງທ່ານ ສຸພົນ ບລັງຊາເດີ ລາໂບຣຊ໌ ທີ່ໃຊ້ສອນ ຊັ້ນປະຖົມມາກ່ອນ, ພົງສາວະດານລາວຂອງມະຫາສິລາ ມີເນື້ອໃນອຸດົມສົມບູນຫລາຍກວ່າເກົ່າ. ແນ່ນອນຖ້າເບິ່ງໃນສາຍຕາປະຈຸບັນນີ້ ເນື້ອໃນຂອງມັນຍັງບໍ່ຄົບຖ້ວນ, ບໍ່ແທດເໝາະໝົດທຸກດ້ານ ຫລື ມີຂໍ້ບົກພ່ອງຫລາຍຢ່ອນ, ແຕ່ຖ້າທຽບໃສ່ການເວລາໃນຍາມນັ້ນ ກໍຖືວ່າມີຄຸນຄ່າທີ່ສຸດ.

ໃນປີ 1973, ວົງການສຶກສາຂອງລາວໄດ້ມີການຂະຫຍາຍຕົວຕື່ມຂຶ້ນ ຜູ້ສົນໃຈຢາກອ່ານປຶ້ມ ພົງສາວະດານຂອງ ມະຫາສິລາ ມີເພີ່ມຂຶ້ນ, ແຕ່ປຶ້ມພົງສາວະດານລາວຂອງມະຫາສິລາ ຂາດຕະຫລາດຊອກຫາບໍ່ໄດ້, ທ່ານ ພູ ລາຊະພົນ ເຊິ່ງເປັນອະທິບໍດີກົມມັດທະຍົມສຶກສາໃນຄາວນັ້ນ ຈຶ່ງເຫັນດີຈັດພິມ ພົງສາວະດານລາວຂອງ ມະຫາສິລາ ວິຣະວົງ ອອກມາອີກ. ເພື່ອນຳໃຊ້ຕາມຄວາມຮຽກຮ້ອງຕ້ອງການຂອງສັງຄົມ. ການຈັດພິມຄາວນີ້ ມະຫາສິລາ ວິຣະວົງ ໄດ້ມີການດັດແກ້ ແລະ ເພີ່ມເຕີມອີກ, ເຮັດໃຫ້ປຶ້ມນີ້ ອຸດົມສົມບູນກວ່າເກົ່າ ແລະ ເປັນທີ່ນິຍົມຊົມຊອບຂອງມະຫາຊົນທົ່ວໄປ. ຍັງມີຜົນງານ ດ້ານປະຫວັດສາດຂອງມະຫາສິລາ ພິມອອກໃນໄລຍະດຽວກັນເຊັ່ນ ຕຳນານພະແຊກຄຳ, ຕຳນານພະບາງ, ຕຳນານພະແກ້ວ, ຕຳນານຂຸນບູລົມ, ປະຫວັດທາດຫລວງ... ຈາກນັ້ນ ການຄົ້ນຄວ້າປະຫວັດສາດລາວ ຈຶ່ງຂະຫຍາຍຕົວໃນໝູ່ມະຫາຊົນ, ໂດຍສະເພາະຊຸມປີ 70 ນີ້ ຈຶ່ງປາກົດວ່າ ມີຜົນງານດ້ານປະຫວັດສາດລາວຂອງນັກຄົ້ນຄວ້າລາວຜູ້ອື່ນໆ ອອກມາຄຽງຄູ່ກັບຜົນງານຂອງ ມະຫາສິລາ ເຊັ່ນ :

ເຈົ້າຄຳໝັ້ນ ວົງກົດລັດຕະນະ,	ພົງສາວະດານຊາດລາວ	ພິມປີ	1970
ນ. ບຸບຜານຸວົງ	ບິດຸພູມທີ່ຮັກ	"	1970
ອູຄຳ ພົມວົງສາ	ຄວາມເປັນມາຂອງລາວ	"	1966
ຍຸມອອນພົມ	ຫຍໍ້ພົງສາວະດານລາວ	"	1971

ຄຳຈັນປະດິດ ປະຫວັດການທູດ 4000ປີເຖິງ
ປະຈຸບັນ " 1969
ຄຳເພົາພອນແກ້ວ ແລະຄະນະ ສຳມະນາປະຫວັດສາດລາວ " 1971

ແລະ ຍັງມີຜົນງານການຄົ້ນຄວ້າປະຫວັດສາດລາວຢູ່ເຂດປົດປ່ອຍເກົ່າ ໂດຍ ມະຫາຄຳພັນ, ມະຫາປະມອນ, ສົມສີ ເດຊາກຳພູ ແລະ ຍັງມີຜົນງານຂອງຜູ້ອື່ນໆອີກ, ແຕ່ວ່າຜົນງານຂອງມະຫາສີລາກໍຍັງເປັນທີ່ນິຍົມເຊື່ອຖືຢູ່ຄືເກົ່າ.

ພາຍຫລັງປະເທດຊາດໄດ້ຮັບການປົດປ່ອຍ ປີ 1975, ມີນັກຄົ້ນຄວ້າຈຳນວນໜຶ່ງໄດ້ເອົາໃຈໃສ່ຄົ້ນຄວ້າປະຫວັດສາດລາວຢ່າງເອົາຈິງເອົາຈັງ ເຊັ່ນ ມະຫາຄຳ ຈຳປາແກ້ວມະນີ, ທ່ານ ຜູ້ນີ້ສາມາດຂຽນປະຫວັດສາດລາວອອກເປັນ 9 ພາກ ຫລື ເກົ້າເຫລັ້ມໄດ້ພິມດີດອອກໃຊ້ພາຍໃນ ໃນປີ 1980, ນັບວ່າເປັນຜົນງານດ້ານປະຫວັດສາດ ທີ່ສຳຄັນສົມຄວນ, ແຕ່ຜົນງານຂອງມະຫາຄຳ ຍັງບໍ່ທັນໄດ້ພິມຢ່າງເປັນທາງການ ເພິ່ນກໍເຖິງແກ່ມໍລະນະກຳກ່ອນຈຶ່ງເປັນທີ່ໜ້າເສຍດາຍ. ໃນໄລຍະດຽວກັນນີ້, ອາຈານ ມະຫາສີລາ ກໍໄດ້ດັດແກ້ພົງສາວະດານລາວຄືນໃໝ່ອີກ ໂດຍອີງໃສ່ຂໍ້ມູນຕ່າງໆຢ່າງຫລວງຫລາຍ ກວ່າເກົ່າ, ເນື້ອໃນກໍອຸດົມຮັ່ງມີຫລາຍກວ່າເກົ່າຫລາຍເທົ່າ, ໄດ້ຕີພິມຕົ້ນສະບັບສຳເລັດ ໃນປີ 1982 ເຊິ່ງເຮົາເອງກໍໄດ້ຮັບຄວາມເອື້ອເຟື້ອຕົ້ນສະບັບນີ້ຈາກ ນາງ ດວງເດືອນ ບຸນຍາວົງ.

ໃນໄລຍະປີ 1983-86, ການຈັດຕັ້ງຂອງລັດ ໂດຍກະຊວງສຶກສາໄດ້ຈັດຕັ້ງ ອະນຸກຳມະການຄົ້ນຄວ້າປະຫວັດສາດລາວຂຶ້ນປະກອບດ້ວຍ 5 ສະຫາຍ :

1.) ທອງສາ ໄຊຍະວົງຄຳດີ ຫົວໜ້າ
2.) ບຸນກອງ ທອງສະຫວັດ ຮອງ
3.) ສິງທອງ ສິງຫະປັນຍາ ຄະນະ
4.) ແດງ ພົມສະຫວັດ ຄະນະ
5.) ສູເນດ ໂພທິສານ ຄະນະ

ມະຫາສິລາ ເປັນທີ່ປຶກສາຂອງຄະນະອະນຸກຳມະການນີ້, ວຽກງານຕົ້ນຕໍຂອງ ຄະ
ນະອະນຸການປະຫວັດສາດນີ້ ແມ່ນຄົ້ນຄວ້າປະຫວັດສາດລາວ ແຕ່ປີ 1893-1985, (ພິມ
ສຳເລັດແລ້ວ) ໃນປີ 1986-89 ກະຊວງສຶກສາໄດ້ສ້າງຕັ້ງສະຖາບັນຄົ້ນຄວ້າ ວິທະຍາ
ສາດສັງຄົມຂຶ້ນ, ການຄົ້ນຄວ້າປະຫວັດສາດລາວ ຖືວ່າເປັນພະແນກໜຶ່ງຂອງສະຖາບັນນີ້
ວຽກງານຕົ້ນຕໍແມ່ນຄົ້ນຄວ້າປະຫວັດສາດລາວ ແຕ່ສະໄໝເຈົ້າຟ້າງູ່ມ 1357 ເຖິງ ປີ
1893, ຂຽນຕົ້ນສະບັບສຳເລັດ ແລະ ພວມຢູ່ໃນໄລຍະກວາດຜ່ານຕົ້ນສະບັບ ພໍດີ ສະຖາ
ບັນວິທະຍາສາດສັງຄົມຖືກຍຸບ ໃນປີ 1989, ໃນປີ 1990 ສະຖາບັນປະຫວັດສາດ ພູມ
ສາດ ແລະ ບູຮານຄະດີ ໄດ້ຮັບການສ້າງຕັ້ງຂຶ້ນຢ່າງເປັນທາງການ ສັງກັດໃນຄະນະ ກຳ
ມະການວິທະຍາສາດສັງຄົມ ທີ່ມີ ທ່ານ ສີຊະນະ ສີສານ ເປັນປະທານ, ວຽກຄົ້ນຄວ້າປະ
ຫວັດສາດລາວຖືເປັນຂະແໜງການໜຶ່ງທີ່ສຳຄັນ, ໃນວັນທີ 10-13/4/90, ກອງປະ
ຊຸມສຳມະນາປະຫວັດສາດລາວຄັ້ງທີ 1 ໄດ້ໄຂຂຶ້ນຢ່າງສະຫງ່າຜ່າເຜີຍ ເພື່ອຮັບຟັງ ຄຳຄິດ
ຄຳເຫັນ ແລະ ເຕົ້າໂຮມຂໍ້ມູນ ແລະ ເອກະສານຕ່າງໆ ກ່ຽວກັບປະຫວັດສາດລາວ ແນ
ໃສ່ເພື່ອຂຽນປຶ້ມປະຫວັດສາດລາວ ສະໄໝກ່ອນເຈົ້າຟ້າງູ່ມ, ກອງປະຊຸມນີ້ມີຜູ້ເຂົ້າ ຮ່ວມ
60 ທ່ານ, ໄດ້ຟັງບົດລາຍງານ 32 ບົດ ແລະ ການປະກອບຄຳເຫັນທີ່ມີຄຸນຄ່າອີກ ຢ່າງ
ຫລວງຫລາຍ. ກອງປະຊຸມນີ້ໄດ້ກາຍເປັນເວທີເຜີຍແຜ່ຫດການປະຫວັດສາດ ຢ່າງກວ້າງ
ຂວາງ. ເວລານີ້ ທາງສະຖາບັນປະຫວັດສາດ ພູມສາດ ແລະ ບູຮານຄະດີ ກໍຄືຄະນະກຳ
ມະການວິທະຍາສາດສັງຄົມ ພວມກະກຽມເຮັດໂຄງຮ່າງເພື່ອຂຽນປະຫວັດສາດລາວ ໃຫ້ມີ
ລັກສະນະວິທະຍາສາດ ແລະ ຊັດເຈນເທົ່າທີ່ຈະເຮັດໄດ້.

ທັງໝົດນີ້ແມ່ນການຂະຫຍາຍຕົວຂອງວຽກງານຄົ້ນຄວ້າປະຫວັດສາດລາວ ໂດຍຄົນ
ລາວໃນປະຈຸບັນ ເຊິ່ງແມ່ນການຂະຫຍາຍຕົວຂອງວຽກງານສຳຄັນ ລະດັບຊາດ ທີ່ເລີ່ມ
ຕົ້ນຈາກການຄົ້ນຄວ້າຂອງມະຫາສິລາ ທີ່ໄດ້ລົງມືຖາກຖາງໜົນທາງໄວ້ໃຫ້ຄົນຮຸ່ນຫລັງ.

3./ ວິທີການຄົ້ນຄວ້າປະຫວັດສາດລາວຂອງມະຫາສິລາ :

ເປັນວິທີການດັ້ງເດີມ. ສະນັ້ນວິທີການຄົ້ນຄວ້າຂອງເພິ່ນຈຶ່ງແຕກຕ່າງກັນ ວິທີການ

ໃນປະຈຸບັນນີ້, ເອກະສານທີ່ເພິ່ນນຳໃຊ້ ລ້ວນແຕ່ແມ່ນເອກະສານບູຮານເປັນຕົ້ນຕໍ, ນອກຈາກນີ້ກໍຍັງມີຈົດໝາຍເຫດຕ່າງໆກ່ຽວກັບລາວ ທີ່ເພິ່ນຄົ້ນພົບຢູ່ຫໍສະມຸດບາງກອກ. ວິທີຂຽນກໍໃຊ້ວິທີທຳມະດາບໍ່ໄດ້ໃຊ້ຄຳສັບວັນນະຄະດີຈົນເກີນໄປ, ເພິ່ນສາມາດຖອດຄວາມ ບູຮານທີ່ຍາກໃຫ້ເຂົ້າໃຈງ່າຍໄດ້, ວິທີຄົ້ນຄວ້າປະຫວັດສາດລາວຂອງເພິ່ນ ເຖິງຈະເປັນແບບບູຮານ ແຕ່ກໍມີວິທະຍາສາດໃນການໃຊ້ຂໍ້ມູນ ຄືເພິ່ນໃຊ້ຂໍ້ມູນທີ່ 1 ໂດຍກົງສ່ວນຫລາຍບໍ່ໃຊ້ຂໍ້ມູນທີ 2-3-4-5. ຂໍ້ມູນທີ 1 ແມ່ນຜູ້ຂຽນສາມາດສຳຜັດໂດຍກົງຈາກ ສິລາເລກ, ຈົດໝາຍເຫດ, ເອກະສານບູຮານຕ່າງໆ ການນຳໃຊ້ຂໍ້ມູນປະເພດນີ້ຖືວ່າເປັນຂໍ້ມູນທີ 1 ແລະ ຖືວ່າມີວິທີວິທະຍາສາດກວ່າຂໍ້ມູນທີ 2-5 ເຊິ່ງແມ່ນຂໍ້ມູນທີ່ຂຽນຂຶ້ນນຳຫລັງ.

ຍ້ອນຂໍ້ມູນຈຳກັດ ເນື້ອໃນພົງສາວະດານ ປີ 1957 ຈຶ່ງມີລັກສະນະຈຳກັດ, ຕໍ່ມາຂໍ້ມູນມີຫລາຍຂຶ້ນ ເນື້ອໃນພົງສາວະດານລາວ ປີ 1973 ຈຶ່ງກວ້າງຂວາງອອກ. ສ່ວນການດັດແກ້ເທື່ອສຸດທ້າຍຂອງເພິ່ນ ໃນປີ 1982 ນັ້ນ ຖືວ່າເປັນຜົນງານປະຫວັດສາດລາວທີ່ມີເນື້ອໃນອຸດົມສົມບູນທີ່ສຸດຂອງເພິ່ນ, ຍ້ອນມະຫາສິລາ ວີຣະວົງ ເປັນຄົນອ່ອນນ້ອມຖ່ອມຕົວ ຊື່ຂອງປຶ້ມເພິ່ນກໍໃຊ້ຄຳວ່າ " ພົງສາວະດານລາວ " ທັງໆທີ່ຕົວຈິງມັນກໍແມ່ນປະຫວັດສາດລາວ ເຖິງມັນຈະບໍ່ເປັນປະຫວັດສາດລາວຢ່າງສົມບູນກໍຕາມ ຫລືອາດຍ້ອນສະໄໝນັ້ນຄຳວ່າ " ປະຫວັດສາດ " ຍັງບໍ່ທັນນິຍົມຈົນໃຊ້ຢ່າງແພຫລາຍ ເພາະຄຳນີ້ຫາກໍເກີດ , ເພິ່ນຈຶ່ງຍັງບໍ່ໃຊ້ຄຳນີ້ກໍເປັນໄດ້ ພົງສາວະດານລາວຂອງ ມະຫາສິລາ 1957 ຕ່າງປະເທດແປເປັນພາສາອັງກິດໃນປີ 1959 ກໍໃຊ້ຄຳວ່າ " ປະຫວັດສາດລາວ " (HISTORY OF LAO).

4./ <u>ຜົນງານດ້ານປະຫວັດສາດລາວຂອງ ມະຫາສິລາ ທີ່ຂ້າພະເຈົ້າຮູ້ຈັກດີ ມີດັ່ງນີ້</u> :

1.)	ພົງສາວະດານລາວ	ພິມປີ	1957
2.)	=''=	''	1973
3.)	=''=	ຕົ້ນສະບັບດັດແກ້ໃໝ່ໃນປີ	1982

4.) ກຳເນີດຊາວລາວ ຢູ່ໃນສຳມະນາປະຫວັດສາດລາວ 1971
5.) ປະຫວັດເຈົ້າ ອະນຸວົງ ພິມປີ 1968
6.) ນິທານ ຂຸນບູລົມ " 1967
7.) ປະຫວັດໜັງສືລາວ " 1974
8.) ມະຫາກາບ ທ້າວຮຸ່ງທ້າວເຈືອງ " 1988
9.) ຊູລັງຄະນິທານ " 1967
10.) ຕຳນານພະແຊກຄຳ " 1967
11.) ຕຳນານພະບາງ " 1967
12.) ຕຳນານພະແກ້ວ " 1967
13.) ປະຫວັດເຈດີຫລວງ " 1967
14.) ປະຫວັດທຸງລາວ " 1975
15.) ປະຫວັດ 12 ຕຸລາ " 1975

5./ <u>ການສານຕໍ່ຂອງພວກເຮົາຮຸ່ນໃໝ່</u> :

ໃນໂອກາດຄົບຮອບ 3 ປີ ແຫ່ງການມໍລະນະກຳ ມໍ້ລາງມະຫາສີລາ ວີຣະວົງ ຜູ້ອາວຸໂສ ທີ່ມີຜົນງານດ້ານປະຫວັດສາດລາວ ຄວນຈະເປັນໂອກາດສຳຄັນອັນໜຶ່ງ ທີ່ນັກປະຫວັດສາດ ຫລືຜູ້ສົນໃຈປະຫວັດສາດລາວທັງມວນ ຈະຫວນກັບໄປເບິ່ງຄືນຜົນງານ ດ້ານປະຫວັດສາດຂອງມະຫາສີລາ ວີຣະວົງ ທີ່ໄດ້ບຸກເບີກເສັ້ນທາງປະຫວັດສາດລາວໄວ້, ແນ່ນອນເສັ້ນທາງສາຍນີ້ ມັນຜ່ານການເວລານານຫລາຍທະສະວັດ ມັນກໍຈະຕ້ອງເປ່ເພຊຸດໂຊມບໍ່ຫລາຍກໍໜ້ອຍ ເປັນຂອງທຳມະດາຂອງອາຍຸສັງຂານ, ສົມຄວນທີ່ພວກເຮົາຮຸ່ນຫລັງຈະຕ້ອງສ້ອມແປງປັບປຸງໃຫ້ໄດ້ມາດຕະຖານ ແລະ ໃຫ້ທັນສະໄໝ ແນ່ນອນພວກເຮົາ ຮຸ່ນປະຈຸບັນ, ຢູ່ໃນສະພາບການໃໝ່ທີ່ມີຂໍ້ມູນໃໝ່ຢ່າງຫລວງຫລາຍກວ່າສະໄໝຂອງ ມະຫາສີລາ ຂຽນປຶ້ມນີ້, ເວົ້າແລ້ວ ພວກເຮົາອາດມີຄວາມສາມາດໄປໄດ້ໄກກວ່າເສັ້ນທາງ ທີ່

ມະຫາສິລາ ໄດ້ບຸກເບີກໄວ້ນັ້ນກໍຕາມ ແຕ່ພວກເຮົາຮຸ່ນຫລັງກໍຮູ້ບຸນຄຸນຂອງເພິ່ນຢ່າງບໍ່ມີວັນລືມ ຖືວ່າເພິ່ນເປັນພໍ່ໃນດ້ານນີ້, ພວກເຮົາຕ້ອງຊອກຂໍ້ມູນ ເອກະສານ ເພື່ອພິສູດຂໍ້ ສັນນິຖານ ຫລື ເພື່ອຕື່ມຂຸມປະຫວັດສາດຕ່າງໆ ແຕ່ຖ້າຫາກພວກເຮົາຈະຄິດວ່າ ໄດ້ຊ່ຳນີ້ ກໍພໍແລ້ວ ໃຊ້ໄດ້ແລ້ວ ບໍ່ຕ້ອງຄົ້ນຄວ້າດັດແກ້ເພີ່ມເຕີມຫຍັງອີກ ຖ້າຄິດແນວນີ້ຄວາມຮູ້ທາງດ້ານປະຫວັດສາດລາວຂອງພວກເຮົາຈະບໍ່ມີທາງກ້າວໜ້າ ຈະມີແຕ່ຖອຍຫລັງ, ເພາະວ່າ ພື້ນງານທີ່ຄົນຮຸ່ນເກົ່າຄົ້ນຄວ້າໄວ້ນັ້ນ ພວກເພິ່ນກໍອາໄສຫລັກຖານເທົ່າທີ່ມີໃນຈຳນວນຈຳກັດ , ມີບາງວັກບາງຕອນບໍ່ຄົບຖ້ວນ ເພິ່ນໃຊ້ວິທີການສັນນິຖານເອົາເພື່ອເຮັດໃຫ້ຂໍ້ຄວາມເຕັມຊຶ່ງບໍ່ແມ່ນໃຫ້ເຊື່ອໂລດ ເຊິ່ງເທົ່າກັບວ່າປະຫວ່າງໄວ້ໃຫ້ພວກເຮົາຮຸ່ນຫລັງສືບຕໍ່ຄົ້ນຄວ້າ ຫາຫລັກຖານມາດັດແປງແກ້ໄຂ, ແຕ່ຖ້າພວກເຮົາຮຸ່ນຫລັງທີ່ເປັນລູກສິດລູກຫາຂອງເພິ່ນ ບໍ່ເຂົ້າໃຈ ແລະ ເຊື່ອວ່າຂໍ້ສັນນິຖານອັນນັ້ນເປັນຈິງ ບໍ່ຍອມຄົ້ນຄວ້າໃໝ່ ຫາຫລັກຖານໃໝ່ ພໍໃຈຕາມຂໍ້ສັນນິຖານນັ້ນ ຈະເຮັດໃຫ້ປະຫວັດສາດລາວ ບໍ່ຂະຫຍາຍຕົວ. ສະນັ້ນພວກເຮົາຈຶ່ງຈະຕ້ອງເບິ່ງຄືນປະຫວັດສາດລາວຜ່ານມາ, ເບິ່ງເງື່ອນໄຂຄົ້ນຄວ້າໃນປະຈຸບັນ ແລະ ເບິ່ງໄປຂ້າງໜ້າ ເພື່ອໃຫ້ເຫັນບັນຫາປະຫວັດສາດລາວ ທີ່ພວກເຮົາຈະຕ້ອງແກ້ໄຂ ຂໍ້ສະເໜີບາງຕົວຢ່າງທີ່ພວກເຮົາຄວນສານຕໍ່ດັ່ງນີ້ :

ຢູ່ໜ້າ 4 ພົງສາວະດານລາວຂອງ ມະຫາສິລາ 1973 ເວົ້າວ່າ "ຊາດລົວະ ຫຼືລະວ້ງ ຄົນຊາດນີ້ ສັນນິຖານວ່າ ແມ່ນຊາດລາວເດີມພວກໜຶ່ງ ເຊິ່ງໄດ້ເຂົ້າມາຕັ້ງ ຖິ່ນຖານຢູ່ໃນພູມີພາກແຫລມອິນດູຈີນພາກເໜືອກ່ອນພວກຂອມ ຄືຕັ້ງແຕ່ເມືອງລົບບູລີ ຂຶ້ນໄປເຖິງ ອານາຈັກຊຽງແສນ ຕໍ່ແດນຢູນານຂອງຈີນທຸກວັນນີ້ ພວກລົວະເປັນຊາດທີ່ບໍ່ມີ ຄວາມຈະເລີນເທົ່າທຽມພວກຂອມ ດັ່ງນັ້ນ ເມື່ອພວກຂອມແຜ່ອຳນາດຂຶ້ນມາທາງເໜືອພວກຂອມຈຶ່ງຍາດເອົາດິນແດນຂອງພາກ ລົວະໄປໝົດ ພວກລົວະຈຶ່ງເສື່ອມສູນລົງ...".

ຂໍ້ຄວາມນີ້ ມະຫາສິລາ ກໍໃຊ້ຄຳວ່າ "ສັນນິຖານ" ຄືປະໄວ້ໃຫ້ພວກເຮົາ ຄົ້ນຄວ້າເບິ່ງວ່າແມ່ນແທ້ບໍ່ ? ຂ້າພະເຈົ້າເອງໄດ້ພະຍາຍາມຄົ້ນຄວ້າເບິ່ງ ກໍເຫັນວ່າມີຄວາມ ຈິງຍ້ອນມີຫລາຍເອກະສານຢັ້ງຢືນແນວນີ້ແທ້. ແຕ່ວ່າບັນຫານີ້ຍັງບໍ່ທັນຍຸຕິທຳໄດ້ເທື່ອ ເຊື່ອວ່າຈະມີຫລາຍທ່ານຄັດຄ້ານບໍ່ເຫັນດີ ເຊິ່ງເຮົາຈະຕ້ອງຟັງເຫດຜົນຂອງແຕ່ລະທ່ານວ່າ ໜັກ

ແໜ້ນຊ່ຳໃດ. ເວລານີ້ ຂ້າພະເຈົ້າກໍຮີບໂຮມທັດສະນະທີ່ບໍ່ເຫັນດີຕໍ່ບັນຫານີ້ໄດ້ 2-3 ທັດສະນະແລ້ວ ເພື່ອສັງລວມເບິ່ງ ແນ່ນອນວ່າຖ້າເຫັນວ່າທັດສະນະໃດຖືກຕ້ອງ ໜັກແໜ້ນກວ່າຂ້າພະເຈົ້າກໍຈະເອົາຕາມນັ້ນ ຈະບໍ່ຕາຍຕົວ.

- <u>ເລື່ອງນາງ ມະຫາເທວີ</u> : ມີຫລາຍກະແສຄວາມຄິດວ່າ ນາງເປັນຄົນສາມານໂຫດຮ້າຍ ປອງຂ້າແຕ່ພະມະຫາກະສັດຢູ່ບໍ່ຂາດ ບໍ່ມີຜູ້ໃດເປັນເຈົ້າແຜ່ນດິນໄດ້, ຢູ່ໜ້າ 45-46 ຂອງປຶ້ມພົງສາວະດານ, ມະຫາສິລາ ກໍວ່ານາງເປັນພະລາຊະພາຄິນີ ຂອງ ພະຍາມສາມແສນໄທ ຢູ່ໃນພຸດໂນດປຶ້ມນີ້ ກໍວ່ານາງມີອາຍຸ 95 ປີ ຫລາຍທ່ານກໍວ່າ ຖ້ານາງມີອາຍຸ 95 ປີ ຈະເຮັດຫຍັງໄດ້, ເຮົາຈຶ່ງພະຍາຍາມຄົ້ນຄວ້າ ຊຸມບູລົມຫລາຍສະບັບເຫັນວ່າມີ 3 ທັດສະນະ ຄື :

1.) ນາງ ເປັນເມຍສາມແສນໄທ

2.) ນາງ ເປັນ ລາຊະພາຄິນີ ສາມແສນໄທ

3.) ນາງ ເປັນ ລູກສາວ ສາມແສນໄທ.

ສະນັ້ນ ຈຶ່ງອາດລົງຄວາມເຫັນວ່າ ນາງແມ່ນລູກສາວສາມແສນໄທ ຕາມຊຸມບູລົມບາງສະບັບເວົ້າໄວ້ ອາດຈະຖືກຕ້ອງກວ່າ ເພາະຖ້າເປັນລູກສາວນາງກໍຈະຢູ່ໃນໄວທີ່ແຂງແຮງ ແລະ ມີອຳນາດພໍເຮັດຟ້າເຮັດຝົນໄດ້.

- <u>ເລື່ອງເຈົ້າອະນຸເສຍຍ້ອນຜູ້ຍິງ</u> : ຫລວງວິຈິດ ວາທະການ ຂຽນນິຍາຍໄວ້ວ່າ ເຈົ້າອະນຸບໍ່ໄດ້ເສັຽຊາດ ເຮັດສົງຄາມຍ້ອນຜູ້ຍິງ ຄືເລີ່ມຕົ້ນກໍ່ສົງຄາມ ກໍຍ້ອນຜູ້ຍິງ ບັ້ນທ້າຍປະລາໄຊກໍຍ້ອນຜູ້ຍິງ. ເລີ່ມຕົ້ນກໍ່ສົງຄາມແມ່ນຍ້ອນຕ້ອງການເຈົ້າຍິງ ດວງຄຳ ເຊິ່ງແມ່ນເຈົ້າຍິງລາວທີ່ຖືກກວາດໄປ, ນາງ ເປັນຄົນງາມລືຊື່ ເຈົ້າອະນຸຈຶ່ງຕ້ອງການນາງນີ້, ເຈົ້າຍິງ ດວງຄຳ ນີ້ແມ່ນໃຜ ? ເຈົ້າອະນຸຫລົງໄຫລເຈົ້າຍິງນີ້ຕາມຫລວງວິຈິດວ່າແທ້ບໍ່ ? ຄົ້ນຄວ້າເບິ່ງແລ້ວເຫັນວ່າບໍ່ແມ່ນ, ເຈົ້າອະນຸເຮັດສົງຄາມແມ່ນເພື່ອເອກະລາດ ບໍ່ແມ່ນຍ້ອນຕ້ອງການເຈົ້າຍິງ ດວງຄຳ ມາເຮັດເມຍ, ເຈົ້າຍິງດວງຄຳແມ່ນຫລານສາວ ຂອງເພິ່ນເອງ ຄືນາງແມ່ນລູກສາວຂອງເຈົ້າຂີ້ເຫຍງ ແມ່ນລູກຊາຍຄົນທີ 7 ຂອງເຈົ້າ ອະນຸ.

ບັນຫານີ້ ມະຫາສີລາກໍ່ເວົ້າແຈ້ງວ່າ ຍັງບໍ່ທັນຮູ້ວ່າ ເຈົ້າຍິງດວງຄໍາແມ່ນໃຜແທ້ ອັນໃດເພິ່ນຄົ້ນຄວ້າບໍ່ທັນໄດ້ ເພິ່ນກໍເວົ້າແຈ້ງວ່າຍັງບໍ່ທັນໄດ້ ຄືປະໄວ້ໃຫ້ພວກເຮົາຮຸ່ນຫລັງ ຄົ້ນຄວ້າຕໍ່.

ສ່ວນເຈົ້າອະນຸປະລາໄຊຍ້ອນຜູ້ຍິງ ຄືນາງ ໂມ ອັນນີ້ກໍ່ບໍ່ຈິງຄືກັນ ເອກະສານ ພື້ນວຽງກໍ່ບໍ່ໄດ້ເວົ້າເຖິງນາງໂມເລີຍ ນາງໂມ ແມ່ນຖືກປັ້ນແຕ່ງຂຶ້ນນໍາຫລັງ ການປະລາໄຊ-ຂອງສົງຄາມ ແມ່ນຍ້ອນການຊ່ວງຊາກໍາລັງຜິດດ່ຽງກັນ, ໂດຍສະເພາະສະຫຍາມມີກອງທັບຕ່າງຊາດໜູນຫລັງ ມີອາວຸດທັນສະໄໝຈາກນາຍທຶນຕາເວັນຕົກ ຈຶ່ງເຮັດສົງຄາມ ແບບທັນສະໄໝ ສ່ວນເຈົ້າອະນຸຍັງເຮັດສົງຄາມແບບບູຮານ ຈຶ່ງປະລາໄຊບໍ່ແມ່ນຍ້ອນນາງໂມເລີຍ.

- <u>ເຈົ້າມັນທາຕຸລາດ ເຈົ້ານ້ອຍ ເຈົ້າອຸປະຣາດຕິດສະ</u> : ຫລາຍເອກະສານລວມທັງຂອງມະຫາສີລາ ກໍວ່າ 3 ຄົນນີ້ເປັນກະບົດຕໍ່ເຈົ້າອະນຸ ສົງຄາມກູ້ເອກະລາດຈຶ່ງປະລາໄຊ, ຂ້າພະເຈົ້າລອງຕັ້ງເປັນບັນຫາຂຶ້ນວ່າແມ່ນແທ້ບໍ່ ? ເປັນຫຍັງລາວ ຈຶ່ງບໍ່ເອກະພາບກັນໃນສະພາບໜ້າສື່ວໜ້າຂວານ. ເຈົ້າມັນທາຕຸລາດກະບົດຕໍ່ເຈົ້າອະນຸແນວໃດ ? ອັນໃດຢັ້ງຢືນ ? ອ່ານເບິ່ງກໍຮູ້ຕາມເອກະສານວ່າ ເຈົ້າມັນທາຕຸລາດກະບົດເຈົ້າອະນຸ ຄືພາຍຫລັງ ເຈົ້າອະນຸສົ່ງທູດໄປຫລວງພະບາງໃຫ້ຮ່ວມກັນກຽມກອງທັບກູ້ເອກະລາດ, ເຈົ້າມັນທາຕຸລາດຮູ້ວ່າ ເຈົ້າອະນຸຈະກູ້ເອກະລາດກໍເລີຍໄຂຄວາມລັບນີ້ແກ່ສະຫຍາມ ໂດຍສົ່ງ ຈ. ມ. ໄປບາງກອກ ໃຫ້ລູກຊາຍ 2 ຄົນນໍາລົງໄປ. ແຕ່ເມື່ອຄົ້ນຄວ້າເບິ່ງເອກະສານຕົກແມຈຶ່ງຮູ້ວ່າບໍ່ແມ່ນ, ເພາະວ່າຕົວຈິງເອກະສານນີ້ສົ່ງລົງບາງກອກ ພາຍຫລັງວຽງຈັນ ແຕກແລ້ວ ສະນັ້ນ ເຈົ້າມັນທາຕຸລາດຈຶ່ງບໍ່ໄດ້ໄຂຄວາມລັບກ່ອນຈະກູ້ເອກະລາດ ແລະ ແມ່ທັບສະຫຍາມເອງກໍກ່າວພາຍຫລັງວຽງຈັນແຕກແລ້ວວ່າ (ອານາມສະຫຍາມຍຸດ ໜ້າ283) "ບັນດາກອງທັບລາວຈາກຫົວເມືອງຕ່າງໆ ເຊັ່ນກອງທັບເມືອງຊຽງໃໝ່, ເມືອງແພ່ ; ເມືອງນ່ານ, ລໍາພູນ, ລໍາປາງ ແລະ ເມືອງຫລວງພະບາງ ທີ່ມາຊ່ວຍ ເຊິ່ງມີ ກໍາລັງພົນຮອດ 30.000 ຄົນນັ້ນ ເມື່ອຍົກທັບມາຮອດເຂດຊາຍແດນຂອງວຽງຈັນແລ້ວ ໄດ້ລີ້ຖ້າຟັງເບິ່ງເຫດການກ່ອນເປັນເວລາດົນນານຄອຍທ່ວງທີໄຫວພິບທໍາເປັນສອງເງື່ອນ ຢູ່ທຸກເມືອງ..." ແມ່ທັບສະຫຍາມຈຶ່ງລົງໂທດຫົວເມືອງລາວເຫລົ່ານີ້ ໂດຍໃຫ້ໄປຕາມ ຈັບ

ເອົາເຈົ້າອະນຸ. ນີ້ສະແດງວ່າເຈົ້າມັນທາຕຸລາດບໍ່ໄດ້ກະບົດ, ຜູ້ຈັບເຈົ້າອະນຸໄດ້ ແມ່ນເຈົ້າໜານອັດຕິຍະ ເມືອງນ່ານ ບໍ່ແມ່ນເຈົ້ານ້ອຍ, ອຸປະຣາດຕິດສະກໍບໍ່ໄດ້ກະບົດຕໍ່ ເຈົ້າອະນຸ ເພິ່ນຖືກຈັບໄດ້ພາຍຫລັງ ວຽງຈັນແຕກແລ້ວ, ທັງໝົດນີ້ ແມ່ນຂ້າພະເຈົ້າ ຍົກບາງຕົວຢ່າງທີ່ພວກເຮົາຕ້ອງສືບຕໍ່ສານຕໍ່ຜົນງານຂອງອາຈານ ມະຫາສີລາ ວີຣະວົງ ໂດຍອີງໃສ່ເອກະສານ ຂໍ້ມູນໃໝ່ທີ່ມີເພີ່ມຂຶ້ນ ເພື່ອເຮັດໃຫ້ປະຫວັດສາດລາວ ຊັດເຈນຍິ່ງຂຶ້ນ.

ທັດສະນະຕໍ່ການຄົ້ນຄວ້າປະຫວັດສາດນັ້ນ ຂ້າພະເຈົ້າເຫັນວ່າ ບໍ່ຄວນປະອັນເກົ່າ ເຊັ່ນຜົນງານຂອງມະຫາສີລາ ທີ່ເພິ່ນນຳໃຊ້ຂໍ້ມູນທີ 1 ເປັນສ່ວນຫລາຍ ຈຶ່ງມີຄຸນຄ່າຫລາຍ ພ້ອມດຽວກັນພວກເຮົາກໍຈະຕ້ອງເບິ່ງຂໍ້ມູນໃໝ່ໆ ທີ່ມີເພີ່ມຂຶ້ນຫລາຍ ເພື່ອດັດແປງອັນເກົ່າທີ່ຍັງບໍ່ສົມບູນໃຫ້ສົມບູນຊັດເຈນ. ເວົ້າລວມແລ້ວ ທັດສະນະຕໍ່ການຄົ້ນຄວ້າປະຫວັດສາດ ມີ 3 ທັດສະນະ ຄື : <u>ໜຶ່ງ</u> : ພໍໃຈຕາມອັນເກົ່າທີ່ມີແລ້ວ ບໍ່ຄົ້ນຄວ້າຕື່ມ <u>ສອງ</u> : ຄົ້ນຄວ້າຕື່ມແຕ່ເຮັດແບບຊາດໃຫຍ່ ເວົ້າເກີນຄວາມຈິງບໍ່ມີວິທະຍາສາດ ທັງສອງ ທັດສະນະເຫັນວ່າບໍ່ດີ <u>ສາມ</u> : ບໍ່ປະຜົນງານເກົ່າ, ທັງຫາຫລັກຖານໃໝ່ໆ ມາເພີ່ມເຕີມ ຄົ້ນຄວ້າຢ່າງມີວິທະຍາສາດ ມີຫລັກຖານ ຂໍ້ມູນອ້າງອີງຄັກແນ່ ທັດສະນະທີສາມນີ້ ເຫັນວ່າຖືກຕ້ອງດີ.

ສະຫລຸບແລ້ວ ມະຫາສີລາ ວີຣະວົງ ແມ່ນຄົນລາວຜູ້ຮັກຊາດຢ່າງແທ້ຈິງຜູ້ໜຶ່ງ ເພິ່ນໄດ້ເອົາໃຈໃສ່ ສຶກສາຄົ້ນຄວ້າປະຫວັດສາດ ວັດທະນະທຳ ຂອງລາວມາແຕ່ນ້ອຍຈົນໃຫຍ່, ໄດ້ປະກອບສ່ວນອຸທິດໝົດຊີວິດຂອງທ່ານເພື່ອຊາດລາວ, ໄດ້ປະກອບສ່ວນຕ້ານຈັກກະພັດຍີ່ປຸ່ນ ແລະ ຕ້ານຝະລັ່ງໃນຊຸມປີ 40 ຢ່າງຫ້າວຫັນຂັນແຂງ, ພ້ອມກັນນັ້ນ ເພິ່ນກໍໄດ້ ເອົາໃຈໃສ່ຄົ້ນຄວ້າວັດທະນະທຳລາວໃນຫລາຍດ້ານ ເຊັ່ນ ພາສາສາດ, ວັນນະຄະດີ, ອັກສອນສາດ, ປະຫວັດສາດ ເປັນຕົ້ນ ເຊິ່ງເພິ່ນມີຜົນງານຢ່າງຫລວງຫລາຍ ຄືດັ່ງທີ່ ພວກເຮົາຮູ້ແລ້ວ ໂດຍສະເພາະດ້ານປະຫວັດສາດລາວ ເພິ່ນເປັນຄົນລາວຜູ້ທຳອິດ ທີ່ໄດ້ ຂຽນພົງສາວະດານລາວ ກໍຄືປະຫວັດສາດລາວ ແລະ ຖືກພິມເປັນແບບຮຽນຢ່າງເປັນທາງການໃນປີ 1957 ຫລັງຈາກນັ້ນ ຈຶ່ງມີຄົນລາວໄດ້ຄົ້ນຄວ້າ ແລະ ຂຽນປະຫວັດສາດລາວໃນຊຸມປີຕໍ່ມາ ໂດຍອີງໃສ່ປຶ້ມຂອງອາຈານມະຫາສີລາເປັນຫລັກ.

ຍ້ອນອາຈານມະຫາສິລາ ວີຣະວົງ ເປັນຜູ້ທຳອິດທີ່ມີຜົນງານດ້ານປະຫວັດສາດລາວ ທີ່ຄົນລາວທົ່ວໄປ ແລະ ໂລກຮັບຮູ້, ໃນທັດສະນະສ່ວນຕົວ ຂ້າພະເຈົ້າເຫັນສົມຄວນ ຍົກຍ້ອງ ອາຈານມະຫາສິລາ ວີຣະວົງ ເປັນບິດາປະຫວັດສາດລາວ ເພື່ອເປັນການຮັບຮູ້ ມູນມໍລະດົກ ດ້ານປະຫວັດສາດລາວ ທີ່ມະຫາສິລາໄດ້ສ້າງໄວ້ ຂ້າພະເຈົ້າຈຶ່ງຂໍສະເຫນີຕໍ່ກອງປະຊຸມຄັ້ງນີ້ໃຫ້ພິຈາລະນາຕື່ມ ຕາມຂັ້ນຕອນ ຈະສົມຄວນຫລືບໍ່.

ສຸດທ້າຍ ຂ້າພະເຈົ້າຂໍອະໄພອີກເທື່ອໜຶ່ງ ທີ່ຂ້າພະເຈົ້າມີຫລາຍອັນຂາດຕົກ ບົກພ່ອງໃນການກະກຽມ, ຍ້ອນກະກຽມໃສ່ກອງປະຊຸມສຳມະນາປະຫວັດສາດລາວ ແລະ ມີເວລານ້ອຍໃນການກຽມໃສ່ ການສຳມະນາຜົນງານຂອງມະຫາສິລາ ສະນັ້ນ ຈຶ່ງມີຈຸດອ່ອນຢ່າງຫລວງຫລາຍ ທັງຄວາມຮູ້ ແລະ ບົດຮຽນກໍຈຳກັດ ຈຶ່ງໄດ້ສະເຫນີເປັນພຽງ ບາງຈຸດເທົ່ານັ້ນ ຂໍໃຫ້ບັນດາທ່ານຜູ້ຮູ້ ໄດ້ດັດແປງແກ້ໄຂເພີ່ມເຕີມ.

ເບື້ອງຫລັງ ພັດທະນາການ ທາງດ້ານ ຄວາມຄິດ ຂອງ ມະຫາ ສິລາ ວີຣະວົງ

• ຮັດ ບັນທະຈັກ

ນັກວິໄຈ ສະຖາບັນວິໄຈ ສິລະປະ
ແລະວັດທະນະທຳ ອີສານ

ໃນເລື່ອງຂອງການສຶກສາປະຫວັດສາດ ຫລືວ່າ ການສຶກສາເລື່ອງລາວຂອງ ສອງຝັ່ງຂອງນີ້ ເຮົາກໍພະຍາຍາມສຶກສາ ພະຍາຍາມຕໍ່ສູ້ມາຂ້ອນຂ້າງດົນແລ້ວ ເພາະວ່າຄຳຄຳນີ້ ຢູ່ພູມສ່ວນຫລາຍບໍ່ສູ້ໃຊ້ກັນ ເຂົາເຈົ້າຕັດແຍກສ່ວນເພື່ອສຶກສາ ຖ້າຈະສຶກສາ ອີສານ ກໍໃຊ້ແມ່ນ້ຳຂອງເປັນເສັ້ນແດນໂລດ ຫລືສຶກສາເມືອງລາວກໍເຊັ່ນກັນ.

ຈາກຈຸດນີ້ເອງ ຈຶ່ງເຮັດໃຫ້ເຮົາພະຍາຍາມເວົ້າເລື່ອງສອງຝັ່ງຂອງໃຫ້ເປັນ ອັນໜຶ່ງອັນດຽວກັນ

ດັ່ງນັ້ນ ບົດຄວາມທີ່ຂຽນມາແລ້ວ ເປັນຂໍ້ສັງເກດບາງຢ່າງ ກ່ຽວກັບການສຶກສາອະລະຍະທຳ ລອງແມ່ນ້ຳຂອງກໍລະນີການສຶກສາຂອງມະຫາສີລາ ວີຣະວົງ ອີກສ່ວນໜຶ່ງກໍ່ເປັນເລື່ອງຂອງແນວການສຶກສາກົດໝາຍ ສອງຟາກຝັ່ງ ແມ່ນ້ຳຂອງ ເພາະວ່າ ທ່ານ ມະຫາສີລາ ວີຣະວົງ ກໍ່ເປັນຜູ້ທຳອິດທີ່ເອົາເລື່ອງຮີດບ້ານຄອງເມືອງຂຶ້ນມາເວົ້າ ແຕ່ເມື່ອ ເພິ່ນເອົາມາເວົ້າແລ້ວ ບໍ່ມີຜູ້ສານຕໍ່ ໃນກໍລະນີທີ່ວ່າ ເຮັດແນວໃດ ການສຶກສາຈຶ່ງຈະຮອບດ້ານ ແລະ ຄວບຄຸມພາຍໃນຂອບເຂດການສຶກສາ ທີ່ເປັນວັດອັນດຽວກັນ ເພາະຢ່າງໜ້ອຍທີ່ສຸດ ຄວາມເປັນປະຊາຊາດ ຂອງກຸ່ມ ໄທ-ລາວ ມີຂອບຂ້າງສູງ ດັ່ງນັ້ນ ໃນການສຶກສາ ເຮົາບໍ່ຄວນສ້າງພົມແດນທາງຄວາມຮູ້ເປັນໂຕກຳນົດແນວຄິດໄວ້ ຖ້າດັ່ງນັ້ນ ກໍ່ຈະບໍ່ມີຫຍັງ ກ້າວໜ້າ.

ໃນສິ່ງທີ່ຈະສະເໜີໄປນີ້ ໃຫ້ຖືວ່າເປັນຂໍ້ສັງເກດເທົ່ານັ້ນ ໃນຖານະທີ່ເຮົາເຄີຍສຳຜັດກັບຜົນງານຂອງທ່ານມະຫາສີລາ ວີຣະວົງ ມາແລ້ວ ເພາະຢ່າງໜ້ອຍທີ່ສຸດ ຕະຫລອດອາຍຸເພິ່ນກິນເວລາ 80 ກວ່າປີ ກິນເວລາ 48 ປີ ທີ່ເພິ່ນສຶກສາຄົ້ນຄວ້າ ແລະອອກໜັງສືເຫລັ້ມທຳອິດ ແຕ່ປີ 1927 ຈົນວ່າ ເຖິງປີ 1975.

ຕະຫລອດ 40 ກວ່າປີ ເພິ່ນສ້າງຜົນງານ ສ້າງສັນຄວາມຄິດໃນສ່ວນທີ່ເປັນອະລະຍະທຳລອງແມ່ນ້ຳຂອງເຊິ່ງຂ້ອນຂ້າງມີຄວາມສຳຄັນ

ໃນການນຳສະເໜີເທື່ອນີ້ ເຮົາພະຍາຍາມໃຫ້ເບິ່ງວ່າ ໃນການຄົ້ນຄວ້າຂອງເພິ່ນມີຮູບແບບໃໝ່ແນວໃດ ເບິ່ງເບື້ອງຫລັງທີ່ຊຸກດັນໃຫ້ເພິ່ນເຮັດໄດ້ຄືແນວນັ້ນ

ຈາກຈຸດນີ້ຖ້າເຮົາເບິ່ງຜົນງານຂອງເພິ່ນທີ່ພິມແຕ່ປີ 1927 ເຖິງປີ 1975 ຈະມີການພິມຊ້ຳຫລາຍເທື່ອ ແຕ່ຈຸດເດັ່ນທີ່ສຸດ ສອງເຫລັ້ມທຳອິດທີ່ພິມຂຶ້ນມາ ບໍ່ວ່າຈະເປັນວັດສັນດອນ ຫລື ພຸດທະປະຫວັດ ມັນມີຄວາມສຳຄັນໃນໂຕມັນຢ່າງໜຶ່ງ ແລະ ອີກຈຸດໜຶ່ງ ທີ່ສຳຄັນ ໃນປີ 1967 ມີການພິມປຶ້ມອອກເຖິງ 6 ເຫລັ້ມ ບໍ່ວ່າເປັນຕຳນານພະແຊກຄຳຕຳນານພະບາງ ພະແກ້ວ ຂຸນບູລົມ ປະຫວັດພະບາງຫລວງ... ຫລືປີ 1975 ປະຫວັດ 12 ຕຸລາ 1945 ຈາກໂຕນີ້ມີພັດທະນາການທາງດ້ານຄວາມຄິດຂອງເພິ່ນ ຢ່າງໜ້ອຍທີ່ສຸດ ບໍ່ແມ່ນຢູ່ຊື່ໆ ເພິ່ນຄຶດໄດ້ ຢ່າງໜ້ອຍ ການບົ່ມເພາະທາງປັນຍາ ຂອງເພິ່ນ-

ເຊິ່ງໄດ້ກໍ່ ເພາະໃນເວລາບວດຮຽນ ຈຶ່ງເຮັດໃຫ້ເພິ່ນໃກ້ຊິດກັບພຸດທະສາສະໜາ ດັ່ງຈະເຫັນວ່າ 2 ເຫລັ້ມທຳອິດເປັນໜັງສື ເລື່ອງພະເລື່ອງເຈົ້າ ຫລືເກືອບ 60% ຂອງໜັງສືທັງໝົດ ເປັນໜັງສືທີ່ອີງສາສະໜາເວົ້າເລື່ອງພະເລື່ອງເຈົ້າ ຢ່າງໜ້ອຍທີ່ສຸດຊິໃຫ້ເຫັນວ່າ ເພິ່ນມີຄວາມຜູກພັນກັບສາສະໜາ ຂ້ອນຂ້າງສູງ ເຊິ່ງເປັນເລື່ອງຂອງຄວາມເຊື່ອຈະເປັນສາສະໜາມີລະບົບ ຫລືສາສະໜາຂອງຊາວບ້ານ ເລື່ອງຜີ ສາງ ແຖນ.

ການທີ່ເພິ່ນໄດ້ໄປຮຽນຮູ້ຢູ່ບາງກອກ ເຮັດໃຫ້ເຫັນການພັດທະນາການໃນຮູບ ແບບຂອງການຂຽນປະຫວັດສາດ ຢ່າງໜ້ອຍທີ່ສຸດ ເພິ່ນໄດ້ອ່ານໜັງສືເວົ້າເຖິງເຈົ້າ ອະນຸວົງແລ້ວເຮັດໃຫ້ເພິ່ນມີຄວາມຮັກທີ່ຈະຂຽນສຶກສາເລື່ອງລາວປະຫວັດສາດ ແຕ່ເປັນຫຍັງ ແນວຂຽນປະຫວັດສາດຂອງເພິ່ນຈຶ່ງອອກມາແນວນັ້ນ ຖ້າເຮົາເບິ່ງປະຫວັດສາດ ຄວາມສຳຄັນ-ຂອງສອງຝັ່ງຂອງ ເຮົາຊິເຫັນວ່າ ອິດທິພົນຂອງຄວາມຄິດຈະມາຈາກຝັ່ງນັ້ນຫລາຍກວ່າ -ຢ່າງໜ້ອຍເອກະສານທີ່ໃຊ້ ຖ້າເຮົາສຶກສາເອກະສານສ່ວນໜຶ່ງບໍ່ຕ່ຳກວ່າ 80% ຂອງໜັງສືທີ່ເພິ່ນຂຽນ ບໍ່ວ່າປະຫວັດສາດລາວ ຫລືອັນໃດກໍ່ຕາມ ຊິໄດ້ມາຈາກຫໍສະໝຸດ ແຫ່ງຊາດ ເຊິ່ງບໍ່ຕ່າງຫຍັງກັບນັກວິຊາການສະໄໝນັ້ນເຮັດ ເຊິ່ງເອີ້ນວ່າ ນັກວິຊາການ ສະໄໝຈາຣີດ ບໍ່ວ່າຈະ ປັນພະຍາອານຸມານລາດສະທົນ ສົມເດັດກົມ ພະຍາດຳລົງລາຊາ ນຸພາບ ເຊິ່ງເປັນແບບຢ່າງທີ່ດີສຳລັບເພິ່ນ ໃນການຂຽນປະຫວັດສາດ ທາງດ້ານພົງສາວະດານ ເພາະວ່າຍຸກນັ້ນ ໃນການຂຽນປະຫວັດສາດມີແນວນີ້

ໃນທຳນອງດຽວກັນ ຈະຕັ້ງໃຈຫລືບໍ່ຕັ້ງໃຈກໍ່ຕາມ ແຕ່ສິ່ງທີ່ເພິ່ນຮັບຮູ້ ສິ່ງເພິ່ນເຫັນມັນໄດ້ຊຶມເຂົ້າໄປໃນສາຍເລືອດຂອງເພິ່ນແລ້ວ ຈາກແນວນີ້ ຖ້າເບິ່ງເລິກເຂົ້າໄປອີກ ໃນໄຕຕຳນານເອງ ມັນຈະມີວິວັດທະນາການຂອງມັນ ຖ້າເບິ່ງອີ່ຫລີ ໃນສ່ວນທີ່ເຮົາ ພະຍາຍາມຈະເອີ້ນວ່າຕຳນານ ເອີ້ນວ່າພົງສາວະດານ ແນວຄວາມຄິດຂອງບ້ານເຮົາ ມີຢູ່ແລ້ວຄືເລື່ອງພົນ ບໍ່ວ່າພົນຂຸນບູລົມ ພົນວຽງຈັນ... ນັ້ນເປັນແນວຄິດດັ້ງເດີມເປັນຈາຣີດເປັນປະເພນີ ໃນການຂຽນປະຫວັດສາດບ້ານເຮົາມັນມີຢູ່ແລ້ວ ແຕ່ເຮົາພະຍາຍາມແປງຄຳອື່ນ ທີ່ເຮົາຄິດວ່າມັນເປັນຄຳສາກົນ ໂດຍທີ່ເຮົາບໍ່ເບິ່ງຂອງເຮົາກ່ອນ ເຊິ່ງໜັງສືເລື່ອງນີ້ ທີ່ມີການພິມອອກໃໝ່ ອາຈານ ອີໂນ ພິມສິພຣູ [illegible] ຕຳນານ ຊຶ່ງ

ຕຳນານເຮັດໃຫ້ເຫັນບ້ານເມືອງ ເຮັດໃຫ້ເຫັນການຕໍ່ສູ້ ເຮັດໃຫ້ເຫັນການພັດທະນາສັງຄົມ

ຈາກບ່ອນນີ້ ອິດທິພົນຂອງສັງຄົມ ເປັນຕົວກຳນົດໃຫ້ມະຫາສິລາ ເຮັດເລື່ອງ ລາວ ຕ່າງໆຂຶ້ນມາ.

ຫລັງຈາກນັ້ນມາເຖິງຍຸກໜຶ່ງ ເພິ່ນໄດ້ນັ່ງລຳລຶກເຖິງເບື້ອງຫລັງ ໃນໄລຍະນີ້ເອງ ເພິ່ນພະຍາຍາມຂຽນປະຫວັດການຕໍ່ສູ້ ມີສ່ວນຮ່ວມຂອງເພິ່ນ ໃນວັນທີ 12 ຕຸລາ 1945 ເຊິ່ງເຮັດໃຫ້ເຫັນການຕໍ່ສູ້ຜ່ານມາແລ້ວ ຍຸກໜຶ່ງຈະຫັນຫາອະດີດ ດັ່ງນັ້ນປະຫວັດສາດນີ້ຈຶ່ງເກີດມາ ເຊິ່ງເປັນປະຫວັດສາດທີ່ສຳຄັນອີກອັນໜຶ່ງ ມັນພົວພັນເຖິງປະຫວັດສາດ ຍຸກໃໝ່ທີ່ໜ້າສົນໃຈ

ຢ່າງໜ້ອຍທີ່ສຸດ ຜົນງານຂອງມະຫາສິລາ ດ້ວຍຄວາມຄິດຂອງເພິ່ນເອງ ທີ່ໄດ້ຮັບແນວການຂຽນແບບໄທ ສະໄໝຈາຣິດແລ້ວ ອີກຂໍ້ໜຶ່ງ ທີ່ເພິ່ນເຮັດວຽກນີ້ໄດ້ ແມ່ນ ຈາກຄວາມຮັກ ຄວາມສັດທາອີ່ຫລີ ເຊິ່ງເປັນຄວາມຮັກອັນບໍລິສຸດ ຮັກວິຊາການອີ່ຫລີ ຈາກຄວາມຮັກໂຕນີ້ເອງ ມີບັນຫາຢູ່ວ່າ ຄົນຍຸກໃໝ່ ໄທເຮົາຈະນຳໃຊ້ຈັ່ງໃດ ເພາະວ່າຄວາມເປັນວິຊາການພວກນີ້ ຈະຕ້ອງບໍລິສຸດ ຈະຕ້ອງເປັນອິດສະລະຢູ່ໃນໂຕ ດັ່ງນັ້ນຈຸດມຸ້ງໝາຍຂອງຜູ້ສ້າງຕ້ອງເຂົ້າໃຈຢ່າງແມ່ນຊັດວ່າ ເຂົາສຶກສານຳສະເໜີເພື່ອຫຍັງ ດັ່ງນັ້ນການທີ່ຈະນຳໄປໃຊ້ ການທີ່ຈະແປລະຫັດທາງຄວາມຄິດຂອງເພິ່ນໃໝ່ ຕ້ອງໄດ້ລະມັດລະວັງ ຕ້ອງແປດ້ວຍຄວາມບໍລິສຸດຂອງງານວິຊາການ ຢ່າແປໄປຮັບໃຊ້ຜົນປະໂຫຍດອັນໃດອັນໜຶ່ງ

ມະຫາສິລາ ບໍ່ແມ່ນສົມບັດຂອງຜູ້ໃດຜູ້ໜຶ່ງ ບໍ່ແມ່ນສົມບັດຂອງຝັ່ງນີ້ ບໍ່ແມ່ນ ສົມບັດຂອງຝັ່ງພຸ້ນ ແຕ່ແມ່ນສົມບັດຂອງທຸກຄົນ ຢ່າງໜ້ອຍເພິ່ນເປັນຄົນຂອງປະຊາຊາດ ດັ່ງນັ້ນການແປຜົນງານຂອງເພິ່ນ ຕ້ອງອະທິບາຍໃນມຸມກວ້າງ ຄ່າຂອງເພິ່ນຈະສູງຂຶ້ນ

ຈາກຈຸດນີ້ມີບັນຫາຢູ່ວ່າ ເຮັດຈັ່ງໃດເຮົາຈະຫາຄົນຍຸກໃໝ່ສືບທໍ່ແທນແນວໄດ້ - ຢ່າງໜ້ອຍໆເຮົາກໍ່ມີນັກວິຊາການທີ່ມີຄວາມສາມາດຫລາຍ ແຕ່ເຮົາຂາດການພົບປະກັນໃນລັກສະນະນີ້ ອີກອັນໜຶ່ງ ເມື່ອພົບປະກັນ ບັນຫາໜຶ່ງທີ່ພໍ້ ຄືເຮົາບໍ່ກ້າວິພາກວິຈານ

ດັ່ງນັ້ນເຮົາຈຶ່ງຂໍຝາກຝັງໄວ້ວ່າ ໃນການຈະຊອກໃຊ້ ຢາກໃຫ້ອະທິບາຍ ພາບລວມຂອງໂຕຕົນເພິ່ນ ຕ້ອງແນມຄົນໃຫ້ເຫັນຄົນ

ອີກຈຸດໜຶ່ງ ແນວການສຶກສາຂອງເພິ່ນກ່ຽວກັບເລື່ອງ ກົດໝາຍກ່ຽວກັບ ຮີດບ້ານຄອງເມືອງ ໜັງສືຂອງເພິ່ນ ທີ່ມີການເຜີຍແຜ່ ບໍ່ວ່າຈະເປັນກົດໝາຍບູຮານຂອງລາວ ທີ່ພິມ ແລະ ນຳໃຊ້ຜ່ານມາ ເປັນປະໂຫຍດຫລາຍ ໃນການຄົ້ນຄວ້າ ເພາະວ່າຢ່າງໜ້ອຍໆ ເຮົາໃຊ້ເປັນໄຕນຳໃນການສຶກສາຢູ່ຝັ່ງນັ້ນ

ໜັງສືບາງຢ່າງມີຢູ່ຝັ່ງນີ້ ແຕ່ບໍ່ມີຢູ່ຝັ່ງນັ້ນ ຫລືບາງອັນມີຝັ່ງນັ້ນ ບໍ່ມີໃນຝັ່ງນີ້ ດັ່ງນັ້ນ ຖ້າເຮົາໄດ້ພົບປະກັນກໍ່ຈະສາມາດຮູ້ຈັກວ່າ ຂໍ້ມູນແຕ່ລະອັນມີຢູ່ໃສ ຈາກຈຸດນີ້ເອງ ມັນເຮັດໃຫ້ເຮົາລົງສຳຫລວດ ອີກຝັ່ງໜຶ່ງຂອງແມ່ນ້ຳຂອງ ຄື ຝັ່ງນັ້ນ.

ເຮົາພໍ້ກົດໝາຍສະບັບໜຶ່ງ ເອີ້ນກົດໝາຍ ໜອງ ບົວລຳພູ ມີຊຸກດຽວ ແລະ ພໍ້ອີກສະບັບໜຶ່ງ ບໍ່ມີຊື່ ມີທັງໝົດ 105 ມາດຕາ ເປັນກົດໝາຍຂ້ອນຂ້າງມີຄວາມສົມບູນດີຍາວທີ່ສຸດ ຈາກນີ້ ມັນເຮັດໃຫ້ເຮົາເຂົ້າໃຈຂະນົບທຳນຽມປະເພນີຂອງບ້ານເມືອງ ເຮົາສອງຟາກຝັ່ງ ເປັນຈັ່ງໃດ ນອກຈາກນັ້ນ ເອກະສານບາງສ່ວນເຮົາໄດ້ຍິນແຕ່ຊື່ ແຕ່ ບໍ່ເຫັນເຫັນຕົ້ນສະບັບ ມັນຈຶ່ງເຮັດໃຫ້ບາງເທື່ອໃນການສຶກສາມີປັນຫາ ເພາະບາງເທື່ອ ເຮົາ ມີເອກະສານຫລົ້ມດຽວ ເຮັດແນວໃດເຮົາຈະມີຫລາຍຫລົ້ມ ຫລາຍສ່ວນມາໂຮມກັນ ເພື່ອພາບຄວາມໜ້າເຊື່ອຖື ຈະເກີດຂຶ້ນ ດັ່ງນັ້ນ ມັນຈຶ່ງເກີດຄວາມຄິດວ່າ ເຖິງເວລາແລ້ວ ທີ່ຄົນຮຸ່ນໃໝ່ ທີ່ຈະມາຊ່ອຍກັນອະທິບາຍເລື່ອງລາວ ໃນສ່ວນທີ່ເຮົາເຄີຍມີຄວາມສຳພັນ ກັນຢ່າງເລິກເຊິ່ງ ໃນເມື່ອກ່ອນໃຫ້ເປັນປະໂຫຍດ ສຳລັບອະນຸຊົນຮຸ່ນຫລັງ ເພາະຖ້າຈະ ສຶກສາເລື່ອງລາວຂອງສອງຝັ່ງຂອງແລ້ວ ຈະຕັດເອົາສ່ວນໃດສ່ວນໜຶ່ງມັນກໍ່ບໍ່ຄົບຖ້ວນ ເພາະຢ່າງໜ້ອຍໆເຮົາກໍ່ເປັນກຸ່ມຊົນກຸ່ມດຽວທີ່ສາມາດເວົ້າເຂົ້າໃຈກັນໄດ້ໂດຍບໍ່ໃຊ້ລ່າມແປ.

ຈາກພື້ນຖານງ່າຍໆ ເປັນເລື່ອງທີ່ເຮົາຕ້ອງເຂົ້າໃຈໃຫ້ຄວາມສຳຄັນມັນ ດັ່ງນັ້ນຈຶ່ງຂໍສະຫລຸບງ່າຍໆວ່າ ມັນເຖິງເວລາແລ້ວ ທີ່ຄົນຮຸ່ນໃໝ່ຈະຕ້ອງຊ່ອຍກັນຖົມນ້ຳຂອງໃຫ້ເຕັມດ້ວຍພູມປັນຍາ ທາງດ້ານວັດທະນະທຳໃຫ້ເຕັມ ສາມາດພົວພັນກັນໄດ້ຢ່າງສະດວກສະບາຍ.

ຮີດຄອງປະເພນີ ໃນທັດສະນະຂອງ
ມະຫາ ສີລາ ວີຣະວົງ

• ບຸນເຮົງ ບົວສີແສງປະເສີດ
ຄະນະກົມບູຮານນະຄະດີ ແລະພິພິທະພັນ
ກະຊວງ ຖະແຫຼງຂາວ ແລະວັດທະນະທຳ
ປະລິນຍາຕີ ບູຮານວັດຖຸ ປະຫວັດສາດ ອິນເດຍ

ຮຽນ : ທ່ານປະທານ

ຮຽນ : ທ່ານຜູ້ກຽດທັງຫລາຍ.

ຂ້າພະເຈົ້າ ຂໍສະເໜີບົນທາອັນນ້ອຍໆໜຶ່ງ ຊຶ່ງເປັນຜົນງານການຄົ້ນຄວ້າຂອງຈົ່ວມະຫາສີລາ ວີລະວົງ ກ່ຽວເລື່ອງຮີດ, ເລື່ອງຄອງ ຫລື ຮີດ 12 ແລະ ຄອງ 14 ຂາພະເຈົ້າຢາກໃຫ້ນັກວິຊາການ ຫລືວ່າ ນັກຄົ້ນຄວ້າວິໄຈທັງຫລາຍ ໄດ້ວິໄຈເບິ່ງ ນຳກັນວ່າ ຄວາມໝາຍ, ເນື້ອໃນ ແລະ ທັດສະນະຂອງຈົ່ວມະຫາ ສີລາ ວີລະວົງ ກ່ຽວກັບຮີດ 12 ຄອງ 14 ຊຶ່ງເປັນຮີດຄອງປະເພນີລາວເຮົາໄດ້ປະຕິບັດສືບທອດກັນມານັ້ນ ເຫັນວ່າເປັນແນວໃດ ? ແລະ ຈະເປັນວິທະຍາສາດໃຫ້ພວກເຮົາໄດ້ຄົ້ນຄິດ ຫລື ແນວໃດ ? ແລະໃນທີ່ນີ້ ຂ້າພະເຈົ້າຈະບໍ່ກ່າວເຖິງວ່າ ຮີດຄອງນັ້ນມີອັນໃດແດ່.

ກ່ອນອື່ນຢາກສະເໜີວ່າ ອັນເລື່ອງຮີດ ເລື່ອງຄອງນີ້ ໄດ້ກຳເນີດຂຶ້ນ ໃນສັງຄົມລາວ (ຫລື ລາວ-ໄທ) ສອງຝັ່ງລອງແມ່ນ້ຳຂອງ ຜ່ານໄລຍະປະຫວັດສາດ ຍາວນານ ພາຍລູນມາໄດ້ກາຍເປັນຮີດ 12 ແລະ ຄອງ 14 ປະຊາຊົນລາວໄດ້ປະພຶດປະຕິບັດສືບ ໆ ກັນມາ ແລະ ເນື້ອໃນຂອງຮີດ 12 ແລະ ຄອງ 14 ກໍ່ມີການປ່ຽນແປງໃຫ້ເຂົ້າກັບຍຸກສະໄໝການຂະຫຍາຍຕົວຂອງສັງຄົມຕະຫລອດມາ ແລະ ມາຮອດປະຈຸບັນນີ້ ຖືວ່າ ແມ່ນຍຸກວິທະຍາສາດ ການຂະຫຍາຍຕົວຂອງສັງຄົມຢູ່ໃນລະດັບສູງ ໄດ້ມີນັກຮຽນຮູ້ ປັນຍາຊົນຫຼາຍ,

ຄົນກ່າວວ່າ ປະເທດລາວກໍຄືປະຊາຊົນລາວບໍ່ກ້າວໜ້າ, ຫຼ້າຫຼັງ ບໍ່ຂະຫຍາຍຕົວ ຍ້ອນຕິດພັນຢູ່ກັບຮີດ 12, ຄອງ 14 ເດືອນໃດກໍ່ພາກັນເຮັດແຕ່ບຸນ ແລະ ບົ່ມນິດໄສຄົນ ໃຫ້ຫ່າງໄກຈາກວິທະຍາສາດ. ດັ່ງນັ້ນ ຂ້າພະເຈົ້າຢາກຕັ້ງບັນຫາຖາມກັນວ່າ ມັນເປັນຄືແນວນັ້ນແທ້ບໍ ? ຕໍ່ບັນຫານີ້ ພວກເຮົາມາທວນຄືນເບິ່ງ ທັດສະນະຂອງ ຈູງມະຫາ ສີລາ ວິລະວົງ ເພິ່ນໄດ້ເວົ້າຕອນໜຶ່ງວ່າ ມີຜູ້ເຖົ້າຜູ້ແກ່ຫຼາຍຄົນ ທັງໃນອະດີດ ແລະ ປະຈຸບັນ ຈົ່ມກັນວ່າ ຄົນສະໄໝໃໝ່ນີ້ ລະຮີດໃຫ້ໝອງ, ລະຄອງໃຫ້ເສົ້າ, ລະຮີດເກົ່າ ຄອງຫຼັງ ດັ່ງນີ້ເປັນຕົ້ນ ຈູງມະຫາ ສີລາ ວິລະວົງ ເພິ່ນມີຄວາມເຫັນໄວ້ວ່າ ອັນຮີດ ອັນຄອງ ຫຼືວ່າຮີດເກົ່າ ຄອງຫຼັງນີ້ ບໍ່ແມ່ນຈະທັນສະໄໝໝົດ ແລະ ທັນສະໄໝຕະຫຼອດໄປ ບາງຮີດບາງຄອງກໍ່ໝົດສະໄໝ ຫຼື ພົ້ນສະໄໝແລ້ວ ກໍມີ ອັນແນວມັນດີ ຄືຮີດ 12 ນີ້ ກໍ່ບໍ່ເຫັນໃຜລະຖິ້ມ ປະຊາຊົນທັງຫຼາຍກໍພາກັນເຮັດຢູ່ບໍ່ໄດ້ຂາດ. ໃນຄວາມເຫັນຂອງ ຈູງມະຫາ ສີລາ ວິລະວົງ ຕອນນີ້ ຂ້າພະເຈົ້າເຫັນວ່າຖືກຕ້ອງ ວິທະຍາສາດທີ່ສຸດ ແລະ ສອດຄອງກັບສະພາບຕົວຈິງຂອງສັງຄົມລາວ ເພາະວ່າ ຮີດຄອງປະເພນີບໍ່ວ່າແຕ່ລາວ ປະເທດໃດກໍຄືກັນ ບໍ່ແມ່ນວ່າຈະທັນສະໄໝໝົດທຸກອັນ ມີບາງຮີດບາງຄອງມັນກໍໝົດສະໄໝໄປແລະບາງຮີດບາງຄອງ ກໍຍັງທັນສະໄໝ ມີຜົນດີໃຫ້ສ່ວນບຸກຄົນ ແລະ ສັງຄົມດ້ານໃດດ້ານໜຶ່ງຫຼືຢ່າງໜ້ອຍ ກໍສ່ອງແສງໃຫ້ເຫັນ ພາບປະຫວັດສາດ ການຂະຫຍາຍຕົວ ຂອງ ສັງຄົມມະນຸດ.

ຂ້າພະເຈົ້າ ຂໍສະເໜີຕື່ມອີກວ່າ ອັນຮີດອັນຄອງ ຂອງລາວເຮົານີ້ ມັນກໍາເນີດ ຂຶ້ນແຕ່ສະໄໝລາວເຮົາຍັງບໍ່ທັນມີກົດໝາຍປົກຄອງກັນພຸ້ນ ພວກເຮົາຢູ່ຮ່ວມກັນ, ພົວພັນກັນ, ສາມັກຄີກັນ, ຮັກແພງກັນ ແລະ ອື່ນ ໆ ບົນພື້ນຖານຂອງຮີດຄອງປະເພນີ ທີ່ພັກປາກສະໄໝນັ້ນຄົນຄິດຂຶ້ນເປັນເບື້ອງຕົ້ນກ່ອນ ເຊັ່ນ : ຮີດຄອງຂອງເຈົ້າພະຍາ ກ່ອນຂຶ້ນປົກຄອງແຜ່ນດິນ ຕ້ອງເປັນຜູ້ປະກອບດ້ວຍ ທະສະພິລາຊະທໍາ 10 ປະການ ແລະ ຮີດຄອງອື່ນ ໆ ມີຮີດເຖົ້າຄອງແກ່, ຮີດຜົວຄອງເມຍ, ຮີດພະຄອງຈົວ, ຮີດບ້ານຄອງເມືອງ ... ແມ່ນວິທີການປະຕິບັດທີ່ດີຂອງສັງຄົມສະໄໝນັ້ນ ຈາກນັ້ນມາ ມັນຈຶ່ງກາຍມາເປັນລະບຽບ ແລະ ກົດໝາຍຂອງສັງຄົມໃນຍຸກປະຈຸບັນ ຄວາມຈິງແລ້ວ ກົດໝາຍກໍ່ແມ່ນເພື່ອຄຸ້ມຄອງ ສິດທິ

ປະໂຫຍດຂອງຄົນ ແລະ ປົກປັກຮັກສາສິ່ງທີ່ດີງາມຂອງສັງຄົມ ແລະ ກໍຢາກເວົ້າ ອີກອັນໜຶ່ງວ່າ ອັນຮີດຄອງປະເພນີຂອງລາວເຮົານີ້ ລວມທັງຄວາມເຊື່ອຖືໃນສາສະໜາ ແລະ ອື່ນ ໆ ບໍ່ເຄີຍເປັນກຳແພງກັ້ນການຂະຫຍາຍຕົວຂອງວິທະຍາສາດຈັກເທື່ອ ແລະ ການທີ່ວິທະຍາສາດບໍ່ຂະຫຍາຍຕົວຢູ່ລາວນັ້ນ ຍ້ອນສາເຫດອື່ນຫລາຍກວ່າ ຖ້າເຮົາຄິດວ່າຄົນລາວຫລ້າຫລັງບໍ່ມີທັດສະນະວິທະຍາສາດ ຍ້ອນເຊື່ອຖືໃນຮີດຄອງປະເພນີ, ລັດທິສາສະໜານັ້ນ ຂ້າພະເຈົ້າເຫັນວ່າ ເປັນຄວາມຄິດທີ່ຍັງບໍ່ທັນມີເຫດຜົນພຽງພໍແທດກັບຕົວຈິງເທື່ອ ແລະອັນໜຶ່ງ ຂ້າພະເຈົ້າຢາກເວົ້າຕື່ມອີກວ່າ ຄົນເຮົານີ້ ຖ້າຮຽນຮູ້ວິທະຍາສາດ, ເຂົ້າໃຈ ວິທະຍາສາດ ແລະ ຮູ້ນຳໃຊ້ວິທະຍາສາດນັ້ນ ແມ່ນປະເສີດສຸດຂອງຄົນ ແຕ່ຖ້າບ້າວິທະຍາສາດແລ້ວແມ່ນໄພອັນຕະລາຍອັນມະຫັນແກ່ສັງຄົມ ໃນທັດສະນະຂອງຂ້າພະເຈົ້າແລ້ວ ເຫັນວ່າມະນຸດມີຄວາມກ້າວໜ້າທາງດ້ານວິທະຍາສາດ ຈຸກັນໃຫ້ວັດຖຸຂະຫຍາຍຕົວທໍ່ໃດ ຄຸນສົມບັດສິນທຳທີ່ຕິດພັນກັບເຂົາເຈົ້ານັ້ນ ຍິ່ງມີຄວາມຈຳເປັນແກ່ເຂົາເຈົ້າທໍ່ນັ້ນ. ສິນທຳນີ້ອາດຜ່ານທາງຮີດຄອງປະເພນີອັນດີງາມ, ຜ່ານທາງສາສະໜາ, ຜ່ານທາງການຈັດຕັ້ງ ວິທະຍາສາດນັ້ນມັນຂຶ້ນກັບຄວາມຍິນຍອມຂອງສັງຄົມນັ້ນ ຫລືຄວາມອາດສາມາດ ທີ່ເຂົາຮັບໄດ້ທໍ່ນັ້ນ.

ອີກເທື່ອໜຶ່ງ ຂ້າພະເຈົ້າຂໍສະແດງຄວາມໂຄລົບອັນສູງ ຕໍ່ນ້ຳໃຈບຸກບືນ, ນ້ຳໃຈຮັກຊາດ,ນ້ຳໃຈຮັກຮີດຄອງປະເພນີອັນດີງາມຂອງລາວ ຂອງຈຸງມະຫາ ສີລາ ວີລະວົງ ຜູ້ໃຫ້ກຳເນີດການຄົ້ນຄວ້າແກ່ຂ້າພະເຈົ້າ ເຮົາຈະເຫັນວ່າ ຈຸງມະຫາ ສີລາ ວີລະວົງ ເພິ່ນຢາກຟື້ນຟູການຄົ້ນຄວ້າໃນຫລາຍໆຂະແໜງການໃນຂົງເຂດສຶກສາ-ວັດທະນະທຳ ເຊັ່ນ : ວັນນະຄະດີ-ພາສາສາດ-ໄວຍະກອນລາວ ເພິ່ນກໍ່ຢາກແກ້, ປະຫວັດສາດລາວເພິ່ນກໍ່ຢາກແກ້, ຮີດຄອງປະເພນີເພິ່ນກໍຢາກແກ້ ຢາກເຮັດທຸກສິ່ງທຸກຢ່າງໃຫ້ມີປະໂຫຍດ ແກ່ສັງຄົມເທົ່າທີ່ເພິ່ນເຂົ້າໃຈ ນີ້ສະແດງເຖິງນ້ຳໃຈອັນເດັດດ່ຽວ ມີອຸດົມການ ແລະ ຮູ້ທ່າແຮງຂອງຕົນ ເພື່ອເຮັດປະໂຫຍດແກ່ສັງຄົມ. ສ່ວນຜົນງານຂອງເພິ່ນຖືກຫລືຜິດນັ້ນ ເປັນໜ້າທີ່ຂອງພວກເຮົາຈະຕ້ອງສືບຕໍ່ເສີມຂະຫຍາຍ ເພາະເພິ່ນເປັນຜູ້ຂຸດຄົ້ນມາໃຫ້ເຮົາ ໃນເບື້ອງຕົ້ນແລ້ວ ເຊັ່ນ : ພົງສາວະດານລ້ານຊ້າງ ເບື້ອງຕົ້ນເພິ່ນເອີ້ນວ່າ ໜັງສືຂຸນບູລົມ ຫລື

ພື້ນຂຸນບູລົມ ພາກຕົ້ນເປັນໜັງສືກ່າວມີລັກສະນະນິຍາຍ ແລະ ພາກປາຍກ່າວເຖິງ ເຫດການທາງປະຫວັດສາດ ບັນທຶກເຫດການໆເຄື່ອນໄຫວຕ່າງໆ ຂອງເຈົ້າຂຸນ, ເຈົ້າພະຍາ ແລະ ອື່ນ ໆ ໄວ້ ແຕ່ບາງເນື້ອເລື່ອງກໍຕິດຕໍ່ກັນດີ, ບາງເລື່ອງກໍຂາດເປັນບັ້ນ ເປັນຕອນ ອ່ານຍາກ ເພາະເປັນພາສາເກົ່າ ສຳນວນເກົ່າ ຍາກແກ່ການເຂົ້າໃຈຂອງຄົນ ທຳມະດາສາມັນ ດັ່ງນັ້ນ ຈຶ່ງມີຫລາຍຄົນໄດ້ພະຍາຍາມໄຈແຍກໜັງສືຂຸນບູລົມໃຫ້ເປັນ ປະຫວັດສາດ ແຕ່ອັນພິເສດກວ່າໝູ່ ແມ່ນລຸງມະຫາ ສີລາ ວີລະວົງ ເພິ່ນພະຍາຍາມດັດແກ້ອັນຫຍຸ້ງຍາກສັບສົນຈາກ ພົງສາວະດານລ້ານຊ້າງເກົ່າ ຫລື ໜັງສືຂຸນບູລົມນັ້ນ ໃຫ້ມາເປັນ ປະຫວັດສາດ ຫລືທີ່ເພິ່ນໃຫ້ຊື່ວ່າ ພົງສາວະດານລາວນັ້ນ ໃຫ້ຫລາຍໆຄົນເຂົ້າໃຈໄດ້ງ່າຍ ເຖິງວ່າຈະບໍ່ສົມບູນໝົດກໍຕາມ ແຕ່ຜົນງານຂອງເພິ່ນ ຍັງດີກວ່າຜູ້ອື່ນ ໆ ຂຽນໄວ້.

ເມື່ອປີ 1973 ເພິ່ນໄດ້ບອກຂ້າພະເຈົ້າວ່າ ໃນພົງສາວະດານລາວ ທີ່ລຸງຂຽນນັ້ນ ລຸງວ່າ ທາດສີສອງຮັກ ສ້າງເມື່ອສະຕະວັດທີ 17 ນັ້ນ ບໍ່ແມ່ນເພາະເວລານັ້ນລຸງຍັງບໍ່ທັນໄດ້ຫລັກຖານດີ ເພາະຄິດວ່າສະຕະວັດ 17 ນັ້ນ ເປັນສະຕະວັດທີ່ມີຄວາມຈະເລີນ ຮຸ່ງເຮືອງຂອງອານາຈັກລາວລ້ານຊ້າງ ເຂົ້າໃຈວ່າ ທາດສີສອງຮັກ ຄົງສ້າງ ໃນເວລານັ້ນ ຄວາມຈິງແລ້ວ ບໍ່ແມ່ນດຽວນີ້ ໄດ້ມີຫລັກຖານມາແລ້ວ ແມ່ນສ້າງເມື່ອສະຕະວັດທີ 16 ສະໄໝພະເຈົ້າໄຊຍະເຊດຖາທິລາດ ນີ້ກໍສະແດງເຖິງຄວາມຊື່ສັດຂອງເພິ່ນ ຕໍ່ເຫດການ ປະຫວັດສາດ.

ກ່ຽວເລື່ອງພາສາລາວນັ້ນ ເພິ່ນໄດ້ກ່າວວ່າ ຄຳໃດທີ່ເຮົາມີພາສາເຮົາຢູ່ແລ້ວ ບໍ່ຄວນເອົາພາສາອື່ນມາໃຊ້ ເຮົາຄວນພະຍາຍາມໃຊ້ພາສາເຮົາເອງ ຖ້າວ່າຄຳໃດ ບໍ່ມີໃນພາສາລາວເຮົາໆຈຶ່ງຢືມພາສາອື່ນມາໃຊ້ ຫລືວ່າມີພາສາເຮົາຢູ່ ແຕ່ບໍ່ສົມບູນ ທາງເນື້ອໃນຈຶ່ງຢືມພາສາອື່ນທີ່ມະຫາຊົນຮັບຮູ້ມາໃຊ້ແທນ.

ກ່ຽວເລື່ອງອັກສອນສາດລາວ ລຸງມະຫາ ສີລາ ວີລະວົງ ໄດ້ກ່າວແລ້ວວ່າ ພາສາລາວມີໜັງສືມາກ່ອນແລ້ວ ອາດບໍ່ມາຈາກໜັງສືຂອງພໍ່ຂຸນຣາມຄຳແຫງ ດັ່ງນັກຄົ້ນຄວ້າຊາວຕາເວັນຕົກກ່າວໄວ້ ແຕ່ພໍ່ຂຸນຣາມຄຳແຫງ ອາດເຕົ້າໂຮມເອົາຕົວອັກສອນລາວເກົ່າມາດັດແປງເອົາທີ່ນັ້ນ. ກ່ຽວກັບເລື່ອງຕົວອັກສອນລາວນີ້ ມາຮອດປະຈຸບັນນີ້ ກໍຍັງບໍ່ມີ ນັກຄົ້ນ

ຄົ້ນຄວ້າໃດຫາຫລັກຖານໄດ້ຄັກແນ່ ແຕ່ໃນໄລຍະຫລັງໆມານີ້ ມີບາງທ່ານ ໃຫ້ທັດສະນະ ວ່າ ອັກສອນລາວອາດມາຈາກໂຕໜັງສືໄທດຳ ແຕ່ຢ່າງໃດກໍຕາມ ໂຕໜັງສືໄທດຳກໍຢູ່ໃນຂອບ ຂາຍທີ່ຈຸມມະຫາ ສີລາ ວີລະວົງ ກ່າວໄວ້ ເພິ່ນໄດ້ເວົ້າວ່າ ອັກສອນລາວ ຄືໂຕໜັງສື ລາວ ອາດມາຈາກໂຕໜັງສືທ້ອງຖິ່ນ ພາກເໜືອຂອງລາວ ດັ່ງນັ້ນ ຈຶ່ງເວົ້າໄດ້ວ່າ ຍັງບໍ່ ທັນມີນັກຄົ້ນຄວ້າຜູ້ໃດ ໄດ້ຫລັກຖານໄປເໜືອກວ່າຈຸມມະຫາ ສີລາ ວີລະວົງ ກ່າວໄວ້.

ຜົນງານອີກອັນໜຶ່ງ ທີ່ເພິ່ນພະຍາຍາມ ລິດຈະນາໜັງສືເກົ່າແກ່ ທີ່ຫຍຸ້ງຍາກສັບ ສົນ ໃຫ້ເປັນສຳນວນອ່ານງ່າຍ ເຂົ້າໃຈດີຂອງຄົນທົ່ວໄປນັ້ນ ແມ່ນຜົນງານ ອັນປະເສີດອັນ ໜຶ່ງ ຍ້ອນແນວນັ້ນ ພາລະກິດຂອງເພິ່ນໄດ້ເປັນພື້ນຖານໃຫ້ແກ່ພວກເຮົາສືບທອດຕໍ່ໄປແລະ ຈະຕ້ອງສືບທອດໃຫ້ໄດ້ ເຮົາຕ້ອງຮ່ຳຮຽນເອົາອຸດົມຄະຕິຈາກເພິ່ນ, ຮຽນເອົາບາງແບບວິ ທີອັນດີຂອງເພິ່ນ, ສຳລັບສິ່ງທີ່ເພິ່ນຄົ້ນຄວ້າໄວ້ ແລະ ທີ່ຍັງບໍ່ທັນຈັດພິມ ກໍມີຫລາຍ ຫລື ສິ່ງທີ່ພິມແລ້ວ ແຕ່ຍັງບໍ່ທັນສົມບູນ ພວກເຮົາຕ້ອງສືບຕໍ່ໃຫ້ອຸດົມສົມບູນຂຶ້ນ.

ສະບາຍດີ.

ອາຈານ ມະຫາ ສີລາ ວີຣະວົງ ຕໍ່ ບູຮານຄະດີລາວ

● ທອງລິນ ບຸບຜາພັນ
ນັກຄົ້ນຄວ້າ ບູຮານນະຄະດີ
ຄະນະກຳມະການ ວິທະຍາສາດ ສັງຄົມ

ໃນຖານະ ຈິດໃຈນັກການຄົ້ນຄວ້າວິຊາການ ດ້ານວິທະຍາສາດສັງຄົມ ຂ້າພະ ເຈົ້າເຫັນວ່າ ທ່ານອາຈານ ມະຫາສີລາ ວີລະວົງ ເປັນຊີວິດຕົວຢ່າງ ທີ່ນັກຄົ້ນຄວ້າ ລາວ ຄວນສຶກສາຮຽນຮູ້, ທັງໃນດ້ານຊີວິດການເປັນນັກຄົ້ນຄວ້າ ແລະ ຊີວິດດ້ານເປັນ ພົນລະ ເມືອງດີຂອງຊາດ.

ອາຈານມະຫາສີລາ ວີລະວົງ ກໍ່ຮ່າງສ້າງຕົວຂຶ້ນມາດ້ວຍລະດັບການສຶກສາ ທີ່ບໍ່ສູງເທົ່າໃດ. ແຕ່ເບິ່ງໃນດ້ານໜ້າງານການຄົ້ນຄວ້າ ທີ່ຝາກຝັງໄວ້ໃຫ້ລູກ, ໃຫ້ຫຼານ ຂອງທ່ານແລ້ວ ຂ້າພະເຈົ້າເຫັນວ່າ ເປັນອັດສະຣິຍະຊີວິດອີ່ຫຼີ.

ນັບແຕ່ນີ້ຂ້າພະເຈົ້າເອົາຕົວເຂົ້າເພິ່ງຮົ່ມເງົາຜ້າກາສາວະພັດ ເຂົ້າຮຽນ ຄວາມຮູ້ຝ່າຍສາສະໜາ ຈັບປຶ້ມຮຽນຂຶ້ນມາ ໄດ້ເຫັນຊື່ ສີລາ ວີລະວົງໂລດ ການເວລາຜ່ານໄປ, ຊື່ສີລາ ວີລະວົງ ກໍ່ນັບມື້ຄຸ້ນຫູຂຶ້ນເລື້ອຍໆ ຈົນຂ້າພະເຈົ້າໄດ້ມີໂອກາດມາສຶກສາຕໍ່ຢູ່ວຽງຈັນ ຊຶ່ງໄດ້ເຫັນເຈົ້າຂອງ ຊື່ສີລາ ວີລະວົງ ແລະ ກໍ່ເຫັນວ່າ ທ່ານສົມເປັນນັກປາດ, ອາຈານ ມີຈັນຍາທໍາອີ່ຫຼີ.

ພາຍຫຼັງປະເທດຊາດໄດ້ຮັບການສ້າງຕັ້ງລະບອບໃໝ່ ຂ້າພະເຈົ້າສັບຊ້ອນໃຫ້ເກັບກໍາວຽກງານດ້ານບູຮານຄະດີ ສັງກັດກົມຫໍສະໝຸດ ພິພິດທະພັນ, ວັດຖຸບູຮານ ກະຊວງສຶກສາ, ຕໍ່ວຽກງານນີ້ ມີຫຼາຍສິ່ງຫຼາຍຢ່າງຕ້ອງໄດ້ຮຽນຈາກທ່ານອາຈານ ມະຫາສີລາ ວີລະວົງ ທໍາອິດກໍ່ແມ່ນ ທ່ານແກ່ນຈັນ ທິລະກຸນ ຫົວໜ້າພະແນກ ພິພິດທະພັນ, ວັດຖຸບູຮານ ເປັນຜູ້ພາໄປຫາເພິ່ນຢູ່ບ້ານ. ແຕ່ນັ້ນມາ ຂ້າພະເຈົ້າໄດ້ໄປຫາເພິ່ນເລື້ອຍໆ ທຸກເທື່ອທີ່ໄປຫາເພິ່ນ ກໍ່ໄດ້ຮັບຄວາມຮ່ວມມືແບບເປັນກັນເອງ ແລະ ໄດ້ຮັບຄວາມຮູ້ ໃນສິ່ງທີ່ເຮົາຢາກຮູ້ນໍາເພິ່ນອີ່ຫຼີ.

ຕໍ່ມາປີ 1982 ຢູ່ໃນຄະນະກໍາມະການວິທະຍາສາດການສຶກສາ ຂ້າພະເຈົ້າໄດ້ຮັບມອບໝາຍໃຫ້ເປັນຜູ້ສັບຊ້ອນ, ເພີ່ມຕື່ມ ແລະ ດັດແກ້ຄໍາສັບວັດຈະນານຸກົມ ພາສາລາວ ແປລາວທີ່ອາຈານ ມະຫາສີລາ ວີລະວົງ ໄດ້ຂຽນເປັນລາຍມືໄວ້ນານແລ້ວ ເພື່ອຈະຈັດພິມ ແລະ ເຂົ້າເຫຼັ້ມ ແຕ່ຫາກບໍ່ທັນໄດ້ພິມ. ຕໍ່ວຽກງານທີ່ຍິ່ງເຮັດໃຫ້ຂ້າພະເຈົ້າໄດ້ໃກ້ຊິດກັບເພິ່ນຫຼາຍຂຶ້ນ.

ເມື່ອເວົ້າເຖິງການຄົ້ນຄວ້າ ຂຽນເລື່ອງກ່ຽວກັບວັດທະນະທໍາສັງຄົມ ອາຈານ ມະຫາສີລາ ວີລະວົງ ບໍ່ເຄີຍອັດປະຕູບ້ານ, ເພິ່ນຍິນດີຕ້ອນຮັບໂອ້ລົມແລກປ່ຽນນໍາໝົດທຸກຄົນ ສ່ວນຕົວຂ້າພະເຈົ້າເຫັນວ່າ ເພິ່ນບໍ່ເຄີຍຊຸກເຊື່ອງຄວາມຮູ້ ໃນເມື່ອຖືກຖາມອັນໃດ ເພິ່ນຮູ້ເທົ່າໃດເພິ່ນກໍ່ເລົ່າໃຫ້ຟັງແບບກົງໄປກົງມາ.

ດ້ານບູຮານຄະດີລາວ ເວົ້າເຖິງວຽກງານບູຮານຄະດີ ນັ້ນກວມເອົາ ວັນນະກຳເລື່ອງຕ່າງໆ ທີ່ເວົ້າເຖິງຊີວິດສັງຄົມຂອງຄົນລາວໃນອະດີດ ເຊັ່ນ ເລື່ອງທ້າວຮຸ່ງ, ທ້າວເຈືອງ, ສິນໄຊ, ກາລະເກດ ແລະ ອື່ນ ໆ ລ້ວນແຕ່ເປັນບູຮານຄະດີ. ເລື່ອງດັ່ງກ່າວລ້ວນແຕ່ໄດ້ຜ່ານການຮຽບຮຽງ ເພາະແປຄວາມໝາຍພ້ອມທັງການສັນນິດຖານທີ່ອາດເປັນໄປໄດ້. ກ່ຽວກັບພົງສາວະດານລາວ ທີ່ເພີ່ນຂຽນຢູ່ໃນນັ້ນ ມັນບໍ່ມີສະເພາະເລື່ອງພົງສາວະດານລາວ ແຕ່ມັນເປັນປະຫວັດສາດຊາດລາວ ແລະ ບູຮານຄະດີລາວ ຕົວຢ່າງ ຄຳສັນນິດຖານ ກ່ຽວກັບການສ້າງນະຄອນວຽງຈັນ ແລະ ພະທາດຫຼວງ ຄັ້ງແຮກວ່າ " ...ເຫດການເລື່ອງການສ້າງນະຄອນວຽງຈັນ ແລະ ພະທາດຫຼວງຄັ້ງແຮກ ຕາມທີ່ທຳໄວ້ໃນໜັງສືອຸລັງຄະທາດ ດັ່ງກ່າວມາຂ້າງຕົ້ນນັ້ນ ຈະເປັນຈິງພຽງໃດ ແລະ ຕົກຢູ່ໃນລະຫວ່າງ ພຸດທະສັກກະຣາດເທົ່າໃດນັ້ນ ຍັງບໍ່ມີຫຼັກຖານອັນໃດມາຢັ້ງຢືນໄດ້, ແຕ່ວ່າຕາມເຫດການທີ່ ກ່າວມານັ້ນ ຖ້າຈະອະນຸມານເບິ່ງ ແລະເປັນຈິງຕາມນັ້ນແທ້ ກໍຄົງຈະຕົກຢູ່ໃນສະໄໝຂອງ ພະເຈົ້າອະໂສກະລາດຄອບຄອງປະເທດອິນເດຍ ຄືຕົກຢູ່ໃນລະຫວ່າງ ພ.ສ. 236 ສະນັ້ນ, ເຮົາຈຶ່ງສັນນິດຖານເບິ່ງວ່າ ໃນສະໄໝຂອງພະເຈົ້າອະໂສກະລາດນັ້ນ ປະຊາຊົນ ພົນລະເມືອງທີ່ມາຕັ້ງບ້ານ, ຕັ້ງເມືອງຢູ່ໃນດິນແດນ ອັນເປັນປະເທດລາວ, ປະເທດໄທ, ແລະ ປະເທດຂະເໝນ ທຸກວັນນີ້ ແມ່ນຄົນຈຳພວກໃດ, ເຊື້ອຊາດໃດ ແລະ ພະພຸດທະສາສະໜາໄດ້ແຜ່ຜາຍເຂົ້າມາດິນແດນສ່ວນນີ້ ແຕ່ໃນສະໄໝນັ້ນແທ້ຫຼືບໍ ?..."

" ... ພະທາດຫົວເໜົ່າ ບັນຈຸໄວ້ທີ່ພູເຂົາຫຼວງ ຫຼື ພູເຂົາລວງ (ເຂົ້າໃຈ ວ່າແມ່ນທາດຫຼວງນີ້ເອງ ເພາະວ່າໃນ ສິລາຈາລຶກ ທາດຫຼວງຂຽນວ່າ ລຸຍທະກູປາໂລແປວ່າທາດທີ່ລັບ ຄືກະດູກຫົວເໜົ່າ ແຕ່ໃນໜັງສືຕຳນານ ພະທາດບັງຫອນ ຢູ່ບ້ານຫ້ວຍບັງຫອນ, ຈັງຫວັດໜອງຄາຍ ທີ່ຂຽນເປັນຕົວອັກສອນທຳ ຂຽນວ່າ ພູເຂົາລວງ ຄຳວ່າລວງ ແປວ່ານາກ ດັ່ງນັ້ນ ຄຳວ່າ ພູເຂົາລວງ ອາດຈະແປວ່າ ໂພນນາກ ຫຼື ໂພນຂີ້ນາກກໍ່ວ່າໄດ້ ".

" ... ວັດປ່າສີສັງຫອນ ຄົງຈະແມ່ນ ດົງສີສັງວອນ ".

" ... ສ້າງອຸມົງກວມທາດ ພະອໍຣະຫັນ ອັນພະເຈົ້າຈັນທະບູລີສ້າງໄວ້ ທີ່ປ່າມະຫາພຸດທະວົງ ".

" ... ສ້າງວັດປ່າກັນທ້ອງ ອາດຈະແມ່ນຮ່ອງຫອງ ຮ່ອງລຽບກຳແພງວຽງຈັນຫຼື ຄູວຽງ ".

" ... ສ້າງວັດໜອງປາງຄຳ ອາດຈະແມ່ນ ບໍລິເວນ ໂຮງແຮມລ້ານຊ້າງ ".

" ... ພະມະຫາທັດສະດີ ພັກຢູ່ປ່າເໜືອນ້ຳບຶງ ອາດຈະແມ່ນ ວັດທາດຝຸ່ນ ".

ຄຳແປສີລາເລກຕ່າງໆ ພ້ອມທັງຄຳສັນນິດຖານຂອງທ່ານ ອາຈານ ມະຫາ ສີລາ ວີລະວົງ ນັບວ່າມີຜົນປະໂຫຍດຢ່າງມະຫາສານຕໍ່ວຽກງານບູຮານຄະດີລາວ. ຢ່າງນ້ອຍກໍ່ເປັນການຖາກຖາງທົ່ນທາງ ແລະ ກ່າຍຂັ້ນໃດໄວ້ໃຫ້ເຮົາໄດ້ໄຕ່ຢ່າງມີຄວາມຫວັງ.

ຄວາມເຫັນ ຕໍ່ການຄົ້ນຄວ້າ ທາງໄປສູ່ ການເປັນນັກປາດ ລະດັບ ສາກົນ

• ຄຳເພົາ ພອນແກ້ວ

ເລຂາທິການ ກຳມາທິການ ຊຸຍແນສະໂກ

ຮຽນ: ຄະນະປະທານ

ຮຽນ: ອາຈານທັງຫມົດທີ່ຮັກແພງ

ຂ້າພະເຈົ້າຮູ້ສຶກ ດີອົກດີໃຈທີ່ສຸດ ທີ່ໄດ້ເຫັນ ການຈັດກອງປະຊຸມແນວນີ້ຂຶ້ນ ທີ່ເປັນໂອກາດໃຫ້ນັກວິຊາການ ທັງສອງຝັ່ງຂອງເຮົາໄດ້ຄົ້ນຄວ້າ ບັນຫາວັດທະນະທຳຂອງ ພາກພື້ນນີ້ (ຂໍເວົ້າວ່າ ພາກພື້ນນີ້ ບໍ່ແມ່ນຂອງລາວ ຫຼືຂອງໄທ) ເຊິ່ງເປັນສົມບັດຂອງຄົນ ຊົນຊາດຢູ່ໃນທ້ອງຖິ່ນແຫ່ງນີ້ມີແຕ່ປະຊາຊົນທ້ອງຖິ່ນແຫ່ງນີ້ ຈະສາມາດພັດທະນາຂະຫຍາຍອອກກວ້າງຂວາງ ເຮັດໃຫ້ໂລກຮູ້ນຳ ຖ້າເວົ້າມາກຽວກອດ ຫວງວ່າຂອງຜູ້ນັ້ນ ຜູ້ນີ້ ແມ່ນ ບໍ່ສາມາດອອກໄປນອກໄດ້ ນີ້ແມ່ນວິທະຍາສາດທີ່ສຸດ.

ການພົບປະເທື່ອນີ້ສະແດງໃຫ້ເຫັນວ່າ ການຄົ້ນຄວ້າຂອງພວກເຮົາບໍ່ໄດ້ມີສິ່ງກີດກັ້ນ ເຖິງວ່າ ຈະມີຄວາມຫຍຸ້ງຍາກໃນການໄປມາຫາສູ່ກໍ່ຕາມ ແຕ່ວ່າທັງສອງຝາກຝັ່ງກໍ່ຍັງ ຄົ້ນຄວ້າສິລະປະ ວັດທະນະທຳຂອງພາກພື້ນນີ້ຕະຫລອດໄປຢູ່.

ກ່ອນຈະເຂົ້າເລິກໄປຫາ ທັດສະນະຂອງຂ້າພະເຈົ້າຕໍ່ອາຈານມະຫາສິລາ ວິລະວົງ ຂ້າພະເຈົ້າຂໍເວົ້າກ່ຽວກັບອົງການຊຸຍແນັດສະໂກ ເພາະເປັນອົງການອົງການເພື່ອສົ່ງເສີມ ການຄົ້ນຄວ້າວັດທະນາທຳຂອງໂລກ.

ໃນມໍ່ໆ ນີ້ ອົງການຊຸຍແນັດສະໂກ ກໍ່ໄດ້ຊຸກຍູ້ສະເຫລີມສະຫລອງຄົບຮອບ ຮ້ອຍປີ ຂອງພະຍາອະນຸມານ ລາຊະທົນ ແລະ ທາງລາວເຮົາກໍ່ໄດ້ປະຕິບັດມະຕິທີ່ອົງການ ຊຸຍ ແນັດສະໂກແນະນຳ ໂດຍຟື້ນຟູຄວາມສຳພັນລາວ-ໄທ ອັນໜຶ່ງ ຄືວ່າການຄົ້ນຄວ້າ ວັດທະ ນະທຳອັນໜຶ່ງ ທ່ານ ສິຊະນະ ສີສານ ເປັນປະທານສະມາຄົມມິດຕະພາບ ລາວ-ໄທ - ເປັນປະທານຄະນະກຳມະການຄົ້ນຄວ້າວິທະຍາສາດສັງຄົມໄດ້ຮັບຜິດຊອບການວາງສະແດງ ໂຄສະນາຄຸນງາມຄວາມດີຂອງພະຍາອະນຸມານລາຊະທົນ ທາງໄທກໍ່ໄດ້ເອົາຮູບພາບຕ່າງໆ ມາວາງສະແດງ ແລະ ມີນັກປາຖະກະຖາ ຫລາຍຄົນໄດ້ມາ.

ການສະເຫລີມສະຫລອງອັນນີ້ ເຮັດໃຫ້ຂ້າພະເຈົ້າຄິດເຫັນວ່າ ພະຍາອະນຸມານລາ ຊະທົນ ບໍ່ແມ່ນຄົນມາຈາກສັກດີນາ ແຕ່ເອີ້ນພະຍານີ້ກໍ່ແມ່ນນາມມະຍົດທີ່ໄດ້ຮັບ.

ມາເບິ່ງມະຫາສິລາ ກໍ່ອາດມີຄວາມສາມາດເປັນໄປໄດ້ຄືແນວນັ້ນ ຖ້າເຮົາຫາກພາ ກັນຄົ້ນຄວ້າຄິດຫາສິ່ງທີ່ພາໃຫ້ເພິ່ນຄົ້ນຄິດ ຂຽນກ່ຽວກັບວັດທະນະທຳ ເລື່ອງສັງຄົມ ເລື່ອງ ປະຫວັດສາດຕ່າງໆ .

ແຕ່ກ່ອນ ຊຸຍແນັດສະໂກກະຣັບວ່າ ເປັນຄົນຂອງໂລກນັ້ນຕ້ອງມີການຄົ້ນຄວ້າ ຢູ່ ໃນຂອບເຂດຂອງຊຸມຄົນໃນປະເທດໃດໜຶ່ງ ຍົກຂຶ້ນມາໃຫ້ເຫັນ ມີເອກະສານຢັ້ງຢືນຕ່າງໆ ຖ້າບໍ່ມີອັນນີ້ແນ່ນອນກໍ່ຈະບໍ່ມີເລີຍ ນີ້ເປັນຈິດໃຈອັນໜຶ່ງທີ່ອົງການສາກົນ ເພິ່ນຊຸກຍູ້.

ດັ່ງນັ້ນຂໍເວົ້າໃນຂໍ້ທີ່ອາຈານບຸນເຮັງຍົກມາວ່າ ແມ່ນຮີດສິບສອງຄອງສິບສີ່ນີ້ບໍ່ ເຮັດ ໃຫ້ລາວຫຼ້າຫລັງ ສຳລັບຂ້າພະເຈົ້າຂໍຕອບວ່າບໍ່ແມ່ນ ເພາະວ່າຍາມໃດທີ່ວິທະຍາ ສາດ

ກ້າວໜ້າໄປແຮງເທົ່າໃດຄົນແຮ່ງຄົ້ນຫາຮີດຄອງປະເພນີ ເພື່ອຍັ້ງຢືນເຖິງວິທະຍາສາດ ທີ່ກ້າວໜ້າສະນັ້ນ ອົງການອຸຍແນສະໂກ ນັບມື້ນັບຍັ້ງຢືນແນວຄິດອັນນີ້ ຄົນບໍ່ມີວິທະຍາ ສາດຄົ້ນຄວ້າຫາຮີດຄອງປະເພນີ ແລະ ບໍ່ມີຮີດຄອງປະເພນີກໍ່ບໍ່ເສີມຂະຫຍາຍວິທະຍາສາດອັນໃໝ່ໄດ້ (ເວົ້າເຖິງວິທະຍາສາດສັງຄົມ) ສະນັ້ນເທົ່າທີ່ເຮົາຄົ້ນຄວ້າມານີ້ຍັງບໍ່ພຽງ ພໍ ເປັນພຽງໜໍ່ແໜງ ເບື້ອງຕົ້ນເທົ່ານັ້ນ ເຮົາຕ້ອງສືບຕໍ່.

ຂ້າພະເຈົ້າໄດ້ພົວພັນ ເຮັດວຽກນຳມະຫາສິລາ ວິລະວົງ ຫລາຍສິບຄວນ ພາຍຫຼັງຮຽນຈົບປະລິນຍາປະຫວັດສາດພູມສາດ ມາແຕ່ເມືອງຝະລັ່ງແລ້ວ ໄດ້ສອນປະຫວັດສາດພູມສາດໃນວິທະຍາໄລ ໃນໄລຍະນັ້ນ ມີການປະຕິຮູບ ຢາກໃຫ້ສອນ ປະຫວັດສາດລາວ ຢູ່ໃນວິທະຍາໄລລາວ ເລີຍເປັນການທີ່ເຮັດໃຫ້ ຂ້າພະເຈົ້າຄິດຫາປະຫວັດສາດລາວ ເພາະ ທີ່ຮຽນມາ ແມ່ນປະຫວັດສາດຂອງຕາເວັນຕົກ ເມື່ອຈະມາສອນປະຫວັດສາດລາວ ແມ່ນພົບຂໍ້ຫຍຸ້ງຍາກ ຈຶ່ງຊອກຫາຄົນເກົ່າ ຄົນແກ່ມາຊ່ອຍ ໃນນັ້ນຈຶ່ງມາເບິ່ງ ໃນຕົວຈິງ ໃນ ໑໐ ຄົນ ທີ່ຊ່ອຍເຮັດສຳມະນາປະຫວັດສາດລາວໃນໄລຍະນັ້ນ ເຊິ່ງມີມະຫາ ໖ ຄົນ ແລະ ຜູ້ບໍ່ແມ່ນມະຫາ ໓-໔ ຄົນ. ເພາະເຄີຍມີມາແລ້ວ ຜູ້ຄົ້ນຄວ້າແຕ່ມີໄລຍະໜຶ່ງໄດ້ ເຈດຕະນາເຮັດໃຫ້ຫລົງລືມ ຄືດັ່ງຕົວໜັງສືລາວ ໃນເວລາຝະລັ່ງເຂົ້າມາ ເຂົາເຈົ້າຢາກປ່ຽນມາໃຊ້ໜັງສືໂລແມງ ແຕ່ວ່າໄລຍະນັ້ນ ມີຜູ້ຕໍ່ສູ້ຮັກສາໄວ້ ບໍ່ໄດ້ຍອມໃຫ້ປະໂຕໜັງສືລາວ ແລະສາມາດຮັກສາໄວ້ໄດ້.

ໃນດ້ານອັກສອນສາດ ພາສາສາດນີ້ ໃນໄລຍະທີ່ຂ້າພະເຈົ້າຮ່ຳຮຽນ ຍອມຮັບຮູ້ວ່າຜູ້ເຮັດເພິ່ນໄດ້ຄົ້ນຄວ້າຫລາຍສິບຄວນ ຈຶ່ງມີສາມແງ່ແນວຄິດ ກ່ຽວກັບອັກສອນລາວ ລຽນມະຫາສິລາ ເພິ່ນມັກຂຽນຕາມເຄົ້າ ແຕ່ວ່າຜູ້ອື່ນເວົ້າແລ້ວ ເພິ່ນກໍ່ແລວໄປ ຕາມລາຊະອົງ - ການເລກທີ ໑໐ ປີ ໑໙໔໙ ເປັນກົດໝາຍອັນໜຶ່ງຕົກລົງ ຂຽນຕົວອັກສອນລາວ ມີໂຕ ຣ ແຕ່ບໍ່ໃຫ້ສະກົດຕາມເຄົ້າໝົດ ແຕ່ກ່ອນນັ້ນ ແມ່ນສະກົດຕາມໃນວັດແທ້ ໆ

໓ ແງ່ ແນວຄິດ ດັ່ງກ່າວຂ້າງເທິງນີ້ .

- ສະກົດຕາມເຄົ້າ ຖືວ່າມີສຳນັກມະຫາສິລາກໍ່ວ່າໄດ້.
- ແງ່ແນວຄິດ ພະລາຊະໂອງການມີລັກສະນະ ເຮັດໃຫ້ອັກສອນລາວ ຂະຫຍາຍ

ຕິວໄດ້ ຕົກລົງໃຫ້ໂຮງຮຽນ ຮຽນພາສາລາວ ສະກົດຕາມສຽງ ແຕ່ໃຫ້ຮຽນເຄົ້າ.

- ແງ່ແນວຄິດທີສານແມ່ນລົບລ້າງເຄົ້າຫມົດ.

ຂ້າພະເຈົ້າຊົມເຊີຍແນວຄິດອາຈານມະຫາສິລາ ທີ່ຢາກຮັກສາສະກົດຕາມເຄົ້າໄວ້.

ເຖິງວ່າໄລຍະໃຫມ່ ພວກເຮົາໃຊ້ກັນທຸກວັນສະກົດຕາມສຽງນີ້ ແຕ່ວ່າບໍ່ຄວນລືມໃນການຮ່ຳຮຽນເຄົ້າ ຖ້າບໍ່ດັ່ງນັ້ນ ຮຸ່ນຫນຸ່ມນ້ອຍບໍ່ຮູ້ເຄົ້າກໍ່ຈະເວົ້າ ແລະ ເຂົ້າໃຈໄປທົ່ວທິບ.

ໃນດ້ານປະຫວັດສາດ ຄວາມສຳຄັນຂອງເພິ່ນໃນດ້ານປະຫວັດສາດ ແມ່ນຄວາມຊື່ສັດ ແລະ ຄວາມຮັກຊາດ ໃຜກໍ່ຄືກັນ ເມື່ອຂຽນປະຫວັດສາດ ແມ່ນມີແງ່ຊາດເປັນພື້ນ ແຕ່ຕາມຫລັກການຄົ້ນຄວ້າສາກົນ ເພິ່ນໃຫ້ພະຍາຍາມຢ່າໃຫ້ພົ້ນຫນາໂພດ ສຳຄັນຕ້ອງເບິ່ງໄປຕາມລັກສະນະ ວິທະຍາສາດ.

ການຄົ້ນຄວ້າປະຫວັດສາດຜ່ານມາ ໄດ້ກາຍເປັນເອກະສານຮັບໃຊ້ ໃນການສິດສອນໃນໂຮງຮຽນມັດທະຍົມຕ່າງໆ ກາຍເປັນເຄື່ອງມືປະກອບໃຫ້ການຄົ້ນຄວ້າ.

ໃນດ້ານວັນນະຄະດີ ເພື່ອເສີມຂະຫຍາຍ ແລະ ເພື່ອຕອບຄວາມເປັນຫ່ວງຂອງນັກວິຊາການຫນຸ່ມນ້ອຍທັງສອງຝັ່ງ ການຄົ້ນຄວ້າ ວັດທະນະທຳ ອາລະຍະທຳ ລຸ່ມແມ່ນ້ຳຂອງ ກໍ່ແມ່ນຈຸດປະສົງອັນຫນຶ່ງຂອງອົງການຊຸຍແມັດສະໂກ ຄືກັນ ແລະ ນິຄະມະກຳມະການ ວັດທະນະທຳ ອາຊີອາຄະເນ ເຊິ່ງຍັງສືບຕໍ່ເຄື່ອນໄຫວຢູ່.

ອັນໃກ້ໆ ນີ້ ເຂົ້າມາ ຂ້າພະເຈົ້າວ່າ ສາມາດເປັນໄປໄດ້ ຖ້າທັງສອງຝັ່ງສ້າງກຳລັງອັນຫນຶ່ງ ພົວພັນກັນຂຶ້ນ ເຮັດໃຫ້ກຳມະການລຸ່ມແມ່ນ້ຳຂອງ ທີ່ເຮັດວຽກພົວພັນ ເຮັດເຂື່ອນຕ່າງໆ ໃນນ້ຳຂອງມີ ໔ ປະເທດ ລາວ - ໄທ - ຫວຽດນາມ - ກຳປູເຈຍ ເຊິ່ງໃນໂຄງການອັນນີ້ ເຂົາກໍ່ມີຂະແຫນງຫນຶ່ງຄົ້ນຄວ້າວິທະຍາສາດ ສັງຄົມເລື່ອງວັດຖຸ ບູຮານໃນຂະແຫນງນີ້ ຖ້າເຮົາມີວິທີສະເຫນີເຂົ້າໄປຫາອົງການລຸ່ມແມ່ນ້ຳຂອງ ອາດສາມາດເອົາເຂົ້າເປັນແຜນການເປັນເງື່ອນໄຂໃຫ້ພວກເຮົາມີທຶນຮອນໃນການຄົ້ນຄວ້າ ເຊິ່ງ ປະຈຸບັນນີ້ ເຂົາເຈົ້າກໍ່ຮັບໃຫ້ຄົ້ນຄວ້າເລື່ອງວັດຖຸບູຮານ ຢູ່ໃນເຂດນ້ຳຖ້ວມ ກ່ອນຈະໄປ ເຮັດເຂື່ອນ ເພາະຢູ່ໃນອົງການສະຫະປະຊາຊາດ ເຂົາເຈົ້າບອກວ່າ ຜູ້ໃດຊິໄປເຮັດເຂື່ອນ ຢູ່ໃສ ຈຳເປັນຕ້ອງໄດ້ຊ່ອຍເຫລືອດ້ານນີ້ເສັຽກ່ອນ ຖ້າບໍ່ດັ່ງນັ້ນ ເມື່ອເຮັດເຂື່ອນແລ້ວ ຈະບໍ່

ສາມາດຂຸດຄົ້ນໄດ້.

ໃນການສ້າງສາທຸກວັນນີ້ ແມ່ນປະວັດທະນະທຳບໍ່ໄດ້ ຕ້ອງຕິດພັນກັບວັດທະນະທຳ ຢູ່ໃນ ທົດສະວັດສາກົນແຫ່ງການພັດທະນາວັດທະນະທຳ ແຕ່ປີ ໑໙໘໘ ຮອດປີ ໑໙໙໗ ຕ້ອງໄດ້ເອົາທຸກບັນຫາມາສືບຕໍ່ຄົ້ນຄວ້າກັບວັດທະນະທຳ ເພາະດຽວນີ້ ວິທະຍາສາດ ກ້າວຫລາຍແລ້ວ ຄົນຖິ້ມວັດທະນະທຳຫລາຍ ດັ່ງນັ້ນຈຶ່ງຕ້ອງຟື້ນຟູ.

ຂ້າພະເຈົ້າ ຢາກສະເໜີວ່າຖ້າເປັນໄປໄດ້ ດີບໍ່ ຖ້າວ່າຈະເອົາຊື່ ທ່ານມະຫາ ສີລາ ວີລະວົງ ໃສ່ຫົນທາງເສັ້ນໜຶ່ງໃນກຳແພງນະຄອນວຽງຈັນ ນີ້ເປັນການຊຸກຍູ້ໃຫ້ ນັກຄົ້ນຄວ້າ ມີຄວາມພາກພູມໃຈ.

ອັນທີສອງ ຖ້າພໍເປັນໄປໄດ້ ຂ້າພະເຈົ້າຄິດວ່າ ຄະນະກະກຽມໃຫ້ມີຂໍ້ມູນກວ້າງ - ຂວາງເພື່ອສະເໜີຂຶ້ນອົງການຊຸຍແນັດສະໂກ ເພື່ອສະເຫລີມສະຫລອງ ໑໐໐ ປີ ຂອງທ່ານມະຫາສີລາ ວີລະວົງ ເພື່ອວ່າລາວເຮົາຈະມີຄວາມສາມາດອວດອ້າງຕໍ່ສາກົນໄດ້.

ການປະພັນ ກອນລຳ ຂອງ ມະຫາ ສີລາ ວີຣະວົງ

• ສີສະຫວຽງ ສະແຫວງສຶກສາ
ຄະນະອຳນວຍການ S.M.E.D

ຂ້າພະເຈົ້າ ເປັນນັກຄົ້ນຄວ້າພູມສາດ ທີ່ມີຄວາມໃຝ່ຝັນ ຢາກປົກປັກຮັກສາ ທຳມະຊາດ ແລະ ສະພາບແວດລ້ອມ.

ຂ້າພະເຈົ້າຮູ້ກັບອາຈານມະຫາສີລາ ຈາກສອງສາຍ.

ສາຍທີ່ໜຶ່ງ ແມ່ນສາຍປ້າຂອງຂ້າພະເຈົ້າ ທີ່ມັກອ່ານປຶ້ມ. ຂ້າພະເຈົ້າໄດ້ຊອກຫາປຶ້ມໄປໃຫ້ເພິ່ນອ່ານເລື້ອຍໆ ມື້ໜຶ່ງເພິ່ນໄດ້ຖາມຂ້າພະເຈົ້າວ່າ "ເຈົ້າບໍ່ມີປຶ້ມຂອງ ມະຫາສີລາ ບໍ ? ຂ້າພະເຈົ້າຕອບດ້ວຍຄຳຖາມຄືນວ່າ "ປ້າຮູ້ກັບ ມະຫາສີລາ ບໍ ?" ເພິ່ນຕອບວ່າ : ບໍ່ ບໍ່ເຫັນຈັກເທື່ອ ມີແຕ່ເຄີຍໄດ້ອ່ານປຶ້ມເພິ່ນເທົ່ານັ້ນ ປຶ້ມຂອງເພິ່ນບໍ່ວ່າ ຈະເປັນກາບກອນ ຫລື ອັນໃດກໍ່ມ່ວນໝົດ ແລະ ດີເລີດກວ່າໝູ່ ແມ່ນເພິ່ນໄດ້ບອກວ່າ ປີໃດກິບຊີກິນເດືອນ ມື້ໃດ ເດືອນໃດ.

ສາຍທີສອງ ແມ່ນຮູ້ຍ້ອນ ລູກສາວເພິ່ນ ຄືດວງເດືອນ ເຊິ່ງແມ່ນລູກສາວຂອງເພິ່ນທີ່ເປັນອາຈານສອນຢູ່ສະຖາບັນດຽວກັນ ແລະ ອຸທິນ ເຊິ່ງແມ່ນລູກເຂີຍຂອງເພິ່ນທີ່ເປັນນັກຂ່າວ.

ຕາມທັດສະນະຂອງຂ້າພະເຈົ້າແລ້ວ ມະຫາສີລາ ເຕັມປ່ຽມໄປດ້ວຍຈິດໃຈຮັກຊາດແພງເຊື້ອ ຊີວິດຂອງເພິ່ນ ຕິດພັນກັບປະຫວັດສາດ ຂອງອານາຈັກລ້ານຊ້າງ ແລະ ຕິດພັນກັບ ປະເທດລາວ ສະໄໝໃໝ່ ແຕ່ຕົ້ນສະຕະວັດທີ 20 ມາ

ເພິ່ນກຳເນີດຂຶ້ນໃນສະໄໝທີ່ອານາຈັກລ້ານຊ້າງກຳລັງສູນເສຍຄວາມເປັນເອກະລາດ ກຳລັງຈະສູນເສຍຊື່. ເພິ່ນເຕີບໃຫຍ່ໃນທ່າມກາງວັດທະນະທຳລາວ ກຳລັງຖືກດູຖູກຢຽດຫຍາມ ກຳລັງໃກ້ຈະຖືກລົບລ້າງ.

ໝົດທຸກຢ່າງ ທີ່ເພິ່ນຂຽນ ແມ່ນຊອກຫາຄວາມເປັນເອກະລາດຂອງລາວ ຊອກຫາອະລະຍະທຳຂອງລາວ ຊອກຫາເອກະລັກຂອງລາວ ເພື່ອໃຫ້ຄົນຮຸ່ນຫລັງຮູ້ວ່າ ການຈະລົບລ້າງຮ່ອງຮອຍ ວັດທະນະທຳ, ຮີດຄອງປະເພນີ ບໍ່ແມ່ນຈະງ່າຍພໍປານໃດ

ໃນສະໄໝນັ້ນ ປະຫວັດສາດລາວ ຖືກບິດເບືອນ ມະຫາສີລາ ໄດ້ຕໍ່ສູ້ ດ້ວຍກະທູ້ດ້ວຍເຫດຜົນ ໃຫ້ເຫັນວ່າ ອານາຈັກລ້ານຊ້າງ ເປັນອານາຈັກທີ່ຮຸ່ງເຮືອງເຫລືອງເຫລື້ອມ ມີປະຫວັດສາດອັນສະຫງ່າລາສີ ມີຮີດຄອງປະເພດນີ ມີກົດໝາຍຄົບຖ້ວນ ແລະທຸກສິ່ງຢ່າງທີ່ປະເທດໜຶ່ງຕ້ອງມີ

ການຄົ້ນຄວ້າຂອງເພິ່ນທັງໝົດ ແມ່ນຄົ້ນຄວ້າໃຫ້ເຫັນເອກະລັກແຕ່ລະອັນ ເຊິ່ງມີຄວາມສຳຄັນທີ່ສຸດ ແລະ ກວມເອົາທຸກຂະແໜງ : ຮີດຄອງປະເພນີ ປະຫວັດສາດ ພູມ

ສາດ ວັນນະຄະດີ ພາສາສາດ ວັດທະນະທຳ ກົດໝາຍ ໂຫລາສາດ...ສົມຄວນ ຂະໜານນາມເພິ່ນວ່າ : ບິດາ ແຫ່ງການປະຕິວັດ ວັດທະນະທຳແນວຄິດ ເພາະອັນນີ້ ແມ່ນການຟື້ນຟູວັດທະນະທຳຄືນ ເພື່ອໃຫ້ເຫັນວ່າ ລາວມີຄວາມທະນົງອົງອາດ ມີອະລະຍະທຳມາແຕ່ດົນແລ້ວ ດັ່ງນັ້ນ ນາມມະຍົດຂອງເພິ່ນຄວນຕິດ ພັນກັບວັດທະນະທຳລາວ. ໃນຖານະນັກພູມສາດທີ່ມີຄວາມໄຝ່ຝັນຢາກປົກປັກຮັກສາທຳມະຊາດຂອງລາວ ຂ້າພະເຈົ້າໄດ້ຄົ້ນຄວ້າຊອກຫາບົດບັນທຶກຕ່າງໆ ທີ່ກ່ຽວພັນເຖິງຄວາມອຸດົມຮັ່ງມີ ແລະ ສວຍສົດງົດງາມ ຂອງທຳມະຊາດຂອງລາວ. ຂ້າພະເຈົ້າ ໂຊກດີທີ່ໄດ້ພົບກອນລຳເດີນດົງ 4 ກອນ ຂອງ ອາຈານມະຫາສີລາ ວີຣະວົງ ທີ່ພັນລະນາເຖິງທຳມະຊາດຂອງ 4 ແຫ່ງໃນປະເທດລາວ ເຊິ່ງແຕ່ລະກອນ ເພິ່ນໄດ້ພັນລະນາລະອຽດເຖິງປະເພດປ່າ, ເຖິງປະເພດສັດ ທີ່ອາໄສຢູ່ປ່າ ແຕ່ລະປະເພດ, ເຖິງຫ້ວຍຮ່ອງໜອງບຶງ ແລະ ບັນດາສັດ ທີ່ລອງລອຍຢູ່ໃນນ້ຳ ແລະ ປະເພດສັດທີ່ ຈອບເອົາ ປາ ຫອຍ ກຸ້ງ ເປັນອາຫານ.

ກອນລຳຂອງເພິ່ນ ນອກຈາກມີຊີວິດຊີວາ ແລະ ອຸດົມສົມບູນດ້ານວັນນະຄະດີ ແລະ ອັກສອນສາດແລ້ວ ເພິ່ນຍັງໄດ້ໃຫ້ຄວາມຮູ້ດ້ານທຳມະຊາດຫລາຍທີ່ສຸດ. ເມື່ອເພິ່ນ ພັນລະນາເຖິງໂລກ ເພິ່ນຍົກເຖິງພືກສາຊາດ ແລະ ສັດທີ່ມີຢູ່ໃນໂລກແບບຈັດຈຳແນກ ແລະ ບໍ່ເຄີຍປົນເປກັນຈັກເທື່ອ ປະເພດພືກສາຊາດ ແລະ ສັດ ທີ່ມີຢູ່ດົງ ຫລື ປ່າເລົ່າ. ດ້ານລະດູການເພິ່ນ ກໍຈັດຈານຄືກັນ ເຊັ່ນ ເມື່ອເພິ່ນເວົ້າເຖິງດອກກະຍອມ ເພິ່ນເວົ້າແຕ່ ໃນເດືອນ 3 ເທົ່ານັ້ນ ເມື່ອເພິ່ນເວົ້າເຖິງດອກຈານ ເພິ່ນເວົ້າແຕ່ໃນຕົ້ນເດືອນ 6 ແລະ ເມື່ອເພິ່ນເວົ້າເຖິງປາຄໍ່ໜ້າຕ້ອນ ເພິ່ນບໍ່ເວົ້າກ່ອນບຸນຮໍ່ເຂົ້າປະດັບດິນ (ເດືອນ 9 ເພັງ) ຈັກເທື່ອ.

ເນື່ອງຈາກເວລາຂອງພວກເຮົາຈຳກັດ ຂ້າພະເຈົ້າຂໍຍົກແຕ່ພຽງເທົ່ານີ້

ຂໍຂອບໃຈ.

ຄຳປາໄສ ອັດກອງປະຊຸມ ຂອງທ່ານ ສີຊະນະ ສີສານ

ປະທານ ຄ.ວ.ສ.

ຮຽນແຂກຜູ້ມີກຽດ, ນັກວິຊາການທັງສອງຝັ່ງຂອງ.

ພາຍຫລັງທີ່ເຮັດວຽກ ພາຍໃຕ້ບັນຍາກາດອັນຟົດຟື້ນມາ 2 ມື້ເຕັມໆ ກອງປະຊຸມສົນທະນາ ໃນຫົວຂໍ້ " ມະຫາສີລາ ວີລະວົງ ໃນທັດສະນະ ນັກວິຊາການສອງຝັ່ງຂອງ " ກໍ່ຈະສິ້ນສຸດລົງຢ່າງໜ້າຊົມເຊີຍ.

ເຮົາຂອງຢາກມີຄວາມເຫັນຢູ່ສອງແງ່, ແງ່ໜຶ່ງເປັນທັດສະນະສ່ວນຕົວແດ່ ເພາະສອງມື້ຜ່ານມາ ເຮົາບໍ່ໄດ້ປະກອບຄວາມເຫັນນຳໝູ່ ມີແຕ່ເປັນຜູ້ຟັງ ອີກແງ່ໜຶ່ງກໍ່ຈະເວົ້າໃນນາມປະທານກອງປະຊຸມ.

ໃນທັດສະນະສ່ວນຕົວ ເຮົາເຫັນວ່າ ກອງປະຊຸມຄັ້ງນີ້ ວິເສດສຸດ, ມັນວິເສດຢູ່ບ່ອນວ່າ ມັນເປັນປະໂຫຍດບໍ່ສະເພາະແຕ່ສຳລັບນັກວິຊາການລາວເທົ່ານັ້ນ ແຕ່ມັນຍັງກວມລວມເອົາທັງສອງຝັ່ງຂອງ.

ກ່ອນໜ້ານີ້ 50 ປີ ເຮົາຍັງໜຸ່ມໆຢູ່ໃນເມືອງໄທ, ຂໍເວົ້າວ່າ ໃນສະໄໝ ນັ້ນ ການທີ່ຈະມາຟື້ນຟູເວົ້າເລື່ອງເມືອງລາວ, ວັດທະນະທຳລາວ ບໍ່ວ່າຢູ່ໃສ, ຢູ່ກະໂຕເມືອງລາວເອງ ຫລື ຢູ່ເມືອງໄທແລ້ວແມ່ນເປັນໄປບໍ່ໄດ້ເດັດຂາດ, ແມ່ນແຕ່ຜູ້ສະແດງວ່າສົນໃຈຢາກຄົ້ນຄວ້າກ່ຽວກັບລາວ ສະໄໝຜະລົ້ງປົກຄອງ ກໍ່ຖືກແກ່ເກາະເອົາໃສ່ ບັນຫາການເມືອງໂລດ, ແລະ ຄວາມຈິງກໍ່ເປັນແນວນັ້ນ ຄືດັ່ງເຮົາຮູ້ ຫລາຍຄົນຖືກຈັບ ມີໂທດ ມີໂພຍຍອນ.

ດັ່ງນັ້ນ ເຮົາຈຶ່ງດີໃຈທີ່ສຸດທີ່ກາລະເວລານັ້ນໄດ້ຜ່ານພົ້ນໄປແລ້ວຫຼາຍປີໃຫ້ສາມາດ ຄົ້ນຄວ້າກ່ຽວກັບພາກອີສານ ໄດ້ມີມະຫາວິທະຍາໄລ ມີນັກຄົ້ນຄວ້າເກີດຂຶ້ນ ລາວກໍເຊັ່ນກັນ ມີອາຈານຫຼາຍຄົນເກີດຂຶ້ນ ແລະ ສາມາດເຮັດວຽກຄົ້ນຄວ້າໄດ້.

ບັດນີ້ ພວກເຮົາໄດ້ມີໂອກາດມານັ່ງລົມກັນ ເຊິ່ງມັນຈະກໍປະໂຫຍດຫຼາຍປະການໃຫ້ ນັກຄົ້ນຄວ້າ ທັງສອງຝ່າຍ.

ອັນພິເສດອີກອັນໜຶ່ງ ເຮົາຊໍ້າພັດມີໂອກາດເວົ້າເລື່ອງ ມະຫາສິລາ ວີລະວົງ ເຊິ່ງເປັນບຸກຄົນໜຶ່ງທີ່ເຊື່ອມໂຍງລະຫວ່າງສອງຝັ່ງ ໃຫ້ມອງເຫັນຄວາມຈຳເປັນ ທີ່ຈະຄົ້ນຄວ້າຮ່ວມກັນຕໍ່ໄປ.

ເວົ້າສະເພາະກ່ຽວກັບການຄົ້ນຄວ້າ ຂອງ ມະຫາສິລາ ວີລະວົງ ເຊິ່ງເອກະສານທັງໝົດທີ່ ມະຫາສິລາ ຄົ້ນຄວ້ານັ້ນ ຄົນຕ່າງປະເທດ ກໍຍອມຮັບວ່າ ສຳຄັນ.

ວິທີທີ່ມະຫາສິລາ ຄົ້ນຄວ້າ ແລະ ນຳອອກເຜີຍແຜ່ນີ້ ມັນມີວິທີອັນໜຶ່ງ ທີ່ນັກວິຊາການກໍຖືວ່າດີ ມັນມອບຢູ່ໃນ ລັດທິທີອັນໜຶ່ງ ເອີ້ນວ່າ ລັດທິພາວະວິໄສ ເພາະໃນ ເອກະສານໝົດທຸກອັນຂອງ ມະຫາສິລາ ບໍ່ແມ່ນລາວປະດິດຂຶ້ນເອງ ເອີ້ນວ່າ ລາວຄົ້ນຄວ້າຮວບຮວມມາແລ້ວ ບັນນາທິການ ຕາມທັດສະນະຂອງລາວເອງ.

ເມື່ອເວລາອ່ານບົດທີ່ລາວຄົ້ນຄວ້າ ມີອັນຈັບໃຈ ພໍອົກພໍໃຈ ເຊິ່ງຢູ່ໃນນີ້ ອັນເປັນພົນງານໃຫຍ່ ແມ່ນລາວຫັນຈາກອັນຍາກທີ່ສຸດ ມາຫາອັນງ່າຍ ທີ່ເຮັດໃຫ້ຄົນທຳມະດາສາມັນເຂົ້າໃຈໄດ້ ເຊິ່ງເຮັດແນວນີ້ ກໍຍາກສົມຄວນ.

ມະຫາສິລາ ວີລະວົງ ບໍ່ໄດ້ຜ່ານ ມະຫາວິທະຍາໄລທາງໃດ ແຕ່ລາວ ມີຄວາມສາມາດພິເສດໃນພາກປະຕິບັດຕົວຈິງ ໃນໂຕລາວ ອັນໜຶ່ງມີດີ ທັດສະນະມະຫາຊົນ ເລື່ອງທີ່ລາວຄົ້ນຄວ້າມາ ມັນອ່ານງ່າຍ ເຂົ້າໃຈໄວ.

ມະຫາສິລາ ວີລະວົງ ໄດ້ຂັ້ນມູນມາແລ້ວ ພັດມາແປງຄວາມບໍ່ຖືກໃຫ້ເປັນຖືກ, ເຮັດໃຫ້ສອດຄ່ອງກັບສະພາບການ ໝາຍວ່າ ລາວເອົາອັນເກົ່າມາ ແຕ່ມີວິພາກວິຈານມີແປງ.

ມະຫາສິລາ ຄົ້ນຄວ້າ ມີແຕ່ເລື່ອງລາວ ຢູ່ໃນຂອບເຂດຂອງລາວ ດັ່ງນັ້ນ ມັນຈຶ່ງພົວພັນເຖິງຄວາມຮັກຊາດອີຫຼີ.

ບັນຫາທີ່ມີຄຸນຄ່າທີ່ສຸດ ສຳລັບອະນຸຊົນຮຸ່ນຫຼັງນັ້ນ ຄືລາວໄດ້ປະຂໍ້ມູນຈຳນວນໜຶ່ງໄວ້ເປັນພື້ນຖານອັນໜຶ່ງໃຫ້ພວກເຮົາ ປະກອບສ່ວນໃຫ້ຄົງ ໃນການຄົ້ນຄວ້າອຸດົມສົມບູນ.

ຫຼາຍທ່ານ ຫຼາຍຄົນ ສະເໜີວ່າ ຄວນຂະໜານນາມເປັນບິດາແຫ່ງປະຫວັດສາດ, ວັດທະນະທຳ ຫລື ໃຫ້ກຽດໃສ່ຊື່ໄວ້ຖະໜົນບາງສາຍ ເພື່ອເປັນການຈາລຶກກຽດຕິຄຸນ... ທັງໝົດນີ້ ເຮົາກໍ່ເຫັນວ່າເໝາະສົມ, ເປັນຂໍ້ສະເໜີທີ່ຄວນພິຈາລະນາ, ເປັນຂໍ້ສະເໜີທີ່ເກີດຈາກນ້ຳໃສໃຈຈິງ ຄວາມເຄົາລົບນັບຖື ຮັກແພງ ແທ້ໆ. ໃນນາມວ່າ ການຈັດຕັ້ງກອງປະຊຸມນີ້ ມີເປັນເທື່ອທຳອິດ ແລະ ການປະຊຸມນີ້ກໍ່ແມ່ນເຣັດຢູ່ໃນວົງແຄບ ເຮົາເຫັນວ່າ ກອງປະຊຸມ ກໍ່ຄວນຮັບເອົາຂໍ້ສະເໜີຕ່າງໆ ໄວ້ພິຈາລະນາ ສ່ວນວ່າການຈະສະເໜີຂຶ້ນຕໍ່ໄປນັ້ນ ອາດຈະຕ້ອງລໍຖ້າຈັງຫວະອີກກ່ອນ, ຄວນມີການສຶກສາ ສົມທຽບ ໃສ່ກັບຍຸກຄົນທີ່ຄວນຍົກຍ້ອງຜູ້ອື່ນໆ ຕື່ມ ເຊັ່ນວ່າ ພະເຈົ້າອະນຸ ເຊິ່ງເປັນກະສັດ ຜູ້ກ້າຫານທັງເປັນນັກກະວີ ... ທັງນີ້ ເພື່ອຄວາມເໝາະສົມ.

ຢ່າງໃດກໍ່ດີ ເຮົາເຫັນວ່າ ກອງປະຊຸມຄັ້ງນີ້ ມີຜົນສຳເລັດ ໜ້າຖືເອົາ ເປັນແບບຢ່າງ ຄວນເສີມຂະຫຍາຍໝາກຜົນຢ່າໃຫ້ຢຸດຢັ້ງຢູ່ນຳແຕ່ຄົນ 40–50 ນີ້ເທົ່ານັ້ນ, ຄະນະຈັດຕັ້ງຄວນເຜີຍແຜ່ໝາກຜົນນີ້ອອກໄປ ເພື່ອປ ໂຫຍດຂອງວຽກງານການຄົ້ນຄວ້າສືບຕໍ່ໄປ

ຂ້າພະເຈົ້າຫວັງວ່າ ໃນອະນາຄົດ ພວກເຮົາຈະມີກອງປະຊຸມປະເພນີເກີດຂຶ້ນອີກ. ຂ້າພະເຈົ້າ ຂໍປະກາດອັດກອງປະຊຸມໄວ້ພຽງເທົ່ານີ້. ຂໍໃຫ້ທຸກຄົນມີສຸຂະພາບ ເຂັ້ມແຂງ ນັກຄົ້ນຄວ້າ ຄູອາຈານ ພີ່ນ້ອງຈາກຝັ່ງພູນ ກໍ່ຈົ່ງກັບຄືນໂດຍສະຫວັດດີພາບທຸກຄົນ.

ຂອບໃຈ.

ລາຍງານຫຍໍ້ ຜົນ ກອງປະຊຸມ ວ່າດ້ວຍ 'ຜົນງານ ຂອງ ມະຫາ ສິລາ ວີຣະວົງ ໃນທັດສະນະ ຂອງ ນັກວິຊາການ ສອງຝັ່ງຂອງ"

I. ສະພາບທົ່ວໄປ: ອີງຕາມການຕົກລົງຂອງຄະນະກຳມະການ ວິທະຍາສາດສັງຄົມເລກທີ ໒໐໒/ຄວສ. ລົງວັນທີ ໑໒/໔/໘໐ ວ່າດ້ວຍການຈັດຕັ້ງກອງປະຊຸມວ່າດ້ວຍ " ຜົນງານຂອງມະຫາສິລາ ວີຣະວົງ ໃນທັດສະນະຂອງວິຊາການສອງຝັ່ງຂອງ " ຄະນະຮັບຜິດຊອບໄດ້ໃຫ້ກອງປະຊຸມຂອງ ມ.ສ.ພ. ວຽງຈັນໃໝ່ ເປີດດຳເນີນການ ໃນວັນທີ໒໘-໒໙ ເມສາ ໑໙໘໐. ມີຜູ້ເຂົ້າຮ່ວມປະມານ ໓໐ ຄົນ.

ທ່ານ ສີຊະນະ ສີສານ ປະທານ ກ່າວໄຂກອງປະຊຸມ ໂດຍມີເນື້ອໃນຫຍໍ້ ວ່າ : ມະຫາສິລາ ວີຣະວົງ ເປັນຄາຍໆ ຂົວເຊື່ອມໂຍງສອງຝາກຝັ່ງ ລາວ-ໄທ ແລະ ທ່ານປຽບຄາຍຄືແກ້ວມະນີຫນ່ວຍຫນຶ່ງທີ່ຕ້ອງການ ການຂັດສີໃຫ້ຮຸ່ງເຮືອງ ແລະ ທ່ານກ່າວເນັ້ນວ່າ ນັກຄົ້ນຄວ້ານັກວິໄຈຜູ້ຫນຸ່ມນ້ອຍລຸ້ນໃຫມ່ນີ້ ຈະເປັນຜູ້ຂັດໃຫ້ຫນ່ວຍແກ້ວສົດໃສຂຶ້ນ...

ການສົນທະນາອະພິປາຍ ຕະຫລອດທັງ ໔ ຄາບ ເຕັມໄປດ້ວຍບັນຍາກາດ ຈິງໃຈບໍລິສຸດ. ຜູ້ປາຖະກະຖາ ແລະ ຜູ້ຟັງໄດ້ແລກປ່ຽນ ສົນທະນາກັນຮອດ ໒໐ ກວ່າຄັ້ງ ຢ່າງໃກ້ຊິດ ໂດຍປິ່ນອ້ອມຫົວຂໍ້ໃຫຍ່ທີ່ເປັນຜົນງານຂອງທ່ານມະຫາສິລາຄື :

໑. ຜົນງານດ້ານວັນນະຄະດີ.

໒. ຜົນງານດ້ານອັກສອນສາດ - ພາສາສາດ

໓. ຜົນງານດ້ານປະຫວັດສາດ ບູຮານນະຄະດີ

໔. ໂຫຣາສາດ - ຮີດຄອງປະເພນີ,

ການສົນທະນາ ອະພິປາຍ ຈັດແບບໂຕະມົນ ຜູ້ອະພິປາຍສະເໜີບົດຂອງຕົນ ຕໍ່ທີ່ປະຊຸມຜູ້ລະປະມານ ໓໐-໔໐ ນາທີ, ຫລັງຈາກນັ້ນ ທີ່ປະຊຸມສະເໜີຄວາມເຫັນ, ຖາມຂໍ້ຂ້ອງໃຈທີ່ຢາກໃຫ້ຜູ້ປາຖະກະຖາອະທິບາຍຕື່ມ.

ໃນຕອນບ່າຍວັນທີ ໒໘ ຄະນະຈັດຕັ້ງໄດ້ນຳຜົນງານ ພິມເປັນເຫລັ້ມຈຳນວນ ໔໐ ຢ່າງຂອງທ່ານມະຫາສີລາມາວາງສະແດງ ພອມດວຍຕົ້ນສະບັບລາຍມືບາງຢ່າງຂອງທ່ານທີ່ບໍ່ທັນໄດ້ໂຮມພິມເປັນເຫລັ້ມມາວາງສະແດງ ໂຮມທັງໜັງສືບາງຢ່າງທີ່ໄດ້ຮັບການແປ ເປັນພາສາຕ່າງປະເທດນຳດວຍ.

໑. ພົງສາວະດານລາວ ແປເປັນພາສາອັງກິດ ສະບັບປີ ໑໙໔໗, ກະຊວງສຶກສາ

໒. ຄຳພີທຳມະສາດບູຮານ ແປເປັນພາສາໄທ ໂດຍອະຣຸນຣັດ ມ. ຊຽງໃໝ່.

ຜ່ານການອະພິປາຍສົນທະນາ ແລະ ປະກອບຄວາມເຫັນຕະຫລອດ ໔ ຄາບ (ປະມານ ໑໐ ຊົ່ວໂມງເຕັມ) ພໍສະຫລຸບໄດ້ວ່າ ທີ່ປະຊຸມໃຈແຍກບັນຫາອອກເປັນ ໒ ສ່ວນ ຄື ສ່ວນໜຶ່ງແມ່ນທັດສະນະຕໍ່ ທ່ານມະຫາສີລາ ວີຣະວົງເອງ ແລະ ສ່ວນທີ ໒ ແມ່ນ ທັດສະນະຕໍ່ຜົນງານອັນສຳຄັນຂອງທ່ານດັ່ງຈະເວົ້າລະອຽດຢູ່ລຸ່ມນີ້.

II. ທັດສະນະຕໍ່ບຸກຄົນ :

ນັກປາຖະກະຖາ ສ່ວນໃຫຍ່ເຄີຍເປັນລູກສິດບວດຮຽນຂຽນອ່ານນານຳທ່ານ ໂດຍກົງກໍມີ ບາງຄົນເຄີຍຊົມໃຊ້ແຕ່ປຶ້ມແບບຮຽນ ບົດອ່ານຕ່າງໆ, ສ່ວນໜຶ່ງເປັນຜູ້ຮ່ວມງານຢູ່ໃນກົມກອງດຽວກັນ. ແຕ່ລະຄົນໄດ້ເລົ່າຄືນເຖິງຄວາມປະທັບໃຈ ໃນຕົວທ່ານ ເມື່ອພົບ ພໍ້ເປັນຄັ້ງທຳອິດ, ເລົ່າເຖິງການຕິດຕໍ່ ເທື່ອທຳອິດ ນັກປາຖະກະຖາມີທັດສະນະເປັນເອກະພາບກັນວ່າ :

໑. ທ່ານມະຫາສີລາ ວີຣະວົງ ມີນ້ຳໃຈຮັກຊາດ ເລິກເຊິ່ງ ບໍລິສຸດ, ຮັກພາສາວັດທະນະທຳ ວັນນະຄະດີບູຮານຂອງລາວຢ່າງບໍ່ມີຍາມຈືດຈາງ.

໒. ເປັນຜູ້ດຸໝັ່ນ ແລະ ຕໍ່ສູ້ຕະຫລອດເວລາ ເພື່ອຟື້ນຟູເຊີດຊູຄຸນຄ່າ ຮີດຄອງປະເພນີ, ພະທຳຄຳສັ່ງສອນຂອງພຸດທະສາດສະໜາ, ວັນນະຄະດີຕ່າງໆ ບໍ່ອາຈະຕົກ ຢູ່

ໃນສະພາວະການອັດຕະຄັດ ກໍຕາມ.

໓. ເປັນຜູ້ຍຶດໝັ້ນໃນອຸດົມການ ຫລັກໝັ້ນຂອງຕົນ ໜັກແໜ້ນແຕ່ກໍບໍ່ຂັດ ຂວາງ ຕ້ານທານຫລັກທິດສະດີ ຄຳສັ່ງຂອງທາງລັດຖະການ ຫລືສຳນັກວິຊາການໃດໆ.

໔. ເປັນຄົນທີ່ຖະໜອມຖ່ອມຕົນ, ບໍ່ແພງຄວາມຮູ້, ບໍ່ອຳບັງລູກສິດ ຫລື ຜູ້ເຂົ້າ ພົບໂອລົມ, ມີໃຈໂອບອ້ອມອາລີ, ຮັບຮູ້ຂໍ້ຂາດຕົກບົກພ່ອງໃນຜົນງານຂອງຕົນ, ມີ ທັດສະ ນະມະຫາຊົນ, ມີລັກສະນະເປັນນັກປາດໃນລະດັບສາກົນ ສົມຄວນຍົກຍ້ອງຕັ້ງຊື່ເປັນ ບິດາ ແຫ່ງວັດທະນະທຳ, ບິດາແຫ່ງປະຫວັດສາດ.

III. ທັດສະນະຕໍ່ຜົນງານ

ນັກປາຖະກະຖາ ແລະ ຜູ້ຟັງເຫັນພ້ອງກັນວ່າ ວຽກງານການຂຽນຄົ້ນຄວ້າ ຂອງ ທ່ານ ກວມງຳອົງເຂດ (ວັດທະນະທຳ) ອະລິຍະທຳສອງຝັ່ງແມ່ນ້ຳຂອງ, ເຮັດໃຫ້ ມີ ຄວາມຕື່ນຕົວ ແມ່ນເຫັນຄຸນຄ່າຂອງຮີດຄອງວັດທະນະທຳ ແລະ ເອກະລັກຂອງຊາດ.

ຈາກການແລກປ່ຽນສົນທະນາ ທີ່ປະຊຸມຈັດແບ່ງຜົນງານຂອງມະຫາສີລາ ອອກເປັນ ໒ ໝວດໃຫຍ່:

ໝວດໜຶ່ງ ເປັນການເຕົ້າໂຮມຊຳລະຫຍໍ້ຂໍ້ມູນຈາກໃບລານ ສີລາເລກ, ປັບປຸງ ແກ້ໄຂບ່ອນຂາດຕົກບົກພ່ອງຢ່າງມີຫລັກການ.

ໝວດສອງ ແມ່ນການຄົ້ນຄວ້າປະດິດແຕ່ງໂດຍໃຊ້ຂໍ້ມູນຈາກເອກະສານບູຮານທັງ ໝົດທີ່ຕົນສຶກສາ ແລະ ເອກະສານຈາກພາສາຕ່າງປະເທດ ເຊັ່ນ ຂອງໄທ, ຈີນ (ແປ) ຝະລັ່ງ, ອັງກິດ (ແປ).

໑. ທັດສະນະຕໍ່ໝວດໜຶ່ງ

ທີ່ປະຊຸມເຫັນວ່າ ການຊຳລະ, ກວດແກ້, ດັດແປງເອກະສານເກົ່າ, ເຊັ່ນ ວັນ ນະຄະດີບາງເລື່ອງ ຕຳນານບູຮານຂອງທ່ານມະຫາສີລານັ້ນ ແມ່ນເຮັດໄດ້ດີ, ມີຫລັກການ ສອດຄ່ອງຕາມຫລັກວິທະຍາສາດສົມຄວນ. ໜັງສື ທີ່ທ່ານເລືອກເຟັ້ນມາຊຳລະ, ກວດ ແກ້ດັດແປງລ້ວນແຕ່ມີຄຸນຄ່າມະຫາສານ, ກາຍເປັນເອກະສານພື້ນຖານສຳລັບການຄົ້ນຄວ້າ

ຂອງຄົນທຸກຮຸ່ນທຸກສະໄໝເພາະ :

- ບອກແຫຼ່ງຂໍ້ມູນຈະແຈ້ງ (ພິມປີໃດ, ຢູ່ໃສ, ສະພາບແບບໃດ, ມີຈັກສະບັບ)

- ດັດແປງບ່ອນໃດ ກັບອກບ່ອນນັ້ນ. ຄຳສັບເກົ່າແມ່ນຫຍັງ ຄຳສັບໃໝ່ແມ່ນຫຍັງ ທັງອະທິບາຍວ່າເປັນຫຍັງຈຶ່ງແປງ.

- ໃຫ້ຄຳສັນນິຖານແບບໄຂປ່ອງທາງໃຫ້ແກ່ນັກຄົ້ນຄວ້າຮຸ່ນໃໝ່ຫາຂໍ້ມູນໃໝ່ ມາຕື່ມ. ຢັ້ງຢືນ ຫຼືຂັດຄ້ານໄດ້

- ຕຳນານ ທີ່ໃຊ້ພາສາບູຮານເກົ່າແກ່ຍາກຕໍ່ການເຂົ້າໃຈຂອງຄົນຮຸ່ນໃໝ່ ໄດ້ກາຍເປັນເອກະສານທີ່ອ່ານເຂົ້າໃຈງ່າຍສຳລັບນັກຄົ້ນຄວ້າທົ່ວໆ ໄປ.

໔. ທັດສະນະຕໍ່ພົນງານໝວດສອງ

ພົນງານໝວດສອງແມ່ນປະເພດປະດິດແຕ່ງໂດຍການສະສົມຂໍ້ມູນ ຈາກເອກະສານບູຮານ, ຈາກປະສົບການຊີວິດສ່ວນຕົວ, ດ້ານການເມືອງ ຮີດຄອງປະເພນີ, ການທ່ອງທ່ຽວ ຕາມພູພາປ່າດົງ ແລະ ໃນໝູ່ປະຊາຊົນ, ພົນງານສ່ວນນີ້ຈຶ່ງຍັງຄົງອຸດົມສົມບູນເປັນຂໍ້ມູນພື້ນຖານ ເໝາະແກ່ການສືບຕໍ່ຄົ້ນຄວ້າຕຳນິວິຈານ ແລະ ເສີມຂະຫຍາຍ ເຊັ່ນ ພົງສາວະດານລາວ, ປະຫວັດໜັງສື, ວັດຈະນານຸກົມ, ແບບແຕ່ງກອນລາວ ໔໐ ກວ່າແບບ ຫຼັກໄວຍາກອນ, ໜັງສືສຳລັບເທດ, ກອນລຳ, ແລະ ອື່ນ ໆ.

ກອງປະຊຸມຕີລາຄາວ່າ ພົນງານຂອງທ່ານ ສະແດງອອກເຊິ່ງ ທັດສະນະມະຫາຊົນ ຄວາມຮັກຊາດ, ຮັກວັດທະນະທຳ (ກອນພັນລະນາຄວາມງາມ ຄວາມອຸດົມສົມບູນຂອງປ່າໄມ້ ບົດອ່ານສຳລັບເດັກນ້ອຍ ທີ່ງ່າຍດາຍ ຈື່ງ່າຍ ແລະ ແຝງແນວຄິດສິນທຳ ນັບຖື ພໍ່ແມ່ ຄູບາອາຈານ, ວັດວາອາຮາມ ແລະ ຮັກແຜ່ນດິນເກີດ...)

III. ຂໍ້ສະຫຼຸບ ແລະຂໍ້ສະເໜີຂອງກອງປະຊຸມ.

- ຈາກທັດສະນະຕໍ່ບຸກຄົນ ແລະ ຄຸນນະພາບຂອງພົນງານຈຳນວນກວ່າ ໔໐ ຢ່າງ ກອງປະຊຸມເຫັນສົມຄວນ ຂະໜານນາມທ່ານເປັນ "ບິດາແຫ່ງວັດທະນະທຳລາວ" ເພາະທ່ານເປັນຜູ້ຟື້ນຟູຊີວິດຂອງວັນນະຄະດີບູຮານ, ຮີດຄອງ ເປັນຜູ້ໄຈແຍກ ແລະວາງລະບຽບ

ການແຕ່ງກາຍກອນ, ແລະ ຂຽນປະຫວັດສາດລາວຢ່າງຊື່ສັດຕໍ່ຂໍ້ມູນດັ້ງເດີມເທົ່າທີ່ເກັບຫາສະສົມມາໄດ້.

- ທີ່ປະຊຸມສະເໜີວ່າ :

ຄວນຈັດຕັ້ງຄະນະກຳມະການຊຸດໜຶ່ງ ເພື່ອພິຈາລະນາເລືອກເຟັ້ນຜົນງານ ດີເດັ່ນຂອງທ່ານມາພິມອອກເຜີຍແຜ່ໃນໂອກາດທົດສະວັດ ວັດທະນະທຳ ຕາມທີ່ທາງ UNESCO ປະກາດໄວ້.

ຄວນຈັດຕັ້ງຄະນະຮັບຜິດຊອບຮິບໂຮມຜົນງານທັງໝົດ.

ສະເໜີນັກຄົ້ນຄວ້າ, ອາຈານສອນປະຫວັດສາດ, ວັນນະຄະດີ-ນຳເອົາ ຜົນງານໃດໜຶ່ງໄປສຶກສາ, ຂຽນວິທະຍານິພົນ, ວິພາກວິຈານ ຕຳໜິຕິຊົມ ເຊັ່ນ ປະຫວັດສາດລາວ, ບົດອ່ານສຳລັບນັກຮຽນຊັ້ນປະຖົມ ມີການພິມເຜີຍແຜ່ສະບັບປັບປຸງໃໝ່ ເພື່ອໃຫ້ທຸກຄົນທີ່ສົນໃຈໄດ້ອ່ານສຶກສາ ແລະ ຫາຂໍ້ມູນເພີ່ມເຕີມ.